

# ຂໍມອບແດ່ ແມ່ ຜູ້ມີພະຄຸນ

ຄຳອອນ ເພັດດາວເຮືອງ

ຮິບໂຮມ ແລະ ຈັດພິມ ຄສ 2010

KHAM ONE PHET DAO HEUANG



ພໍ່ເອີຍ ຂໍໃຫ້ພໍ່ຈົ່ງໄດ້ ອົບອຸ່ນຢ່າເຄືອງໃຈ
ໃນສະບັບຕໍ່ໄປ ຈະຮີບໂຮມພະຄຸນໄວ້
ຖ້າເງື່ອນໄຂອຳນວຍໃຫ້ ປັດໃຈດ້ານຕ່າງໆ
ປື້ມພະຄຸນພໍ່ຈະໄດ້ວາງຢູ່ຂ້າງ ໃຫ້ສັງຄົມໄດ້ອ່ານຊົມ

ພະຄຸນພໍ່ແມ່ນັ້ນ ໜັກເກົ່ງທຽມກັນ
ເໝືອນດັ່ງກາຍອິນຊີ ບໍ່ແຍກກັນເປັນໄດ້
ແຕ່ຫາກນຳມາປັ້ນ ພັນລະນາຄົນລະເທື່ອ
ຄຸນພໍ່ໜັກເກົ່ງພູເຂົາກ້າ ຄຸນແມ່ກວ້າງທົ່ວດິນທົ່ວຟ້າ
ຈະມາຊຽນຂີດແຕ້ມ ບັນຈົງໄວ້ໃຫ້ຄົບບໍ່ເປັນ ໄດ້ແລ້ວ

# ແດ່ ແມ່ຜູ້ມີພະຄຸນ



## ແມ່ ແມ່ນເພັດແທ້ໃນດວງໃຈ ຂອງລູກໆທຸກໆຄົນ

**ຂໍ້ມູນ ທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດ**

.........................................

ໂຮມກະວີຊຸດ

**ແດ່ແມ່ຜູ້ມີພະຄຸນ**

150 ໜ້າ: ພາບປະກອບສີ; 15 ຊມ.

1. ກະວີລາວ 2. ມານດາ-ກະວີນິພົນ I.ຊື່ເລື່ອງ

808.81--dc21

ເລກໝາຍມາດຕະຖານ ສາກົນປະຈຳໜັງສື

ISBN 978-9932-07-066-4

ພິມຄັ້ງແຮກ: 2010

ຜູ້ແຕ່ງ ແລະ ຮິບໂຮມ

ຄຳອອນ ເພັດດາວເຮືອງ

ສະຫງວນລິຂະສິດ

ບັນນາທິການ ແລະພິສູດອັກສອນ:

ທົງເຫີນ ຊຸນພິທັກ

ອອກແບບ-ຈັດໜ້າ

ນຸກ ນິວັດ

ອອກແບບປົກໜ້າ-ຫຼັງ

ສາຍຄຳ ພົມມະຈັນ

ຕີພິມ ຄອມພິວເຕີ

ນາງ ດວງມາລາ ຣາຊະວົງໄຊ

ສົມສະໜຸກ ຣັດຕະນະຣາສີ

ເລກທະບຽນພິມຈຳໜ່າຍ: 090 ພຈ 26052010

ພິມທີ່: ໂຮງພິມ ມັນທາຕຸລາດ



# ຄໍານໍາ
# ຂອງຜູ້ຮິບໂຮມ ແລະຈັດພິມ

**ຮັກແມ່ ສຸດຫົວໃຈ**
**ເຄົາລົບ ນັບຖືແມ່ ເໜືອເກົ້າລົ້ນຂະມ່ອມ**
**ທະນຸຖະໜອມ ແມ່ເໜືອສິ່ງອື່ນໃດ**
**ດ້ວຍຫົວໃຈ ແລະຈິດສໍານຶກຂອງຜູ້ເປັນລູກ**
**ເພື່ອສະແດງອອກເຊິ່ງຄວາມກະຕັນຍູຮູ້ຄຸນຕໍ່ພໍ່ແມ່....**

ເນື່ອງໃນໂອກາດ ໄຂບັ້ນກວດສອບວັນນະຄະດີຄໍານັບຮັບຕ້ອນກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ I ຄະນະເລຂາທິການ ສູນກາງສະຫະພັນແມ່ຍິງລາວໄດ້ ແຕ່ງຕັ້ງກໍາມະການຄະນະໜຶ່ງຂຶ້ນ ອັນປະກອບມີທ່ານ ນາງ ດາຣາ ກັນລະຍາ ທ່ານ ຄໍາພໍ ພວງສະບາ ທ່ານສັງຂະຫຍາ ທ່ານ ດຣ. ທອງຄໍາ ອ່ອນມະນີສອນ ທ່ານກິແດງ ພອນກະເສີມສຸກ ພ້ອມດ້ວຍຂ້າພະເຈົ້າ ຊຶ່ງຂະນະນັ້ນເປັນຮອງຫົວໜ້າກົມໂຄສະນາ ວັດທະນະທໍາ ແລະໜັງສືພິມແມ່ຍິງລາວ ເພື່ອດໍາເນີນການກວດສອບບົດກະວີ. ຄະນະກໍາມະການນີ້ຢູ່ພາຍໃຕ້ການ ຊີ້ນໍາໂດຍ ກົງຂອງ ທ່ານນາງ ຄໍາພອນ ພິມມະແສງ ຄະນະເລຂານຸການສູນກາງສະຫະພັນແມ່ຍິງລາວ ທັງເປັນຫົວໜ້າກົມໂຄສະນາ ວັດທະນະທໍາ ແລະໜັງສືພິມແມ່ຍິງລາວ

ບັນດາບົດກະວີ ທີ່ຄະນະກໍາມະການໄດ້ຮັບໃນບັ້ນກວດສອບນັ້ນມີຈໍານວນຫຼວງຫຼາຍ ທັງເນື້ອໃນ ກໍອຸດົມສົມບູນ ແລະເລິກເຊິ່ງ. ຜ່ານການຄັດຈ້ອນຈຶ່ງເລືອກໄດ້ບົດເດັ່ນຈໍານວນໜຶ່ງ ເປັນຕົວແທນແຕ່ລະປະເພດ ເພື່ອໃຫ້ການຍ້ອງຍໍ ແລະທະຍອຍລົງພິມໃນໜັງສືພິມ ແມ່ຍິງລາວຕະຫຼອດມາ.

ດ້ວຍຄວາມມຸ່ງ ຫວັງຕັ້ງໃຈ ຢາກຮິບໂຮມພິມໃຫ້ເປັນເຫຼັ້ມ ຂ້າພະເຈົ້າຈຶ່ງໄດ້ເກັບລວບລວມ ບັນດາບົດກະວີເຫຼົ່ານັ້ນໄວ້ ທັງບົດທີ່ໄດ້ລົງພິມແລ້ວ ແລະຍັງບໍ່ທັນພິມ ແລະໄດ້ປົກປັກຮັກສາມັນມາເປັນເວລາເກືອບສາມທົດສະວັດໂດຍຫວັງວ່າຈັກວັນໜຶ່ງຄົງມີໂອກາດໄດ້ຈັດພິມໂຮມເຫຼັ້ມ. ນອກຈາກເກັບບົດກະວີຈາກບັ້ນກວດສອບນັ້ນແລ້ວ ຂ້າພະເຈົ້າ ຍັງແຕ່ງບົດກະວີຈຳນວນໜຶ່ງ ພ້ອມທັງໄດ້ຄັດຈ້ອນເອົາບົດກະວີທີ່ມີເນື້ອໃນກ່ຽວກັບແມ່ອັນເປັນຜົນງານຂອງນັກປະພັນທີ່ໄດ້ລົງພິມຕາມໜັງສືພິມແລວາລະສານຈຳນວນໜຶ່ງອີກລວມແລ້ວເກືອບຮ້ອຍບົດ ອັນເປັນຜົນງານຈາກປາຍປາກກາຂອງນັກປະພັນ 60 ທ່ານ.

ດ້ວຍຄວາມພະຍາຍາມແແລະຄວາມມຸ່ງຫວັງ ຄວາມຕັ້ງໃຈຂອງຂ້າພະເຈົ້າຈຶ່ງມີໂອກາດໄດ້ບັງເກີດຜົນໃນວັນນີ້ ຍ້ອນມີການຈັດຕັ້ງຂອງພັກ-ລັດ ຜູ້ປະ ກອບການທຸລະກິດແລະບຸກຄົນຜູ້ຮູ້ເຫັນຄຸນຄ່າ ມີນ້ຳໃຈ ເຫັນກວ້າງມອງໄກໄດ້ໃຫ້ ໂອກາດ ແລະສະໜັບສະໜູນແກ່ຂ້າພະເຈົ້າໃນ ການຈັດພິມໃນຄັ້ງນີ້.

ປຶ້ມເຫຼັ້ມນີ້ ຈຶ່ງບໍ່ແມ່ນຜົນງານຂອງຂ້າພະເຈົ້າພຽງຜູ້ດຽວ ແຕ່ເປັນຕົວແທນແຫ່ງຜົນງານອັນຊົງຄຸນຄ່າ ຂອງພວກລູກໆ ທີ່ສະແດງອອກຊຶ່ງຄວາມກະຕັນຍູຮູ້ຄຸນຕໍ່ພໍ່ແມ່. ຄວາມຈິງແລ້ວລູກໆສາມາດສະແດງຄວມກະຕັນຍູ ຕໍ່ພໍ່ແມ່ໄດ້ຫຼາຍຮູບແບບຫຼາຍວິທີ ແຕ່ສຳລັບນັກປະພັນ ນັກກະວີ ຈະຫາສິ່ງອື່ນລົ້ນເຫຼືອໄປກວ່າຕົວອັກສອນທີ່ກັ່ນກອງອອກມາຈາກຈິດວິນຍານນັ້ນ ແມ່ນບໍ່ມີອີກແລ້ວ ຂ້າພະເຈົ້າຈຶ່ງໄດ້ຮ້ອຍຮຽງເອົາບົດກະວີເຫຼົ່ານັ້ນມາໄວ້ເປັນເຫຼັ້ມ ຄ້າຍຄືເກັບດອກໄມ້ນານາພັນ ແລະຫຼາກຫຼາຍສີໃນສວນອຸດທິຍານແຫ່ງອັກສອນສິນ ມາຮ້ອຍເປັນພວງມະໄລ ແລ້ວນຳມາມອບໃຫ້ແມ່ຜູ້ທີ່ແສນເຄົາຣົບຮັກ.

ນະໂອກາດນີ້ ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງລົ້ນເຫຼືອ ມາຍັງບັນດານັກກະວີ ຜູ້ເປັນເຈົ້າຂອງຜົນງານ ທີ່ຂ້າພະເຈົ້າໄດ້ນຳມາພິມໃນປຶ້ມເຫຼັ້ມນີ້ ແລະກໍຂໍອະໄພເປັນຢ່າງສູງທີ່ບໍ່ໄດ້ນຳເອົາຮູບຂອງນັກກະວີ ບາງທ່ານມາລົງພິມປະກອບກັບຜົນງານ ເນື່ອງຈາກບໍ່ສາມາດຕິດຕໍ່ຫາທ່ານໄດ້ ຫວັງວ່າໂອກາດໜ້າ ຖ້າມີເງື່ອນໄຂ ຈະສືບຕໍ່ຮິບໂຮມບັນດາບົດທີ່ຍັງຄ້າງຄາແລະບົດໃໝ່ ທີ່ທ່ານສົ່ງໃຫ້ ຂໍຄວາມຮ່ວມມືຈາກທ່ານຜູ້ສົນໃຈ ກະລຸນາພົວພັນຫາ ຂ້າພະເຈົ້າ ໂດຍສົ່ງຈົດໝາຍໄປທີ່ຕູ້ໄປສະນີ 4186 ວຽງຈັນ ສປປ. ລາວ ຫຼື ໂທລະສັບໝາຍເລກ: 020 5555 7779 ; 9911 2258 ຫຼື 030 5230 999




ອີກເທື່ອໜຶ່ງ ໂອກາດແຫ່ງຄວາມພາກພູມໃຈ ທີ່ໄດ້ຈັດພິມປື້ມ ໂຮມກະວີຊຸດ ຂໍມອບ**"ແດ່ແມ່ຜູ້ມີພະຄຸນ"** ຂ້າພະເຈົ້າຂໍສະແດງຂອບໃຈເປັນຢ່າງສູງນຳ ທ່ານນາງ ສີໃສ ລືເດດມູນສອນ ກຳມະການສູນກາງພັກ ປະທານສູນກາງສະຫະພັນແມ່ຍິງລາວ ພ້ອມດ້ວຍຄະນະທີ່ໄດ້ໃຫ້ແຮງໃຈໄດ້ຫຼິງເຫັນ ພາລະບົດບາດ ຄວາມສຳຄັນສູງສົ່ງ ອະມະຕະອັນແທ້ຈິງຂອງຜູ້ເປັນແມ່ ແລະລ້ຳຄ່າເໝືອນດັ່ງເພັດແທ້ໃນດວງໃຈຂອງ ມວນມະນຸດທຸກຄົນ ສົມແລ້ວທີ່ທ່ານເປັນຕົວແທນແຫ່ງສິດຜົນປະໂຫຍດອັນຊອບທຳ ຂອງແມ່ຍິງ ແລະເດັກນ້ອຍ ລາວບັນດາເຜົ່າ ການທີ່ທ່ານໄດ້ໃຫ້ໂອກາດບັນທຶກ ພະຄຸນ ຂອງແມ່ໄວ້ໃນແຜ່ນດິນນີ້ ຖືໄດ້ວ່າເປັນອານິສົງອັນຍອດຍິ່ງ ພ້ອມນີ້ກໍຂໍສະແດງ ຄວາມຂອບໃຈສູງສົ່ງ ນຳບັນດາທ່ານທີ່ໄດ້ປະກອບຄຳຄິດຄຳເຫັນ ຄຳຍັ້ງຢືນແລະຊົມ ຊົມນັບທັງຜູ້ໃຫ້ການສະໜັບສະໜູນໃນການຈັດພິມ ປື້ມເຫຼັ້ມນີ້ດ້ວຍ.

ຂ້າພະເຈົ້າຕີລາຄາສູງເຖິງຄຸນຄ່າໃນການປະກອບສ່ວນໃນຄັ້ງນີ້ຢ່າງບໍ່ສາ ມາດຈະພັນລະນາໄດ້ ຂໍໃຫ້ການປະກອບສ່ວນໃນຄັ້ງນີ້ ຈົ່ງກາຍເປັນປັດໄຈທີ່ເຫຼື້ອມໃສ ຂອງຕົນຕໍ່ຜູ້ມີພະຄຸນເໝືອນດັ່ງຄຳສຸພາສິດທີ່ວ່າ" ຄວາມກະຕັນຍູຮູ້ຄຸນເປັນບໍ່ເກີດແຫ່ງ ຄວາມຈະເລີນກ້າວໜ້າຖາວອນຕະຫຼອດໄປ"

ນະຄອນຫຼວງວຽງຈັນ ວັນທີ 6/6/2010

ຄຳອອນ ເພັດດາວເຮືອງ

# ສາລະບັນ



| ລຳດັບ | ຊື່ບົດກະວີ | ຊື່ນັກກະວີ | ໜ້າ |
|---|---|---|---|
| 1 | ພໍ່-ແມ່ | ຄຳອອນ ເພັດດາວເຮືອງ | 22 |
| 2 | ລູກ | ຄຳອອນ ເພັດດາວເຮືອງ | 23 |
| 3 | ຮັກລູກ | ຄຳອອນ ເພັດດາວເຮືອງ | 24 |
| 4 | ຈຳປາມາລາລາວ | ຄຳອອນ ເພັດດາວເຮືອງ | 25 |
| 5 | ຢາກໄດ້ລູກຊາຍ | ຄຳອອນ ເພັດດາວເຮືອງ | 26 |
| 6 | ຄິດເຖິງບ້ານເກີດ | ເພັດລຸນນະວົງ | 28 |
| 7 | ຈາກໃຈຂອງແມ່ | ດວງພຸດທາ | 30 |
| 8 | ເມືອຢາມເມືອງຊຽງ | ຄຳຟອງ ພູມວົງໄຊ | 32 |
| 9 | ເພື່ອແມ່ | ທິດາຈັນ | 33 |
| 10 | ສຽງສັ່ງຈາກແມ່ | ເພັດເມືອງພອນ | 34 |
| 11 | ມຸ່ງຖືສຸພາບ | ຄຳອອນ ເພັດດາວເຮືອງ | 36 |
| 12 | ຮັກນວນສະຫງວນກາຍ | ຄຳອອນ ເພັດດາວເຮືອງ | 38 |
| 13 | ນ້ຳໃຈກຳລັງໄຟເພດຍິງ | ເພັດເມືອງພອນ | 40 |
| 14 | ລູກ | ຄຳຟອງ ພູມວົງໄຊ | 42 |
| 15 | ຈຳປາ ມາລາລາວ | ຄຳຟອງ ພູມວົງໄຊ | 43 |
| 16 | ຄວາມງາມຂອງແມ່ | ດວງຈຳປາ | 44 |
| 17 | ແດ່ ແມ່ຂອງລູກ | ດວງຈຳປາ | 45 |
| 18 | ແມ່ຍິງລາວຮອບດ້ານ | ດອກເກດ | 46 |
| 19 | ແດ່ພະຄຸນຂອງແມ່ | ກົງເດືອນ ເນດຕະວົງ | 48 |
| 20 | ບຸນຄຸນພໍ່ແມ່ | ບຸນເລີດ ດຳລົງສັກ | 51 |
| 21 | ນ້ຳໃຈແມ່ | ຈ. ອິນທຸພິລາດ | 54 |
| 22 | ພະພຣົມຂອງລູກ | ຈ. ອິນທຸພິລາດ | 56 |

| | | | |
|---|---|---|---|
| 23 | ຫຼັກທຳສຳລັບພໍ່ແມ່ | ຈ. ອິນທຸພິລາດ | 58 |
| 24 | ຫຼັກທຳສຳລັບລູກ | ຈ. ອິນທຸພິລາດ | 59 |
| 25 | ນ້ຳໃຈແມ່ | ໜູທັກ ສິດທິມໍຣະດາ | 60 |
| 26 | ນ້ຳໃຈແມ່ | ດອກເພັກ | 62 |
| 27 | ຝາກໃຈນຳເຈົ້າ | ດອກເພັກ | 63 |
| 28 | ຫົວອົກແມ່ | ດ. ດວງປີຊາວົງ | 64 |
| 29 | ຄ່າຂອງນາງ | ດອກເພັກ ພົມມະຈັນ | 66 |
| 30 | ຄຸນຂອງເອື້ອຍ | ດອກເພັກ | 67 |
| 31 | ຄຳເຕືອນຈາກແມ່ | ດອກເພັກ | 68 |
| 32 | ເພື່ອແມ່ | ດອກເພັກ ແດນຈຳພອນ | 70 |
| 33 | ແມ່ | ຄຳສອນ ຈຸນລະມະນີ | 71 |
| 34 | ນ້ຳໃຈແມ່ | ອ່ອນສີ ປະຊາວົງ | 72 |
| 35 | ນ້ຳຕາແມ່ | ດຣ. ທອງຄຳ ອ່ອນມະນີສອນ | 74 |
| 36 | ປະຢັດເພື່ອລູກ | ດຣ. ທອງຄຳ ອ່ອນມະນີສອນ | 77 |
| 37 | ຮັກ ແລະຄິດເຖິງແມ່ | ດຣ. ທອງຄຳ ອ່ອນມະນີສອນ | 78 |
| 38 | ແມ່ຍິງລາວຍຸກໃໝ່ສົດໃສ | ດຣ. ທອງຄຳ ອ່ອນມະນີສອນ | 80 |
| 39 | ອ້ອນອົກແມ່ | ຮຸ່ງອະລຸນ ແດນວິໄລ | 82 |
| 40 | ພົບທະຫານຮັກແມ່ | ນັກຮົບ | 83 |
| 41 | ສຸດຮັກຫວງແຫນແມ່ | ນັກຮົບ | 84 |
| 42 | ເລືອດສີແດງຂອງແມ່ | ພ. ພວງສະບາ | 86 |
| 43 | ນ້ຳຕາແມ່ | ພ. ພວງສະບາ | 88 |
| 44 | ແດ່ແມ່ | ລ້ານຊ້າງ | 91 |
| 45 | ເພື່ອຄຸນຂອງແມ່ | ທົ່ງສີຊຽວ | 92 |
| 46 | ຮັກແມ່ເກີດ | ຄຳເພີຍ ມະນີວັນ | 93 |

| | | | |
|---|---|---|---|
| 47 | ຝາກແດ່ອ້າຍທະຫານ | ຄຳເພີຍ ມະນີວັນ | 94 |
| 48 | ແດ່ອ້າຍນັກຮົບຊາຍແດນ | ສົມສຸກ ສຸກສະຫວັດ | 95 |
| 49 | ສານຂອງກາກມາກ ເຖິງແຊນນີ | ສຸວັນທອນ ບຸບຜານຸວົງ | 96 |
| 50 | ນົກກາງແກສີຟ້າ | ດາວວຽງ ບຸດນາໂຄ | 97 |
| 51 | ດອກຈຳປາ | ທະນົງສັກ ວົງສັກດາ | 98 |
| 52 | ດອກຂະຍອມເດືອນສາມ | ສາຍັນ ດົງແດງ | 99 |
| 53 | ເພື່ອນ້ອງ | ສາຍັນ ດົງແດງ | 100 |
| 54 | ແມ່ | ກ. ແກ້ວບຸນມາ | 101 |
| 55 | ຍິງລາວ ສາວສືບ | ບຸນມາກ ສີທອງດຳ | 102 |
| 56 | ພອນຈາກສະຕີລາວ | ບຸນມາກ ສີທອງດຳ | 103 |
| 57 | ສຽງເອີ້ນຈາກແມ່ | ບຸດຕີ ສີວົງສາ | 104 |
| 58 | ແຂ່ງຂັນສ້າງຜົນງານ | ດອກສະເລເຕ ແດນໜາວ | 106 |
| 59 | ນັກຮົບເພດຍິງ | ສ. ບຸນລ້ຳ | 107 |
| 60 | ພອນຈາກແມ່ | ດຣ. ເກດສະໄໝ | 108 |
| 61 | ອາຍອຸ່ນ | ລາຕີ | 110 |
| 62 | ແມ່ | ແສງສະຫວ່າງ | 112 |
| 63 | ດວງໃຈນີ້ | ບຸດຕີ ສີວົງສາ | 113 |
| 64 | ງານຄົນ ງານຜົນງານ | ສຸວັນນະລາດ ໄຊຍະວົງ | 114 |
| 65 | ຄິດເຖິງຄູ່ຮັກ | ສັກປະເສີດ | 117 |
| 66 | ແດ່ ແມ່ຍິງລາວ | ທ. ອິນທະຈັກ | 118 |
| 67 | ກຳລັງໄຟ ເພດຍິງ | ສ. ວົງສັກດາ | 121 |
| 68 | ແດ່ສາວທະຫານ | ສ. ສຽງໃໝ່ | 122 |
| 69 | ຍິງສາວ ລາວໃໝ່ | ສ. ສອນມອນ | 124 |
| 70 | ແຜ່ນດິນແມ່ | ນັກຮຽນວິທະຍາໄລແພດສາດ | 126 |

| | | | |
|---|---|---|---|
| 71 | ເມຍຂວັນຂອງອ້າຍ | ພິມມາບຸດດາວົງ | 128 |
| 72 | ສານຈາກເມຍ | ຄຳເສັງ | 130 |
| 73 | ຮູບລວງຕາ ປັນຍາພາຄິດ | ສີສະອາດ ດວງພະຈັນ | 132 |
| 74 | ງາມແທ້ສາວລາວ | ຊ. ວົງພູທອນ | 134 |
| 75 | ກະຕັນຍູລ້ອມເພັດ | ແສງຜາເມືອງ | 135 |
| 76 | ແມ່ຄືຜູ້ໃຫ້ | ດອກຈານ | 136 |
| 77 | ແມ່ເອີຍ ເປັນຫຍັງຈຶ່ງຮັກລູກແທ້ | ສາຍດາຣາ | 138 |
| 78 | ປາຢ້າງຄວນຢູ່ທີ້ງ | ສ. ສີມຸກສະຫວັນ | 140 |
| 79 | ມອບແດ່ແມ່ | ສຸພາບ ມາລາສະຫວັນ | 142 |
| 80 | ສາວລາວແທ້ | ຄຳອອນ ເພັດດາວເຮືອງ | 143 |
| 81 | ລືມແລ້ວຫຼືຍັງ | ສາຍໃຈລູກແມ່ | 144 |
| 82 | ຄວາມງາມຕາມດ້ວຍຄວາມດີ | ຄຳອອນ ເພັດດາວເຮືອງ | 146 |
| 83 | ແດ່ | ສົມພົງ ສັກດີ | 148 |
| 84 | ໄມ້ໃກ້ຝັ່ງ | ຄຳອອນ ເພັດດາວເຮືອງ | 149 |
| 85 | 20/7 ຍືນຍົງໃນດວງໃຈ | ຄຳອອນ ເພັດດາວເຮືອງ | 150 |
| 86 | ນົມແມ່ | ນິວັດ ວົງສິນ | 152 |
| 87 | ເຂົ້າໂຮຍເກືອ | ນິວັດ ວົງສິນ | 153 |
| 88 | ແມ່ຂອງລູກ/ລູກຂອງແມ່ | ຄຳອອນ/ ດາຣາ ກັນລະຍາ | 154 |
| 89 | ເພື່ອຄວາມສາມັກຄີ | ຄຳອອນ ເພັດດາວເຮືອງ | 155 |
| 90 | ເພື່ອກັນລືມ | ຄຳອອນ ເພັດດາວເຮືອງ | 156 |
| 91 | ຄະຕິເຕືອນໃຈ | ຄຳອອນ ເພັດດາວເຮືອງ | 157 |
| 92 | ປະຫວັດຂອງຜູ້ຮິບໂຮມ | | 158 |

# ຄຳເຫັນຂອງ
# ທ່ານ ນາງ ສີໃສ ລືເດດມູນສອນ
## ປະທານສູນກາງສະຫະພັນແມ່ຍິງລາວ

ແມ່ຍິງລາວເຄີຍມີບົດບາດອັນໃຫຍ່ຫຼວງ ແລະມູນເຊື້ອອັນດີງາມຕໍ່ສັງຄົມ ແລະຄອບຄົວມາແຕ່ບູຮານະການແລ້ວ. ເຖິງວ່າໃນອະດີດແມ່ຍິງຈະຕົກຢູ່ພາຍໃຕ້ໃນການ ກົດຂີ່ຂົ່ມເຫັງ ສັງຄົມບໍ່ຮັບຮູ້ເຖິງບົດບາດຂອງແມ່ຍິງ ແລະຍິ່ງກວ່ານັ້ນຍັງຖືກດູຖູກໝິ່ນປະໝາດ, ເຮັດໃຫ້ແມ່ຍິງ ບໍ່ມີສິດບໍ່ມີສຽງ ແລະເປັນຄົນໂງ່ຈ້າຫຼ້າຫຼັງກໍຕາມ.

ພາຍຫຼັງປະເທດເຮົາມີພັກປະຊາຊົນລາວໃນເມື່ອກ່ອນ ກໍຄືພັກປະຊາຊົນປະຕິວັດລາວ ປັດຈຸບັນເປັນຜູ້ນຳພາ ແມ່ຍິງລາວຊຶ່ງ ມີຈຳນວນກວມກວ່າເຄິ່ງໜຶ່ງຂອງພົນລະເມືອງລາວທົ່ວປະເທດໄດ້ມີບົດບາດພົ້ນເດັ່ນໃນການປະກອບສ່ວນຕໍ່ສູ້ກອບກູ້ເອກະລາດແຫ່ງຊາດ ປົກປັກຮັກສາ ແລະສ້າງສາພັດທະນາປະເທດຊາດ. ສິດທິ ແລະຜົນປະໂຫຍດຂອງແມ່ຍິງຈຶ່ງໄດ້ຮັບການປົກປ້ອງ ແລະສົ່ງເສີມເລື້ອຍໆມາ. ປັດຈຸບັນ ແມ່ຍິງລາວ ນັບມື້ມີຄວາມກ້າວໜ້າໃນດ້ານຕ່າງໆ ພາບພົດອັນດີງາມຄວາມເປັນແບບຢ່າງ ດ້ານແນວ ຄິດຈິດໃຈ ກິລິຍາມາລະຍາດ ການເຄື່ອນໄຫວວຽກງານໃນຄອບຄົວ ໂດຍສະເພາະບົດບາດ ຂອງຜູ້ເປັນແມ່ເປັນເມຍ ເປັນພົນລະເມືອງ ດີຂອງຊາດ ລ້ວນເປັນທີ່ໜ້າຍ້ອງຍໍສັນລະເສີນ ແລະຄວນເສີມຂະຫຍາຍເຖິງຮຸ່ນລູກຮຸ່ນຫຼານຕໍ່ໆໄປ.



ໂຮມກະວີຊຸດ "**ແດ່ແມ່ຜູ້ມີພະຄຸນ**" ທີ່ທ່ານນາງ **ຄຳອອນ ເພັດດາວເຮືອງ** ໄດ້ແຕ່ງແລະຮິບໂຮມຈັດພິມຂຶ້ນນີ້ ຂ້າພະເຈົ້າເຫັນວ່າໄດ້ສະທ້ອນໃຫ້ເຫັນບົດບາດແລະຄວາມສຳຄັນຂອງແມ່ ດ້ວຍຮູບແບບສິລະປະທີ່ມ່ວນອອນຊອນ ດຶງດູດຈິດໃຈຜູ້ອ່ານພ້ອມກັນນັ້ນ ຍັງສ່ອງແສງເຖິງ ແນວຄິດທັດສະນະທີ່ຍັງຕີລາຄາຕ່ຳຕໍ່ບົດບາດຂອງແມ່ຍິງ ແລະສ່ອງແສງເຖິງການເຄື່ອນໄຫວ ການດຳ ລົງຊີວິດຂອງແມ່ຍິງ ທີ່ຍັງບໍ່ທັນຈົບງາມຕາມວັດທະນະທຳປະເພນີອັນດີງາມ. ກາບກອນຍັງໃຫ້ຂໍ້ຄິດ ສະກິດເຕືອນດ້ວຍສິລະປະແບບແນບນຽນ, ຄ່ອງແຄ້ວ ເພື່ອໃຫ້ຜູ້ເປັນແມ່, ເປັນພໍ່ ເປັນລູກຫຼານ ພ້ອມກັນຫຼີກລ່ຽງສິ່ງບໍ່ດີງາມ ເພື່ອເຮັດໃຫ້ສັງຄົມເຮົານັບມື້ມີຄວາມສະເໝີພາບ, ຍຸຕິທຳ ປະຊາຊົນທຸກເພດ ທຸກໄວພ້ອມກັນສ້າງຊີວິດຄອບຄົວ, ສັງຄົມ ກໍຄືປະເທດຊາດຂອງພວກເຮົາໃຫ້ຈະເລີນຮຸ່ງເຮືອງຕາມຈຸດໝາຍຂອງພັກກໍຄືຄວາມມຸ່ງມາດປາດຖະໜາຂອງປະຊາຊົນທັງຊາດ.

ນະໂອກາດນີ້, ຂ້າພະເຈົ້າຂໍສະແດງຄວາມຊື່ນຊົມ ແລະຂອບໃຈຢ່າງສູງມາຍັງທ່ານ ນາງຄຳອອນ ເພັດດາວເຮືອງ ອະດີດພະນັກງານນຳພາ ອາວຸໂສຂອງສູນກາງສະຫະພັນແມ່ຍິງລາວ ໄດ້ມີຄວາມຕັ້ງໜ້າພະຍາຍາມປະດິດຄິດແຕ່ງ ແລະຮິບໂຮມບົດກະວີ ຂອງນັກປະພັນຫຼາຍທ່ານ ທີ່ຂຽນກ່ຽວກັບຫົວເລື່ອງແມ່ຍິງມາໂຮມເປັນປຶ້ມເຫຼັ້ມນີ້ ແລະຈັດພິມເຜີຍແຜ່ ພໍດີກັບໂອກາດທີ່ສະຫະພັນແມ່ຍິງ ທຸກຂັ້ນພວມສ້າງຂະບວນການສ້າງຜົນງານຕ້ອນຮັບວັນສ້າງຕັ້ງສະຫະພັນແມ່ຍິງລາວຄົບຮອບ 55 ປີ

ຂ້າພະເຈົ້າຂໍສະແດງ ຄວາມຂອບໃຈນຳບັນດາ ທ່ານນັກປະພັນ ນັກກະວີທີ່ໄດ້ທຸ່ມເທດ້ວຍຫົວຄິດ ປະດິດສ້າງສະຕິປັນຍາ ທີ່ສ່ອງໃສນຳເອົາຂໍ້ຄິດອັນດີງາມມາປະກອບສ່ວນເຂົ້າໃນການສຶກສາອົບຮົມ, ຊຸກຍູ້ສົ່ງເສີມແມ່ຍິງລາວ ກໍຄືປະຊາຊົນລາວບັນດາເຜົ່າດ້ວຍປາຍປາກປາອັນແຫຼມຄົມຂອງຕົນ, ພ້ອມກັນນີ້ ກໍຂໍສະແດງຄວາມຮູ້ບຸນຄຸນ ຄວາມຂອບໃຈຢ່າງສູງມາຍັງບັນດາທ່ານ ທີ່ໄດ້ສົມທົບທຶນສະໜັບສະໜູນການພິມປຶ້ມເຫຼັ້ມນີ້. ຫວັງວ່າບັນດາທ່ານຈະສືບຕໍ່ໃຫ້ການຮ່ວມມືກັບພວກຂ້າ ພະເຈົ້າໃນໂອກາດຕໍ່ໄປ.

ຂ້າພະເຈົ້າຫວັງວ່າປຶ້ມເຫຼັ້ມນີ້ ຈະໃຫ້ປະໂຫຍດແກ່ທ່ານຜູ້ອ່ານທັງຫຼາຍຢ່າງມີຄຸນຄ່າ

ນະຄອນຫຼວງວຽງຈັນ, ວັນທີ 28/6/2010

ປະທານສູນກາງສະຫະພັນແມ່ຍິງລາວ

ສີໃສ ລືເດດມູນສອນ

# ແດ່ແມ່ຜູ້ມີພະຄຸນ



ແມ່...ຜູ້ໃຫ້ກຳເນີດແກ່ລູກ
ແມ່...ມີບົດບາດ ແລະ ມີພະຄຸນອັນໃຫຍ່ຫຼວງ
ແມ່...ປະກອບສ່ວນຢ່າງສົມກຽດໃນພາລະກິດຂອງຊາດ
ແລະສັງຄົມ

ນັບວ່າເປັນເລື່ອງໜ້າຊົມເຊີຍສັນລະເສີນຢ່າງຍິ່ງທີ່ **ຄຳອອນ ເພັດດາວເຮືອງ** ໄດ້ນຳເອົາບົດກາບກອນ ອັນຫຼາກຫຼາຍອັດຖະຣົດ ຊຶ່ງເປັນຜົນງານຈາກຫຼາຍນາມປາກກາຂອງ ຜູ້ມີຊື່ສຽງຮຽງນາມໃນອຸດທິຍານອັກສອນສິນ ບົນດິນແດນແຫ່ງດອກຈຳປາ ມາ ໂຮມຢູ່ໃນເຫຼັ້ມດຽວກັນ ເປັນຄັ້ງປະຫວັດສາດ ພາຍໃຕ້ຊຸດ **"ແດ່ແມ່ຜູ້ມີພະຄຸນ"** ເພື່ອສະແດງຄວາມກະຕັນຍູຮູ້ບຸນຄຸນ ແລະສັນລະເສີນແມ່ຂອງພວກລູກທຸກໆຄົນ.

ຂໍຊົມເຊີຍ ໃນຄວາມພະຍາຍາມ ແລະເຈຕະນາລົມອັນສູງສົ່ງ ຂອງຜູ້ຈັດທຳທີ່ເຮັດໃຫ້ຜົນງານສຳຄັນເຫຼັ້ມນີ້ອອກສູ່ສາຍຕາຜູ້ອ່ານ ໃນໂອກາດເຫດການສຳຄັນຄືວັນຄົບຮອບ 55 ປີ ແຫ່ງການສ້າງຕັ້ງ ສະຫະພັນແມ່ຍິງລາວ (20/7/1955-20/7/2010 ຂ້າພະເຈົ້າເຫັນວ່າ ຜູ້ເປັນລູກຄວນໄດ້ອ່ານປຶ້ມເຫຼັ້ມນີ້ ແລະຄວນມີປຶ້ມນີ້ໄວ້ໃນຫໍສະໝຸດ ໃນຫ້ອງອ່ານ ແລະຕູ້ປຶ້ມສ່ວນຕົວ ເພື່ອໃຫ້ລູກໆ ໄດ້ສຳຜັດກັບພະຄຸນຂອງແມ່ ສົມດັ່ງເຈດຕະນາ ຂອງຜູ້ແຕ່ງ ຜູ້ຈັດພິມ ແລະຜູ້ໃຫ້ການອຸປະຖຳ.

ເມື່ອໄດ້ເຫັນ "ແດ່ແມ່ຜູ້ມີພະຄຸນ"ແລ້ວ ຂ້າພະເຈົ້າກໍຂໍສອດແຊກ **"ອາຍອຸ່ນຈາກອົກແມ່"**ເຂົ້າສູ່ຫົວໃຈລູກໆ ເພື່ອໃຫ້ລູກໆໄດ້ເປັນຄົນດີຂອງແມ່ ຂອງຄອບຄົວ ແລະຂອງປະເທດຊາດ

*" ອ້ອມອົກແມ່ " ປານວ່າໄດ້*
*ຮ້ອຍໝື່ນໄພລິນາ*
*ມວນໝູ່ ແມງ ຍູງ ຮີ້ນ*
*ມີແມ່ປັດປ່າຍປ້ອງ*
*ຂໍກອດແມ່ຮັດແໜ້ນ*
*ນົບນ້ອມໃນບູນຄຸນ*
*ມີແມ່..ມີວັນນີ້*
*ຢາດນ້ຳນົມແມ່ຫວານ*

*ຢູ່ເຮືອນໃຫຍ່ຝາໜາ*
*ບໍ່ສັ່ນຄອນແຄນຍ້ານ*
*ບິນມາຕອມໄຕ່*
*ປະຄອງຕຸ້ມຕ່ອມແພງ*
*ຕິດແນບຊວງອົກ*
*ແມ່ແພງພຽນລ້ຽງ*
*ເປັນຄົນດີຂອງຊາດ*
*ຈຳຄຳສອນແມ່ໄດ້*
*ຄຸນແກ້ວໜ່ວຍໃສ ລູກນາ.*

ສົມສຸກ ສຸກສະຫວັດ
ຮອງປະທານສະມາຄົມນັກປະພັນລາວ



## ຄຳຢັ້ງຢືນຂອງ
# ທ່ານ ນາງ ຄຳພອນ ພິມມະແສງ
### ອະດີດຫົວໜ້າກົມໂຄສະນາວັດທະນະທຳ ແລະໜັງສືພິມແມ່ຍິງລາວ

.......................................

ໃນປີ 1979 ຢູ່ສູນກາງສະມາຄົມແມ່ຍິງລາວຮັກຊາດ ທີ່ນະຄອນຫຼວງວຽງຈັນ ໄດ້ມີການປັບປຸງການຈັດຕັ້ງ ເພື່ອໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ ພາກສ່ວນຈັດຕັ້ງບໍລິຫານໄດ້ພົວພັນກັບພາກສ່ວນຕ່າງໆເພື່ອຂໍພະນັກງານມາປະກອບໃນວຽກງານຕ່າງໆໃຫ້ມີຮູບຮ່າງດີຂຶ້ນເທື່ອລະກ້າວ.

ໜຶ່ງໃນຈຳນວນພະນັກງານທີ່ ຂຶ້ນມາຮ່ວມໃນວຽກງານຂັ້ນສູນກາງກໍມີສະຫາຍນາງ ຄຳອອນ ເພັດດາວເຮືອງ ຊຶ່ງເປັນປະທານສະມາຄົມແມ່ຍິງ ເມືອງວັງວຽງ ແຕ່ປີ 1975 - 79 ແລະຫາກໍ່ຍົກຍ້າຍມາຢູ່ຫ້ອງການສູນກາງສະມາຄົມແມ່ຍິງແຂວງ ແລະກຳແພງນະຄອນຈາກນັ້ນກໍໄດ້ແຕ່ງຕັ້ງໃຫ້ສະຫາຍ ນາງຄຳອອນ ເພັດດາວເຮືອງເປັນຮອງຫົວໜ້າຫ້ອງການສະມາຄົມແມ່ຍິງແຕ່ເດືອນ 7/1979 – 1982 ໃນໄລຍະຮັບໜ້າທີ່ບໍລິຫານວຽກງານຢູ່ຫ້ອງການນັ້ນເທົ່າທີ່ມີເວລາ ສະຫາຍ ຄຳອອນ ກໍຂຽນບົດ, ຂຽນຂ່າວ, ຂຽນກາບກອນ ສົ່ງລົງໃນໜັງສືພິມແມ່ຍິງ ລາວເປັນປະຈຳ (ໜັງສືພິມແມ່ຍິງລາວສ້າງຕັ້ງຂຶ້ນໃນວັນທີ 8/3/1980). ກອງປະຊຸມໃຫຍ່ແມ່ຍິງລາວທົ່ວປະເທດຄັ້ງທີ I ໄດ້ຮັບຮອງ ແລະປ່ຽນຊື່ຄະນະຂົບຂວາຍສ້າງຕັ້ງສະມາຄົມແມ່ຍິງລາວຮັກຊາດມາເປັນຄະນະສະຫະພັນແມ່ຍິງລາວ.

ການປັບປຸງການຈັດຕັ້ງຄັ້ງນີ້, ຍ້ອນມີພອນສະຫວັນໃນດ້ານການຂີດຂຽນ ສະຫາຍນາງ ຄຳອອນ ເພັດດາວເຮືອງ ຈຶ່ງຖືກຍົກຍ້າຍຈາກຮອງຫົວໜ້າຫ້ອງການ ມາເປັນຮອງຫົວໜ້າກົມໂຄສະນາ ວັດທະນະທຳ ແລະໜັງສືພິມ ໂດຍໄດ້ເປັນຜູ້ຮັບຜິດຊອບລົງເລິກ ຊີ້ນຳລາຍການວິທະຍຸກະຈາຍສຽງພາກແມ່ຍິງລາວ. ບົດກາບກອນໄຂລາຍການວິທະຍຸກະຈາຍສຽງພາກແມ່ຍິງລາວ ກໍແມ່ນໄດ້ຈາກການປະດິດຄິດແຕ່ງຂອງນາງຄຳອອນ ນັ້ນເອງ. ໃນໄລຍະຮ່ວມວຽກງານເປັນເວລາກວ່າ 4 ປີ ນັ້ນນອກຈາກຮັບຜິດຊອບວຽກງານລວມຂອງກົມແລ້ວ ສະຫາຍຍັງໄດ້ສົ່ງບົດກວດສອບຂອງຕົນເຂົ້າໃນບັ້ນກວດສອບ ເນື່ອງໃນໂອກາດວັນສ້າງຕັ້ງ ກອງທັບປະຊາຊົນລາວ ຄົບຮອບ 37 ປີ ຈຳນວນ 2 ບົດຄື: ສຽງສັ່ງຂອງແມ່ ແລະຂໍຮ່ຳຮຽນນຳອ້າຍຜ່ານການຄັດຈ້ອນຈາກຄະນະຮັບຜິດຊອບກວດສອບບົດຂອງສະຫາຍຄຳອອນກໍຕິດອັນດັບປະເພດ II ໜຶ່ງບົດ, ປະເພດ III ໜຶ່ງບົດ ທັງ ສອງ ບົດນີ້ກໍໄດ້ສັ່ງລວມໂດຍຫ້ອງການການເມືອງກອງທັບພິມອອກ ເປັນປຶ້ມ "ພົນທະຫານເລືອກຄູ່".

ໃນກອງປະຊຸມແມ່ຍິງລາວທົ່ວປະເທດຄັ້ງທີ I-II ການຈັດຕັ້ງກໍໄດ້ມອບໝາຍໃຫ້ສະຫາຍຄຳອອນ ຂຽນບົດອວຍພອນ ສຳລັບໃຫ້ເຍົາວະຊົນ 2 ທັນວາເຂົ້າອ່ານອວຍພອນຕໍ່ກອງປະຊຸມ.ເມື່ອຮອດວາລະເຍົາວະຊົນເຂົ້າອວຍພອນສຽງກອງກຽດຕິຍົດຂອງເຍົາວະຊົນ ບວກກັບສຽງຕົບມືຂອງຜູ້ແທນດັງຂຶ້ນຢ່າງຟົດສະນັ່ນຫວັ່ນໄຫວເມື່ອຂະບວນເຍົາວະຊົນເຂົ້າປະຈຳທີ່ແລ້ວເນື້ອໃນແລະສຳນຽງສຽງອອດອ້ອນຂອງເຍົາວະຊົນທັງຍິງ ແລະຊາຍກໍຜັດປ່ຽນກັນອ່ານ ອັນໄດ້ເຮັດໃຫ້ ສຽງ ສະອື້ນແລະສາຍນ້ຳຕາຂອງຜູ້ແທນສ່ວນຫຼວງຫຼາຍໄດ້ຫຼັ່ງໄຫຼອາບແກ້ມດ້ວຍຄວາມຕື້ນຕັນໃຈຕົວຢ່າງບາງຕອນເຍົາວະຊົນໄດ້ອ່ານວ່າ:

ແມ່ເອີຍ !ຂໍໃຫ້ແມ່ ແລະ ນ້າ ຈົ່ງເຕັມປ່ຽມສາມດີ<br>
ໜ້າທີ່ການທັງສອງ ຈົ່ງໝັ້ນປອງພຽນສູ້<br>
ສ່ວນວ່າຈິດໃຈນັ້ນ ໃຫ້ສົດໃສ ແລະຜຸດຜ່ອງ<br>
ສາມັກຄີພີ່ນ້ອງ ສາກົນກວ້າງ ແລະເຜົ່າລາວ ນີ້ແລ້ວ<br>
ສຳລັບ ພວກລູກນີ້ ຈະບຸກເບີກສາມດີ<br>
ຮ່ຳຮຽນດີ ສາມັກຄີດີ ແລະລະບຽບວິໄນໃຫ້ດີພ້ອມ<br>
ທັງຈະຝຶກຝົນໃຫ້ ຕົນເອງເປັນແບບຢ່າງ<br>
ສີ່ປະການຮອບຮູ້ ຈະໝາຍຮູ້ໃຫ້ເກີດຜົນ ແມ່ເອີຍ<br>
ດຽວນີ້ ພວກລູກຍັງໜຸ່ມນ້ອຍ ອະນາຄົດຍັງໄກ<br>
ໃຫ້ແມ່ວາງໃຈສາ ອຸ່ນອຽນຢ່າເຄືອງແຄ້ນ<br>
ຄວາມສຸກສັນຈະມີຂຶ້ນ ພາຍລຸນເມື່ອລູກໃຫຍ່<br>
ພວກລູກຂໍຮັບໃຊ້ ແທນເຊື້ອສືບຕະກຸນ ແມ່ເອີຍ !

ພາບວາລະປະຊຸມ, ພາບນ້ຳຕາແຫ່ງຄວາມຫວັງ ແລະ ຄວາມພາກພູມ ສະອື້ນຕື້ນຕັນໃຈ ດັ່ງກ່າວນັ້ນ ຍັງໄດ້ຈາລຶກໃນຄວາມຊົງຈຳຂອງແຕ່ລະຄົນ ແລະໄດ້ ບັນທຶກໄວ້ໃນພົງປະຫວັດສາດຂອງສະຫະພັນແມ່ຍິງລາວ (ສາມາດທົບທວນຫວນຄື ນໄດ້ໃນວາລະ ສຳຄັນຂອງແມ່ຍິງລາວ).

ໃນໂອກາດນີ້ ຂ້າພະເຈົ້າຂໍຍ້ອງຍໍຊົມເຊີຍ ແລະຂໍຢັ້ງຢືນວ່າ ສະຫາຍ ຄຳອອນ ເພັດດາວເຮືອງ ເປັນຜູ້ມີ ພອນສະຫວັນ ແລະ ມີຄວາມມຸ່ງໝັ້ນໃນການຂີດ ຂຽນເວົ້າລວມ, ເວົ້າສະເພາະແມ່ນການປະດິດຄິດແຕ່ງ ແລະນຳເອົາສຸພາສິດ ຄຳຜະຫຍາ ມາຟື້ນຟູ ລື້ມສູ່ກັນຟັງເລື້ອຍໆມາ.

ພ້ອມນີ້ກໍຂໍຂອບໃຈ ແລະຂໍອວຍພອນໄຊໃຫ້ແກ່ນັກກະວີທຸກໆທ່ານ, ຜູ້ຮຶບໂຮມ, ຜູ້ຮ່ວມງານ ແລະຜູ້ສະໜັບສະໜູນການຈັດພິມປຶ້ມຄັ້ງນີ້ ພ້ອມທັງຜູ້ອ່ານ ຈົ່ງມີສຸຂະພາບເຂັ້ມແຂງ ມີອາຍຸໝັ້ນຍືນ ແລະ ມີຄວາມຈະເລີນກ້າວໜ້າ ຂໍຝາກຄວາມຫວັງໄວ້ນຳທຸກຄົນວ່າ ແຕ່ລະຄົນຈະພ້ອມກັນຝຶນປາຍປາກກາຂອງຕົນໃຫ້ແຫຼມຄົມກວ່າເກົ່າເພື່ອສົ່ງເສີມວົງການນັກປະພັນລາວຂອງພວກເຮົາ ໃຫ້ມີການພັດທະນາໃນການຂີດຂຽນໃຫ້ ອຸດົມສົມບູນ ແລະ ມີຄວາມ ອະມະຕະ ຕະຫຼອດໄປ

ນະຄອນຫຼວງວຽງຈັນ ວັນທີ 30/6/2010
ອະດີດ ຄະນະເລຂານຸການສູນກາງສະຫະພັນແມ່ຍິງລາວ
ຫົວໜ້າກົມໂຄສະນາ, ວັດທະນະທຳ ແລະ ໜັງສືພິມ
ຫົວໜ້າບັນນາທິການ ໜັງສືພິມແມ່ຍິງລາວ



ຄຳພອນ ພິມມະແສງ



# ຄໍາຊົມເຊີຍ

ປຶ້ມໂຮມກະວີ **"ມອບແດ່ ແມ່ຜູ້ມີພະຄຸນ"** ເຫຼັ້ມນີ້ໄດ້ປາກົດຂຶ້ນພາຍຫຼັງບັນດາບົດກະວີຕ່າງໆໄດທະຍອຍປາກົດອອກມາດົນນານສົມຄວນແລ້ວ.ບັນດາບົດກາບກອນເຫຼົ່ານັ້ນເກີດຈາກປາຍປາກກາ ຂອງນັກກະວີຫຼາຍໆຄົນ ຊຶ່ງຕ່າງຄົນກໍມີຄວາມຄິດ ຄວາມປະສົງອັນດຽວກັນຄືຮັກ, ຫ່ວງ, ຮູ້ບຸນຄຸນ ແລະເທີດທູນກຽດສັກສີຂອງແມ່ຍິງ, ຜູ້ຊຶ່ງ ເປັນ ແມ່, ເປັນເອື້ອຍ ເປັນນ້ອງ..

ໃນນັ້ນ ຜູ້ທີ່ມີຄໍາຄິດ, ຄວາມປະສົງ ອັນແຮງກ້າທີ່ສຸດ ກໍແມ່ນທ່ານາງ **ຄໍາອອນ ເພັດດາວເຮືອງ** ຜູ້ຊຶ່ງໄດ້ປະດິດແຕ່ງບົດກະວີຫຼາຍທີ່ສຸດໃນປຶ້ມນີ້. ສິ່ງນັ້ນຢັ້ງຢືນ ຜ່ານຄວາມສູ້ຊົນທ້ອນທອມ ບົດກະວີ ຫົວເລື່ອງແມ່ຍິງນີ້ມາເປັນເວລາຫຼາຍປີ ແລະວິ່ງເຕັ້ນຊອກຊ່ອງທາງໃຫ້ບັນດາບົດກະວີ ໄດ້ມາສະແດງ ຢູ່ບົນໜ້າເຈ້ຍໃນປຶ້ມຫົວດຽວກັນ.

ປຶ້ມນີ້ ຈຶ່ງຖືໄດ້ວ່າເປັນເວທີ "ວາງສະແດງ" ຄວາມຄິດ, ຄວາມຮັກ, ຄວາມຫ່ວງ ຄວາມກະຕັນຍູຮູ້ຄຸນ ແລະເທີດທູນບູຊາແມ່ຜູ້ມີຄຸນເທົ່າຟ້າກັບແຜ່ນດິນ ລວມທັງຄວາມຮູ້ສຶກທີ່ດີງາມ, ສູງສົ່ງຂອງນັກກະວີ ທັງຫຼາຍອີກດ້ວຍ.

ນັກກະວີທັງຫຼາຍ ຕ່າງກໍເປັນລູກເປັນຫຼານໆ ສະເພາະທ່ານາງ ຄໍາອອນ ເພັດດາວເຮືອງ ເອງກໍເປັນລູກຂອງແມ່ ແລະເປັນທັງແມ່ຂອງລູກ ດັ່ງນັ້ນ ການສ້າງສັນບົດກະວີ ຈຶ່ງເປັນການ ຍໍຍື່ນຄວາມຮູ້ສຶກທີ່ດີງາມ ແລະສູງສົ່ງອັນເປັນຊີວິດຈິດໃຈຂອງຕົນ ໃຫ້ເປັນຂອງ ຂວັນ ອັນປະເສີດຕໍ່ແມ່ຍິງທັງຫຼາຍ.

ນະຄອນຫຼວງວຽງຈັນ ວັນທີ 1 ກໍລະກົດ 2010
ປະທານສະໂມສອນນັກຂຽນຍິງ
ຜິວລາວັນ ຫຼວງວັນນາ



# ຄຳຊື່ນຊົມ

ກວ່າຈະໄດ້ເພັດນ້ຳເອກມາຄອບຄອງ ກໍເກືອບເຄິ່ງຊີວິດຂອງຜູ້ຮັບໂຮມແລ້ວ ມັນໂລດສົມກັບຄຳບູຮານເພິ່ນ ກ່າວໄວ້ວ່າ *"ຢາກໄດ້ແກ້ວມະນີລ້ຳເລີດ ບໍ່ແມ່ນວ່າຈະຫາໄດ້ມາໂດຍງ່າຍດາຍ ຄັນບໍ່ຕັ້ງອົກຕັ້ງໃຈເຈຍລະໄນເປັນປີໆກໍບໍ່ມີມະນີເລີດລ້ຳ ປະກາຍເຫຼື້ອມແວວວາວ ນັ້ນເປັນແມ່ "*

ແມ່ໃນດວງໃຈຂອງລູກໆກໍເຊັ່ນດຽວກັນລູກໆທຸກຄົນລ້ວນແຕ່ມີຄວາມຮັກຕໍ່ແມ່ເໝືອນດັ່ງແມ່ມີຄວາມຮັກ ແລະຜູກພັນຕໍ່ລູກໆທຸກຄົນ ຢ່າງສະໝ່ຳສະເໝີ ກະວີຍິງ ຈາກຍອດງື່ນແຫ່ງແດນເມືອງພວນ*"**ຄຳອອນ ເພັດດາວເຮືອງ**"* ຜູ້ສະຫງວນມັກໃນການຮ້ອຍກະວີເປັນຕ່ອງໂສ້ໃຫ້ກົມກືນ ກັນເປັນໜຶ່ງດຽວເໝືອນເພັດເມັດງາມໃນແດນບຸບຜາຈຳປາເມືອງລາວ ເພັດເມັດຂາວໆໃສໆເຊິ່ງແຝງໄວ້ຄວາມໂດດ ເດັ່ນກ້າແກ່ນສຸດເປັນເລີດໃນບົດກະວີເໝືອນດວງດາວທີ່ລະຍິບລະຍັບຢູ່ບົນທ້ອງນະພາ ຫາໃສກໍບໍ່ອາດໂດດເດັ່ນເທົ່າ ເພັດເມັດງາມດວງນີ້ ຈາກດວງໃຈຂອງພວກລູກໆທີ່ມີໃຫ້ກັບແມ່ຜູ້ໃຫ້ກຳເນີດຂອງລູກໆ ຍິງ-ຊາຍທຸກຄົນ.

ບົດກະວີຮ້ອຍ ຮັກສະຫຼັກໃຈຝາກເຖິງແມ່ເປັນກະວີທີ່ກັ່ນກອງມາຈາກຄວາມຮູ້ສຶກຂອງນັກກະວີຫຼາຍທ່ານຜູ້ເຊິ່ງລ້ວນແລ້ວແຕ່ມີຜົນງານການແຕ່ງມາເປັນເວລາຫຼາຍສິບປີແລະເຄີຍຜ່ານສາຍຕາຂອງບັນດາທ່ານຜູ້ສະແຫວງມັກໃນຄວາມອ່ອນຊ້ອຍທ້ອຍຝັນໄວ້ປາຍປາກກາເພັດທີ່ແຫຼມຄົມຂອງເພິ່ນ.

ມາໃນເທື່ອນີ້ເຫັນວ່າຄວາມພະຍາຍາມ ຂອງນາງຄຳອອນ ເພັດດາວເຮືອງເຊິ່ງທ່ານທັງຫຼາຍ ເຄີຍຮູ້ຈັກເພິ່ນໃນນາມ ***"ມາລີພວນ"*** ແລະ***"ເພັດເມືອງພວນ"*** ກະວີອາວຸໂສ (ເບື້ອງຕົ້ນ) ຂອງຊີວິດທ່ານຜູ້ນີ້ມີຄວາມລະອຽດອ່ອນໃນການຕົບແຕ່ງ ສີສັນໃຫ້ຄວາມຮູ້ສຶກອາລົມແລະການເຄື່ອນໄຫວຂອງສັງຄົມໃນດ້ານອະລິຍະບົດເຊິ່ງຈຸລັງສັງຄົມໄດ້ສ້າງຂຶ້ນໂດຍຕັ້ງໃຈແລະບໍ່ຕັ້ງໃຈ ກະວີຜູ້ນີ້ ມີຍານທິບຕາຄົມແລະຄາລົມເປັນເລີດສອງດ້ວນມີເບື້ອງຂວາກະດິກໃຫ້ປາຍປາກ ກາພາໄປເປັນຮອຍ ຮ້ອຍຄວາມຮູ້ສຶກຂອງສັງຄົມ ອອກມາເປັນບົດ ໃຫ້ບັນດາທ່ານອ່ານຢ່າງຈຸອົກຈຸໃຈ.

ມາໃນເທື່ອນີ້ ຍິ່ງອີ່ມເອີບໄປດ້ວຍຫຼາຍລົດຊາດ ຈາກຫຼາຍນັກກະວີຍິງ ຊາຍໃນ ສປປ. ລາວ ອ່ານໃຫ້ເພີ່ນ ເດີນໃຫ້ຖືກ ເພື່ອຈະໄດ້ໄປເຖິງເປົ້າໝາຍ ຂອງນັກແຕ່ງ ແລະຜູ້ຮຽບຮຽງວ່າເພີ່ນຢາກສື່ສານຫຍັງໃຫ້ພວກເຮົາຮັບຮູ້ນຳ:

ຈົ່ງພູມໃຈກັບຄຳວ່າ...ລູກ

ຈົ່ງພູມໃຈກັບຄຳວ່າ...ໃຫ້ແມ່

ຈົ່ງພູມໃຈກັບຄຳວ່າ "ລູກຮັກແມ່" ແລະຈົ່ງພູມໃຈກັບຄຳວ່າ ລູກທຸກຄົນຍອມເສຍສະຫຼະໃຫ້ແມ່ໄດ້ ແມ່ປຽບເໝືອນແຜ່ນດິນ ທີ່ລູກຢູ່ອາໄສ ລູກທຸກຄົນຈະປົກປ້ອງບໍ່ໃຫ້ໄພພິບັດມາເຖິງແມ່ຂອງລູກພວກລູກພູມໃຈມອບເພັດນ້ຳໜຶ່ງເມັດນີ້ ແດ່ແມ່ແລະຮັກແມ່ຕະຫຼອດການະນານ...

ດວງໃຈດວງນ້ອຍທ້ອຍເປັນພວງສົ່ງຂຶ້ນໄປຕາມກະແສລົມເຢັນ ໃຫ້ໄປເຖິງແມ່ທີ່ຢູ່ທຸກຫົນແຫ່ງໃນໂລກ ປັດຖະພີ ອັນກວ້າງໃຫຍ່ໄພສານ ໃຫ້ແມ່ມີແຕ່ຄວາມສຸກຄວາມຈະເລີນທ້ອນ. ຖ້າແມ່ໆຜູ້ຈາກໄປໄລທ່າງແລ້ວ ຂໍໃຫ້ແມ່ຈົ່ງໄປສູ່ສຸຄະຕິເທີ້ນ.

ສະພາບພູມີປະເທດແລະດິນຟ້າອາກາດອັນອົບອຸ່ນເໝາະສົມສົ່ງຜົນດີແກ່ສັງຄົມລາວຄືເຮັດໃຫ້ທຸກຄົນມີຄວາມຜູກພັນກັບຄອບຄົວ ຕັ້ງແຕ່ເກີດຈົນເຕີບໃຫຍ່. ເຖິງວ່າມີຄອບມີຄົວກັນແລ້ວ ກໍຍັງມີການໄປມາຫາສູ່ກັນລະຫວ່າງພໍ່ແມ່ລູກ. ຄວາມຜູກພັນອັນນີ້ ມັນຕັດຂາດຈາກຊີວິດຂອງຄົນເຮົາບໍ່ໄດ້ ລູກຈະໃຫຍ່ກ້າໜ້າບານເປັນເຮືອນເປັນຊານແລ້ວກໍ່ຕາມ "ແມ່ນີ້ຮັກລູກຄືເກົ່າຄືກັບລູກຍັງພວມນ້ອຍໆໃນອ້ອມກອດຂອງແມ່" ຍ້ອນແນວນີ້ຄົນລາວຈຶ່ງມີຄວາມອ່ອນນ້ອມ ມີຄວາມຜູກພັນກັນ ແລະມີຄວາມອົບອຸ່ນສົມຄູ່ກັບອຸນະພູມທີ່ໄດ້ຮັບຈາກດິນຟ້າອາກາດໂດຍທຳມະຊາດສ້າງ.

ໜັງສືເຫຼັ້ມນີ້ຈຶ່ງເປັນໜັງສືທີ່ດີເດັ່ນເຫຼັ້ມໜຶ່ງທີ່ຫາໄດ້ຍາກເພາະນອກຈາກຈະເປັນຂໍ້ມູນໃນເລື່ອງການຜູກພັນແມ່ລູກແລ້ວ ຍັງເຮັດໃຫ້ລູກທຸກຄົນສຳນຶກຮູ້ບຸນຄຸນຂອງ ແມ່ ຜູ້ໃຫ້ກຳເນີດອີກດ້ວຍ "ຈົ່ງຮັກແມ່ຜູ້ເສຍເລືອດແລະລອດຕາຍມາເພື່ອໄດ້ຜູ້ສືບທອດເຕັມບ້ານເຕັມເມືອງ"

ຮັກແມ່ຈົ່ງອຸທິດຕົນເປັນຄົນດີຂອງຊາດບ້ານເມືອງເທີ້ນ.

ຂໍຊົມເຊີຍຜູ້ຮຽບຮຽງທີ່ນຳສະເໜີຮ້ອຍບົດກະວີຈາກສາລະທິດ ມາຄິດຕົບແຕ່ງໃຫ້ເປັນເພັດເມັດງາມ.

ນະຄອນຫຼວງວຽງຈັນ ວັນທີ 7/6/ 2010



ກົງເດືອນ ເນດຕະວົງ

ອະດີດ ຜູ້ອຳນວຍການຫໍສະໝຸດແຫ່ງຊາດລາວ

ຫົວໜ້າໂຄງການສົ່ງເສີມການອ່ານແຫ່ງຊາດລາວ

# ຄຳນຳເຖິງຜູ້ຈັດພິມ

## ໂດຍ: ກົງເດືອນ ເນດຕະວົງ

........................................................

ຂໍພູມໃຈເອກອ້າງ          ຜົນງານເດັ່ນດູປະຈັກ          ເພື່ອນເອີຍ
ໃນວາດແວວກະວີວອນ          ທີ່ເພື່ອນພິມຜະລິດສ້າງ
ອ້າງເປັນຜົນງານໃຫ້          ນຳໄປສົ່ງໃບຂ່າວ
ໃຫ້ຊາວລາວພີ່ນ້ອງ          ທຸກຄົນໄດ້ອ່ານນຳ

ບັດນີ້ມີພຽບພ້ອມ          ຮີບຮ່ວມໂຮມເອົາ          ບົດນັ້ນ
ເປັນສຳເນົາກະວີກອນ          ເພື່ອໃຫ້ພິມພໍເຫຼັ້ມ
ເຕັມໃຈຍໍຍັງໃຫ້          ສະຫາຍແພງເພື່ອນເກົ່າ
ທີ່ເຂົາລືຊ່າຍ້ອງ          ນາມປາກກາເຈົ້າ “ມາລີພອນ” ຜ່ານມາ

ອັນໜຶ່ງຂ້ອຍນີ້ຄຶດບໍ່ແລ້ວ          ໃນເລື່ອງຄວາມເຕັມໃຈ          ເພື່ອນເອີຍ
ຂອງຜູ້ໝາຍຈັດພິມ          ຈຶ່ງຮີບໂຮມຮວມໄວ້
ຢາກໃຫ້ຫຼາຍຄົນຮູ້          ມອງດູຫຼາຍບົດອ່ານ
ມີທັງທ່ານກັບທັງເຈົ້າ ແລະຂ້ອຍ          ອາວຸໂສພຸ້ນເພື່ອນກະວີ

ອີກອັນໜຶ່ງຍັງມີຈຸດປະສົງຕັ້ງ          ມອບໃຫ້ແກ່ແພງຂວັນ
ເປັນເພື່ອນແພງພຽງຮັກ          ແຕ່ເມື່ອເຍົາຍັງນ້ອຍ
ບາດວ່າມາພານພໍ້          ເຫັນກັນບັ້ນແກ່
ຕ່າງຄົນຕ່າງກໍ່ແລລໍ່າຈ້ອງ          ຜົມສີດອກເລົາເອ້ຢ້ອງ
          ຢູ່ເທິງເກົ້າເກດງາມ          ນີ້ນໍ

ຕ່າງຄົນຕ່າງກໍ່ເກີດຢູ່ກ້ຳ          ແຄວ້ນຖິ່ນຊຽງຂວາງ          ພາຍພຸ້ນ
ເປັນຖິ່ນຖານຄົນພວນ          ຕັ້ງແຕ່ເດີມດາເຄົ້າ
ເຮົາມາຫວນຄະນຶງພໍ້          ມາຕຸພູມບ້ານອີ່ແມ່
ແລລໍ່າຄືນຖິ່ນເຄົ້າ          ຄະນຶງເຈົ້າຜູ້ຈາກໄປເດນໍ

ຖ້າຫາກ ຍັງຄະນຶງຖິ່ນເຄົ້າ          ໃຫ້ເຈົ້າອ່ານໂຮມກະວີ          ແດ່ເນີ
ຈະໄດ້ສີໂສມງາມ          ດັ່ງເມື່ອເຮົາຍັງນ້ອຍ
ແສງຕາພອຍພານພໍ້          ມອງເຫັນກັນບາດຍາມອ່ານ
ມອງຜ່ານພູມຟາກຟ້າ          ໄປຫາກ້ຳແກ່ວຫຼັງພຸ້ນເຍີ





# ພໍ່ + ແມ່

**ໂດຍ: ຄຳອອນ ເພັດດາວເຮືອງ**

.........................................................

ຄຸນ ຄ່າສູງເລີດລ້ຳ ບໍ່ມີສິ່ງທຽມທັນ ໄດ້ແລ້ວ
ພໍ່ ເປັນຜູ້ຍໍທວນແສງ ສ່ອງທາງເຍືອງໄຕ້
ໜັກ ຫຼືເບົາພໍ່ທົນສູ້ ຜະຈົນໄພບໍ່ໄດ້ຈົ່ມ
ເກິ່ງ ສອງຕາເນດນ້ອຍ ຮັກສາຕຸ້ມຕ່ອມຄົວ ແທ້ແລ້ວ

ພູ ຈະສູງຊໍ່ຟ້າ ຫຼາວຊົ່ວສຸດແຫງນ
ເຂົາ ຈະສູງສຸດຕາ ຊົ່ວແຍງສຸດສິ້ງ
ກ້າ ແກ່ນແຂງຄະນົງໝັ້ນ ບໍ່ມີວັນຈະມ້າງມຸ່ນ
ຄຸນ ນະທຳເອກອ້າງ ບໍ່ມາຍມ້າງຫ່າງເປັນ ແທ້ແລ້ວ

ແມ່ ກໍຄຽງຄູ່ຂ້າງ ພະຄຸນພໍ່ບິດາ
ໜັກ ເກິ່ງພູແສນຜາ ບໍ່ນັບພັນລະນາໄດ້
ເທົ້າ ທີ່ມືນຕາຂຶ້ນ ກໍເນົານອນໃນຕັກແມ່
ຟ້າ ຫາກຮ້ອງຄຶກຄື້ນ ກໍຍັງເອີ້ນອີ່ແມ່ເອີຍ ແທ້ນາ

ແລະ ຄຸນພໍ່ແມ່ນັ້ນ ລູກຈາລຶກບໍ່ລືມຫຼົງ
ແຜ່ນ ພື້ນປະຖະພີລາວ ລູກຊິປຸນປົກປ້ອງ
ດິນ ດອນລາວຕອນນີ້ ບໍ່ມີໃຜມາກີດຂີ
ພຸ້ນ ແລະພີ້ ເໜືອ ແລະໃຕ້ ຈະຂໍສ້າງສືບຕະກຸນ ພໍ່ແມ່ເອີຍ

ແລ້ວ ຈະຂໍຕັ້ງໜ້າ ຝຶກຝົນແຕ່ແນວດີ
ຂໍໃຫ້ວາງໃຈສາ ບຸດຕີ ບຸດຕາຈະສືບແທນມູນເຊື້ອ
ລູກຂໍຈູນເຈືອໃຫ້ ຄຸນນົມແລະຢາດເຫື່ອ
ຕັ້ງແຕ່ເມື່ອຢູ່ທ້ອງ ຜອງເທົ້າຊົ່ວຊີວີ ພໍ່ແມ່ເອີຍ !



# ລູກ

## ໂດຍ: ຄຳອອນ ເພັດດາວເຮືອງ

.............................................

ລູກ　ແມ່ນຄຸນຄ່າລົ້ນ　ຜົນບວກຂອງຄວາມຮັກ
ລູກ　ແມ່ນສາຍຜູກພັນ　ໃຫ້ຮັກຍືນຍາວໝັ້ນ
ຄື　ດັ່ງສາຍໃຍຝັ້ນ　ພັນທະນັງກ້ຽວກອດ
ແກ້ວ　ເພັດນິນນົບພະເກົ້າ　ຍັງບໍ່ເທົ່າທຽບທຽມ　ໄດ້ແລ້ວ

ຕາ　ເຍືອງແຍງສອງເບື້ອງ　ຖະໜອມແພງຮັກຫໍ່
ແລະ　ບໍມີຫຍັງປານໄດ້　ກຸນມານນ້ອຍເນດຕາ
ດວງ　ດາວມີເຕັມຟ້າ　ເວຫານັບບໍ່ໄຄວ່
ໃຈ　ປະສົງກ່ອມກ້ຽວ　ວຽນອ້ອມແຕ່ລູກຕົນ　ນີ້ແລ້ວ

ຂອງ　ທີ່ມີຄ່າລົ້ນ　ບົນແຜ່ນທໍລະນີ
ພໍ່　ບໍ່ມີຫຍັງປຸນ　ປຽບປານຕົວເຈົ້າ
ແລະ　ຍັງອາສາດ້ວຍ　ຍາມເຈັບເປັນຂໍຕາງປ່ຽນ
ແມ່　ກໍຍິ່ງຮັກລື່ນລົ້ນ　ຫາສິ່ງໃດທຽບເທົ້າ
　　ໂລການີ້ແມ່ນບໍ່ມີ　ລູກເອີຍ





# ຮັກລູກ

**ໂດຍ: ຄຳອອນ ເພັດດາວເຮືອງ**

.................................................

ຮັກ ຢູ່ໃນໂລກນີ້ ກໍມີຢູ່ຫຼາຍປະການ<br>
ງົວ ຄວາຍ ເປັນສັດທີ່ມີຄຸນ ແກ່ກວຽນ-ໄຖນາພ້ອມ<br>
ໃຫ້ ຮູ້ພຽນແພງໃຊ້ ດູແລມັນໃຫ້ສົມຄ່າ<br>
ຜູກ ພັນກັນແໜ້ນແຟ້ນ ຍາມໃຊ້ຈຶ່ງຄ່ອຍຟັງ ແທ້ເນີ

ຮັກ ຍິ່ງໄປກວ່ານັ້ນ ແມ່ນຮັກລູກແພງຂວັນ<br>
ລູກ ແມ່ນສາຍຜູກພັນ ຈ່ອງດຶງສອງກ້ຳ<br>
ໃຫ້ ຜົວເມຍຍືນໝັ້ນ ນິລັນດອນບັ້ນບ່ອນ ພໍ່ແມ່<br>
ສັ່ງ ສອນມາແຕ່ເຄົ້າ ຫຼາຍຄັ້ງຊົ່ວຄືນ ແທ້ແລ້ວ

ສອນ ແລ້ວສອນຢູ່ເລື້ອຍ ໃຫ້ຕັ້ງຕໍ່ແຕ່ຄວາມດີ<br>
ສອນໃຫ້ມີພຶດຕິກຳ ແລະທ່າທີດີພ້ອມ<br>
ສອນທັງແລງທັງເຊົ້າ ດີໃຈເມື່ອລູກປ່ຽນ<br>
ຂໍວິງວອນລູກເຕົ້າ ຈົ່ງເອົາເຂົ້າໃສ່ໃຈ ແດ່ທ້ອນ



# ຈຳປາ ມາລາລາວ

**ໂດຍ: ຄຳອອນ ເພັດດາວເຮືອງ**

.........................................................

ຈຳປາເປັນດອກໄມ້ ປະຈຳຊາດລາວເຮົາ
ຈຳປາເປັນມາລາຫອມ ຄູ່ລາວແຕ່ນານແລ້ວ
ຈຳປາເປັນມາແກ້ວ ແນວຫອມບໍ່ເຫີຍກິ່ນ
ຈຳປາເກີດຄູ່ດິນລ້ານຊ້າງ ຄຽງຂ້າງຊາດລາວນີ້ແລ້ວ!

ຫອມກິ່ນຈຳປານີ້ ເປັນທີ່ຊວນຊົມ
ຫອມກິ່ນຈຳປາທົນ ອ່ອນລະມຸນຊວນຊຶ້ງ
ຫອມກິ່ນຈຳປາເທົ້າ ນານແສນນານບໍ່ເຫີຍກິ່ນ
ຫອມກິ່ນຈຳປາແສນຊາບຊຶ້ງ ບໍ່ມີມື້ຊິຈືດຈາງ ໄດ້ແລ້ວ!

ຈຳປາປຽບດັ່ງນາງນາດນ້ອງ ຜູ້ຜຸດຜ່ອງສາວລາວ
ຈຳປາຂາວ ເຫຼືອງ ບົວ ແດງ ກໍປຽບປຸນພົງເຊື້ອ
ຈຳປາ ເໜືອ ກາງ ໃຕ້ ເໝືອນດວງໃຈທຸກຊົນເຜົ່າ
ຈຳປາບານອາບເອ້ ສະຖິດໝັ້ນຄູ່ລາວ ນີ້ແລ້ວ!

ເວົ້າເຖິງດອກໄມ້ ທ້າກົບຈຳປາຫອມ
ເໝືອນດັ່ງຄົນລາວໄປ ຢູ່ທົ່ວໂລກກາກວ້າງ
ດ້ວຍເຫດຜົນຫຼາຍດ້ານ ກະຈາຍໄປທ້າທະວີບ
ແຕ່ກໍ່ຍັງຮັກທໍ່ຫຸ້ມ ຈຳປາກຸ້ມກິ່ນກອມ ນີ້ແລ້ວ!

ຂໍຊັກຊວນເຊີດໄວ້ ຊູຊໍ່ຈຳປາລາວ
ເໝືອນດັ່ງເດືອນກັບດາວ ຄູ່ຄຽງນະພາກວ້າງ
ປວງປະຊາຊົນເຊື້ອ ສາມັກຄີຮັກທໍ່
ພາກັນຮັກສາຮາກ ແລະ ເຫງົ້າ ກໍກ້ານກິ່ງໃບ ໄວ້ເນີ





# ຢາກໄດ້ລູກຊາຍ

## ໂດຍ: ຄຳອອນ ເພັດດາວເຮືອງ

..................................................

ແມ່ ຜູ້ບັງເກີດເກົ້າ ປະສູດລູກຍາມດີ
ຍາມເມື່ອເດືອນເຕັມດວງ ຮຸ່ງກະຈາຍນະພາກວ້າງ
ຝູງໝູ່ດາວເທິງຟ້າ ປະສົງມາແຫນແຫ່
ມອນໝູ່ດາວຮອບອ້ອມ ລໍຍິ້ມຈາກເດືອນ ງາມເດ!

ພໍ່ ຜູ້ລໍເບິ່ງໜ້າ ວ່ານ້ອຍອ່ອນຈະຄືໃຜ
ໃນກະໃຈຄາຄິດ ແມ່ນຍິງຫຼືຊາຍແທ້
ເພາະວ່າຊຸມຜູ້ກີກນັ້ນ ເປັນຍິງທັງຄູ່
ຜູ້ທີສາມຄາດໄວ້ ວ່າຊາຍແທ້ແນ່ນອນ ຊັ້ນນາ.

ຮັກ ແສນຮັກບັກຫຼ້າ ພໍ່ຂໍເບິ່ງເຕັມຕາ ແດ່ເນີ
ບັກຫຳໃນໃຈນຶກ ກໍເປີດພີພຶງຜ້າ
ເລີຍບໍ່ເຫັນຫຳໂຕ້ນ ໂດນຕາໃຫ້ພໍ່ຊື່ນ
ມືນແລ້ວມືນອີກຄັ້ງ ບັກຫຳນັ້ນພັດແຕກກາງ ໂອນໍ!



ລູກ ຈຶ່ງມືນຕາຂຶ້ນ
ໃນໃຈຄິດເດືອດແຄ້ນ
ພໍ່ຈະສອນສັ່ງສ້າງ
ເພາະພໍ່ມີຄາດໝາຍ

ມຽງໆແລ້ວແລເຫຼືອດ
ກໍຕາມທ້ອນຮູບໂສມ
ນິດໄສລູກໃຫ້ເປັນຊາຍ
ແຕ່ດົນມາແລ້ວ ລູກເຮີຍ.

ສຸດ ທີ່ເອົ້າອັ່ງຫ້າມ
ເມື່ອເຫັນຕາດຳໆ
ແລ້ວຈຶ່ງໄຂຂານຂໍ້
ຈະເປັນຍິງ ຫຼື ຊາຍ

ທຳທ່າຄືພໍໃຈ
ກໍຄ່ອຍທຳໃຈໄດ້
ນຳພະຍາບານ ແລະ ເມຍມິ່ງ
ກໍຍິ່ງພຽນຮັກແທ້
ສະເໜີແກ້ວ ແກ່ນຕາ ນີ້ແລ້ວ

ໃຈ ພໍ່ຝັນໄຝ່ໄວ້
ພໍ່ໝາຍປອງສິດສອນ
ພໍ່ຝາກໃຈນຳເຈົ້າ
ພໍ່ນີ້ແສນຊາບຊຶ້ງ

ຖ້າມີລູກເປັນຊາຍ
ວຽກຜູ້ຊາຍທີ່ກຽມໄວ້
ເປັນຄົນດີຕາມຮອຍພໍ່
ເມື່ອຕົນເຈົ້າສືບຕະກຸນ ລູກເອີຍ!



# ຄິດເຖິງບ້ານເກີດ

**ໂດຍ: ເພັດລຸນນະວົງ**

.............................................

ຄິດເມື່ອ ຍັງໜຸ່ມນ້ອຍ ເນົານັ່ງໃນຕັກ
ຂອງບິດາ ມານດາ ທີ່ພາກພຽນຖະໜອມລ້ຽງ
ອັນວ່າດິນດອນຫຍ້າ ນາສວນພໍ່ແມ່ຊ່າວ
ສຸດຊົ່ວຕາຍຽດຍ້າວ ກໍ່ຊຸດຄົ້ນກົ່ນຕໍ ພໍ່ແມ່ເອີຍ

ຈາກນັ້ນ ຈຶ່ງໄດ້ຕັ້ງຊື່ໄວ້ ວ່ານາມໜໍ່ ນາໄຊ
ຕາແສງຊຽງ ເມືອງຄູນ ຜູ້ໃດກໍ່ຈຳໄດ້
ເນົາຢູ່ໃນແດນທ້ອງ ວິລະກຳທີ່ກ້າແກ່ນ
ແຂວງຊຽງຂວາງທີ່ຕັ້ງ ບໍ່ລືມໄດ້ຊົ່ວຊີວາ ນີ້ແລ້ວ

ເຫດຜົນ ທີ່ໄດ້ພັດພາກບ້ານ ຍ້ອນເສິກຜ່ານຊຽງຂວາງ ປາງນັ້ນ
ພາກໄຮ່ນາງົວຄວາຍ ທີ່ພາກພຽນຖະໜອມລ້ຽງ
ພໍ່ແມ່ນຳພາສ້າງ ກະທຳນາກ້າຫວ່ານ
ການບົວລະບັດຮັກສາ ການເກັບກ່ຽວພ້ຳພ້ອມ
ຮຽນໃຫ້ທຸກປະການ



ພວກລູກໆ ບໍ່ໄດ້ຕິກຽດຄ້ານ　　ວຽກງານໃຫຍ່ ຫຼື ໜັກເບົາ
ວຽກແມ່ຍິງ - ຜູ້ຊາຍ　　ພໍ່ແມ່ເຮົາກໍ່ສອນໃຫ້
ເລີຍໄດ້ເປັນວິຊາໃຊ້　　ປະຈຳໃຈຢູ່ທຸກເມື່ອ
ມໍລະດົກສອນສັ່ງຊີ້　　ໝູນໃຊ້ຕະຫຼອດມາ　　ພໍ່ແມ່ເອີຍ

ເຖິງວ່າ ລູກໄດ້ອອກຈາກບ້ານ　　ກໍພຽງແຕ່ກາຍຍາ
ອັນວ່າຈິດໃຈຍັງ　　ຮຳຄະນຶງບໍ່ມີເອື້ອນ
ເດືອນແລະດາວຍັງຄຽງຟ້າ　　ສະໝຸດທາຄຽງໂລກ
ຫົວໃຈຮຽມ ກໍຍັງຮຽງຮໍໃກ້　　ນາໄຊພີ້ຕະຫຼອດໄປ

ເຫື່ອແຮງ ຊີວິດ ແລະ ເລືອດເນື້ອ　　ທີ່ພໍ່ແມ່ໄດ້ຝາກຝັງ
ຊົ່ວຊີວັງທີ່ມີລົມຫັນໃຈ　　ລູກຈື່ຈຳຮັກສາໄວ້
ໂອກາດໃດອຳນວຍໃຫ້　　ລູກຂໍມາຊົມຮອຍພໍ່ແມ່ຕື່ມ
ແລະ ຈະຂໍນົບນ້ອມ　　ປະຕິຍານຊັ້ນສືບຕະກູນ　　ພໍ່ແມ່ເອີຍ

ຊຽງຂວາງ ແດນເມືອງພວນຢ່າໄດ້ເສົ້າ　　ເຫງົາຫງ່ວມເພື່ອຫວງຫຼານ
ຊາວຊຽງຂວາງໄດ້ປະສານສາຍພົວພັນ　　ທົ່ວທັງເໜືອໃຕ້
ຊາວຊຽງຂວາງໄດ້ໄປເປັນເຂີຍໃພ້　　ເໜືອກາງໃຕ້ຕ່ຳ
ໃຜຢູ່ໃສ ກໍຍັງຮັກສາຊື່ໄວ້　　ມູນເຊື້ອແມ່ນລູກພວນ　　ແທ້ແລ້ວ



# ຈາກໃຈຂອງແມ່

**ໂດຍ: ດວງພຸດທາ**

..............................................

ແມ່ນີ້ເຖົ້າແກ່ແລ້ວ    ແນວຄິດກໍສັບສົນ
ພາໃຫ້ວົນວຽນຄິດ    ອະດີດທັງຫຼາຍດ້ານ
ຢາກໃຫ້ຫຼານເຫຼັນຫຼ້ອນ    ພາກັນຄຸະນຶງຮ່ຳ
ໃຫ້ຈົດຈຳຈື່ໄວ້    ໄປໜ້າຈິ່ງປ່າວເຕືອນ ແດ່ເນີ

ຊີວິດຂອງລູກເຕົ້າ    ຍັງຍືນຍິ່ງຍາວໄກ
ກົດເກນວິໄສທັດ    ໃຫ້ເຫີດທູນຄູນຄ້ຳ
ກົດຈະກຳທຳສ້າງ    ວາງຕົນໃຫ້ມີຄ່າ
ຮູ້ບູຊາເຊີດໄວ້    ພະຄຸນແກ້ວຄູ່ໃຈ    ນັ້ນເນີ

ໃນໄລຍະຜ່ານພົ້ນ    ປາກົດອອກຫຼາຍປະການ
ຜູ້ທີ່ມີຄູນໂນ    ປະພຶດຕົນພຽງພ້ອມ
ແຕ່ວ່າບາງຄົນນັ້ນ    ທຳຕົນລືມພໍ່ແມ່
ວ່າແຕ່ຄາຢູ່ເລື້ອຍ    ຄາແທ້ແມ່ນວຽກໃດ    ລູກເອີຍ?

ອັນວ່າຮັກພໍ່ແມ່ນັ້ນ    ຢ່າລໍບອດແຕ່ ເຫຼືອງ ດຳຂາວ
ກ່ອນຈະໄປເຖິງຄາວ    ອະວະສານຕອນນັ້ນ
ສິ່ງສຳຄັນມີຫຼາຍລົ້ນ    ຄົນເຮົາໃຫ້ເລືອກແຕ່ງ    ເອົາເນີ
ແບ່ງຈິດໃຈໃຫ້ພໍ່ແມ່ນັ້ນ    ບໍ່ມີບັ້ນບ່ອນພໍ    ດອກນາ

ບໍ່ແມ່ນຍໍຍື່ນຕ້ອນ    ຂອງຝາກລາຄາສູງ
ຫຼືວ່າມີຂອງຂວັນ    ທຸກທີ່ຈິ່ງຢາມຍື້
ຂໍໃຫ້ຄືຄຳເວົ້າ    ຍາຍຊະລາປາງກ່ອນ
“ຄຸນຄ່າຂອງທີ່ຕ້ອນ    ບໍ່ຫອມຫວານລື່ນລົ້ນ
ຄຳເວົ້າລູກຫຼານ    ນີ້ແລ້ວ”

ຄຳວ່າຮັກ ແລະໃຫ້    ມີສ່ວນຕ່າງ ແລະ ຄືກັນ
ສິ່ງສຳຄັນຂອງຄວາມຮັກ    ໃຫ້ຄູ່ຄຽງຂອງຕ້ອນ
ຢ່າໃຫ້ມັນເປັນບັ້ນ    ເປັນຕອນຍາມຄິດໝັ້ນ
ຢ່າໄດ້ຄິດສັ້ນໆ    ຄຸນນັ້ນສືບເນື່ອງກັນ    ລູກເອີຍ!





ສິ່ງທີ່ລູກໄດ້ໃຫ້
ຈຸດປະສົງທາງໃຈ
ມັນຈຶ່ງຫອມຫວນດ້ວຍ
ໃຫ້ພໍ່ແມ່ຊາບຊຶ້ງ

ບາງຄົນລຸລາບໄດ້
ບາງຄົນບຸນພານພົບ
ເລີຍບໍ່ມີເວລາວ້າງ
ມີແຕ່ຫາຂໍ້ອ້າງ

ປະໃຫ້ພໍ່ແມ່ເຖົ້າ
ປະໃຫ້ຟູມຟາມຟາຍ
ປະໃຫ້ເຫງົາຫງອຍງ້ວງ
ປະໃຫ້ເປັນດັ່ງນີ້

ສຳລັບພໍ່ແມ່ນີ້
ຫຼາຍປະການຄວາມຄິດ
ມັນເຕັມທວງກໍ່ເລີຍລົ້ນ
ຍ້ອນຮັກ ແລະຄິດເຖິງລູກເຕົ້າ

ມື້ນຶ່ງເຈົ້າຈະເຖົ້າ
ການເວລາກົດເກນ
ແຕ່ປັດໃຈເສີມສ້າງ
ເອົາຄວາມຮັກແພງຍື່ນຕ້ອນ

ຫາກວ່າລູກຍາກຫຍຸ້ງ
ຂໍແຕ່ກຳລັງໃຈ
ຢ່າໃຫ້ຄືເຂົາເວົ້າ
ພໍ່ແມ່ຮັກລູກເຕົ້າ

ພໍ່ແມ່ບໍ່ລືມຫຼິ້ງ
ໃຫ້ຄູ່ຄຽງກັນພ້ອມ
ກາລະນານຍືນຍົງ
ຄຸນໂນແກ້ວທີ່ລູກແທນ ນັ້ນເນີ

ເຕີບໃຫຍ່ ແລະຮຽນສູງ
ຮັ່ງມີດີຂຶ້ນ
ວາງເສີຍຕໍ່ພໍ່ແມ່
ວ່າຫຼາຍລົ້ນແຕ່ວຽກງານ ແມ່ນບໍ?

ຄົນເກົ່າຜູ້ມີຄຸນ
ຈົ່ມພຶມພຳໄຫ້
ທວງຫາເຫຼັນຫຼອດ
ກຳຊີຕ້ອງໄຕ່ຕາມ ໄດເນີ

ຜູ້ນັ່ງຢູ່ພັດຄອງຫຼານ
ອັ້ງອໍໂຮມເຕົ້າ
ປົນເປດ້ວຍຄວາມຈົ່ມ
ອຸທອນກ້ອນ ຕ່ອນແພງ ນີ້ແລ້ວ

ກ້າວຍ່ອງຕາມມາ
ບໍ່ຫຼີກລຽງມັນໄດ້
ຍາມເປັນຄົນຕ້ອງບີແບ່ງ
ກໍ່ປານໄດ້ຕ່ອນຄຳພຸ້ນແລ້ວ

ພໍ່ແມ່ບໍ່ທວງຫຍັງ
ສົ່ງໄປຍາມຍື້
"ຄົນລວຍບໍ່ຄວບຄູ່"
ຜອງເທົ້າຕະຫຼອດການ ພຸ້ນແລ້ວ

# ເມືອຍາມເມືອງຊຽງ

ໂດຍ: ຄຳຟອງ ພູນວົງໄຊ



ຊຽງຂວາງເອີຍ! ຍາມເມື່ອພາກຈາກເຈົ້າ
ຫຼາຍສິບປີໄດ້ຫວນຄືນ
ມາເຫັນຊົນຊາວເຊື້ອ
ຜູ້ອາດຫານເກັ່ງກ້າ

ແຕ່ເມື່ອມາຄິດຄົ້ນ
ຄາວທີ່ຜີມານຍັງ
ຄາວນັ້ນຊາວຊຽງເສົ້າ
ປະຫວັດສາດ 3 ກັ່ງງ

ຊີວິດແລະເລືອດເນື້ອ
ຫົວໃຈຊາວຊຽງລຸກ
ລູກຫຼານຊາວຊຽງໄຫ້
ພາກພໍ່ຄືງແມ່ເຄົ້າ

ຫຼາຍສິບປີຜ່ານຟ້າ
ແຕ່ລະເບີດຍັງເປັນຂຸມ
ຂຸມແຄ້ນໃນໃຈເຈົ້າ
ແສບຊົ່ວດິນຊົ່ວຟ້າ

ແຄ້ນນີ້ຮັກສາໄວ້
ເປັນແມ່ແຮງທັງຄວາມຄິດ
ເຊື່ອໝັ້ນແນວທາງຊີ້
ຮູ້ຈັກຜິດແລະຖືກຕ້ອງ

ເຈັບນີ້ຮັກສາໄວ້
ຖອກເຫລົງລ້າງລາ
ໃຫ້ຮຸ່ງເຮືອງງາມເອ້
ປະດັບສີໂອບເອື້ອ

ໄລຫ່າງໄກໜີ
ຊື່ນຊົມເຫຼືອລົ້ນ
ເຄືອພວນຄະນາຍາດ
ຍັງຫົວຍິ້ມຢູ່ຊູຄືນ ແທ້ນໍ

ຄັ້ງກ່ອນຕອນຫຼັງ
ຍ່ຳຍີເມືອງບ້ານ
ໄຟເຜົາມຸດຈຸລາດ
ສູນສັ່ງງບໍ່ໃຫ້ເຫຼືອ

ຊາວຊຽງຖອກເຫໄຫຼ
ລວກລົນໄຟຮ້ອນ
ໄລລາໄກຈາກ
ເມືອງບ້ານທີ່ເພິ່ງພາ

ຫຼາຍທ່າຝົນເຫລົງ ກໍດາຍແລ້ວ
ດັ່ງເດີມດາເຄົ້າ
ເຮົາຮາຊ້ຳບໍ່ວ່າ
ບໍ່ສູນສິ້ນທໍ່ເມັດງາ ໄດ້ແລ້ວ

ໃນຍຸກໃຫມ່ເປັນພະລັງ
ຍິ່ງຮັກແພງພົງເຊື້ອ
ນະໂຍບາຍພັກວາງອອກ
ດີຮ້າຍແມ່ນຢ່າງໃດ

ພະລັງໃໝ່ການເວລາ
ໃຫ້ຮຸ່ງເຮືອງເມືອງບ້ານ
ດັ່ງດອກຈອງແລະດອກຄາຍບານເຮື່ອ
ຫອມກົ້ວກິ່ນລະອອງ ນັ້ນເນີ
ເມືອງຊຽງເອີຍ



# ເພື່ອແມ່

## ໂດຍ: ທິດາຈັນ ພິວລາວັນ

ແມ່ ຄືທຸກສິ່ງ ໃນຊີວິດ
ແມ່ ຄືດວງຕາ ແລະດວງໃຈ
ແມ່ ຄືໂຊກໄຊ ລູກມີໄດ້
ແມ່ ຄືຜູ້ໃຫ້ ບໍ່ໄລ່ລຽງ

ເພື່ອແມ່ ລູກອຸທິດ ທັງກາຍໃຈ
ເພື່ອແມ່ ລູກຍົກໄດ້ ໜ່ວຍພູຜາ
ເພື່ອແມ່ ລູກທຸ່ມໃຈ ບໍ່ໄລ່ຄ່າ
ເພື່ອແມ່ ເພື່ອໂລກາ ຄົນທັງປວງ

ລູກຫວັງແມ່ ຍືນຍົງ ອາຍຸໄຂ
ລູກຫວັງແມ່ ຊື່ນໃຈ ກາຍເຂັ້ມແຂງ
ລູກຫວັງແມ່ ຄຽງຂ້າງ ທາງລູກໄຕ່
ລູກຫວັງແມ່ ເປັນແມ່ ຕະຫຼອດໄປ







# ສຽງສັ່ງຂອງແມ່

**ໂດຍ: ເພັດເມືອງພວນ**

...............................................

ພໍແຕ່ລູກອອກບ້ານ ໄປສູ່ກົມກອງ
ແມ່ນີ້ຄອງຄອຍຫາ ຂ່າວຄາວດີຮ້າຍ
ພໍດີມີຈົດໝາຍນ້ອຍ ໄປສະນີໄດ້ນຳສົ່ງ
ແມ່ນີ້ແສນຊື່ນຊ້ອຍ ພາຍຫຼັງໄດ້ອ່ານຊົມ

ພໍແຕ່ຮູ້ຂ່າວຂໍ້ ວ່າລູກຢູ່ສະບາຍດີ
ພວມຮ່ຳຮຽນການເມືອງ ແລະເຝິກແອບການທະຫານພ້ອມ
ແມ່ຍິນດີດອມດ້ວຍ ລູກຊາຍດຽວທີ່ແມ່ຫ່ວງ
ຢ້ານແຕ່ລູກອອກຄ້າຍ ເສລີຫຼິ້ນຢູ່ເລີງ ຊັ້ນເດ.

ຂໍໃຫ້ລູກຕັ້ງໜ້າ ຮຽນຮ່ຳແຕ່ແນວດີ
ຍຸດທະວິທີທັງມວນ ໃຫ້ແມ່ນຢຳຍາມສູ້
ຍົກສູງສະຕິລະວັງຕົວໄວ້ ໄປມາຕ້ອງລາຄອບ
ຄຸນສົມບັດຮອບຮູ້ ຜົນງານນັ້ນໃຫ້ລື່ນຫຼັງ ແມ່ເນີ



ສຳລັບແມ່ຢູ່ບ້ານ ບໍ່ໄດ້ຫ່ວງຫາຫຍັງ
ໃນຄອບຄົວເຮືອນຊານ ຊື່ນສະບາຍພຽງພ້ອມ
ອັນວ່າພາຍໃນບ້ານ ປັບປຸງກັນບາດກ້າວໃໝ່
ການເຄື່ອນໄຫວຟົດຟື້ນ ບໍ່ຂັດຂ້ອງແຕ່ຢ່າງໃດ ລູກເອີຍ

ອັນວ່າການຈັດຕັ້ງ ທຸກພາກສ່ວນກໍດີໝົດ
ການຈັດສັນປັນງານ ແລະແບ່ງປັນຜົນໄດ້
ເພິ່ນໄດ້ອີງຕາມຂໍ້ ກຳນົດໝາຍໄດ້ວາງອອກ
ມີນະໂຍບາຍຖືກຕ້ອງ ຕາມນ້ອຍໜຸ່ມຊະລາ ນັ້ນແລ້ວ

ແມ່ນີ້ໄດ້ສັ່ງເຈົ້າ ແລ້ວເຕືອນອີກເປັນທີສອງ
ລູກຈົ່ງປອງດອງຝູງ ເພື່ອນແພງໃນຄ້າຍ
ນັບທັງການຈັດຕັ້ງ ກົມກອງເພິ່ນເຕືອນກ່າວ
ໃຫ້ລູກຈຳຈື່ໄວ້ ປະຕິບັດໃຫ້ເກີດຜົນ ລູກເນີ

ແມ່ນີ້ແສນເອກອ້າງ ວ່າມີລູກເປັນທະຫານ
ໄດ້ໄປປະຈັນບານ ຢູ່ຍາມຮັກສາແຄວັນ
ໄປຢູ່ຖັນແຖວກ້ຳ ພາລະກຳແສນສະຫງ່າ
ຊາດປະຊາມອບໄວ້ ໃຫ້ຕົວເຈົ້າຕອບສະໜອງ ແມ່ທ້ອນ



# ນຸ່ງຖືສຸພາບ

**ໂດຍ: ຄຳອອນ ເພັດດາວເຮືອງ**

..............................................

ເອກະລັກບົ່ງບອກໄວ້ ປະຫວັດສາດນານມາ
ຄວນຮັກສາຊົມເຊີຍ ສົ່ງເສີມເຊີດຊູໄວ້
ອັນວ່າໃນແດນດ້າວ ລາວເຮົາບໍ່ຕ້ອຍຕ່ຳ
ວັດທະນະທຳຍອດຍຽ້ມ ເຫັນແລ້ວຍິ່ງຢາກຊົມ ແທ້ແລ້ວ

ອັນວ່າ ຜົມກໍເກົ້າ ປັກປິ່ນຄຽນຄຳ
ເສື້ອແພໄໝແສນງາມ ຄ່ອງຄືຄິງຍ້ອງ
ສິ້ນໄໝຄຳແສນເຫຼື້ອມ ໄໝເງິນ ແລະໄໝຫຼາບ
ຕິດຕໍ່ຕີນຍາບຍ້ອຍ ຍາມຍ້າຍຍ່າງເດີນ ງາມເດ

ນຸ່ງເສື້ອບໍ່ໃຫ້ຫ້ອນ ແປນເປີດສາຍບື
ນຸ່ງສິ້ນພຽງພໍດີ ບໍ່ລ່າມເຂີນຍາມເດີນຍ້າຍ
ແລ້ວຈຶ່ງເອົາແພປ້າຍ ບົງບັງບ້າຍບ່ຽງ
ສະຫຼຽງຄຽງຄ່ອງແລ້ວ ກໍປັກເອ້ແນບແພ ນັ້ນນາ!





ດຽວນີ້ອິດທິພົນແຊກຊ້ອນ
ແຟຊັ່ນໃໝ່ທັນສະໄໝ
ມາຄຸກຄາມຈິດໃຈ
ທົ່ວລາວຄາວນີ້
ມັນກໍມີບາງຄັ້ງ
ບາງຄົນກໍພວມເຫີ່
ນຸ່ງເສື້ອໄຊເອິກເປີດເພີ້ເວີ້
ກວນໃຈກວນຕາ ບັກອີ່ເກີ້
ເຫັນແລ້ວຄິດຈັ່ງໃດ          ຮູ້ບໍ່?

ຜູ້ຂຽນຂໍຝາກໄວ້
ທຸກພາກສ່ວນໃນສັງຄົມ
ໃຫ້ລະດົມເຕືອນໃຈ
ແລະຮູ້ການນຳໃຊ້
ກາລະເວລານັ້ນ
ຖືສຳຄັນຮອດສະຖານທີ່
ສິ່ງທີ່ເຫມາະສົມແລະຖືກຕ້ອງ
ປະຄອງເອ້ໂອບຄີງ          ນັ້ນເນີ

ຜູ້ທີ່ຍັງຮັກສາໄດ້
ຍັງມີຢູ່ຢ່າງຫຼວງຫຼາຍ
ເລື່ອງຮີດຄອງປະເພນີ
ແມ່ນຍັງຮັກສາໄວ້
ຮັກສານຳມາໃຊ້
ສິ່ງສຳຄັນຊີງຄຸນຄ່າ
ເຄື່ອງນຸ່ງຖືແມ່ຍິງລາວ
ເປັນເອກະລັກບົ່ງບອກໄວ້
ໃຜຊິແອ້ມກໍ່ບໍ່ຄື     ລາວແລ້ວ!

 

# ຮັກນວນສະຫງວນກາຍ

**ໂດຍ: ຄຳອອນ ເພັດດາວເຮືອງ**

..............................................

ສັບພະສິ່ງເອກອ້າງ ປະດັບທີ່ສະຕີລາວນີ້ ແມ່ຍິງ
ສຸດທີ່ຫວງແຫນຮັກ ດັ່ງໜ່ວຍຕາສອງກ້ຳ
ນັ້ນແມ່ນກາຍາເນື້ອ ຂອງແພງທຸກສິ້ນສ່ວນ
ຄວນສະຫງວນຕ່ອມຕຸ້ມ ປະດັບເອ້ອວດໂສມ ໄດເນີ

ເພິ່ນວ່າ ຊາດທີ່ແນວນາມບົ້ງ ແປນໂຕກາຊິຕອດ ຄືງແລ້ວ
ໃຫ້ເຮັດໃຍຫໍ່ຫຸ້ມ ຄືງໄວ້ຈຶ່ງຄ່ອຍດີ ແທ້ແລ້ວ
ອັນວ່າຍິງຊາຍນັ້ນ ໄຟລົບແລະໄຟບວກ
ບໍ່ຄວນນອນນັ່ງໃກ້ ຫອມແກ້ມຈຶ່ງຄ່ອຍລົມ ບໍ່ເປັນເນີ

ຢ່າພາກັນອວດໂອ້ ແຟຊັ່ນໃໝ່ທັນສະໄໝ
ໃຫ້ພາກັນມາດັດແປງ ແຕ່ງແບບລາວໆນີ້
ສີສັນພ້ອມ ປັບປຸງດ້ານຄຸນຄ່າ
ສິນຄ້າລາວ ງາມແບບລາວ ໃຜມາເຫັນກໍ່ຢາກໄດ້
ໄປໃຊ້ຢູ່ຕ່າງແດນ ແທ້ນາ



ຢ່າໄດ້ເປີດເພີ້ເວີ້ ໄປເທົ່າແປນສາຍບື<br>
ຢ່າໄດ້ພີແພແປນ ຮ່ອມນົມຍາມກົ້ມ<br>
ຮູຫູພ້ອມຮູດັງ ຢ່າເຈາະບ່ອງ ຫຼາຍຮູເນີ<br>
ນຸ່ງໂສ້ງສັ້ນກົ້ນໆ ກິກຂານັ້ນຢ່າຮ່າວໂຊ ໄດເນີ

ຜູ້ຊາຍຕັດຜົມສັ້ນ ແມ່ຍິງລາວພາກັນຈົ່ງ<br>
ໃຫ້ທຳຊົງໝົດເກົ້າ ໄລໄວ້ກໍ່ຫາກງາມ<br>
ຢ່າພາກັນໄປຍ້ອມ ແດງອິນມັນບໍ່ແມ່ນ ລາວແລ້ວ<br>
ໃຫ້ພາກັນມາແຕ່ງແຕ້ມ ຊົງລາວນີ້ໃຫ້ໂລກຊົມ ໃດເນີ

ຄຸນຄ່າຂອງຍິງນີ້ ແມ່ນວາງທ່າທາງດີ<br>
ສ້າງນິດໄສອ່ອນໂຍນ ຕໍ່ທຸກຄົນຫົວຍິ້ມ<br>
ການປະນົມມືໄຫວ້ ໄປມາຕ້ອງຄົມຄ່ຽມ<br>
ຮູ້ຜູ້ໃຫຍ່ຮູ້ຜູ້ນ້ອຍ ທັງຮູ້ຕ່ຳສູງ ໄດເນີ

ຢ່າໄດ້ເຮັດເຈີ້ນເທີ້ນ ເມີນເບີດໄຮໂຊ<br>
ລົດນິຍົມໄຮໂຊລາວ ກໍ່ຍິ່ງງາມຫາກໝູນໃຊ້<br>
ຍຸກສະໄໝນຳເຂົ້າ ປະເພນີຈົ່ງຍອດຍິ່ງ<br>
ແມ່ຍິງລາວອະນຸລັກໄວ້ ມໍລະດົກນີ້ຈົ່ງຍັ່ງຢືນ ແທ້ແລ້ວ



# ນ້ຳໃຈກຳລັງໄຟເພດຍິງ

ໂດຍ: ເພັດເມືອງພອນ

ຂໍແຕ່ຊາດທ່ຽງໝັ້ນ ເອກະລາດທຽມລາວ ກໍ່ພໍແລ້ວ
ນ້ຳໃຈສາວກຳລັງໄຟ ບໍ່ຫວັ່ນເກງກົວຢ້ານ
ມີແຕ່ຊານອາສາສູ້ ເອົາຊີວັງປະກັນຊາດ
ຄວາມອາດຫານທີ່ໄດ້ໂຮມທໍ່ໄວ້ ຊານສູ້ເພື່ອຊາດລາວ ນີ້ແລ້ວ

ປະຊາທິປະໄຕກໍໃຫ້ໄດ້ ມາສູ່ປະຊາຊົນ
ນັ້ນແມ່ນຜົນງານນາງ ໄດ້ຄາດໝາຍເອົາໄວ້
ຍ້ອນອຸດົມການມີແລ້ວ ຈິດໃຈຈຶ່ງອົງອາດ
ຈຶ່ງສາມາດຍາດໄດ້ ໄຊກ້າສະຫງ່າງາມ ນີ້ແລ້ວ

ຕົວຢ່າງບັ້ນຮົບພູດອກໄມ້ ພູກູດ ແລະເມືອງສູຍ
ວ່າແຕ່ ສາວກຳລັງໄຟ ເຄື່ອນໄຫວບຸກໜ້າ
ສັດຕູວາງແຜນໄວ້ ຫັນທາງໃດຈະຫຼົບຫຼີກ
ສູ້ແມ່ຍິງບໍ່ໄດ້ ກຽມພ້ອມແຕ່ຈະຖອຍ ແທ້ແລ້ວ

ຍ້ອນເຫດນັ້ນລະອ້າຍ ຈິດໃຈຝ່າຍກຳລັງໄຟ
ນ້ອງບໍ່ໄລວາງປະ ໜ້າທີ່ນາງໄດ້ໝາຍໄວ້
ຈຶ່ງພ້ອມກັນບຸກຫນ້າ ຊານອາສາຢູ່ທຸກເມື່ອ
ຝຶກແອບສິລະປະ ຍຸດທະວິທີຢູ່ເລື້ອຍ
ພົບໄຫວສູ້ຈຶ່ງແມ່ນຢຳ ແທ້ແລ້ວ

ນອກຈາກຝຶກແອບແລ້ວ ພວກນ້ອງເລົ່າຝຶກຝົນ
ຄຸນສົມບັດປະຕິວັດ ແລະຮີດຄອງປະເພນີພ້ອມ
ເອົາການເມືອງນຳໜ້າ ຖືເອົາວິຊາການຄຽງຄູ່
ເຊີດຊູລະດັບການສຶກສາເທື່ອລະກ້າວ ຫຼັກໝັ້ນບໍ່ຫວັ່ນຄອນ ອ້າຍເອີຍ



ເວົ້າເຖິງພວກອ້າຍໆ ຢູ່ກໍ້າຝ່າຍຂົວທາງ
ຢ່າໄດ້ໄລວາງປະ ຄາດໝາຍເອົາໄວ້
ໃຫ້ວາງໃຈເນີອ້າຍ ກາຍໄປ-ມາເຊີນອ້າຍແວ່
ຢ່າໄດ້ແປປ່ຽນປີ້ນ ສັນຍາໄດ້ຝາກກັນ
ກັບທັງກໍ້າຝ່າຍອ້າຍ ຜູ້ເນົາຢູ່ທັງສາມເຫຼົ່າທັບ
ຈິ່ງຮັບເອົາພາລະການ ທີ່ພັກວາງມອບໝາຍໃຫ້
ເມື່ອໃດມີຜົນງານແລ້ວ ຄວາມສຸກສັນຈະຄຽງຄູ່
ຂັ້ນເທິງຈະອະນຸຍາດໃຫ້ ເຮົາໄດ້ແຕ່ງງານ ອ້າຍເອີຍ
ຖ້າວ່າອ້າຍແລະນ້ອງ ປະຄອງຄູ່ຄວາມຮັກ
ຜ່ານແປວໄຟສະໜາມຮົບ ທົດສອບໃຈສອງດ້ານ
ງານວິວາເຮົາຈະມີຂຶ້ນ ຜົນງານພໍຕ້ອງໄດ້ແຕ່ງ
ນະໂຍບາຍມີຈະແຈ້ງ ຄໍາແພງອ້າຍຢ່າເລັ່ງທວງ ໃດເນີ
ສະພາບການທີ່ເຄັ່ງຮ້ອນ ຫາກຫຼຸດຜ່ອນເຢັນລົງ
ເວລາກັບຄືນກົມກອງ ຈຶ່ງຄ່ອຍຊຽນປະຫວັດໄວ້
ເພື່ອໃຫ້ການຈັດຕັ້ງ ພົວພັນກັບພໍ່ແມ່
ທາງກົມກອງ ແລະ ຮີດຄອງກໍ່ໄດ້ ເຫັນດ້ວຍຮັກເຮົາ ອ້າຍເອີຍ
ກ່ອນຈະລາຈາກອ້າຍ ເຂົ້າສູ່ຄຽງນອນ
ຂໍກອດໝອນ ກອດບາໂລ ປ່ຽນແທນອວນອ້າຍ
ໃຈ ແລະ ກາຍເຮົາໃກ້ ໄມຕີເຮົາໃຫ້ພັນຜູກ ກັນເນີ
ລູກແມ່ຍິງຂໍຢູ່ຄຽງຄູ່ອ້າຍ ແຝງໝັ້ນແນບຊວງ ອ້າຍເອີຍ





# ລູກ

**ໂດຍ: ຄຳຟອງ ພູມວົງໄຊ**

ລູກແມ່ນຄຳຄ່າລົ້ນ ບົນແຜ່ນທໍລະນີ
ລູກແມ່ນແນວພືດຜົນ ຊິສືບແທນມູນເຊື້ອ
ລູກແມ່ນດວງດອກຊ້ອນ ງາມງອນຍອດທະຍິ່ງ
ລູກແມ່ນຜົນບອກເຊົ້າ ສອງເຮົາເຈົ້າຮັກກັນ ແມ່ນບໍ່?

ເພິ່ນຜູ້ປູກດອກໄມ້ ຍັງເພີ່ມຝຸ່ນພູນດິນ
ບົວລະບັດຮັກສາ ຊູຄຳແລງສວາຍເຊົ້າ
ດວງຕາເວັນໃສແຈ້ງ ເຍືອງແສງແລລຳ
ດອກຈຶ່ງເຜີຍກີບເອ້ ຫອມກົ້ວກິນລະອອງ ແທ້ແລ້ວ

ຄຳວ່າ ລູກ ລູກ ນັ້ນ ມັນງ່າຍບໍ່ສັບສົນ
ເອົາໂຕ ລ ໂຕ ກ ສະຫຼະ ອູ ມາປົນ ກໍອ່ານເປັນຄວາມໄດ້
ອັນວ່າແນວນາມໄທ້ ວິໄຈມັນໃຫ້ເລິກເຊິ່ງ
ຄວາມໝາຍວ່າລູກນັ້ນ ມັນໄກກວ້າງຍືດຍາວ ແທ້ໃດ

ຄັນວ່າຮັກລູກເຕົ້າ ໃຫ້ສະເໝີພາບພຽງກັນ
ໃຫ້ຜູກພັນແພງຮັກ ໃຫ້ເບິ່ງແຍງຖະໜອມລ້ຽງ
ໃຫ້ພ້ອມພຽງກັນເຂົ້າ ທັງສັງຄົມ ແລະ ພໍ່ແມ່
ຖະໜອມພຽນພ່ຳພ້ອມ ແພງນ້ອຍໜໍ່ຕະກຸນ ແທ້ເນີ

ຖ້າວ່າຮັກລູກນ້ອຍ ຢ່າປ້ອຍດ່າຕີຕົບ ເຂົາເນີ
ລູກເກີດມາບໍ່ມີຄົບ ຄູ່ຊູ່ອັນພຽງພ້ອມ
ລູກປຽບເໝືອນໃບເຈ້ຍ ໃບດຽວຂາວສະອາດ
ຖ້າຊ່າງຕົບແຕ່ງແຕ້ມ ຊິງາມລ້ຳເລີດສີ ແທ້ເດ





# ຈຳປາເມືອງລາວ

**ໂດຍ: ຄຳຟອງ ພູມວົງໄຊ**

..........................................

ງາມເດ ດວງດອກໄມ້ ມາໄລມິ່ງເມືອງລາວ
ກີບດອກຂາວ-ເຫຼືອງ-ແດງ ສະຫງ່າງາມ ຍາມແຍ້ມ
ແນມເຫັນ ໃຈປຸ່ມລົ້ນ ງາມເດ ຫາຫຍັງປຽບ
ທຽບດອກໃດກໍ່ບໍ່ເທົ່າ ທຽມເຈົ້າຊື່ຈຳປາ ລາວນີ້
ຮັກເດ ຮັກດອກໄມ້ ສົດໃສຊໍ່ຈຳປາລາວ
ຮັກແຕ່ຄາວປະຖົມ ບໍ່ເສື່ອມລົງລາໄດ້
ຮັກສຸດໃຈປຸ່ມລົ້ນ ເຊີຍຊົມບໍ່ຮູ້ເບື່ອ
ຮັກບໍ່ຍອມເພື່ອໃຫ້ ຊາດອື່ນໄດ້ແບ່ງປັນ ແທ້ໆໃດ
ຫອມເດ ຫອມດອກໄມ້ ທຳມະຊາດພູຜາ
ຫອມໃດ ໃນໂລກາ ທຽບຈຳປາບໍ່ມີໄດ້
ຫອມຈາກໃຈຈິງເຈົ້າ ຫອມໂຮຍບໍ່ເຫີຍກິ່ນ
ຫອມທົ່ວດິນ ທົ່ວຟ້າ ຫອມກົ້ວທົ່ວແຜ່ນດິນ ລາວນີ້
ແພງເດ ແພງດອກໄມ້ ປະຈຳຊາດຊາວລາວ
ດອກຈຳປາສີຂາວ ແພງດັ່ງຕາສອງກ່ຳ
ດອກສີຄຳເຫຼືອງເອ້ ສຸດສະເໜ່ແພງຍິ່ງ
ຈຳປາແດງແຝງພະລັງເລືອດກ້າ ແພງຫຼ້າຊົ່ວນິລັນ
ຫວງເດ ຫວງດອກໄມ້ ຜູ້ງາມຍິ່ງ ສະເໜຫາ
ດອກຊື່ດວງຈຳປາ ຢ້ານປຸ່ມນານເຄີຍເອີ້ນ
ຢ້ານຖືກຂຸດໂຄ່ນຕົ້ນ ເອົາໜີໄປປູກບ່ອນອື່ນ
ຫົວໃຈລາວຊິສະອື້ນ ແສບຊ້ຳບໍ່ສວ່າງໃນ ແທ້ເນີ
ຫ່ວງເດ ຫ່ວງດອກໄມ້ ມາໄລມິ່ງເມືອງລາວ
ຂໍເຊີນຊວນ ບ່າວສາວ ປູກເຕີມເສີມແຕ້ມ
ປະດິດດອກບານແຍ້ມ ປະດັບລາວຂາວສະອາດ
ປະເທດຊາດ-ຄົນລາວ ແລະ ຈຳປາດອກໄມ້
ໃຫ້ບານແຍ້ມຢູ່ຄູ່ກັນ ຕາບຊົ່ວຟ້າ ຊົ່ວນິລັນ ທັ້ນທ້ອນ




# ຄວາມງາມຂອງແມ່

**ໂດຍ: ດວງຈຳປາ**

.............................................

ແມ່ ຈະຍິ່ງໃຫຍ່ດ້ວຍ ກອງກຽດຕິຍົດ
ມີວິຊາສູງ ວ່າການນຳໜ້າ
ນຳພາບ້ານ ການເມືອງລະດັບຊາດ
ເປັນຊ່າງ ເປັນນັກກໍ່ສ້າງ ຄືນຊ້ອງຊ່າລື... ກໍດີ

ແຕ່ວ່າ ແມ່ບໍ່ຍອມລະເວັ້ນ ໜ້າທີ່ຂອງມານດາ
ງາມແມ່ ງາມໃນສິນ ວາດແລດູນ້ອຍ
ງາມແມ່ ງາມແຂນອ້ອມ ຫອມເອົາລູກອ່ອນ
ງາມແມ່ ປະເສີດຍ້ອນ ຄຸນລ້ຽງລຳແຍງ ລູກນາ

 

# ແດ່ ແມ່ຂອງລູກ

**ໂດຍ: ດວງຈຳປາ**

..................................................

ມາລາຫອມຮ່ວງເຮົ້າ ໃນທົ່ວພິພົບ ກໍດີ
ຍົກມອບວາງຖວາຍ ແມ່ຄືງ ພຽງພ້ອມ
ຍັງໄປ່ທັນສະເໜີດ້ານ ດວງໃຈເຮົາ ລູກ ລູກ ລູກ
ປາຖະໜານົບນ້ອມ ພະນົມແກ້ວແກ່ນໃຈ

ສະກູນາຮ່ຳຮ້ອງ ສຽງມ່ວນຊວນສະດັບ
ທຸກທົ່ວໃນໂລກາ ຊື່ນຊົມແຊວຊ້ອງ
ຍັງໄປ່ທັນສຽງຮ້ອງ ມະໂນໃນຊ້ອຍຊືນ
ບຸດພ່ຳເພັງເພື່ອເຈົ້າ ຫວັງໄວ້ໃຫ້ແມ່ຍິນ ດອກນາ

ຄວາມຮັກໃນແມ່ລົ້ນ ລວາດຝັ່ງນະທີໃຈ ລູກດາຍ
ຫາກ່າວຄຳໃດສະເໜີ ປຽບປານທັນອ້າງ
ຮັກແມ່ມີພັນເທົ້າ ທະວີກືຕື້ໂກດ
ຍັງໄປ່ເຜີຍຜໍ່ໃຫ້ ເຫັນຮູ້ແຕ່ສິ່ງດຽວ ແມ່ເອີຍ!



# ແມ່ຍິງລາວຮອບດ້ານ

ໂດຍ: ດອກເກດ

ຍາມເມື່ອເດືອນສາມສັ່ງ
ດວງດອກໄມ້

ເດຍລະດາດດ້າວ
ຈຳປາຂາວ
ຄືເປັນ ສັນຍາອ້າງ
ຮູ້ຮັບແຈ້ງ

ຄືດັ່ງ ຊຸມນາດນ້ອງ
ເປັນທັງ ມາລາປະດັບ
ການເມືອງໄດ້
ເປັນກຳລັງທັບມ້າງ

ຍາມເມື່ອ ປາງເຮັ່ງຮ້ອນ
ແມ່ຍິງລາວເຮົາລຸກ
ເປັນຂະບວນຕັ້ງ
ໝາຍຕ່ອມຕູ້ມ

ບັດນີ້ ສົມມາດແມ້ງ
ສະມາຄົມຍິງ
ວາງແຜນສ້າງ
ຮຽນເພື່ອຮູ້ຮອບດ້ານ

ລົມພາຍພັດເປົ່າ  ໄປແລ້ວ
ບານແຍ້ມອວດສີ

ຊົງເຂດເມືອງລາວ
ຈໍ່ຈູມບານເອ້
ຄົນຈອບປະເທດຕ່າງ
ແດນນີ້ປະເທດລາວ

ສະຕີເພດສາວລາວ  ນີ້ແລ້ວ
ເຄື່ອນໄຫວຫຼາຍດ້ານ
ສິ່ງຄາມປະກອບສ່ວນ
ສັດຕູດີ້ນດ່າວຕາຍ

ເສີກລູ່ຜານເມືອງ
ຮ່ວມແຮງໂຮມເຕົ້າ
ສະມາຄົມຮັກຊາດ
ກຳລັງໃຫ້ໃຫຍ່ແຂງ

ເອກະລາດສົມບູນ  ແລ້ວເດ
ຍິງທະວີບົດບັ້ນ
ຍິງລາວແບບໃໝ່
ການເມືອງພ້ອມວິທະຍາ




ບໍ່ລະເວັ້ນ
ອົບຮົມຮັກ
ຍາມຈາຕ້ານ
ນິດໄສຄົນຄ່ຽມຮູ້

ອັນໜຶ່ງ ເພດແຕ່ງແຕ້ມ
ຜົມມວຍມັດ
ຍາມມີບຸນສະຫຼອງຕັ້ງ
ສິ້ນໝີໄໝໃສ່ພ້ອມ

ງາມລື່ນລ້ຳ
ໃຜແລເຫັນ
ປອງໝາຍໝັ້ນ
ພັນດອກໄມ້

ອັນນີ້ ຮຽມແຕ່ງແຕ້ມ
ຄືດວງດາວປະດັບ
ຄືດັ່ງມາລາແຍ້ມ
ຄືກຳແພງເພັດໃຫ້

ເປັນແມ່ຂວັນເຮືອນ
ລູກແພງພຽນລ້ຽງ
ຄຳຂານຫວານມ່ວນ
ສົມເຊື້ອຊາດລາວ

ເຕີມຕໍ່ກໍພໍງາມ
ສຽບແຊມເປັນເກົ້າ
ແພສະໄບບົ້ງບ່ຽງ ງາມເດ
ທະນົງນ້ອງຄ່ອງຄື

ສາວປະເທດໃດຫຼຸມ ໄດ້ເດ
ກ່າວຊົມຍໍຍ້ອງ
ກະສັນແດດິ້ນດ່າວ
ຫອມໄດ້ກໍບໍ່ປານ

ແຕ້ມແຕ່ງວ່າຍິງລາວ
ເດັ່ນເວຫາກວ້າງ
ຫຼາຍສີຫອມກຸ່ນ
ປະຊາເຊື້ອໄດ້ເອື້ອຍອີງ.

# ແດ່ ພະຄຸນຂອງແມ່

ໂດຍ: ກົງເດືອນ ເນດຕະວົງ



ບັດນີ້ ຂ້າຂໍນົບນອບນິ້ວ ຫຼຽມທອດເຖິງກະສຽນ
ຂໍກ່າວໄຂຄຳຂະມາ ແມ່ເຄີຍຄຽງຂ້າງ
ຈາລຶກຄຸນຄາມເບື້ອງ ມານດາແສນປະເສີດ
ເພາະເພິ່ນບັງເກີດເກົ້າ ປະໂລມລ້ຽງໃຫຍ່ມາ
ແມ່ນັ້ນ ເປັນສະຕິຜູ້ຮອບຮູ້ ໃນເຫດການໄກ
ຫາໃຜປຸນປານເໝືອນ ແມ່ເຮົາບໍ່ມີໄດ້
ເພິ່ນຫາກຈິດໃຈກວ້າງ ລາສີແສນສະຫງ່າ
ແມ່ມີຄຸນຄ່າລ້ຳ ເປັນເສົາຄ້ຳຄ່າແພງ
ແມ່ນັ້ນ ເປັນແອນແຍງໃຫ້ລູກເຕົ້າ ໄດ້ສານສືບປາລະມີ
ບໍ່ວ່າຍິງຊາຍສາວ ບ່າວຄະນອງທັງເຖົ້າ
ລ້ອນແຕ່ເນົາພະຄັນເຈົ້າ ມານດາໂດຍກຳເນີດ
ໃຜເດນໍ ເກີດຈາກໂກນກົກໄມ້ ບໍ່ມີໄດ້ຜ່ານພະຄັນ ແມ່ນັ້ນ
ຮຽນວ່າ ບໍ່ມີໃຜດອກເຈົ້າ ເອົາກຳເນີດດ້ວຍໂຕເອງ
ທຸກທ່ານມາເປັນຄົນ ຕ້ອງຜ່ານທາງດຽວນັ້ນ
ຜ່ານພະຄັນເນົາຍັ້ງ ຈຶ່ງຫາທາງຫຼຽວເກີດ
ແມ່ທົນທຸກອູ້ມທ້ອງ ຫຼຽວໃຊ້ຊາດວ່າຄົນ ນີ້ນໍ
ຍາມເມື່ອເຮົາຈໍ່ນ້ອຍ ເປັນກ້ອນເລືອດຄອງພະຄັນ ແມ່ນັ້ນ
ທ່ານຕ້ອງທົນທານອົດ ເພື່ອລູກຕົນຈະເລີນຂຶ້ນ
ເມື່ອນັ້ນ ແມ່ໄດ້ເດົາດາຫ້າງ ອາຫານດີລ້ຽງຫຼໍ່
ຂໍໃຫ້ລູກຢູ່ທ້ອງ ປະຄອງຄຸ້ມເຂືອນແຂງ
ຄາວແມ່ຍັງອູ້ມທ້ອງ ຄອງຄູ່ຄຽງບຸດ ເມື່ອນັ້ນ
ແມ່ຕ້ອງທໍລະມານທຸກ ມາກມາຍນານມື້
ນັບເປັນວັນເວລາໄດ້ ຍາວເຍືອໂອ້ອ່າວ
ເກົ້າເດືອນເຕັມຂວບຂັ້ນ ຈຶ່ງເຫັນໜ້າເກີດມາ
ຄັນລູກກັບເກີດແລ້ວ ແມ່ຍັງເລົ່າທໍລະມານ
ເລື່ອງອາຫານການກິນ ຕ້ອງຄ່ອຍຄຳເອົາໄວ້
ຫວນຄືນ ຍາມຖືພາຄາໄສ້ ລະບາຍອ່ວນອວກອອກ
ບອກວ່າທົນທຸກແທ້ ຍາມທ້ອງຈໍ່ຈາວ



ບູຮານວ່າ ຍາມເມື່ອລູກເຂົ້າທ້ອງ ເໝືອນຄອງແຕ່ຄວາມຕາຍ
ຄິດບໍ່ມີຍາມວາຍ ຊູວັນແລງເຊົ້າ
ຈັກຈະດີຫຼືຮ້າຍ ແນວໃດບໍ່ຮູ້ຮ່ອມ
ຍາມເມື່ອລູກອອກມົ້ມ ຈິ່ງພໍຮູ້ປອດໄພ ນັ້ນແລ້ວ
ອັນໜຶ່ງ ຍັງບໍ່ແລ້ວທໍ່ນັ້ນ ແມ່ຕ້ອງຢູ່ໃນກຳ
ທໍລະມານຕົວຕົນ ອູດລົນໄຟຢ້າງ
ນອນຟາກພາງສະແນນຄ້ຳ ຊູຄຶງຄວັນອູດ
ກິນນ້ຳຮ້ອນຮຸ່ມຕົ້ມ ຕາມດ້ວຍອາບຄຶງ
ຍາມເມື່ອລູກອໍອອດໄຫ້ ເຕື້ອງຕໍ່ຫິວໂຫຍ
ມານດາຍໍຈັບໂຈມ ໃສ່ນົມສອງເຕົ້າ
ແມ່ເອົານົມໂລມລ້ຽງ ບຸດຕາຕົນລູກ
ເຖິງຈະເຈັບປວດຈ້າວ ກໍຄຶງໄດ້ໃສ່ໃຈ ແທ້ໄດ
ຕັ້ງແຕ່ລູກລອດພົ້ນ ຈົນກ້າວສູ່ໄວກະສຽນ
ແມ່ຍິ່ງແພງພຽນຖະໜອມ ທໍ່ຫອມຫຼອມສ້າງ
ເຖິງຍາມກິນແມ່ໄດ້ປ້ອນ ເຖິງຍາມນອນແມ່ໄດ້ກ່ອມ
ແມ່ຖະໜອມລູກນ້ອຍ ບໍ່ມີເວັ້ນວ່າງວັນ
ຈາກນັ້ນ ຍາມເຍົາໄວໃຫຍ່ຂຶ້ນ ແມ່ພ່ຳພຽນສອນ
ສົ່ງໃຫ້ສຶກສາສິນ ຮ່ຳຮຽນຄວາມຮູ້
ຢາກໃຫ້ເປັນຄົນຮູ້ ຄົນດີມີຄຸນຄ່າ
ເປັນຄົນຜູ້ກ້າວໜ້າ ໄດ້ສານເຕົ້າຕໍ່ຕະກຸນ ຕື່ມແລ້ວ

ຍາມເມື່ອລູກປ່ວຍໄຂ້ ໄພພະຍາດມາຢາມ
ແມ່ຍິ່ງທໍລະມານອຸກ ອັ່ງໃຈຈຳພໍ້
ຈົດຈໍ່ດູແລເຈົ້າ ຮຽງຕົວຕາມເບິ່ງ
ເມື່ອລູກອໍແອ່ວໄຫ້ ຫິວເຂົ້າກໍຄ່ອຍທົບ ເອົາແລ້ວ
ເພິ່ນວ່າລູກອ່ອນນ້ອຍ ຜູກຢູ່ໃນແອວ
ເຖິງຄາວໄວຈະເລີນພັນ ບ່າວສາວເຖິງເຖົ້າ
ແມ່ຍິ່ງເອົາໃຈຕັ້ງ ຕິດຕາມຕົນລູກ
ຢ້ານວ່າເດີນບໍ່ຕ້ອງ ມັນຊິໂຄ້ງແອ່ເອ
ເຖິງຍາມຕົກແຕ່ງເຕົ້າ ເຂົ້າສູ່ວັນວິວາ
ແມ່ຍັງເດົາດາຕົກ ແຕ່ງແປງຊູຊວ້ານ
ຈົນໄດ້ຄອງເຮືອນຢ້າວ ດອມກັນຄຽງຄູ່
ແມ່ຈຶ່ງວາງປ່ອຍໄດ້ ໃຫ້ກາງກຸ້ມແກ່ຕົນ ນັ້ນແລ້ວ
ຕະຫຼອດການກ່າວໄວ້ ໃນແຫຼ່ງທາງຊີວິດ
ແມ່ບໍ່ວາງປົງປະ ລູກຄຶງໃຫ້ຄອງເສົ້າ
ເຖິງຄາວໄປເປັນໃພ້ ເປັນເຂີຍແມ່ຍັງອ່າວ ຄະນຶງແລ້ວ
ມີສິ່ງໃດກໍຍັງຟ້າວສົ່ງໃຫ້ ຫາຢ້າວລູກຕົນ
ນອກນັ້ນ ແມ່ຍັງເດີນດ່ອນດັ້ນ ຫຼຽວທ່ອງຖາມເຖິງ
ໄປລຳແລເຢືອນຢາມ ລູກຄຶງເຄີຍລ້ຽງ
ນອກນັ້ນ ແມ່ຍັງແພງພຽນຕຸ້ມ ຫຼານເຫຼັນບໍ່ໄດ້ໜ່າຍ
ເຖິງແມ່ເຖົ້າແກ່ແລ້ວ ກໍຍັງໄດ້ລຳແລ
ແມ່ຮັກຫອມຕ່ອມຕູ້ມ ຕາມຕໍ່ຫຼານເຫຼັນ
ຮັກຫໍ່ແພງພໍ່ຊີວິດ ກວ່າຕົນເຕີມຊ້ຳ
ຄືດັ່ງຍາມໂລມລ້ຽງ ບຸດຕາຕົນລູກ ເມື່ອນັ້ນ
ຮັກກວ່າເກີນອື່ນໄດ້ ໄສສ້ຽວຕໍ່ເຖິງ ໄດ້ເດ
ເມື່ອແມ່ມີພະຄຸນທໍ່ຟ້າ ຍິ່ງໃຫຍ່ມະຫາສານ ດັ່ງນັ້ນ
ລູກກໍວັນທາທູນ ຄອບຂະມາປະນົມໄຫວ້
ໃຫ້ສົມມານດາລ້ຽງ ມີພະຄຸນເຫຼືອຄ່າ
ຂໍບູຊາຍົກຍິ່ນເຈົ້າ ມານດາເຫງົ້າແມ່ຮຽມ ນີ້ນໍ
ລູກທີ່ແມ່ໄດ້ລ້ຽງ ຂໍຝາກກະຕັນຍູ ເຖິງເນີ້
ຂໍໃຫ້ມານດາສຸກ ຢູ່ສະຖຽນຄຶງໝັ້ນ
ບໍ່ມີວັນຫງອຍເສົ້າ ລາຄີໄພເຫີນຫ່າງ
ເປັນໂພໄຊຮົ່ມກວ້າງ ໄດ້ເຊົາຊົ້ນຮົ່ມເຢັນ ແມ່ເອີຍ



# ບຸນຄຸນ ພໍ່ແມ່

ໂດຍ: ບຸນເລີດ ດຳຣົງສັກ

.............................................

ບຸນຄຸນຂອງແມ່ນີ້
ບໍ່ອາດພັນລະນາ
ແມ່ມີໃຈພຽນລ້ຽງ
ນັບເກົ້າເດືອນລ່ວງໄດ້

ມີມາກຍິ່ງໜັກໜາ
ສູ່ຟັງໃຫ້ໝົດໄດ້
ຢູ່ໃນຄັນຈົນທ້ອງໃຫຍ່
ເຮົາຈຶ່ງໄດ້ເກີດມາ

ເມື່ອເຮົາພົ້ນຈາກທ້ອງ
ຂໍໃຫ້ບຸດຂອງເຮົາ
ຄອຍປ້ອນນົມປ້ອນເຂົ້າ
ກຽມຢຸກຢາເຄື່ອງໃຊ້

ແມ່ເປັນຫ່ວງເຫຼືອທີ່ສຸດ
ຈຶ່ງປອດໄພໄດ້ເຫັນໜ້າ
ຂອງກິນຜິດແມ່ກໍ່ຢ່າ
ຂອງຕ້ອນເຄື່ອງນຸ່ງງາມ

ຍາມລູກໄຫ້ແມ່ກໍໄຫ້
ຍາມລູກຫົວເຣຮາ
ລູກຖືກເຂົາຕີຂ້າ
ຍາມລູກປ່ວຍແມ່ກໍ່ເຝົ້າ

ດ້ວຍໃຈຫ່ວງສະເໜຫາ
ແມ່ກໍເຣຮາດ້ວຍ
ມາດາກໍມາຊ່ວຍ
ອາໄລເຈົ້າບໍ່ຫ່ວງກິນ

ອົບຮົມນິດໄສໃຫ້
ໃຫ້ມີໃຈອົດທົນ
ສອນວຽກການງານໃຫ້
ທັງຊັບສິນກໍ່ມອບມ້ອນ

ຕັ້ງແຕ່ອ່ອນເຍົາໄວ
ຕໍ່ການງານບໍ່ສູນສິ້ນ
ໜັກຫຼືເບົາບໍ່ດູໝິ່ນ
ວາງໃຫ້ແຕ່ສິ່ງດີ

ຍາມລູກຜິດພາດພັ້ງ
ແມ່ອາໄລຍາມເຮົາຜິດ
ເຮົາມີທຸກແມ່ທຸກພ້ອມ
ເຮົາມີສຸກຊື່ນຊ້ອຍ
ຍາມເຮົາໄກຈາກຂ້າງ

ແມ່ເຕືອນບອກສະເໝີມາ
ບໍ່ຄິດຊັງຫຼືຫຼົບລີ້
ແສນກັງວົງເໝືອນໄຟຈີ່
ດວງໃຈນ້ອຍແມ່ຊື່ນນຳ
ໃຈແມ່ຫ່ວງອາໄລຫາ

ວອນໃຫ້ປວງເທວາ
ຍາມເຮົາເຈັບແມ່ທົນກຸ້ມ
ແມ່ກະທຳທຸກຢ່າງໃຫ້
ບຸນຄຸນຂອງແມ່ນີ້

ຊ່ວຍຮັກສາແລະຊູຄ້ຳ
ຢູ່ໃນທວງທັງເຊົ້າຄ່ຳ
ຂໍພຽງລູກໄດ້ຢູ່ດີ
ໄດ້ຝັງຢູ່ໃນດວງຈິດ

ໃຜບໍ່ຄິດຮັກເຮົາ
ເປັນຄວາມສຸກຂອງລູກແລ້ວ
ຊີວິດນີ້ແມ່ມອບໃຫ້

ເໝືອນດັ່ງໃຈແມ່ເຮົານີ້
ແມ່ພໍໃຈບໍ່ຕະນິ
ພຽງລູກໄດ້ຢູ່ສະບາຍ

ສ່ວນບຸນຄຸນຂອງພໍ່ນັ້ນ
ເມື່ອແມ່ມີຄັນມາ
ດີໃຈທຳງານສູ້
ເພື່ອສາຍເລືອດລູກນ້ອຍ

ກໍມີມາກຄືກັນ
ກໍຊື່ນໃຈບໍ່ມີຮ້າຍ
ທັງເວັນຄືນເອົາທຸກຝ່າຍ
ຄອບຄົວຂ້ອຍໄດ້ຢູ່ດີ

ແມ່ຢູ່ກໍາພໍ່ກໍ່ເຝົ້າ
ທັງນໍ້າຢາຟືນໄຟ
ອາຫານການກິນພ້ອມ
ຊັກຜ້າຍ່ຽວແລະຜ້າຂີ້

ທຸກສິ່ງເຫຼົ່າພຽນຫາ
ບໍ່ຂາດເຂີນຈັກດີ້
ພໍ່ຈັດຫາໃຫ້ຖ້ອນຖີ່
ເຫັນລູກນ້ອຍແລ້ວຊື່ນບານ

ພໍ່ເປັນຜູ້ຄິດຄົ້ນ
ບໍ່ໃຫ້ມົວໝອງສີ
ສົ່ງເຂົ້າໂຮງຮຽນພ້ອມ
ສອນການງານໃຫ້ຮູ້

ສ້າງກໍ່ທາງຄອບຄົວ
ຂາດເຂີນຍ້ອນຄວາມຄ້ານ
ການຮຽນຂຽນອ່ານ
ເມື່ອເຮົາໄດ້ເຕີບໃຫຍ່ມາ

ມີການງານມີຄວາມຮູ້
ມີຮັກປອງຮ່ວມຊີວິ
ໄດ້ມອບເງິນຄຳໃຫ້
ລູກມີສຸກກ້າວໜ້າ

ຈັດຫາຄູ່ໃຫ້ທຽມສອງ
ສ້າງຄອບຄົວໃຫ້ແຂງກ້າ
ພ້ອມວັດຖຸອັນມີຄ່າ
ພໍ່ແມ່ນັ້ນກໍອຸ່ນທວງ

ພໍ່ແມ່ເປັນເພື່ອນຫຼິ້ນ
ເປັນມິດໃຈທີ່ໝັ້ນຄົງ
ເປັນເພື່ອນຕາຍເປັນຄູພ້ອມ
ທັງຮັກທັງຫວງບໍ່ເວັ້ນ

ຍາມເຮົາອ່ອນເຍົາໄວ
ເຮົາຜິດໄປກໍຄອຍທ້ວງ
ທັງສົ່ງສານທັງເປັນຫ່ວງ
ໝາຍໝັ້ນບໍ່ປ່ຽນແປງ

ພໍ່ແມ່ຮັກລູກແທ້
ເຈັບໄຂ້ມາຮາວີ
ລູກບໍ່ດີກໍຕາມຖ້ອນ
ໃຈພໍ່ແມ່ຮັກລູກໝັ້ນ

ອາໄລຫ່ວງບໍ່ລາໜີ
ຫຼືຢ່າງໃດບໍ່ຍອມແພ້
ຫຼືພິການກໍຕາມແຕ່
ສະເໝີຕົ້ນຕະຫຼອດປາຍ

ພໍ່ປຽບເປັນເສົາຄ້ຳ　　ເປັນເສົາແກ່ນທີ່ແຂງແຮງ
ແມ່ເປັນເສົາຂວັນຂອງເຮືອນ　　ກະເບື້ອງມຸງເຊີດຊູໄວ້
ພໍ່ກັບແມ່ເປັນຄືຕົ້ນ　　ໂພໄຊທີ່ສູງໃຫຍ່
ເປັນພຣະພົມລູກກໍໄດ້　　ໃຜຊິກ້າຕອບຖຽງ

ພໍ່ແມ່ຮັກລູກດ້ວຍ　　ໃຈຜຸດຜ່ອງບໍຣິສຸດ
ມີບຸດຫຼາຍເປັນໂຫຼ　　ກໍເລົ້າພຽນຮັກສາລ້ຽງ
ຊິທຸກຈົນກໍຕາມຖ້ອນ　　ຂາດເຂີນຫຼາຍກໍ່ຂໍສ້ຽງ
ຂໍພຽງໃຫ້ລູກນ້ອຍ　　ເຮົາໄດ້ອີ່ມເຕັມ

ລ້ຽງລູກມາໃຫຍ່ແລ້ວ　　ພໍ່ແມ່ຊື່ນໃຈນຳ
ບາງຄົນກຳເວນມີ　　ລູກໜີໄປຈົນໝົດສິ້ນ
ປະໃຫ້ສອງຜົວເມຍເຖົ້າ　　ທີ່ລະມານເຂົາດູໝິ່ນ
ຊິຢູ່ກິນກໍຍາກຊ້ຳ　　ຂາດຄົນຊວ້ານຊ່ວຍຊູ

ລູກຫຼາຍຄົນເພິ່ນລ້ຽງໄດ້　　ດ້ວຍໃຈຫ່ວງອາໄລສຸດ
ແຕ່ວ່າບຸດຫຼາຍຄົນ　　ບໍ່ຫ່ວງນຳກໍ່ຄືງຮູ້
ບໍ່ສົງສານພໍ່ແມ່ລ້ຽງ　　ຍັງມີໃຈໝາຍລົບຫຼູ່
ປ່ອຍໃຫ້ສອງຜູ້ເຖົ້າ　　ເຫງົາງ້ວງຂາດລູກຫຼານ

ບຸນຄຸນເພິ່ນມາກລົ້ນ　　ເໜືອພື້ນແຜ່ນທໍຣະນີ
ຊິຕອບຄຸນແນວໃດ　　ຈຶ່ງບໍ່ອາຍພວກຊາວບ້ານ
ບົວລະບັດມີຫຼາຍຂໍ້　　ເຮົາສົມຄວນໄດ້ຄິດອ່ານ
ໃຫ້ທ່ານໄດ້ປາບປື້ມ　　ຍາມເຮົາໄດ້ໃຫຍ່ມາ

ເມື່ອທ່ານລ້ຽງໃຫຍ່ແລ້ວ　　ໃຫ້ລ້ຽງຕອບແທນຄຸນ
ຢ່າເຮັດໂຕເລວຊາມ　　ເພິ່ນປະນາມລ້ຽງເຮົາລ້າ
ໃຫ້ຂອງກິນແລະຂອງໃຊ້　　ອຸປະຖຳໝົດທຸກຢ່າງ
ທຸກການຄິດ ການກະທຳ ດ່າປ້ອຍ　　ຫຼືຈາຂ້າແມ່ນບໍ່ຄວນ　　ແທ້ເນີ

ການແທນຄຸນທ່ານນັ້ນ　　ຄວນເຮັດຕອນເພິ່ນຍັງຢູ່
ເພິ່ນຊິໄດ້ຮັບຮູ້　　ຄວາມດີນັ້ນລູກກະທຳ
ຖ້າທ່ານຕາຍໄປແລ້ວ　　ຈຶ່ງເຮັດດີຄຸນຄ່າຕ່ຳ
ໃຫ້ເຮົາທຳດີແຕ່ບັດນີ້　　ບຸນຄຸນນັ້ນຊິມາກຫຼາຍ　　ແທ້ແລ້ວ.

# ນ້ຳໃຈຂອງແມ່

(ພຣະໂພທິສັດ ໂສນະບັນດິດດານົບ ປະກາດແກ່ໝູ່ກະສັດ ໃນຊົມພູທະວີບ)
ບາລີຈາກ: ໂສນະນັນທະຊາດົກ ໃນສັດຕະຕິນິບາດ.

**ກອນໂດຍ: ຈ. ອິນທຸພິລາດ**

..............................................

1. **ອາກັງຂະມານາ ປຸຕຸຕະຜະລັງ ເທວະຕາຍະ ນະມັສສະຕິ**
**ນັກຂັຕຕານິ ຈະປຸຈສະຕິ ອຸຕຸສັງວັຈຈະຣານິ ຈະ**
*ແມ້ງເມື່ອແມ່ໄຄ່ໄດ້　　ນ້ອຍອ່ອນບຸດຕາ*
*ຫຼຽນຍ່ອມວອນເທພາ　　ທູບຫຼຽນທູນໄຫວ້*
*ພ້ອມພ່ຳຖາມເຖິງມື້　　ເດືອນປີຍາມປອດ*
*ຫວັງໃຫ້ລູກເກີດຕ້ອງ　　ວັນມື້ຣືກງາມວ່ານາ*

2. **ຕັສສາ ອຸຕຸສິ ນຸສາຕາຍະ ໂຫຕິຄັພພັສສະ ວັກຄະໂມ ເຕນະ ໂທຫະລີນີ**
**ໂຫຕິ ສຸທະຫາ ເຕນະ ວຸຈຈະຕິ**
*ຄ້ອນວ່າແມ່ເຫືອດແຫ້ງ　　ຣະດູຂາດປະຈຳເດືອນ*
*ແມ່ກໍຖືພານານ　　ລູກເນົາໃນທ້ອງ*
*ແມ່ເຈົ້າໂຫຍຫິວດ້ວຍ　　ອາຫານອັນແປກ*
*ທໍແຕ່ຍັງມ່ວນແມ້ງ　　ເພາະຫອມເຮົ້າລູກຄຶງ　　ແທ້ນາ*

3. **ສັງວັຈສະຣັງ ວາ ອູນັງ ວາ ປະຣິຫະຣິຕວາ ວິຊາຍະຕິ ເຕນສາ**
**ປະນະຍັນຕີຕີ ຊະເນຕຕິ ເຕນະ ວຸຈຈະຕິ**
*ນັບແຕ່ແມ່ອູ້ມທ້ອງ　　ດູດັ່ງສິບເດືອນ*
*ອົດສາຫອມທົນທຸກ　　ປີ້ນປົວແລງເຊົ້າ*
*ພໍເມື່ອກຸມມານມົ້ນ　　ອຸທອນປອດພະຍາດ*
*ສຸດທີ່ແມ່ຊື່ນຊ້ອຍ　　ສົມເຊື້ອແມ່ຄົນ*

4. **ຖະນັກຂີເຣນະ ຄີເຕນະ ອັງຄະປະວຸຣະເນນະ ຈະ ໂຣທັນຕັງ ປຸຕຕັງ**
**ໂຕເສຕິ ໂຕເສນຕິ ເຕນະ ວຸຈຈະຕິ**
*ຍາມເມື່ອລູກອ່ອນນ້ອຍ　　ໄຫ້ຮ່ຳຕົກໃຈ*
*ເຈົ້າແມ່ໄວວາເອົາ　　ໃສ່ເພົາພຽນຕຸ້ມ*
*ຫອມໃຫ້ອີ່ມກິນຕູ້　　ຖະໜອມນອນໄກວກ່ອມ*
*ສົມວ່າເປັນຜູ້ຫຸ້ມ　　ຂວັນໃຫ້ຢູ່ຄຶງ　　ແທ້ນາ*

5. **ຕະໂຕ ວາຕາຕະເປ ໂຄເຣ ມັມມັງ ກັຕວາ ອຸທິກຂະຕິ**
**ທາຣະກັງ ອັປປະຊານັນຕັງ ໂປເສນຕິ ເຕນະ ວຸຈຈະຕິ**
*ຖັດນັ້ນ ເຈົ້າໜໍ່ເນື້ອ ຍັງໄປ່ດຽງສາ*
*ຖືກແດດລົມແຮງພັດ ກໍຕື່ນຕົນດາໄຫ້*
*ອັນວ່າມານດາຮ້ອນ ຮົມຫວງທ່ອນທ່າງ*
*ສົມວ່າເປັນຜູ້ລຽງ ທອມໃຫ້ໃຫຍ່ສູງ ແທ້ແລ້ວ*

6. **ຍັນຈະ ມາຕຸ ທະນັງ ໂຫຕິ ຍັນຈະ ໂຫຕິ ປິຕຸຫານັງ**
**ອຸພະຍັນເປຕັສສະ ໂຄເປປິ ອະປິ ປຸຕຕັສສະ ເມ ສິຍາ**
*ອັນໜຶ່ງ ສິນແມ່ໄດ້ ຊັບພໍ່ມີມາ ກໍດີ*
*ເຈົ້າແມ່ພຽນແພງຮັກ ຊ່າງປຸນປອງຕຸ້ມ*
*ໝາຍຈັກຊູໂຊມລ້ຽງ ບຸດຕາຕະຫຼອດໃຫຍ່*
*ອີກຫວັງຍໍມອບມ້ວນ ກຸມມານໃຫ້ສືບມູນ ວ່ານາ*

7. **ເອວັງ ປຸຕຕະ ອະຫຼາ ປຸຕຕະ ອິຕິ ມາຕາ ວິຫັນຍະຕິ**
*ຄ້ອນວ່າລູກໃຫຍ່ຂຶ້ນ ຮູ້ແດ່ດຽງສາ*
*ທຸກຄ່ຳຄືນວັນມາ ແມ່ສອນສຽງຈົ້*
*" ຈັ່ງຊີ້ຈົບ ຂໍໃຫ້ລູກຈຳໝັ້ນ, ຈັ່ງຊັ້ນຊານ ຂໍໃຫ້ລູກຫຼີກຫ່າງ "*
*ແມ່ປາກປຽກຊູ້ມື້ ບໍ່ມີໜ້າຍໜ່າຍສອນ ແທ້ນາ*

8. **ປະມັຕຕັງ ປະຣະທາເຣສ ນິສສິເວ ປັຕະ ໂຍພພະເນ**
**ສາຍັງ ປຸຕຕັງ ອະນາຍັນຕັງ ອິຕິ ມາຕາ ວິຫັນຍະຕີໆ**
*ຂວບເມື່ອລູກແກ່ກ້າ ສອນບ່າວພວມຄະນອງ*
*ດີທ່ຳຫຽວລົມສາວ ສວາກສະເໜຊົມຊູ້*
*ຄັນຫາກເຫັນມາຊ້າ ຍາມນອນບໍ່ຮູ້ບ່ອນ*
*ເຈົ້າແມ່ໃຈຮຸ່ມຮ້ອນ ນຳຊວ້ານສືບຫາ*

9. **ຕັສມາ ຫິ ເຕ ນະມັສເສຍຍະ ສັກກະເຣຍຍາຖະ ປັນທິໂຕ**
**ອັນເນນະ ອະໂຖ ປາເນນະ ວັດເຖນະ ສະຍະເນນະ ຈະ**
**ອຸຈສະທະເນນະ ນຫາປະເນນະ ປາທານັງ ໂທວະເນນະ ຈະ**
*ດັ່ງນັ້ນປຣາຊຍ໌ຜູ້ຮູ້ ພຣະຄຸນແມ່ໂດຍຖະແຫຼງມານີ້*
*ຄວນຄະນຶງເນືອງນິບ ຊູ່ວັນແລງເຊົ້າ*
*ເພິ່ງທີ່ບູຊາດ້ວຍ ອາຫານດີຜ້າແຜ່ນ*
*ປັດບ່ອນນອນ, ອາບນ້ຳ, ເຖິງເທົ້າສວ່າຍຕີນ ພຸ້ນແລ້ວ*

# ພຣະພຣົມຂອງລູກ

ບາລີຈາກ: ສະພຣົມກະສູດ ຈະຕຸກກະນິບາດ ອັງຄຸດຕະຣະນິກາຍ

**ກາບກອນໂດຍ: ມະຫາຈັນທ໌ ອິນທຸພິລາສ**

..............................................

1. **ພຣະມາຕິ ມາຕາປິຕະໂຣ ປຸບພາຈະຣິຍາຕິ້ ວຸຈຈະເຣ;**

*ອັນວ່າອົງພຣະພຸທເຈົ້າ　　ທົງເທສນາສອນ*
*ພໍ່ - ແມ່ ສອງພຣະຄຸນຄື　　ຄູ່ "ພົມ"ພາຍຟ້າ*
*ເປັນອາຈານສອນສັ່ງ　　ບຸດຕາກ່ອນຜູ້ອື່ນ*
*ຮັກລູກໃຝພ່ຳພັ່ງງ　　ແພງໄວ້ເກົ່ງຕາ ແທ້ນາ*

2. **ຍະຖາ ທິ ມະຫາພຣະມຸໂນ ຈະຕັສໂສ ພາວະນາ ອະວິຊະຫະຕາ ໂທນຕິ ຕະຖາ ມາຕາປິຕູນັງ ປຸຕເຕສຸ ຈະຕັສໂສ ພາວະນາ ອະວິຊະຫິຕາ**

*ປຸນປຽບພົມເທບທ້າວ　　ທອນເທືອດພົມວິຫານ*
*ພໍ່ - ແມ່ ໂດຍດຽວກັນ　　ພ່ຳພາວະນານ້ອມ*
***ເມດຕາ** ມີໜັກແໜ້ນ　　**ກະຣຸນາ** ແນບເນື່ອງ*
***ມຸທິຕາ** ຊື່ນຊ້ອຍ　　ພຽງພ້ອມ **ອຸເປກຂາ***

3. **ກຸຈສິຄະຕັສມິນທິ ປຸຕເຕສຸ ກະທາ ນຸໂຂ ປຸຕຕະກັງ ອະໂຣຄັງ ປັສສາມາຕິ ເຕສັງ ເມຕຕະຈິຕຕັງ ອຸປປັຊຊະຕິ**

***ເມຕຕາ** ແມ່ເຈົ້າຮັກ　　ຕັ້ງແຕ່ຖືພາ　　ພຸ້ນນາ*
*ຢ້ານແຕ່ບຸດຕາຕົນ　　ຊິເກີດມີໄພຍຕ້ອງ*
*ເກາງທໍ່ກຸມມານນ້ອຍ　　ໃນອຸທອນຫຼູຫຼົ້ນ*
*ຄິດໄຄ່ເຫັນໜໍ່ນ້ອຍ　　ເມື່ອມື້ໝູ່ມານ ຫັ້ນແລ້ວ*

4. **ຍະທາ ປະເນນະ ມັນໂທ ອຸຕຕານະເສຍຍະໂກ ອຸກກາທິທີ ທັດໂຖ ທຸກຂະເສຍຍາຍະ ວາ ປິລິໂຕ ໂຣທະຕິ ຕະທາ ຕັສສະ ສັທທັງ ສຸຕວາ　ກະຣຸນຍັງ ອຸປປັຊຊະຕິ**

***ກະຣຸນາ** ແມ່ນັ້ນ　　ມີມາກເປັນກະດັດ*
*ຍາມໃດກຸມມານຫງາຍ　　ເມື່ອຍນອນດາສະດຸ້ງ*
*ຫຼືຖືກຍຸງຍອງຮົ້ນ　　ຮຸມກິນກໍໄຫ້ແອ່ວ*
*ເຈົ້າແມ່ ໂອຍໂອດໂອ້　　ໃຈສະບັ້ນໝັ້ນແຍງ*



5.ອາຫາວິຕວາ ວິທາວິຕວາ ກືລະນະກາເຣ ປະນະ ໂສພະນິຍະ ວະຍັສມິງ ວາ ຖິຕະກາເລ ປຸຕຕະກັງ ໂອໂລເກຕວາ ເຕສັງ ຈິຕຕັງ ມຸທຸກັງ ໂຫຕິ ອາໂມທິຕັປປະໂມທິຕັງ ຕະທາ ເນສັງ ລັພພະຕິ

*ຄ້ອມວ່າລູກອ່ອນນ້ອຍ  ຮູ້ປາກສອນຫົວ*
*ຮູ້ແລ່ນທ່ຽວໄປມາ  ຊ່ວງສງວນຄວາມຫຼິ້ນ*
*ອີກຍາມກາຍກືງກ້າວ  ພວມງາມສາວ - ບ່າວ*
*ໃຈແມ່ສຸດຊື່ນຊ້ອຍ  ບໍ່ມີມື້ເມື່ອຍແຍງລູກແລ້ວ*

6. **ຍະທາ ປະນາສະ ທາຣະພະຣະນັງ ກັຕວາ ວິສຸງ ເຄຫັງ ອັຊຊາ ວະສະຕິ ຕະທາ ເນສັງ ສັກໂກຕິທານິ ໂນ ອັຕຕະໂນ ທັມມະຕາຍຍະ ປາເປຕຸນຕິ ມັຊຊັຕຕາ ອຸປປັຊຊະຕິ ຕະທາ ເນສັງ ອຸເປກຂາລັພພະຕິ**

*ແມ້ງເມື່ອລູກໃຫຍ່ແລ້ວ  ມີຄູ່ຜົວ - ເມຍ*
*ຮູ້ຄອບຄອງເຄຫາ  ຮຸ່ງເຮືອງ ຈະເຣີນເຮືອງ*
*ພໍ່ - ແມ່ ສອງພຣະຄຸນເຈົ້າ  ໃຈດີ**ອຸບເປກຂ໌***
*ມີທໍ່ຄິດໄຄ່ໃຫ້ລູກເຕົ້າ  ຫາຍຮ້ອນຢູ່ກະເສີມ ທັ້ນແລ້ວ*





# ຫຼັກທັມສຳລັບພໍ່ແມ່

ຄວາມເດີມຈາກ: ສິຄາ ໂລວາທະສູຕ

**ກອນລາວໂດຍ: ຈ. ອິນທຸພິລາສ**

.................................................

ຍາມເມື່ອໄດ້ລູກແລ້ວ　　ມາຮ່ວມຮຽງອີກ
ຮູ້ຮັກເພິ່ງພຽນສອນ　　ຊ່າງເຫຼົາແຫຼມສັ່ງມຸ່ງ
ທາງຊາມ ຊອມຫວງຫ້າມ　　ຢ່າອວນທາທາງຊົ່ວ
ລູກເຮັດຜິດເສີມສົ່ງຊ້ຳ　　ບູຮານຮ້ອງວ່າ - ຊັງ　ລູກນາ

ຄວາມດີຄວາມຊອບແທ້　　ເຝິກແອບເລີ່ງສອນ
ກິຣິຍາກາຍຈົບ　　ເກັ່ງການກອຍກ້ຽງ
ເຈຍລະຈາຈ້ອຍ　　ຫວານຫູສັດຊື່
ມະໂນໃສສະອາດພ້ອມ　　ຜະຍາແຍ້ມຍິ່ງຄືນ　　ຊອບແລ້ວ

ຄ້ອມວ່າລູກໃຫຍ່ຂຶ້ນ　　ພໍ່ຮ່ຳຮຽນວິຊາ
ຟ້າວຟັ່ງຍິນດີຈັດ　　ສົ່ງຄູຊູຊວ້ານ
ຄັນລູກເຮົາຮຽນຮູ້　　ຕະກູນເຮົາກໍ່ເຮືອງຮຸ່ງ
ຄັນເຮົາຫວງຫອບໄວ້　　ຊິຕົກຕ້ອຍຕ່ຳຝູງ
ແມ້ງເມື່ອລູກຜ່ອງຜົ້ງ　　ເປັນບ່າວ - ສາວໃສ
ສົມຄວນມີເຮືອນຊານ　　ຄູ່ຂວັນສົມສ້າງ
ເພິ່ງທີ່ເລັ່ງແລສົ້ງ　　ຊາຍດີ -ຍິງຄ່ອງ
ປຸນປູກເປັນມິ່ງຕົ້ນ　　ຕາມຊັ້ນສ່ວນສະກຸນ　　ຊອບນາ

ອັນໜຶ່ງຊອມຊັ່ງແລ້ວ　　ກິຣິຍາລູກຊາຍ - ຍິງ
ເຫັນສົມຄວນຄອງຊັບ　　ສິ່ງສິນໃນເຢົ້າ
ເຮວຮີບປຸນປັນໃຫ້　　ເປັນທຶນສ້າງແສ່ງ　　ດີດາຍ
ມົວແຕ່ກົກກອດໄວ້　　ຊິຮົມຮ້ອນລູກລຸນ　　ບໍ່ຮູ້?
ອັນພໍ່ - ແມ່ດັ່ງອ້າງ　　ສຸດສ່ວນສົມນານ
ເພາະໄດ້ທຳການກິດ　　ແຫ່ງຕົນຖອງຖ້ວນ
ຜູ້ເປັນບຸດຕານັ້ນ　　ກໍບຸນຫຼາຍລົ້ນເກດ
ຫາກພໍ່-ແມ່ລາວເປັນດັ່ງເວົ້າ　　ລາວຊິພົ້ງເຟື່ອງໄວ　　ຍິ່ງແລ້ວ.



# ຫຼັກທັມສຳລັບລູກ

ຄວາມເດີມຈາກ: ສີຄາ ໂລວາທະສູດ

**ກອນລາວໂດຍ: ຈ. ອິນທຸພິລາສ**

..............................................

ພໍ່ ແມ່ລ້ຽງລູກນີ້ ທຸກຍິ່ງແສນຖະນັດ
ຈຽມແຕ່ເຮົາເປັນຕົວ ເພິ່ນກໍແພງພຽນລ້ຳ
ລູກຢ່າຫຼົງລືມແທ້ ບຸນຄຸນສອງທ່ານ
ຄວນຈັກຕອບໂຕ້ລ້ຽງ ຕະພອງເຖົ້ານິ່ງມອນ ຊອບແລ້ວ
ຍາມໃດວຽກແລ່ນຕ້ອງ ເຕັງເພິ່ນທັງສອງ
ຢ່າໄດ້ເອົາຕົນປະ ປ່ອຍການໜີໜ້າ
ໜັກກໍຈົ່ງອົດສາສູ້ ແຮງມີຊວ້ານຊ່ອຍ
ເຮັດໃຫ້ສົມເພິ່ນລ້ຽງ ຍາມນ້ອຍເໜື່ອຍນານ ແທ້ເນີ
ຕະກຸນພໍ່ແມ່ນີ້ ໃຫ້ຮັກຍິ່ງແພງເຫຼືອ
ຢ່າໄດ້ຜານສົມບັດ ເຜົ່າສະກຸນກິນກ້ຽງ
ດີວ່າຮັກສາໄວ້ ວົງວານໃຫ້ສູງສົ່ງ
ປະສົງຄູນສືບສ້າງ ຮົງເຮື້ອງຍິ່ງກວ່າຫຼັງ ຊອບແລ້ວ
ຄວາມປະພຶດຢ່າຊ້າ ຊາມຊົ່ວເສຍສະກຸນ
ສຸຣາ, ການພະນັນ,ຢາ ຝິ່ນໄວວາງເວັ້ນ
ກິຣິຍາໃຫ້ຈົບພ້ອມ ເພັ່ງພຽນສ້າງແສ່ງ
ເຮັດໃຫ້ສົມເຜົ່າຜູ້ ຊີຄອງຄຸ້ມຊັບສິນ ວ່າເນີ
ຍາມໃດສອງທ່ານເຖົ້າ ມອນມອດຊີວິດ
ຢ່າໄດ້ທຳຊົງເສີຍ ດູກຂາວກາງແຈ້ງ
ຟ້າວຟັ່ງດາດີຖ້ວນ ຖົມດີທ້ອນຝຸ່ນ
ບຸນກຸສົນສົ່ງຊວ້ານ ໃຫ້ເຫັນຫ້ອງຊ່ອງສະຫວັນ ຊອບນາ
ເປັນລູກພໍ່ແມ່ໃຫ້ ປະພຶດດັ່ງໂດຍຖະແຫຼງມານີ້
ແມ່ນເປັນບຸດຕາໃຜ ເພິ່ນກໍເຢັນໃຈຍ້ອນ
ນັບວ່າເປັນບຸດດີລ້ຳ ທະຣົງຄຸນໃນໂລກ
ເມືອງມະນຸດຍ່ອມຍ້ອງ ເມືອງຟ້າກໍຟັ່ງຊົມ ແທ້ແລ້ວ

# ນ້ຳໃຈແມ່

(ເດີມຊື່ຫົວເລື່ອງວ່າ: ນາຍພານຫຼາບ)

**ໂດຍ: ໝູທັກ ສິທທິມໍຣະດາ**

................................................

ຂ້າໄດ້ຈຳຈື່ແຈ້ງ
ບໍ່ໄຊ່ນິທານທັມ
ມີແມ່ໃນສະໄໝນີ້
ບ້ານບ່ອນຊຽງຢູ່ຫັ້ນ
ພານຜູ້ອ້າງ
ເນົານັ່ງໃນຄາເມ
ເດີມດາບ້ານ
ນັບໜຶ່ງເລັ່ງລາດເນື້ອ
ເຊົ້າຄ່ຳເຄີຍດ່ອນດັ້ນ
ຜົກຈອບຍິງຍັງສັດ
ວ່າແຕ່ພໍພານພົ້
ໂປ່ງເປັ່ງທັນຖືກໄດ້
ວັນໜຶ່ງຈຶ່ງຈອບເຈົ້າ
ເຕັ້ນໄຕ່ຕາມສາຂາ
ພານພອຍຫ້າງ
ແນເນັ່ງໂປ້ງ !
ລູກເປັ້ງເປື້ອງ
ປືນເປັນພິດ
ທັນທີແທ້
ກ້ອງເກິ່ງພ້າວຂາດຂວັ້ນ
ບໍ່ໄຄ່ເຄີຍຄາດແຄ້ວ
ວ່າແຕ່ພານຄອຍກວັກ
ສັດທີ່ຄອຍຄອງຖ້າ
ຄາດຂອດເປັນເຫຍື່ອທ້ອງ
ພານຜູດຟ້າວ
ລີງຈັ່ງຈອນ
ທາງຫຼັ້ງອູ້ມ
ຈອນເກືອບໃກ້

ເລື່ອງເລົ່າມີມາ
ກ່າວແປແປງອ້າງ
ປັດຈຸບັນເບີຍບອກ
ແຂວງຄ້າຍເຂດສະຫວັນ
ເຊັ່ງຊື່ຊຽງສອນ
ດ່ານດອຍດົງກວ້າງ
ນາພິລາງລາວເກີດ
ປືນໜ້າປ່ຽນປອງ
ໂຄ້ງຄວ່າດົ່ງດອນ
ຊູ່ແນວໃນດ້າວ
ບໍ່ລວນລໍເລືອກແບ່ນ
ເສຍແລ້ວກໍແຈບໃຈ
ຂາວໂກກນາໂຖ
ມີ່ນັບເນືອງຮ້ອງ
ປືນຈອນຈຳບ່າ
ປານຟ້າຜ່າດົງ
ໄຖຖືກເຖິງຈຸດ
ຖືກໃຜບໍ່ຜັນຈັ້ງ
ສຽງຕູມຕຳແຜ່ນ
ລົງພື້ນຟາດດິນ
ແນວແມ່ມີເພັດ
ກ່ອງໄກປືນໂປ້ງ
ເຖິງຕາຍຕາມບາດ
ພານແທ້ແຕ່ໃດ
ເຖິງທີ່ທັນດູ
ຈ່ອງຈັ້ງກະແຈບ້າ
ອອງອຸຍລູກອ່ອນ
ຂັ້ນມ້ອຍມອດຊີວັງ





ແຕ່ທໍ່ແຂງເຂື່ອນຕັ້ງ
ຈຳໃຈປົດ
ມືປອງເປື້ອງ
ໃບ້ບິບນ້າວ
ແລ້ວເລົ່າຍົກຍິ່ມໃຫ້
ໄວ້ເພື່ອຍາມຍັງຫິວ
ສຽງຈາງຈ້ອຍ
ສັນສັ່ງຊ້ຳ
ແລ້ວດັ່ນດົ້ນ
ຈັງຈວນຈົບ
ພານພອຍສິ້ງ
ໃຈບ່າເບື້ອ
ຄຶດໄຕ່ຮູ້
ນັບແຕ່ກູກອງກັມ
ປອງປົດເບື້ອງ
ຊວາງກອດອຸ້ມ
ໄປລຳລ້ຽງ
ອົກອ່າວກອຍກົນແໜງ
ການກວນຂ້າ
ຕັ້ງຕໍ່ເກື້ອກໍ່ສ້າງ
ຍາມເມື່ອກາຍແກ່ຊ້ຳ
ພຽນພ່ຳຈຳເຣີນສົນ
ສັດສ່ວນຕາຍຕົນຂ້າ
ປາຖະໜາຫຼີກເວັ້ນ

ສະຕິຕໍ່ຕາມບຸດ
ລູກລົງວາງໄວ້
ປົດຕອງຕາມຕົ່ງ
ນົມຍ້ອຍຍ່າວເຕັມ
ລູກອ່ອນອັນຮັກ
ຫ່າງກັນໄກເວັ້ນ
ໃນຄໍຄາງຮ່ຳ
ນຳນ້ອຍເວທະນາ !
ຂັນຂາດເຂີນອົກ
ອ່ອນຄຶງສະແຄງມ້ອຍ
ເຕັມຕາຕົກຄະມ່າ
ນ້ຳຕາຍ້ອຍຍ່າວລົງ
ບຸນບາບບົນອົກ
ມາກມູນມີໄວ້
ປົນປົ່ງປະປ່ອຍ
ລົງນ້ອຍເນັ່ງເມືອ
ປົວປິ່ນປານບຸດ
ໝາດໝາງໝາຍເວັ້ນ
ສັດສາວາສິ່ງ
ບຸນເບື້ອງບ່ອນດຽວ
ຊຽງບວດເປັນສົງ
ສົງບຸນໄປຄ້ຳ
ພໍພັນພາຍກ່ອນ
ກົມກ້ຽວຈ່ອງກັນ   ວ່ານາ

# ນ້ຳໃຈແມ່

**ໂດຍ: ດອກເຜິ້ງ**

...........................................

ຄຸນແມ່ໂລມລ່ຳລ້ຽງ ພຽງດັ່ງແດນນະພາ
ຫາອັນໃດປຸນປານ ໄປທຽມທັນໄດ້
ເລີກກວ່າແສນສາຍນ້ຳ ລຳທານທອນໃຫຍ່
ຄອນທີ່ທູນເທີດໄວ້ ໃນເກົ້າກິ່ງຂວັນ ຊອບແລ້ວ

ດວງໃຈຈອມແມ່ແກ້ວ ແວວສ່ອງໃສສີ
ບໍ່ມີຍາມເມີນໝາຍ ຫ່າງໄລລາເວັ້ນ
ຖືບຸດຕາສະເໝີເສັ້ນ ສາຍແພງພັນຄ່າ
ຫາອາພອນຕ່ອມຕຸ້ມ ຄຸມຫຸ້ມຫໍຄືງ ລູກນີ້

ບໍ່ເຄີຍຢຸດຢ່ອນນິ້ງ ນອນຢູ່ດູດາຍ
ຍາກປານໃດກໍດອມແພງ ເບິ່ງແຍງພຽນລ້ຽງ
ພຽງແຕ່ບຸດຕາໄດ້ ຊອນລອນສອນໃຫຍ່
ບໍ່ເຈັບເປັນປ່ວຍໄຂ້ ກໍຍິນຊ້ອຍຊື່ນໃຈ ແມ່ແລ້ວ

ຍາມໃຫຍ່ຍໍຍື່ນໃຫ້ ຫາຮ່ຳຮຽນຂຽນ
ແມ່ພ່ຳພຽນຂົນຂວາຍ ຊ່ວຍຊູ ຊອນຍູ້
ຂໍແຕ່ທາລະກາຮູ້ ດູເປັນເຫັນຮ່ອມ
ຮູ້ແຫຼ່ງຫຼອມຫຼໍ່ສ້າງ ທາງທ້າງທີ່ດີ ພຸ້ນນາ

ບໍ່ໃຫ້ມີເລື່ອງຫຍຸ້ງ ຍາກຍິ່ງຍາມໃດ
ທຸກຢ່າງການງານສັງ ແມ່ຍັງຊານຊວ້ານ
ມວນມິ່ງການເມືອງບ້ານ ເຮືອນຊານແຖວຖິ່ນ
ບໍ່ເຄີຍປັນປ່ຽນປີ້ນ ເປັນຄ້ານຊຸ່ນເຄືອງ ແທ້ແລ້ວ

ແມ່ຫາຮຽນເບິ່ງເບື້ອງ ບາງບ່ອນສອນຕົວ
ຮຽນປະຊາເຫັນຜົນ ດຸ່ງເດີນເພີ່ມພົ້ນ
ຫວິດຮ່ອງຮອຍໝອງໝົ້ນ ຫູຕາມົວໝິ່ນ
ກາຍເປັນຄົນຮຸ່ງຮູ້ ຫູແຈ້ງສ່ອງໃສ ແມ່ເອີຍ



# ຝາກໃຈນຳເຈົ້າ

**ໂດຍ: ດອກເພັກ**

................................................................

ຮັກເຈົ້າຄືດັ່ງແກ້ວ    ແນວໜ່ວຍດວງຕາ
ຮັກເຈົ້າຄືຊີວາ    ເທີດທູນຖະໜອມໄວ້
ຮັກເຈົ້າຄືຫີນທ້ອງ    ແດນທອງທຸງຊາດ
ຮັກເຈົ້າຄືຊັບຄ່າລົ້ນ    ບໍ່ວາງໃຫ້ແກ່ໃຜ

ເຈົ້າຈະເປັນຜູ້ສ້າງ    ອະນາຄົດການໄກ
ເຈົ້າຈະເປັນຄົນນຳ    ຊາດເຮົາພາຍຊ້ອຍ
ເຈົ້າຈະເປັນຊົນຊັ້ນ    ພົງພັນກຳມະຊີບ
ເຈົ້າຈະສືບທອດເຊື້ອ    ຕະກຸນຊັ້ນຊື່ລາວ

ພັກລັດຖືວ່າເຈົ້າ    ສຸດປະເສີດແສນແພງ
ມີແມ່ມອນມານດາ    ລຳແລແລງເຊົ້າ
ມີອາຄານຫໍຫ້ອງ    ອະນຸບານຂຽນອ່ານ
ຈາກນັ້ນຮຽນສູ່ຂັ້ນ    ປະຖົມກ້າວຕໍ່ໄປ

ເຈົ້າຈົ່ງຮຽນຮ່ຳຮູ້    ຮັກຫ່ວງດິນລາວ
ຮັກຜູ້ນຳຂອງເຮົາ    ດັ່ງດວງຊີວາເຈົ້າ
ຮັກແຮງງານການສ້າງ    ສາມັກຄີແພງເພື່ອນ
ຮັກຄູສອນສັ່ງຊີ້    ຄຸນເຄົ້າສິ່ງວິຊາ

ຮັກພໍ່ແມ່ຜູ້ລ້ຽງ    ຕັ້ງແຕ່ເຍົາໄວ
ຮູ້ສະຫງວນຄວາມງາມ    ຢ່າທຳແນວເປື້ອນ
ຮູ້ຊັງຄອງຄວາມຄ້ານ    ງົງອນມັກງ່າຍ
ຮູ້ຊັງສັດຕູປຸ້ນບ້ານ    ທີຫວັງເຂົ້າຂົ່ມລາວ

ສົມພັກລັດຮັກເຈົ້າ    ແລລ່ຳນຳຄອຍ
ຈົ່ງຝຶກຝົນຕົນເອງ    ແກ່ນຄານຄວາມກ້າ
ຮັກສາອານາຊັ້ນ    ເທຍລະຄາຄົ່ງຄ່າ
ສ້າງຊາດລາວໃຫ້ຮຸ່ງແຈ້ງ    ປະຊາຊ້ອຍຊື່ນຊົມ    ແທ້ໄດ!



# ຫົວອົກແມ່

**ໂດຍ: ດ. ດວງປີຊາວົງ**

ແພງເກີ່ງດວງຕາແກ້ວ
ໄວ້ວາງອອງອາຍອົກ
ຫອມຫວນຫາຫຍັງໄດ້
ບໍ່ມີທຽບຖອ່ງສົ່ງວ

ຮັກດັ່ງດວງຫະໄທ
ອຸ່ນເພົາແພງແກ້ມ
ປຸນເປັນແປປຽບ
ບຸດຕານ້ອຍແນບຕົນ ນີ້ແລ້ວ

ໂອກາດລຶກລາບລົ້ນ
ວັນສຸກສີແສງງາມ
ມວນໝູ່ທາລະກາພົ້ນ
ຊຸມນຸມເນືອງນັນກ້ອງ

ວັນທີ 1 ມິຖຸນາ
ຄ່າຄຳຄືແກ້ວ
ຊົມພູທະວີບລຸ່ມ
ສະຫຼອງຍ້ອງຍົກຍໍ ແທ້ແລ້ວ

ນັ້ນແມ່ນປະຫວັດຫຍໍ້
ເຕືອນຕື່ມຕຽມຕົວປຸກ
ໃຈແມ່ແສນສຸກດ້ວຍ
ພາລູກເດີນດຸ່ງດັ້ນ

ວັນປະສູດບຸດຕາ
ລຸກແລແລງເຊົ້າ
ໂດຍດອມດຶງແລ່ນ
ທາງເສັ້ນສະອາດດີ ນີ້ແລ້ວ

ຫົວໃຈຮຽມຮູບນີ້
ທຽບແທນທູນດວງໃຈ
ໃຜຈັກມາຕຳຕ້ອງ
ຕົວະຍົວະລວງລ່າຍລື້ນ

ແສນຫ່ວງ ແລະ ສຸດແຫນ
ເຊີດຊູຖະໜອມໄວ້
ຕົບຕີແຕະຕ່ອຍ
ມາດາແກ້ວບໍ່ປ່ອຍໄລ ແທ້ແລ້ວ



ວັນທີ 1 ມິຖຸນາ ລືຊ່າໄວ້
ແມ່ມອບມວນມາລາ
ກາງເໜືອພູມີໃຕ້
ມາຕູພູມແຜ່ນພື້ນ

ລູກຈິ່ງຮັບໂຊກລົ້ນ
ສຸກຂີແຂ່ງຂັນກັນ
ໜຸ່ມນ້ອຍເຮົາຮຽນຫ້າວ
ເປັນກຳລັງໃຈແກ່ນກ້າ

ຮ່ຳຮຽນຮູ້ຮອບດ້ານ
ຮູ້ 3 ຮັກ 3 ຊັງ
ຫຼໍ່ຫຼອມຝຶກຝົນສູ້
ສາມັກຄີຕ່ອມຕູ້ມ

ວັນໃໝ່ມະໄລພົດ
ແດ່ເຢົາວະຊົນເຊື້ອ
ແດນດິນທົ່ວປະເທດ
ພອນເຈົ້າຄູ່ຊູຄົນ ລູກເອີຍ

ຜົນງານໃໝ່ເປັນເດັ່ກດີ
ເຫື່ອແຮງໂຮມກ້າວ
ການສຶກສາສູງເດັ່ນ
ຫຼານຫຼ້າລູກລາວ ນີ້ເນີ

ສົມທ່ານຜູ້ນຳສອນ
3 ດີ 4 ຮູ້
ຂະບວນການລວມປະກອບ
ແພງເຊື້ອຊາດລາວ ນີ້ເນີ

# ຄ່າຂອງນາງ

**ໂດຍ: ດອກເພັກ ພົມມະຈັນ**

............................................

ເຂົາວ່າ ນາງນາດນ້ອງ
ຄຸນຄ່ານາງພຽງເພັດ
ເຂົາວ່າງາມຕານ້ອງ
ເຂົາວ່າງາມນາດນ້ອງ

ແມ່ນແທ້ ບໍ່ແມ່ນເຂົາກ່າວລ້າ
ຕັ້ງແມ່ນຄວາມເປັນຈິງ
ສົມເປັນຍິງລາວແທ້
ຮັກສາສັນຊາດເຊື້ອ

ຍາມເມື່ອນາງວາດເວົ້າ
ທັງທ່າທາງໄປມາ
ຮັກສາຄອງລາວໄດ້
ຜົມມວຍກໍ່ເລົ່າກ້ຽງ

ສົມທີ່ຄຸນຄ່ານ້ອງ
ນາງມີໃຈອົດທົນ
ສົມຊື່ລາວນາມເຊື້ອ
ສະຕິຕັ້ງເລີດລ້ຳ

ອອນຊອນເດແຈ່ມເຈົ້າ
ນາງປະສານຫຽມຊາຍ
ເຮັດນາສວນແຊມຮົ້ວ
ອຸປະກອນເຄື່ອງໃຊ້

ການສຶກສາກໍ່ໄດ້
ຂົນຂວາຍນຳວິຊາ
ຈິດໃຈແຫຼມຄົມກ້າ
ຄຸນຄ່ານາງເລີດລ້ຳ

ງາມຖ່ອງເທວະດາ
ໜ່ອຍມະນີນິນແກ້ວ
ຍາມມອງຢ້ຽມສ່ອງ
ຍາມຍິ້ມຍ່າວໄຂ

ຄຸນຄ່າຂອງນາງ
ແມ່ນອນມະໂນອ້າຍ
ຄຸນະທຳສວຍສະຫງ່າ
ຕະກຸນນັ້ນຊື່ລາວ

ຂານມ່ວນຊວນຟັງ
ຄ່ອງຕາຄົນຍ້ອງ
ຖືແພສະໄບບ່ຽງ
ພຽງເກົ້າເກິ່ງກະໂຈມ

ໜັກເກິ່ງປະຖະພີ
ຄູ່ງານຈົບແລ້ວ
ຊາວລາວຍຸກປະເສີດ
ບໍ່ເຄີຍລ້ຽວລັ້ງເລ

ຄາວເມື່ອຮ່ວມອອກແຮງງານ
ຊູຍາມຊູຊວ້ານ
ໂຮມແຮງຮ້າໄຮ່
ທຳໄດ້ດັ່ງຊາຍ

ໃນໝູ່ມະຫາຊົນ
ຊ່ວຍຊູເສີມສ້າງ
ອາສາການໝົດທຸກຢ່າງ
ຄືດ້າມດັ່ງຈາ ນັ້ນແລ້ວ.



# ຄຸນຂອງເອື້ອຍ

ໂດຍ: ດອກເພັກ

.................................................

ຮຽນນີ້ ພໍ່ແມ່ມ້ອຍ    ໄລແຕ່ເຍົາໄວ
ຍ້ອນແປວໄຟສົງຄາມ    ຍ່ຳຍີຕີບ້ານ
ກໍຫາກຍັງພຽງເອື້ອຍ    ດູແລຫຼິງລຳ
ເປັນຜູ້ນຳຫຼໍ່ລ້ຽງ    ຮຽນໃຫ້ໃຫຍ່ສູງ    ນີ້ແລ້ວ

ເອື້ອຍແອບຈູງຍ່າງຫຼິ້ນ    ພໍ່ຄ່ອຍຄາຍເຫງົາ
ປ້ອນເຂົ້າກັບປູປາ    ທີ່ເອື້ອຍຫາມາໄດ້
ຍາມນ້ອງຄຳຄວນໄຫ້    ຫົວໃຈເອື້ອຍເປັນຫ່ວງ
ທວງເອື້ອຍຊິມຸ່ນມ້າງ    ອີດູນ້ອງຜູ້ປ່ຽວພອຍ    ນີ້ນາ

ເອື້ອຍເບິ່ງແຍງແຕ່ນ້ອຍ    ຊີ້ນຈີ່ປາເຜົາ
ຍາມອຶດເອົາຫົວມັນ    ສູ່ກິນຕາງເຂົ້າ
ມີແຕ່ວາຈາອ່ອນເວົ້າ    ອອງອອຍອ້ອຍອິ່ນ
ເອື້ອຍບໍ່ກິນກໍ່ຢູ່ໄດ້    ທະແນມນ້ອງອີ່ມພີ    ນ້ອງເອີຍ

ຍາມເມື່ອນ້ອງປ່ວຍໄຂ້    ເອື້ອຍກໍ່ຢູ່ຄຽງຂວັນ
ບາກບັ່ນຫາຢາປົວ    ບໍ່ມີຍາມເວັ້ນ
ເວັນ ຫຼື ຄືນກໍ່ຄອຍເຝົ້າ    ເຫງົານອນບໍ່ໄດ້ວ່າ
ຂໍແຕ່ນ້ອງນາດຫຼ້າ    ຫາຍຮ້ອນຊຸ່ມເຢັນ    ກໍພໍແລ້ວ

ເອື້ອຍຈຶ່ງໄດ້ຊາບຊຶ້ງ    ທະນົງພາກພູມໃຈ
ເວົ້າຈາສຽງເສາະໃສ    ສົ່ງໄປຮຽນຮູ້
ເອື້ອຍຄູກໍ່ສອນໃຫ້    ເປັນຄົນດີດອມໝູ່
ຫູຕາໃສສ່ອງແຈ້ງ    ນຳໃຊ້ພັດທະນາ    ແທ້ແລ້ວ

ເອື້ອຍເອງຫາຊອກຄົ້ນ    ຫຼອມຫຼໍ່ຝຶກຝົນ
ສູ້ຊົນໃນການງານ    ບໍ່ຫວັ່ນກົວເກງຢ້ານ
ສັດຈະທຳຫຼັກໝັ້ນ    ຈິງຈັງ ແລະເດັດດ່ຽວ
ປະສານກຽວສືບສ້າງ    ເມືອງບ້ານອີແມ່ເຮົາ    ນີ້ແລ້ວ.



# ຄຳເຕືອນຈາກແມ່

ໂດຍ: ດອກເພັກ

ລູກເອີຍ! ຄຳນີ້ແມ່ຢາກເວົ້າ ຕັ້ງແຕ່ດົນມາ ພຸ້ນນາ
ຈົນວ່າ ວັນເວລາ ລ່ວງເລີຍມາແລ້ວ
ຍາມນີ້ ຖືເປັນມື້ ວັນດີສິດທິໂຊດ
ຈຶ່ງຂໍຈາໃຫ້ແຈ້ງ ຟັງແລ້ວໃຫ້ຮີ່ນຕອງ

ກ່ອນນັ້ນ ລູກອ່ອນນ້ອຍ ສັງຂານອ່ອນເຍົາໄວ
ເຕີບໃຫຍ່ໃນວົງແຂນ ແມ່ໂຊມໂຈມອູ້ມ
ຍາມຮື້ນຍູງຕາມຕ້ອງ ມານດາໄດ້ວີໄລ່
ຍາມລູກເຈັບປ່ວຍໄຂ້ ໃຈນີ້ຫ່ວງນຳ ແທ້ແລ້ວ

ຍາມເມື່ອລູກຊື່ນຊ້ອຍ ແມ່ກໍ່ປ່ອຍສຽງຫົວ ນຳແລ້ວ
ເມື່ອລູກຄອງຄວາມເຫງົາ ແມ່ກໍ່ພອຍຊຶມເສົ້າ
ເຖິງແມ່ນສັດຕູເຂົ້າ ກຸກກວນບັງບຽດ
ແມ່ກໍ່ອູ້ມລູກແໜ້ນ ເອົາຫົວຊົນໝົ້ນຮູ ແທ້ແລ້ວ

ເປັນຫຼືຕາຍແມ່ບໍ່ຢ້ານ ແມ່ຂໍປ່ຽນແທນໝົດ
ອາຫານມີພຽງຢິບ ກໍ່ຄ່ອຍຍອມເອົາໄວ້
ອົດໃຈທົວໂທຍແຫ້ງ ຂໍນົງເຍົາໄດ້ກິນອີ່ມ
ຂໍໃຫ້ລູກອີ່ມອ້ອຍ ພຽງນັ້ນກໍ່ຊື່ນໃຈ ແມ່ນາ



ຍາມເມື່ອລູກຍັງອ່ອນນ້ອຍ ອອດແອ່ວ ລຳພັງ
ຂັດລັງຕາມພາສາ ບໍ່ຫ່ວງຫຍັງພໍດີ້
ແມ່ນຈັກມີຄວາມຫຍຸ້ງ ສັນໃດກໍຕາມຊ່າງ
ອຶດຢາກເຂີນຂາດຂ້ອນ ໃຜບໍ່ຮູ້ຮ່ອມນຳ ແທ້ແລ້ວ

ດຽວນີ້ລູກໃຫຍ່ແລ້ວ ຮູ້ຈັກຄ່າຄຸນຊີວິດ ລູກເນີ
ອະດີດມັນກາຍໄປ ແມ່ບໍ່ຖືຊາຊ້ຳ
ໜ້າທີ່ມີແນວນັ້ນ ໃນໂລກາທົ່ວທຸກບ່ອນ
ແມ່ທົນທຸກເພື່ອເຈົ້າ ໃຫ້ເປັນເທວົ້າສືບນະຄອນ ນີ້ແລ້ວ

ໃຫ້ລູກຈຳຈື່ໄວ້ ຝັງເລິກຢູ່ອຸລາ
ຈົ່ງຮ່ຳຮຽນວິຊາສູງ ເພື່ອສົ່ງຄຸນເມືອງບ້ານ
ເປັນທະຫານປົກປ້ອງ ດິນແດນທົ່ວປະເທດ
ເປັນຜູ້ຊົມສືບສ້າງ ເພື່ອຊຸມນ້ອງຜູ້ໃຫຍ່ລຸນ ນັ້ນເນີ

ຈົ່ງຟັງຄຳແມ່ເວົ້າ ກອຍກ່າວຄຳຖະແຫຼງ
ດຸໝັ່ນໃນການຮຽນ ຢ່າໄດ້ມີຄວາມຄ້ານ
ເປັນຄົນດີມີຄວາມຮູ້ ມາດາກໍ່ອົບອຸ່ນ
ເທົ່ານີ້ຖືວ່າໄດ້ ແທນໃຫ້ຄ່ານົມ ແມ່ແລ້ວ

24 / VII
ຫ້າມຈຳໜ່າຍ

# ເພື່ອແມ່

**ໂດຍ: ດອກເພັກ ແດນຈຳພອນ**

........................................................

ມື້ນີ້ ຮຽນຮຸ່ງຮູ້ ຄຸນແມ່ເໜືອຫົວ ຮຽນແລ້ວ
ແຕ່ຈະຫາຫຍັງຕາງ ຕອບຄຸນຄາມລົ້ນ
ຄິດວ່າ ເງິນຄຳລ້ານ ຍັງບໍ່ທັນທຽມຖ່ອງ ໄດ້ນາ
ຄຸນນັ້ນສູງກວ່າຟ້າ ໄກກວ້າງກວ່າທະເລ ພຸ້ນແລ້ວ

ມີທໍ່ກອນກາບສັ້ນ ຍົກຍື່ນຍໍເຖິງ ແມ່ເອີຍ
ເນື່ອງໃນວັນສະຫຼອງ ກຽດທະນົງນາມອ້າງ
ວັນແມ່ຍິງຊີງໄຊຍ໌ ເອົາສິດສະເໝີພາບ
ວັນແມ່ ປົດແອກທີ່ເຄີຍຂົ່ມຄ້າງ ເຕັງຕັ້ງຫວ່າງຄໍ ນັ້ນນາ

ອິດສະຫຼະພາບໄດ້ ໂດຍດັ່ງຄວາມຫວັງ
ບົດບາດມີທຽມຊາຍ ທຸກວຽກງານທຽມຂ້າງ
ນັບແຕ່ຈັບປືນສູ້ ຮຽງສະໜາມດຸເດືອດ
ມືຍັງຖັກແສ່ວຝ້າຍ ຖັກຄັ້ນແສ່ວລາຍ ທັ້ນເດ

ຄວາມສາມາດພຽບພ້ອມ ຊຸດກົ່ນປົວແປງ
ຕົບແຕ່ງຄົວເຮືອນຊານ ລະອຽດດີດາຖ້ວນ
ຮັບແຂກຄົນຄອຍຍ້ຽມ ທັງດູແລລູກອ່ອນໆ
ຮອບດ້ານແມ່ເຮັດໄດ້ ຮຽນຮູ້ຄູ່ຂະບວນ ແມ່ເອີຍ

ແມ່ເອີຍ ! ຂໍໃຫ້ແມ່ຈົ່ງໝັ້ນ ເປັນມິ່ງສະຖິດຫົວ ລູກທ້ອນ
ລູກຈະເດີນດອມຕາມ ວິລະກຳກຽນກ້ອງ
ບໍ່ໃຫ້ສູນເສຍເຊື້ອ ມູນມັງທີ່ຍອດຍິ່ງ
ສິ່ງແມ່ມອນມອບໄວ້ ຈະເສີມສ້າງສືບຕະກູນ ແມ່ເອີຍ

ເຖິງວ່າ ມານມຸ່ງມ້າງ ດັ້ນດຸ່ງກອນແດນ ລາວນີ້
ລູກຈະເອົາຊີວາ ຍູ້ຍັນປະຊັນສູ້
ສອງຝາມືຈະຊູຊ້ວານ ສັ້ງຄົນລາວ ໃຫ້ເຮືອງຮຸ່ງ
ທົດແທນຄຸນແມ່ສ້າງ ປາງນັ້ນລູກບໍ່ລືມ ດອກນາ.



# ແມ່

**ໂດຍ: ຄຳສອນ ຈຸນລະມະນີ**

..............................................

ຮັກໃດໃນໂລກກວ້າງ ພານພົບປະສົບປານ
ຮັກເໜືອດວງຊີວາ ເລືອດແດງສີເຂັ້ມ
ຮັກນີ້ເສຍແທນໄດ້ ດ້ວຍຈິດໃຈທີ່ຮັກຊາດ
ຄືຄວາມຮັກແມ່ນັ້ນ ປະຄອງຕູ້ມຕ່ອມຖະໜອມ ນີ້ແລ້ວ

ສຸກໃດໂດຍດັ່ງດ້າມ ປຸນປຽບຫຼຽມສະເໝີ
ສຸກເພື່ອຮຽງຄຽງຮັກ ແມ່ຄິງຂວັນເນື້ອ
ສຸກເພື່ອໂຮມແຮງສ້າງ ຜົນງານມາຕ້ອນແມ່
ສຸກເພື່ອພານພົບພໍ້ ມານດາແຍ້ມຍ່າວຊົມ ນີ້ແລ້ວ

ຄິດຮອດຄາວກ່ອນນັ້ນ ພາບແຫ່ງມານດາ
ທຸກວຽກງານອາສາ ໜັກເບົາກໍທົນໄດ້
ໃຜບໍ່ວອນວານຮ້ອງ ແທນຄຸນນ້ຳນົມເພິ່ນ
ແຕ່ລູກຂໍຍໍຍຶດໝັ້ນ ຈຳໄວ້ຕະຫຼອດການ ແມ່ເອີຍ

ຄຸນແມ່ປຽບໃສ່ນ້ຳ ບໍ່ກ້ຳເກິ່ງພະຄອງຄຸນ
ປຽບດັ່ງດິນແດນຄຳ ແຮ່ງບໍ່ປຸນພຽງເປົ້າ
ແມ່ເປັນສະພານແກ້ວ ສະພານຄຳໃຫ້ຫຼຽວໄຕ່
ພົ້ນຝັ່ງພົ້ນສິ່ງຮ້າຍ ພາສ້າງແຕ່ສິ່ງດີ ແທ້ນາ

ແມ່! ແມ່ເອີຍ! ແມ່ຂ້ອຍ ຈົ່ງຍືນຍົງຍູສະຖຽນ
ອະມະຕະຮຽງໃຈ ຊົ່ວນິຣັນດອນພຸ້ນ
ລູກຈະປຸນປອງສ້າງ ແຕ່ແນວດີຄືແມ່ສັ່ງ
ຄວາມຫວັງແມ່ຄາດໄວ້ ວາງໃຈທ້ອນອຸ່ນອຽນ ແມ່ເອີຍ



# ນ້ຳໃຈແມ່

**ໂດຍ: ອ່ອນສີ ປະຊາວົງ**

..................................................

ນ້ຳໃຈແມ່ເກັ່ງກ້າ    ບຸປ່າໄພພະນາ
ຂັບໄລ່ມວນມານຜີ    ຜູ້ຍາດຊີງແຊງບ້ານ
ແມ່ທຳການຕີຕ້ານ    ປະສານຮວມຮຽງຮ່ວມ
ສູ້ຮົບຄຽງຄູ່ຂ້າງ    ຊາຍກ້າເກັ່ງສະກັນ    ແທ້ນາ

ທຸກບັ້ນຮົບວ່ານັ້ນ    ມີແມ່ຮ່ວມປະສານ
ຕີສັດຕູບໍ່ມີຖອຍ    ບໍ່ປ່ອຍມານກວນບ້ານ
ເຖິງແມ່ນມີຜາຂັ້ນ    ຫີນຕັນເຕັ້ງປ່ອງ
ແມ່ກໍ່ເຢາະຍ່ອງຂ້າມ    ເຫວຫ້ວຍຮ່ອມພູ    ແທ້ແລ້ວ

ໃຜກໍ່ຮັບຮູ້ແລ້ວ    ຜົນງານແມ່ມີຫຼາຍ
ພັກລັດຈຳຈາລຶກ    ບໍ່ແມ່ນຫຼົງລືມໄດ້
ນ້ຳໃຈຍິງລາວນີ້    ສຸດແສນກ້າກັ່ນ
ບາກບັ່ນຊີງຊ່ວງສູ້    ບໍ່ມີຢ້ານຍ່ອນກົວ    ແທ້ນາ

ແມ່ນີ້ແສນປະເສີດແທ້    ຍອດຍິ່ງແມ່ຍິງລາວ
ກ້າວດຸ່ງເດີນຕາມທາງ    ພັກລັດວາງປະສົງຊີ້
ກຽດສັກສີຊົນລະນີແກ້ວ    ປະກຽນໄກກ້ອງຊ່າ
ຊາດໄດ້ຈາລຶກໄວ້    ໃນປຶ້ມແຜ່ນຄຳ    ແທ້ແລ້ວ



ນ້ຳໃຈແມ່ແສນເລີດລ້ຳ ຍັງສັດຊື່ກັບຜົວ
ບໍ່ໄດ້ຕົວະອຳພາງ ຕໍ່ສາມີແກ້ວ
ໃຈແມ່ແວວວາວເຫຼື້ອມ ບໍລິສຸດຜຸດຜ່ອງ
ບໍ່ຜິດຄອງຮີດເຄົ້າ ບູຮານເຖົ້າສັ່ງສອນ ນັ້ນແລ້ວ

ແມ່ບໍ່ໄດ້ເຊື່ອງຊ້ອນ ຂອງແຊບຊຸມອາຫານ
ແມ່ນວ່າມີຂອງຫວານ ແຕ່ງໃສ່ພາພານເຂົ້າ
ກິນພ້ອມຜົວຂວັນເຄົ້າ ບຸດຕາ ແລະ ພໍ່ແມ່
ທັງບຸດຕີພ່ຳພ້ອມ ຫວານສົ້ມແຊບນົວ ແທ້ແລ້ວ

ຍາມໜາວແມ່ຊອກຄົ້ນ ຜ້າຜ່ອນແພສະໄບ
ມອບໃຫ້ບຸດຕີບຸດຕາ ເພື່ອຫົ່ມກາຍາເນື້ອ
ຍາມເມື່ອບຸດຕານ້ອຍ ສຽງອໍແອແອ່ວ
ປັດກວາດເຮືອນຍັງບໍ່ແລ້ວ ໄປໂຊມອູ້ມໂອບເອົາ ລູກແລ້ວ

ນີ້ສົມເປັນແມ່ແຈ່ມເຈົ້າ ໃຈປະເສີດແສນດີ
ວຽກຄອບຄົວເຮືອນຊານ ຮັບປະກັນຫຼາຍດ້ານ
ທັງການເມືອງການບ້ານ ບໍ່ວາງເສຍໃຫ້ລາຫ່າງ
ແມ່ໄດ້ຮຽງຮ່ວມສ້າງ ສົມແລ້ວເລີດມະນີ ນີ້ແລ້ວ



ຄວາມຮັກອັນບໍລິສຸດແທ້ນັ້ນ
ເກີດມາຈາກສ່ວນລຶກຂອງຫົວໃຈ
ຊຶ່ງບໍ່ອາດລຶບອອກໃຫ້ຫຼົງລືມ
ແລະເລືອນລາງໄລລາຈາກຊີວິດນີ້ໄດ້

# ນ້ຳຕາແມ່

**ໂດຍ: ດຣ. ທອງຄຳ ອ່ອນມະນີສອນ**

.......................................................

ແມ່ນີ້ສຸດທີ່ກັ້ນເກື່ອນນ້ຳ ຕາໂສກລົງເອີກ ລູກເອີຍ
ມັນຫາການອງຫຼານໄຫຼ ຫຼັ່ງລົງລິນແກ້ມ
ແນມຄືນຫຼັງຫຼຽວເມືອໜ້າ ຄະນຶງຫາເຫັນອະດີດ
ຄືມີດຄົມຄວັດຄວ້ານ ຂັດໄວ້ລະຫວ່າງຊວງ ແມ່ນີ້

ດວງໃຈແມ່ມອບໃຫ້ ອາໄລລູກບຸດຕີ
ມີທຸກແສນທີຖົມ ທັບມາບໍ່ຍອມຢ້ານ
ທຸກເມື່ອຊອມຖະໜອມນ້ອຍ ຄອຍອອຍອ້ອຍອິ່ນ
ອິນທະຫວາລູກຫຼ້າ ໃຫຍ່ມາລືມແມ່ໄດ້
ສັງມາປີ້ນປ່ຽນໃຈ ນັ້ນບໍ?

ແມ່ຄິດໄກຄິດໃກ້ ເຮຮ່ຳໄຮອຸກ
ທຸກທັງທວງທົນນຳ ຢູ່ກຳປະຄອງເຈົ້າ
ກິນແຕ່ຂີ້ງກັບເຂົ້າ ເກືອກອຍແກມຂ່າ
ຄືງແມ່ເຫຼືອງລ່າເສົ້າ ເຫງົາລ້າລ່ອຍໂຊ




ປາກແມ່ດື່ມນ້ຳຮ້ອນ ນອນນັ່ງບໍ່ເປັນສຸກ
ຫຼັງເປື່ອຍ ໂພງໄຟລຸກ ລວກລົນຫຼາຍແປ້ວ
ຮີ້ນແສ້ວມາປັດປ້າຍ ຍຸງກາຍມາແມ່ຕົບໄລ່
ຍາມເມື່ອລູກແອ່ວໄຫ້ ໃຈຄ້າມຄິດອີ່ດູ ລູກນາ

ຍາມເມື່ອລູກປ່ວຍໄຂ້ ແມ່ກໍໂສກບໍ່ເປັນສຸກ
ຍາມເມື່ອຫິວຢາກກິນປາ ແມ່ກໍໄປຫາສ້ອນ
ລັດດົງດອນຄອນຄານໄມ້ ພຽນໄປຊອກທຸກຢ່າງ
ທັງຜັກນາງອາງຫຍ້າ ເຕັມຊ້າຈຶ່ງຕ່າວມາ ລູກເອີຍ

ແມ່ເຮັດນາທັງຫາບເຂົ້າ ທັງເຈັບເຂົ່າ ແລະຂັດຂາ
ຫໍ່ກະບອງໄປທ່ຽວຂາຍ ຈຳໜ່າຍພໍກຸນເກື້ອ
ເສື້ອຂາຍຫຼັງແມ່ຫຍິບຍຸ້ມ ເປັນວົງເວີງ ແຕ່ຮອຍຕາບ
ສີ້ນດ່າງດຳແປດເປື້ອນ ລະອອງຜ້າຝຸ່ນຕົມ

ອະດີດບົບແມ່ກົ້ມ ງົມທຸກຢ່າງເຫຼືອຫຼາຍ
ເຈັບກາຍທັງເຈັບໃຈ ປວດຢູ່ໃນນູມຍ້ອນ
ຈຶ່ງທຽວຄອນກະບຸງຄົ້ນ ວົນຫາຢາກເຫັນລູກ
ຜູກສາຍຮັກຫ່ວງບໍ່ແລ້ວ ເປັນແປ້ວຢູ່ຫວ່າງໃຈ

ຂ່າວວ່າລູກແມ່ໄດ້ ມູນມັງຢ່າງສຸກສັນ ລຳພັນເອີຍ!
ມີລົດເກັ່ງຄັນງາມ ນັ່ງສະບາຍຫາຍຮ້ອນ
ມີຄົນຍາມມີຄົນໃຊ້ ໄປໃສກໍ່ຊີ້ສັ່ງ
ລືມຄວາມຫຼັງແມ່ສະຫຼັ້ງ ຜິດຫວັງລົງນັ່ງໄຫ້
ບໍ່ຄອງໄດ້ຊິເພິ່ງພາ ແລ້ວບໍ?

ເຖິງວ່າເພິ່ງບໍ່ໄດ້ ຂໍໃຫ້ແມ່ຊົມຂວັນ ແດ່ທ້ອນ
ອວນອຸ່ນຈາຄວາມຫວານ ວ່າ"ແມ່ເອີຍມາແລ້ວ"
ແມ່ນແມ່ມໍລະນາມ້ຽນ ຕາຍໄປບໍ່ແໜງໜ່າຍ
ຕາຍຍ້ອນລູກຮັບຮູ້ ຄຸນແກ້ວບໍ່ວ່າຫຍັງ ລູກເອີຍ

ນ້ຳຕາພັງຍັ່ງຍ້ອຍ ຄ້ອຍຄ່ຳດຳໝອງ ອີດູເດ
ໝອງນາເຂີນຂາດວັງ ແດດເຜົາຜານຮ້ອນ
ເກືອແກ່ນເຕັມຂັງຂ້ອນ ຈົມຈອນເລົ່າຈາງຈືດ
ມືດກວມຕາອັ່ງອໍ້າ ກຳຂ້ອງຊຸ່ນລະທົມ ນີ້ບໍ?

ບໍ່ສົມເຮືອນສີ່ຊັ້ນ ອອກແບບທັນສະໄໝ ລູກເອີຍ
ບໍ່ຄູ່ຄວນຂອງທິບ ເຄື່ອງຄຳຄຽນເນື້ອ
ຄົນຢູ່ດົງດອນເຮື້ອ ຄົນໄພພົງເຖື່ອນ
ສັງມາລືມແມ່ໄດ້ ຜີເຂົ້າ ແຕ່ເມື່ອໃດ ລູກເອີຍ

ລືມແລ້ວຕີລູກຫຼ້າ ກະຕູບຕ່ຳຕອງມຸງ
ບ່ອນລູກເຄີຍຄຽງໝອນ ແນບນອນບໍ່ມີມຸ້ງ
ພໍ່ເຈົ້າໄລລາໄວ້ ຕາຍໄປໄກຈາກ ປາງນັ້ນ
ຍັງແຕ່ແມ່ຢູ່ລ້ຽງ ຖະໜອມຕຸ້ມຕໍ່ມາ ນັ້ນນາ

ເຊົ້າຄ່ຳຫາບເຂົ້າປຸ້ນ ຂາຍລຽບແຄມທາງ
ໄດ້ມື້ສິບມື້ຊາວ ແມ່ກໍ່ພຽນແພງໄວ້
ເພື່ອເປັນທືນຮຽນຮູ້ ຂອງນາງນ້ອຍອ່ອນ
ບັດນີ້ ເຈົ້າສັງມາເລີກລ້າງ ຄຸນເຖົ້າຊ່າງບໍ່ມີ ແມ່ບໍ?

# ປະຢັດເພື່ອລູກ

ໂດຍ: ດຣ. ທອງຄໍາ ອ່ອນມະນີສອນ

.............................................

ແມ່ໄດ້ລຸກແຕ່ເຊົ້າ ຕຽມແຕ່ງຕົວໄປ
ເກັບແຕະສຸບສວມພາຍ ກະຕ່າຈອນຈໍາຈ້ອນ
ເສື້ອຊາດຫຼັ້ງຫຍິບຍຸ້ມ ເປັນວົງເວີນຕາບ
ສິ້ນເກົ່າສີຊີດຫຼ້ອນ ຮິງຫຸ້ມຫໍ່ຄີງ ແມ່ນັ້ນ

ກ່ອນຈາກແມ່ອວ່າຍໜ້າ ອອຍລູກປະໂລມຂວັນ
ສຸດສະເໜຫາຮັກ ສັ່ງສຽງແສນລະຫ້ອຍ
ລູກງວາກເງີຍແຫງນໜ້າ ຕາແລຫຼຽວເບິ່ງແມ່
ອົກອຸ່ນຊວງຊວາດຄ້າມ ຄາແຄ້ນຢາກແລ່ນນໍາ ແມ່ເດ

ແມ່ໄດ້ເອີ້ນສັ່ງຊໍ້າ ຄໍາຄອບຄະນິງບຸດ
ຮັກທໍ່ປຸນປານຕາ ໜ່ວຍໃສສອງກໍ້າ
ແຮງງານເປັນຊອງຄໍ້າ ຄົວເຮືອນຮຽງລູກ
ຢາດເຫື່ອໄຫຼຫຼັ່ງລົ່ງ ຕົນເຈົ້າໃຫ້ໃຫຍ່ສູງ ແມ່ແລ້ວ

ແມ່ບໍ່ໄດ້ຄິດສັ້ນ ຊີໄລລູກລືມໜີ ໄປໃສດອກ
ແມ່ນແມ່ທົວກະຫາຍອຶດ ເມື່ອຍມຶນຄາແຄ້ນ
ມີເງິນພໍພຽງໜ້ອຍ ປານໃດກໍຕາມຊ່າງ
ຢືບຢອມແພງເພື່ອຊື້ ເຂົ້າໜົມຕ້ອນຕ່ອນຄໍາ ແມ່ນີ້

ລູກເປັນເຊື້ອນັກສູ້ ແນວໜໍ່ປະຕິວັດ
ກໍາເນີດໃນນາມຄົນ ທຸກຈົນທົນສູ້
ກໍາມະກອນໝາຍໄວ້ ຕະກຸນເກນການເກີດ
ກໍາເນີດຊີ້ສ່ອງໃຫ້ ເຫັນແຈ້ງຈີ່ຈິງ ແມ່ເນີ

ຕັ້ງໃຈຮຽນເຖີດຫຼ້າ ແກ້ວແກ່ນກົງສະເໜ ແມ່ເອີຍ
ດຸໝັ່ນວັນຄືນສຸມ ໃສ່ຮຽນພຽນພ້ອມ
ແສງໄຟຄືຄວາມຮູ້ ເຮືອງສີໃສສ່ອງ
ເຍືອງໃຫ້ຊາດສະຫວ່າງແຈ້ງ ຈະເລີນກ້າວກໍເພາະຮຽນ ນີ້ແລ້ວ

# ຮັກ ແລະຄິດເຖິງແມ່

## ໂດຍ: ດຣ. ທອງຄໍາ ອ່ອນມະນີສອນ

........................................

ຮຽນຂໍໄຂຂ່າວແຈ້ງ    ຖະແຫຼງປັ່ນແປງສານ    ກ່ອນແລ້ວ
ສັນລະເສີນຍໍຍົກ    ແມ່ພະຄຸນຄາມລົ້ນ
ເຫຼືອລື່ນດິນແດນນໍ້າ    ສະໝຸດຫຼວງຫຼາຍຍ່ານ
ປະຖະພີແຜ່ນພື້ນ    ບໍ່ສົມສ້ຽວສ່ວນຄຸນ    ແມ່ໄດ້

ແມ່ນຸຈະທຸບທອບອູ້ມ    ເອົາໜ່ອຍບັບພະໂຕ
ມາກິ່ງກອງກາງລຽນ    ໝື່ນພູພຽງຟ້າ
ເອົາພູຫຼວງພູໂລ້ນ    ພູມະໂລງ ແລະພູດ່າງ
ທັງພູເບັຍສູງສວດພົ້ນ    ພູເກົ້າກິ່ງມາ    ກໍຕາມທ້ອນ

ແລ້ວເລົ່າໃຊ້ຊັ່ງດ້ວຍ    ຕຸລາໃສ່ຊີງຫຼວງ
ລົງເລກລວມລອງຕິດ    ຄ່າຄຸນຄະເນອ້າງ
ຄວາມໜັກສູງສຸດລົ້ນ    ເຫຼືອຄົນຄະນິງອ່າວ    ກໍດາຍແລ້ວ
ຍັງໄປ່ແປວປຽບຜັ່ງງ    ພະຄຸນແກ້ວແມ່ເຮົາ    ດອກນາ

ສົມທີ່ລູກນອບນ້ອມ    ມະໂນໜ່ຽວໜາໜັກ    ກໍຈິງແລ້ວ
ຫາສິ່ງປຸນປານທຽມ    ທຽບຄືງຄານ້ອຍ
ແມ່ນວ່າຄູນຄໍາຂຶ້ນ    ຄຸງຄາອະວະກາດ
ທຽບຄ່າຄຸນຄືດອ້າງ    ເອົາໄດ້ກໍບໍ່ເຖິງ    ທ່ານເອີຍ

ໃຈແມ່ໃສສິ່ງແກ້ວ    ມະນີໂຊດແສນງາມ
ລ້ານຊ່າງເຈຍລະໄນຂັດ    ຮູບຮົງໆເຫຼື້ອມ
ບໍ່ມີມົນທິນຄ້າງ    ຂວາງຄາຄຸງຂອບ
ແມ່ເອີຍ!ແມ່ຫາກໃສບໍ່ເສົ້າ    ຍີແຍ້ມຍອດຄົນ    ນີ້ແລ້ວ

ຄາວກ່ອນພຸ້ນ    ຄວາມມືດຄຸມດິນ    ລາວນີ້
ແມ່ບໍ່ມີສິດສຽງ    ມືດມົນໝອງມົ້ວ
ແມ່ໄດ້ຟາຍນໍ້າຕາເສົ້າ    ເຮຮົນຮ້ອນເຮັ່ງ
ຢູ່ກາງແປວເປົ່ງໄໝ້    ໄຟກຸ້ມເກື່ອນກວມນີ້ແລ້ວ



ຍ້ອນພັກຍໍຍົກຂຶ້ນ ທວນປະທີບແສງໃສ
ເຍືອງຍອດຍານແຍງເຫັນ ຮຸ່ງທາງທຽວດັ້ນ
ປົດປ່ອຍປວງຊົນເຊື້ອ ຊາວລາວທົ່ວປະເທດ
ສັງຄົມນິຍົມຄາດໄວ້ ແສນຊັ້ນໂຊຕະການ ແທ້ແລ້ວ

ພົ້ນແລ້ວເໜືອເກດເກົ້າ ຄອມຂະໜ່ອມມານດາ ຂ້ອຍເອີຍ
ແມ່ຈົ່ງເທຍລະຄາຄົງ ຢູ່ຍືນຍາວໝັ້ນ
ເຜີຍອົກວາແຂນອ້ອມ ຖະໜອມຄົງປະຄອງລູກ
ເອົາໄວ້ແຍງໂລກກວ້າງ ລາວພົ້ນພຸ່ງຈະເລີນ ແດ່ທ້ອນ

ລູກຂໍອຸທິດເນື້ອ ທູນເທີດແທນຄຸນ ແມ່ນີ້
ປົກປັກພຽນແພງຮັກ ຮຳທອນຫວງເຈົ້າ
ແມ່ນຈະຕາຍເຕັງພື້ນ ພະສຸທາຖົມທາດ
ຍິນດີມຸດມອບເນື້ອ ຄຽງຂ້າງແມ່ບໍ່ໄລ ໄດ້ແລ້ວ

ຂໍກອບກູ້ກຽດສ້າງ ຊາດຮຸ່ງເຮືອງໃສ ຕໍ່ໄປ
ອຸດົມສົມບູນຄົບ ຮັ່ງມີດີໄດ້
ໃຫ້ແມ່ລູກສະບາຍບ້າງ ເບົາຄຶງຄາຍເມື່ອຍ
ພັກຜ່ອນຊົມຊື່ນຍິ້ມ ນິລັນຕັ້ງຕະຫຼອດການ ລູກທ້ອນ

24 / VII
ຫ້າມຈຳໜ່າຍ



# ແມ່ຍິງລາວຍຸກໃໝ່ສົດໃສ

## ໂດຍ: ດຣ. ທອງຄຳ ອ່ອນມະນີສອນ

.............................................

ແມ່ຍິງລາວແກ່ນກ້າ
ທັງອ່ອນຫວານວາຈາ
ກິລິຍາສະຫງວນຍິ້ມ
ວາດຄຸ່ມຄົມສະຫຼາດພ້ອມ

ມີຈິດໃຈສະອາດແຈ້ງ
ທັງຕໍານິຄົນເປັນ
ສີລະປະຍາມເວົ້າ
ກ້ຽວກ່ອມ ນຳແນະນ້ອມ

ມີໄຟໄຫວພົບຊ້ອນ
ຫວັງດີໃສສວຍງາມ
ມີແວວປັນຍາກວ້າງ
ແນມທາງໄກສຸດຊົ່ວຟ້າ

ທັງເກັ່ງທັງງາມ
ວ່າວານຂານຊື່ງ
ລະໄມມີມາລະຍາດ
ຫອມຮູ້ຮັກປະຊາ

ສະແດງອອກບໍ່ເບືອນບັງ
ບໍ່ຕຳຕິຕຶ້ງ
ວອນຂວັນຂໍໜ່ຽວ
ຖະໜອມຊາຍຊື່ນທ້າວ
ທັນຈ້າວພັດທະນາ
ຊອນເຊື້ອງຢູ່ໃນໃຈ
ຢູ່ດວງຕາແກ້ວ
ດວງມະໂນໃນສະຫວ່າງ
ຂາຢືນເທິງແຜ່ນພື້ນ
ບືນສູ້ເພື່ອລາວ




ອອກແຮງຮຽນບໍ່ຄ້ານ
ຈົບປະລິນຍາຕີ
ເຊີດຊູສັກສີຂຶ້ນ
ປະລິນຍາເອກໄດ້

ວິລະຊົນແຫ່ງຊາດນັ້ນ
ເປັນຜູ້ນຳລະດັບສູງ
ເປັນສູນກາງກໍມີແທ້
ໃນການນຳແຕ່ລະຂັ້ນ

ຟັງເດີພວກພີ່ນ້ອງ
ກ້າວກັ່ນພວມຈໍ່ຈີ
ອອນຊອນຄວາມງາມເຈົ້າ
ສາມາດທັງແກ່ນກ້າ

ອະນາຄົດຊາດຊິກ້າວ
ສີວິໄລຄືຄິດ
ໄຟປັນຍາແມ່ຍິງຕ້ອງ
ກັບເພດຊາຍນັກສູ້

ດູໝັ່ນພຽນຂະຫຍັນ
ຕໍ່ໄທທົນສູ້
ບິນສູງສະແຫວງໄຕ່
ບໍ່ມີຕ້ອຍຕ່ຳຜູ້ໃດ

ມີຊື່ສະຕີລາວ
ເດັ່ນດີຜຸດພົ້ນ
ລັດຖະມົນຕີຫຼາຍທ່ານ
ສົມສ່ວນປັນແບ່ງປັ້ນ
ແມ່ຍິງນັ້ນຮັບສະໜອງ
ຊາວໜຸ່ມຍິງສາວ
ຈໍ່ຊອນແຊມຊ້ອນ
ເອົາປະສົມຄວາມສະຫຼາດ
ຮຽນວິຊາເກັ່ງພ້ອມ
ຖະໜອມນ້ອມຖ່ອມຕົນ
ຈະເລີນຮຸ່ງເຮືອງໃສ
ຄາດຄະເນແນໄວ້
ຄຽງສອງສົມຄູ່
ກູ້ກຽດລາວຍຸກກ້າວ
ຮີບທັນທ້າວຮ່ວມກັນ ຊອບແລ້ວ!.



# ອ້ອມອົກແມ່

ໂດຍ: ຮຸ່ງອະລຸນ ແດນວິໄລ

...............................................

ຄິດເມື່ອລູກນ້ອຍໆ ເນົານັ່ງໃນຕັກ ແມ່ນັ້ນ
ຫຼັບແຈບຈົມຄາເພົາ ຕື່ນນອນເລີຍຮ້ອງ
ຍາມເມື່ອຫິວໂຫຍໄຫ້ ມານດາໂລມລູບ
ກົ້ມຈູບສອງກິ່ງແກ້ມ ເອົາເຈົ້າດູດນົມ ແທ້ແລ້ວ

ອາຍອຸ່ນອົກແມ່ອູ້ມ ອອງໂອບເອົາບາ
ຊຶມຊອດເຖິງດວງໃຈ ຍິ່ງມີພະລັງກ້າ
ຍິ້ມແມ່ບົນໃບຫນ້າ ພາແອຊົມຊ້ອຍຊື່ນ
ວາງລູກລົງອູ່ແລ້ວ ພັດຫັນໜ້າສູ່ຄົວ ພຸ້ນແລ້ວ

ຍິນສຽງລູກແອ່ວໄຫ້ ພັດຮີບແລ່ນຄືນຫາ
ຮອດອູ່ສອງມືໄກວ ກ່ອມແພງວອນເວົ້າ
ເຊົາສາຫຼ້າ ບຸດຕາຢ່າໄດ້ແອ່ວ
ໃຫ້ລູກນອນອູ່ແລ້ວ ຫຼັບຕາໄວ້ແມ່ຊິໄກວ ອື. ອື..ໆ..

ສຽງແມ່ຫວານອິ່ນອ້ອຍ ອອຍລູກຫຼັບຕາ
ແລ້ວຈິ່ງຄືນມາຄົວ ແຕ່ງຕອງຫມົກເຂົ້າ
ພໍລູກມືນຕາຂຶ້ນ ເຖິງຍາມປ້ອນມ່ານ
ໂຈມລູກໄປອາບນ້ຳ ຖະໜອມເນື້ອອ່ອນນວນ

ຍ້ອນມີແມ່ໂອບອ້ອມ ຖະໜອມລູກຮຽງຮັກ
ລູກຈິ່ງເປັນຄົນດີ ສະຫຼາດແຫຼມຄຳຮູ້
ຍ້ອນແມ່ດູແລລ້ຽງ ອັນໃດດີແມ່ສອນສັ່ງ
ຫວັງໃຫ້ລູກໃຫຍ່ແລ້ວ ແທນເຊື້ອສືບສະກຸນ ແທ້ແລ້ວ



# ພົນທະຫານຮັກແມ່

ໂດຍ: ນັກຮົບ

.........................................

ຈອນຈາກເຫີນຫ່າງບ້ານ ຍາວຍ່ານຫຼາຍປີ ມາແລ້ວ
ບໍ່ທ່ອນໄລລືມໜີ ແມ່ຄືງເຄີຍຕຸ້ມ
ຄວາມຮັກ ແພງພຽນນັ້ນ ນານວັນ ທະວີຕື່ມ
ຈິດຈໍ່ຈຳຈື່ໝັ້ນ ບໍ່ໄລສິ້ນກິ່ນອາຍ ແມ່ແລ້ວ

ດຽວນີ້ ລູກຢູ່ກ້ຳ ປະຈຳຢູ່ຊາຍແດນແມ່ເອີຍ
ແສນທະນົງໃຈຫຼາຍ ລູກຜູ້ຊາຍບໍ່ເສຍເຊື້ອ
ເໝືອນດັ່ງເກືອເຄັມກ້ອນ ບໍ່ຄອນແຄນຄາຍຊື່
ຊາດທະຫານ ເກີນວ່າຄືຄ່ອງແລ້ວ
ແນວເຊື້ອສົງສະກຸນ

ເຖິງວ່າລູກຈາກບ້ານ ໄກຫ່າງເຄຫາ
ໄກບິດາມາດາ ຍາດວົງພົງເຊື້ອ
ປະຈຳການເໜືອໃຕ້ ທາງໃດ ຄືນ້ອງພີ່ ເຮົານາ
ກຳລັງໃຈລູກນີ້ ຍັງໝັ້ນຍິ່ງທະວີ ແມ່ເອີຍ

ລູກຈະທຳຕົນໃຫ້ ສົມໃຈພໍ່ແມ່ສັ່ງ
ລູກຈະຟັງພວກອ້າຍ ສອນຊີ້ສັ່ງການ
ຈະປະສານປົກປ້ອງ ມາຕຸພູມ ແຜ່ນດິນແມ່
ເພື່ອໃຫ້ຜືນແຜ່ນນີ້ ລາສີເຫຼື້ອມສ່ອງໃສ ແມ່ເອີຍ

ລູກຫາກຢູ່ຫ່າງແກ້ວ ຕົນແມ່ແພງຂວັນ ກໍຕາມທ້ອນ
ຂໍໃຫ້ວາງຈິດໃຈ ເຊື້ອລູກ ຊາຍຄົນນີ້
ແມ່ຈົ່ງສຸກຂີໝັ້ນ ພົງພັນ ພ້ອມອີ່ພໍ່ ເຮົາເດີ
ອີກບໍ່ດົນຄົງຈະຄືນພົບພໍ້ ເມື່ອຢາມບ້ານແຫ່ງເຮົາ ແມ່ເອີຍ





# ສຸດຮັກ ແລະຫວງແຫນແມ່

**ໂດຍ: ນັກຮົບ**

........................................................

ອັນວ່າ ຜືນແຜ່ນນີ້    ມີນາມແມ່ເມືອງລາວ
ຍາວຍ່ານງາມເຫຼືອຫຼາຍ    ມາກມູນຄູນຄ້ຳ
ມໍລະດົກ ຄຳນີ້    ມີມາຕັ້ງແຕ່ກ່ອນ
ແສນສະອອນເອກອ້າງ    ລືລ້ຳກະເດືອງໄກ

ລູກຫຼານລາວ ຄຶດໄຄ່ສ້າງ    ບ້ານເມືອງຮຸ່ງເຮືອງສີ
ໃຫ້ແມ່ຜືນທໍລະນີ    ຢູ່ເຢັນຫາຍຮ້ອນ
ກໍບໍ່ສົມພອນໄດ້    ໂດຍດອມພ້ອມພ່ຳ
ສັດຕູມານລ່ວງລ້ຳ    ກະທຳຮ້າຍ ໂຫດມະຫັນ

ຫຼາຍບ່ອນບັ້ນ    ກະລິຍຸກ ອິນທະການ
ຫຼາຍຮ້ອຍປີປາງເຂັ່ນ    ແຕ່ລາວສູນສິ້ນ
ຜືນແຜ່ນດິນ ເມືອງບ້ານ    ສິດເສຣີເອກະລາດ
ຊາດປະຊາ ມີແຕ່ໝອງໝົ່ນເສົ້າ    ຊະຕາກຳ ຊອກຊ້ຳ
   ໂຮມຮ້າຍໃສ່ແມ່ເຮົາ    ແທ້ນາ

ແມ່ສຸດ ແສນໂສກແຄ້ນ    ລະທົມ ທຸກທໍລະມານ
ໄຟສົງຄາມເຜົາຜານ    ຊູ່ວັນຄືນມື້
ມີແຕ່ຄວນຄາງໄຫ້    ຫິວໂຫຍຮ້ອນເຮັ່ງ
ຊຸມລະເບີດອຸບາດຮ້າຍ    ເຕັມພື້ນແຜ່ນຫຼັງ    ແມ່ນາ



ຍາມນັ້ນໃຜທ່ອນໄດ້ ຕັດສະຫວາດດູດາຍ
ລູກຫຼານໂຮມແຮງກັນ ບໍ່ຍ່ອນກົວເກງຢ້ານ
ລາວອາດຫານຊິງສູ້ ລົງລອຍທະເລເລືອດ
ສີແດງທາແຜ່ນພື້ນ ຜືນນີ້ ກຽດທະນົງ ແທ້ນາ

ດຽວນີ້ແມ່ຫາກໄດ້ ຫວິດຫວ່າງສົງຄາມ ມາແລ້ວ
ຊົມລະຫາລີນ ອາບສີສົງລ້າງ
ຮັງສີເຫຼືອມ ສູຣີໂຍເຍືອງສ່ອງ
ມາລາໄຂກີບອ້າ ຫອມກົ້ວ ກິ່ນລະອອງ

ຄືນທົ່ວແຄວັນ ໄຊໂຍຍື່ນມາດາ
ດີໃຈນຳ ຊໍ່ຊົມເຊີຍຍ້ອງ
ບຸດຫຼານນີ້ ໃນມະໂນຊ້ອຍຊື່ນ
ແຂນແມ່ອ້າໂອບອູ້ມ ປະຊາເຊື້ອຊຸ່ມເຢັນ ແມ່ເອີຍ

ລູກຫຼານລາວ ໄດ້ຊີ່ຊັ້ນ ສະກຸນຊາດວິລະຊົນ
ຊິເທີດທູນບຸນຄຸນ ແມ່ພຽນຖະໜອມລ້ຽງ
ສືບຕໍ່ນຳມູນເຊື້ອ ຈິດໃຈຮັກຊາດ
ຮັກແມ່ ! ຫວງແຫນແມ່! ຍົກສູງຄຸນແມ່ໄວ້
ຜອງເທົ້າຊົ່ວຊີວັງ ລູກແລ້ວ



# ເລືອດສີແດງ - ຂອງແມ່

ໂດຍ: ພ. ພວງສະບາ

................................................

ຍັງມີ ເລື່ອງເລົ່າໄວ້ ໃຫ້ເຮົາໄດ່ຄວນຄິດ
ປາງເມື່ອ ສົງຄາມຮຸກ ຮໍ່ຮີງຊີງປຸ້ນ
ຍັງມີ ກຸນລະສະຕີກ້າ ວິລະສະຕີເຊັ່ງຊ່າ
ຊື່ນາງເຄນ ເປັນແມ່ສຸດເອກອ້າງ ປາງນັ້ນຄ່ອຍຟັງ ເອົາເນີ

ຄັ້ງນັ້ນ ຍັງມີພວກທຸ່ນຮ້າຍ ຂາຍຊາດປະຕິການ
ຈັບແມ່ ທໍລະມານທຸບ ຕ່ອຍຕີເຂັ່ນຂ້າ
ບອກແມ່ ເຜີຍໄຂອ້າ ລະຫັດໃນບົນບອກ
ເຊືອກຜູກສອກ ເອົາແມ່ແຂວນງ່າໄມ້ ທັງແສ້ນໍ່າທະວີ ນັ້ນນາ

ຕີແມ່ ຈົນບວບຊ້ຳ ຄີງເນົ່ານອມໃນ
ເລືອດຫຼັ່ງ ລົນລາມໄຫຼ ເວດທະນາໝອງມົ້ວ
ຕົວແມ່ ຖືພາທ້ອງ ຄອງເດືອນຈະປະສູດ
ແມ່ສຸດ ລຳບາກຂ້ອນ ຮົມຮ້ອນຮໍ່ໃນ ນີ້ແລ້ວ

ແມ່ນວ່າ ໃຈຈະຂາດສິ້ນ ກໍ່ຍອມທອດທູນຖວາຍ (ແດ່ການປະຕິວັດ)
ເດັດຂາດ ແມ່ບໍ່ເຜີຍຄວາມໃນ ທໍ່ສະເຫນເອົາໄວ້
ສອງຕາ ໃສສີເຂັ້ມ ແມ່ເລງແລສັກໃສ່ ສັດຕູນັ້ນ
ປຸນດັ່ງ ໄຟລຸກໄໝ້ ເຜົາລ້າງລວກມານ

ແມ່ບໍ່ ໄດ້ຢ່ອນຢ້ານ ຂາມເຂດກົວເກງ ມັນນາ
ສຽງແມ່ ເຄັ່ງໆຫານ ດ່າມານປະຈານໜ້າ
ສູ້ຢ່າ ຫວັງຫວນໄດ້ ລະຫັດໃນອຳເງື່ອນ ກູທ້ອນ
ແມ່ນຊິ ຕັດເປັນທ່ອນ ເອົາໄຟຂາງດັ່ງເຜີ້ງ ກໍເລີງແລ້ວບໍ່ໄຂ ດອກນາ



ສັດຕູ ໄດ້ແຫກທ້ອງ    ເຈາະແມ່ທັງເປັນ    ອີຕົນເດ
ຈົນວ່າ ມານດາດັບ    ລ່ວງໄລລາລ້ຳ
ໃຕ້ຕ່ຳ ພູມພາຍພື້ນ    ພະສຸດທາຕຶງຄຽດ
ເລືອດແມ່ ໄຫຼຫຼັ່ງທົ້ງ    ແດງປ້ານທົ່ວດິນ    ນີ້ນາ

ວິນຍານ ແມ່ລວງດັ້ນ    ລາໂລກສົ່ງສານ
ເຫຼືອແຕ່ ຜົນງານງາມ    ທີ່ແມ່ວາງຫມາຍໄວ້
ເປັນແມ່ ກົງໃຈແກ້ວ    ສະຕີລາວລືເດັ່ນ
ຖືໄວ້ ເປັນແວ່ນອ້າງ    ຕາງໃຫ້ຮ່ຳຮຽນ    ເອົາເນີ

ໃຜກໍ ພຽນພ່ຳສ້າງ    ເອົາແບບຢ່າງມານດາ
ເລືອດສີ ແດງຍັງທາ    ທໍ່ດວງໃຈໄວ້
ເລືອດແມ່ ໄຫຼຊຶມເຂົ້າ    ຝັງໃນປອງປູກ
ຮອດເສັ້ນລູກເສັ້ນຫຼານ    ຂໍເອົາເລືອດແມ່ຍ້ອມ
    ບໍ່ຍອມກົ້ມເຂົ່າຄານ    ດອກນາ

ເລືອດແມ່ໄຫຼຫັ່ງປ້ານ    ປານເປົ່ງແປວສະໝຸດ
ອຸດທິດ ເປັນທວນໄຟ    ສ່ອງເຍືອງແຍງໄຕ້
ເທິງແຜ່ນ ໄຕຣຕອນນີ້    ເປັນສັກຂີປະດັບຊາດ
ຢາດເລືອດ ແດງເມັດເຂັ້ມ    ຍັງເຕັມເທົ້າທົ່ວອະສົງ    ແມ່ເອີຍ




# ນ້ຳຕາແມ່

**ໂດຍ: ພ.ພວງສະບາ**

ໃຜວ່າຍິງຢູ່ນິ້ງ ອີງແອບແຕ່ຊຸມຊາຍ ໜ່າຍເດ
ຊ່າງບໍ່ອາຍກະດຽມຄຶງ ຫມູ່ຍິງຊິຫຍັບເຍື້ຍ
ເຮີເຮີຍ! ຫົວຂວັນກ້ອງ ໂລກາໃຫ້ໂລກຫ່ານ (ແຕກ)
ງານໃດ ຍິງບໍ່ຂານ ຄູ່ຂ້າງ ຊາຍຊິໂອ້ອວດສະຫາວ ໄດ້ລື

ໂລກໂສພາກ້າວໜ້າ ໃຜຊິວ່າແຕ່ຊາຍເຮັດ ເດນໍ
ກິດຈະການແລງງາຍ ແຕ່ງຄົວທຸງຕົ້ນ
ກວມໄປເຖິງຖອງເທົ້າ ໜັກເບົາ ຫຼື ນ້ອຍໃຫຍ່
ງານໃດຍິງບໍ່ເຕື້ອງ ບໍ່ມີເຫຼືອງຫງ່ຽງຕຶງ ໄດ້ແລ້ວ

ຊື່ວ່າ ໂລກໜ່ວຍນີ້ ຖ້າມີແຕ່ຊຸມຊາຍ
ບໍ່ອາໄສຍິງໂຮມ ຮ່ວມຮຽງຄຽງຊວ້ານ
ທຸກຂະບວນສັນສ້າງ ຖ້າຍິງວາງປະປ່ອຍ ເມື່ອໃດ
ບອກວ່າ ເປັນລ່ອຍເປ້ຍ ເສຍສິ້ນກິ່ນຈະເລີນ ແທ້ແລ້ວ

ສຽງນີ້ ອວນແອ່ວເອີ້ນ ເຊີນເພື່ອນ ແພງສະຫາຍ ຍິງນໍ
ໃນທົ່ວຈັກກະວານຜືນ ແຜ່ນພູມພາຍພື້ນ
ຍົກຍື່ນສິດສຽງຂື້ນ ບີນຕົວໃຫ້ເຕີບໃຫຍ່ ຍິງເອີຍ
ກ້າວດຸ່ງໄປຂ້າງໜ້າ ຢ່າຄາຄ້າງເຄີກງານ ນັ້ນເນີ

ສະຕະວັດໃໝ່ນີ້ ພັນທະພາບ ຍິງຊາຍ
ຍັງບໍ່ໃສເຮືອງຮອງ ສ່ອງປະກາຍກວມກຸ້ມ
ຄຸນະທັມບໍ່ຫຽມເທົ້າ ເພາະຖືເບົາບາງໝິ່ນ
ກິ່ນອາຍຍິງຍັງຢຽບຫຍໍ້ ຫຍັບເຍື້ຍເອີ່ຍຫົວຢູ່ນາ




24 / VII

ຄວາມຫນັກໃຈອໍອັ່ງແໜ້ນ    ຢູ່ກາງແກ່ນກົງໃຈ    ຍິງນີ້
ຍັງເປັນໄຟສຸມຊວງ    ບໍ່ສວ່າງຫາຍເທີຍສິ້ນ
ເວົ້າແຕ່ພຽງລົມລີ້ນ    ວ່າ ຍໍຍິງໃຫ້ເປັນໃຫຍ່
ໃນຕົວຈິງສິດທິຍິງຫຼົ່ນຫຼົ້ມ    ຍັງຈົມຈ້ອຍຈ່ອຍ ໂຊ    ຢູ່ນາ

ໂສແຕ່ຫວັງວ່າຫຍຸ້ງ    ບໍ່ເຫັນຄ່າຄຸນຍິງ
ຈິ່ງເກີດມີຄວາມຂົມ    ຂື່ນລະທົມໂຮມທ້ອນ
ປະຊາກອນ ພາຍໃຕ້    ໂລກາອັນກວ້າງໃຫຍ່
ໃຜວ່າ ຊາຍຢູ່ເຝົ້າ    ເປັນເຈົ້າແຕ່ຝ່າຍດຽວ    ໄດ້ບໍ?

ວຽກໃດຍິງ ກໍ່ກ່ອມກ້ຽວ    ກຽວສອດປະສານດອມ
ຫອມ ຫຼື ເຫມັນ ເປັນ ຫຼື ຕາຍ    ບໍ່ເຄື່ອນຄາຍວາງເວັ້ນ
ເປັນແມ່ພິມພຽງພ້ອມ    ຖະໜອມນຳແລລ່ຳ    ເລີງແລ້ວ
ຄຳວ່າ ຍິງ ຍິ່ງແຍ້ມ    ແຊມຊ້ອນຕ່ອນພະຄຸນ    ໄດ້ແລ້ວ

ຍາມສົງຄາມຊ້ຽວຊຸ້ນ    ມ້າງມຸ່ນໃນສະໜາມ
ນາມຊື່ຊາຍ ເຊັ່ງຫານ    ຫວ່ານຊີວາ ອາສາຊວ້ານ
ຈົ່ມວ່າ ຜົວຂວັນຂ້າ    ມໍລະນາ ພັດພາກ
ຈາກເມຍ ເປັນແມ່ໝ້າຍ    ຫຼາຍຊັ້ນເວດທະນາ    ແທ້ບໍ



ພາລະ ໜັກໜ່ວງແໜ້ນ    ແສນສ່ວນເທຖົມ
ຂົມ ເຝື່ອນ ຂົວ ກົວ ກູຍ    ໝື່ນວັນ ກໍ່ຂັນຄ້ຳ
ນ້ຳຕາພັງ ທັງສະອື້ນ    ຄືນເວັນໄດ້ເຂັ້ນຈ່ອງ
ຄວາມທຸກກອງເກືອກກົ້ວ    ໂຮມຫຸ້ມຫໍ່ຄືງ    ແທ້ແລ້ວ

ນ້ຳຕາຍິງຢາດຍ້ອຍ    ເປັນຮອຍດ່າງໝອງໝົກ
ທຸກໜື່ນກົກກອງຖົມ    ບົ່ມໃນມະໂນນ້າວ
ທັງຍິງສາວ-ຍິງເຖົ້າ    ຜົມຂາວທັງແຂ້ວຫຼ່ອນ
ຖືກບັບທອນກັນແກ້ງ    ຫົວໃຈແຫ້ງຫ່ຽວໂຮຍ    ແທ້ແລ້ວ

ຊື່ວ່າ ສິບເຂດຮ້ອນ    ລົມລວກເຜົາຜານ
ຂໍຢ່າມາພານພົບ    ຕື່ມເຕີມເສີມຄັ້ນ
ສະຕະວັດທີ 21 ນີ້    ບັນດາຍິງນ້ອຍໃຫຍ່    ໂລກນີ້
ບົດບາດ-ສິດທິໃສຍ່າວແຍ້ມ    ແນມຢ່າເອື້ອມອີ່ມໝາງ    ແທ້ເນີ

ຍິງເອີຍ! ເຈົ້າຈົ່ງກາງປີກອ້າ    ຜ່າພະຍຸລົມແດງ    ໄປທ້ອນ
ເພື່ອແສງສີສັດຈະທຳ    ຈະເຫຼືອມງ່າປີກປ້ອງ
ສອງຝ່າຍ ຍິງຊາຍນັ້ນ    ສະເໝີກັນເອກະພາບ
ແບກຫາບສອງສ່ວນສົ້ນ    ຜົນໄດ້ຈະເຫຼືອມເຫຼືອ    ແທ້ໃດ

ສະຕະວັດໃໝ່ນີ້ ນ້ຳຕາຍິງຢ່າທັ້ງ    ສົ່ງອາບປະຖະພີ    ອີກເນີ
ສິດທິຍິງຈົ່ງຍືນຍົງ    ສົ່ງປະກາຍຂະຫຍາຍກວ້າງ
ຈົ່ງຢຸດເຊົາທຸກໆ ການຫຍັນຫຍໍ້    ຈົ່ງຍໍຜູ້ເປັນແມ່    ແດ່ແມ
ແກ້ເກືອຍຄວາມທຸກຮ້ອນ    ໃຫ້ເຂີນຂ້ອນທ່າງຫາຍ    ຊອບແລ້ວ



# ແດ່ແມ່

**ໂດຍ: ລ້ານຊ້າງ**

.................................................

ຄຸນຂອງແມ່ປຽບແຜ່ນຟ້າ ໜັກເກົ່ງທໍລະນີ
ອົບອຸ່ນດັ່ງແສງສຸລີ ສ່ອງມາຍາມເຊົ້າ
ງາມດັ່ງດວງຈັນແຈ້ງ ເດືອນເພັງສາດສ່ອງ
ຈະຫາຫຍັງທຽບເທົ້າ ໂລການີ້ແມ່ນບໍ່ມີ ໄດ້ແລ້ວ

ຄຸນຂອງແມ່ລູກຂໍຈຳຈື່ໄວ້ ໃນສ່ວນເລິກມະໂນຈິດ
ບໍ່ມີລິດແຮງໃດ ສັ່ນສະເທືອນໃຫ້ລືມໄດ້
ຍິ່ງຍາວນານເທົ່າໃດນັ້ນ ພະຄຸນໂນຍິ່ງເຕີບໃຫຍ່
ຊຶມສູ່ໃຈລູກເລື້ອຍ ບໍ່ມີມື້ເຫືອດຫາຍ ໄດ້ແລ້ວ

ລູກນີ້! ຮັກແມ່ແທ້ ຈະຕັ້ງຕໍ່ການຮຽນ
ຈະສ້າງຕົນເປັນຄົນດີ ເພື່ອຕອບບຸນທູນໄວ້
ຄວາມຮັກມາດານັ້ນ ພັນລະນານັບບໍ່ໄຄວ່ ເປັນແລ້ວ
ແມ່ຜູ້ແພງແມ່ຜູ້ຄ້ຳ ລູກຂໍຈຳຈື່ໄວ້
ຄຸນໂນແກ້ວຊົ່ວຊີວັງ ລູກແລ້ວ





# ເພື່ອພະຄຸນຂອງແມ່

## ໂດຍ: ທົ່ງສີຊຽວ

.............................................

ແມ່ມີຄຸນເລີດລ້ຳ　　ຂ້ອຍສຸດຮັກ ແລະແສນແພງ
ແມ່ປຽບດັ່ງດວງຕາ　　ຄູ່ຄຽງສອງເບື້ອງ
ຄຸນເພີ່ນຫຼາຍເຫຼືອລົ້ນ　　ອະນັນຕັງຕື້ຕື່ວ
ຄຸນແມ່ຫຼອມຫຼໍ່ລ້ຽງ　　ຕົວຂ້ອຍຈິ່ງໃຫຍ່ສູງ　　ນີ້ແລ້ວ

ຈົນວ່າຂ້ອຍໃຫຍ່ກ້າ　　ແມ່ສຸດທຸກ ແຕ່ພຽນອົດ
ແມ່ບໍ່ເຄີຍຕຽນຕິ　　ຈົ່ມຈາພໍນ້ອຍ
ທຸກສິ່ງຫາມາລ້ຽງ　　ບໍ່ມີຫຍັງ ຂົມຂວາຍຊອກ
ທັງບອກສອນລູກເຕົ້າ　　ໃຫ້ເຫັນແຈ້ງຮ່ອມດີ　　ແທ້ນາ

ເພື່ອແມ່ ລູກພ້ອມແລ້ວ　　ສະໜອງຕອບແທນຄຸນ
ຄ່ານ້ຳນົມ ແສນຫວານ　　ເລີດຄຸນສູງລ້ຳ
ຈະທຳຕາມຄຳເວົ້າ　　ພຽນແພງແມ່ສອນສັ່ງ
ພາຍຫຼັງລູກໃຫຍ່ແລ້ວ　　ພະອວນເຈົ້າ ຈະສະບາຍ　　ພໍ່ແມ່ ເອີຍ



# ຮັກແມ່ເກີດ

## ໂດຍ: ຄຳເຜີຍ ມະນີວັນ

..............................................

ອັນວ່າໃນພາກພື້ນ ມະນຸດໂລກໂລກາເຮົານີ້
ກໍຫາກມີມາດາ ປະສູດມາຈິງແທ້
ມັດສາເນົາໃນນ້ຳ ອາໄປເປັນທີ່ເພິ່ງ
ຄົນເຮົາມີຊາດຊັ້ນ ຕະກຸນເກື້ອແກ່ນກັນ ແທ້ແລ້ວ

ບໍ່ໄດ້ໄລເລີກຮ້າງ ປະຫ່າງໄກນະຄອນ ໄດ້ແລ້ວ
ໜີຈາກວຽງວັງໄປ ຮ່ວມອາໄສໄທບ້ານ
ລະອາຍພົງສາເຊື້ອ ໜີໄປຄາວກ່ອນ ນັ້ນແລ້ວ
ເຈົ້າຫາກຂໍຢູ່ຊັ້ນ ໄທທ້າວຕ່າງແດນ

ແມ່ເກີດເສຍເລືອດເນື້ອ ແສນຮັກບໍ່ລືມຫຼົງ
ມີທັງພາສາໝາຍ ບອກພົງສາເຊື້ອ
ເຮົາແມ່ນຄົນລາວແລ້ວ ລືຊາສົມຊ່າ
ບໍ່ເຄີຍສູນຊິບໃຫ້ ມານຮ້າຍງ່າຍດາຍ ດອກນາ

ເສຍດາຍຍາດພີ່ນ້ອງ ຫຼົງຊາດລາວເດີມ ນັ້ນນາ
ມີແຕ່ຟັງຄາລົມ ພວກມານມາລໍ້
ເພິ່ນບໍ່ພິຈາແຈ້ງ ຄຸະນຶງຕອງຖ້ວນຖີ່ ສັງນໍ?
ວ່າມີເງິນໃຫ້ໃຊ້ ກໍໂຕນເຕັ້ນໄຕ່ໄປ

ຄິດເບິ່ງແມ່ເກີດນັ້ນ ແສນຮັກແພງຖະໜອມ
ຄັນວ່າມີມານເຫັງ ຝ່າຍເຮົາຕີຕ້ານ
ໃຜມາທຳລາຍຂ້າ ມາດາຕົນແມ່
ລູກຊິຂັນອອກໜ້າ ປົກປ້ອງໃຫ້ຢູ່ເຢັນ ແທ້ແລ້ວ

ອັນວ່າແມງໝູ່ເຜີ້ງ ແນວຊາດສັດສາ
ຍັງຮູ້ມີຄວາມຮັກ ທໍຮັງພຽນຕຸ້ມ
ພ້ອມພ່ຳສາມັກຄີເຕົ້າ ໂຮມແຮງແປງກໍ່
ຈົນວ່າຮັງໃຫຍ່ກວ້າງ ອາໄສໄດ້ຊູຕົວ ແທ້ແລ້ວ



# ຝາກແດ່ອ້າຍທະຫານ

**ຄຳເຜີຍ ມະນີວັນ**

ພີ່ນ້ອງເນົາພາກພື້ນ    ຂົງເຂດແດນລາວ    ເຮົານີ້
ກໍຫາກຍັງສວມສາຍ    ຄາດຄຳຄຽນເນື້ອ
ຮຽມຂໍແຂວນໃຈເຈົ້າ    ໃບສານສະຫຼັກສອດ
ໄວ້ແກ່ໃຈໜຸ່ມນ້ອຍ    ໂຮມຕຸ້ມຕ່ອມກາຍ    ນີ້ນາ
ຄິດບໍ່ຄາວກ່ອນນັ້ນ    ເຄີຍຜູກໄມມິດ    ຊາຍເອີຍ
ອ້າຍວ່າເປັນກົງໃຈ    ຮັກກັນປານແກ້ວ
ບໍ່ໃຫ້ຫຼຸດລົງພື້ນ    ສະຫຼາຍເສຍແຕກມຸ່ນ
ເຮົາຫາກຈາອິນອ້ອຍ    ສາແລ້ວຈຶ່ງຈາກລາ    ນັ້ນນາ
ຍາມເມື່ອອ້າຍຂຶ້ນຄ້າຍ    ຈົດໝາຍສົ່ງຕາມຫຼັງ
ອ້າຍກໍສົ່ງສັນຍາ    ຜູກພັນພຽງນ້ອງ
ສອງເຮົາປອງແປງສ້າງ    ແປງທາງຮັກຮ່ວມ
ຍ້ອນວຽກງານໃຫຍ່ກວ້າງ    ດວງແກ້ວຈຶ່ງຫ່າງນາງ    ອ້າຍເອີຍ
ຄິດເມື່ອອ້າຍຈາກນ້ອງ    ຊາຍພາກພອຍໜີ
ເພື່ອໄປເປັນສາຍໜາມ    ລວດຄຽນເສົາຮົ້ວ
ຮັກສາແດນດິນດ້າວ    ເຄືອລາວຄະນາຍາດ
ເພື່ອວາດວົງພີ່ນ້ອງ    ອາໄສອ້າຍຝ່າຍທະຫານ    ນີ້ແລ້ວ
ອ້າຍເອີຍ ເຖິງວ່າອ້າຍ    ຈອນຈາກມາດາ    ໄກນັ້ນ
ລຽບລຳວົງຊາຍແດນ    ຢູ່ພົງໄພກວ້າງ
ນ້ອງຍັງຈຳຄຳໝັ້ນ    ສັນຍາກັນແຕ່ຄັ້ງກ່ອນ
ບອກວ່າ ຊາຍຢູ່ພີ້    ນ້ອງຢູ່ພຸ້ນ ປຸນສ້າງຮັກເຮົາ ອ້າຍເອີຍ
ອັນວ່າ ຄຳປາກຕ້ານ    ຖະແຫຼງວາດພາທີ
ສັນຍາເປັນແຮງໃຈ    ຮ່ວມກັນກົມກຽວ
ເຮົາຫາກຝັງໃຈແໜ້ນ    ນຳກັນທັງຄູ່
ຕີສັດຕູພ່າຍແພ້    ສາແລ້ວຈຶ່ງແຕ່ງງານ    ອ້າຍເອີຍ
ທ້າຍນີ້ ຂໍຝາກອ້າຍ    ຢ້ຳຕື່ມຄຳສັນຍາ
ອ້າຍຢ່າເວວາຫຼົງ    ລ່າຍລືມນົງນ້ອງ
ແຮງໃຈແຖມພອນໃຫ້    ຊາຍທະຫານຜູ້ກ້າເກັ່ງ
ສຸຂີມີມາກລົ້ນ    ຜົນງານອ້າຍຈຶ່ງມາກມີ    ເນີອ້າຍເອີຍ



# ແດ່ອ້າຍນັກຮົບຊາຍແດນ

ໂດຍ: ສົມສຸກ ສຸກສະຫວັດ

.................................................

ຈິດໃຈຕັ້ງທ່ຽງໝັ້ນ ດອມພີ່ຊາຍທະຫານ
ທີ່ປ້ອງກັນຊາຍແດນ ຖິ່ນລາວເໜືອໃຕ້
ນາມຊາດຊາຍຄົນກ້າ ລືຊາເຊັ່ງຊ່າ
ຮັກສາປ້ອມດ່ານໜ້າ ຢືນໝັ້ນແກ່ນທົນ
ລືມຝົນ ອ້າຍບໍ່ຢ້ານ ຕັ້ງຕໍ່ກຽມສະຕິ
ຕາລ່ຳແລສັດຕູ ຜູ້ຮຸກຮານແດນບ້ານ
ສອງມືກຳປືນໝັ້ນ ເກາະໄກກຽມລັ່ນ
ໃຜຫາກມາລ່ວງລ້ຳ ບໍ່ເຫັນໜ້າອີແມ່ມັນ ອີຫຼີໄດ!
ນ້ອງຢູ່ຫຼັງບໍ່ເດືອດຮ້ອນ ຍ້ອນມີພີ່ເປັນທະຫານໆ
ກົດກັນຕັນທາງມານ ດັ່ງກຳແພງແຂງເຂັ້ມ
ຊຸມນ້ອງໂຮມແຮງສ້າງ ການງານປະກອບສ່ວນ
ຫຼາຍຂະບວນພົດຟື້ນ ຜົນໄດ້ກ່າຍກອງ
ອ້າຍເອີຍນ້ອງຢູ່ພີ້ ໃຈພັດຢູ່ດອມຊາຍ ຫັ້ນແລ້ວ
ໃຈນາງຍັງເໝືອນເດີມ ບໍ່ປ່ຽນແປງຫັນຮ້າງ
ນ້ອງຍັງກຽມຂອງຕ້ອນ ຊຽນຈິດໝາຍເພື່ອນຳສົ່ງ
ຈຸດປະສົງໃຫ້ຮູ້ ວ່ານາງນ້ອງຫ່ວງຊາຍ ແທ້ແລ້ວ
ຈິດໃຈ ຈົດຈໍ່ເຝົ້າ ຟັງຂ່າວຈາກສະຖານີ
ວ່າອ້າຍມີໄຊຊະນະ ນ້ອງຊື່ນຊົມອົມຍິ້ມ
ຄິດຢາກມາລຳຮ້ອງ ສະຫຼອງໄຊດອມພີ່
ໂອກາດມີເທື່ອໜ້າ ຊິມາໂຮ້ງບ່າວພີ່ຊາຍ ດອກນາ
ຍາມເມື່ອອ້າຍເຮັດຫຼ້ອນ ໜ້າທີ່ມີຜົນງານ
ນ້ອງຊິແປງທາງໃຈ ຮ່ວມຊາຍໝາຍໝັ້ນ
ຜົນງານພຽງພໍແລ້ວ ສະເໜີກົມກອງອະນຸຍາດ
ບາດນັ້ນອ້າຍແລະນ້ອງ ສອງເຮົາ ນ້ອງແລະອ້າຍ
ໝາຍໝັ້ນຮ່ວມຮຽງ ອ້າຍເອີຍ



# ທວນໄຟຂອງກາກມາກ

ໂດຍ: ສຸວັນທອນ ບຸບຜານຸວົງ

ຖ້າຫາກຮຽມເຮັດໄດ້ ຢາກຖອນປ່າມາເປັນຝອຍຂຽນ
ເອົາທະເລມາເປັນນ້ຳມຶກ ເອົາຟ້າມາເປັນກະດານກວ້າງ
ເພື່ອຂຽນຄຳຂວັນໄວ້ ໃຫ້ໂລກາຫຼົງລຳ
ວ່າກາກ-ມາກ ຜູ້ເລີດລ້ຳ ຊື່ສຽງໝັ້ນໝື່ນວັດສາ ພຸ້ນແລ້ວ

ທິດສະດີມາກ ຄືໜ່ອຍແກ້ວ ເຮືອງຮຸ່ງເປັນປະກາຍ
ທິດສະດີມາກ ຄືສາຍທາງ ສູ່ຄວາມຈະເລີນກ້າວ
ທິດສະດີມາກ ຄືສາງເຂົ້າ ໄພຊະນັງອັນຍິ່ງໃຫຍ່
ທິດສະດີມາກ ຄືຕາເວັນໃສຮຸ່ງແຈ້ງ ໃສເຫຼື້ອມຕະຫຼອດການ

# ສານຂອງກາກມາກເຖິງແຊນນີ



ເຊືອກແຫ່ງແນນນຳຍູ້ ບໍ່ມີຮູບຮອຍຫຍັງ
ຜູກໃຫ້ເຮົາຮຽງສອງ ໝັ້ນຍືນບໍ່ມີມ້າງ
ປີກທີ່ນາງນົງນ້ອງ ແຖມຊາຍທັງຄູ່
ຊ່ວຍໃຫ້ແນວຄິດອ້າຍ ບິນຜ້າຍເຜັ່ນໄກ

ອັນໃດແນວຄິດອ້າຍ ຊອກຢາກຍາວນານ
ແຕ່ບໍ່ທັນທວນເຫັນ ໝາກຜົນພຽນຄົ້ນ
ຕ່າງກໍ່ທວນເຫັນພໍ້ ເຈືອຈານເອມອ່ອນ
ໃນຮອຍຍິ້ມນາດນ້ອງ ທີ່ຫົວແຍ້ມຕໍ່ຮຽມ



# ນົກກາງແກສີຟ້າ
## (ສາວໂອແຕັດສ໌)

ໂດຍ: ດາວວຽງ ບຸດນາໂຄ

ສິ້ນສີຟ້າ ເສື້ອສີຟ້າ ຢູ່ໃນທ່າຜູ້ມີຫວັງ ງາມເດ
ບົດບາດນົງນາງເດີນ ອໍ່ລະຊອນສະອອນແທ້
ຄືດັ່ງປັກສີນ້ອຍ ກາງແກຟ້າອ່ອນ
ພີປີກບິນ ເວີ່ນຍ້າຍ ບິນຟ້າສະຫງ່າງາມ

ສາຍຕາ ບາດນ້ອງຍິ້ມ ແກ້ມບ່ອງມີສະເໜ
ດຶງດູດ ຕໍາໃຈຊາຍ ສ່ອງແນມບໍ່ມີເວັ້ນ
ຖ້າບໍ່ຕິຍັງອ້າຍ ຄືນພອຍພາກຖິ່ນ
ຊາຍຈະຈົດຊື່ນ້ອງ ສະກົດໄວ້ຢູ່ຫວ່າງໃຈ ນີ້ແລ້ວ

ສຽງຈາ ເມື່ອນ້ອງຕ້ານ ຍິ້ມມ່ອນນອນພໍດີງາມ
ຈົນຜູ້ຄົນພານພົບ ຫ່ວງນາງຄອຍນ້ອງ
ຄິດຮອດຄໍາຄວາມນັ້ນ ຄະຕິຄໍານ້ອງກ່າວ
ປຸກຕື່ມເຕືອນບອກຊີ້ ຟັງແລ້ວຮໍາຄະນຶງ ນ້ອງເອີຍ

ເຈົ້າຈົ່ງພີປີກກວ້າງ ບິນເວີ່ນຢ່າມີຖອຍ ກາງແກເອີຍ
ຟ້າໃໝ່ອາລຸນໃສ ພຸ່ງນະພາແສງພົ້ນ
ອັນວ່າອິນຊີຮ້າຍ ກາດໍາຕົວກໍ່າ
ປົບໜີຕີພ່າຍແລ້ວ ຈົ່ງບິນເວີ້ງເວີ່ນໄປ

ບິນແຕ່ເໜືອຮອດໃຕ້ ເຈີດເວີ່ນເວຫາ ກາງແກເອີຍ
ພາກາງພາກຕາເວັນຕົກ ບ່ອນໃດປະຊາເອີ້ນ
ດຸດັ່ນເດີນພະລັນຟ້າວ ໄປເຖິງໝົດທຸກບ່ອນ
ສິບໂຍດຊາວຢ່ານກວ້າງ ກາງແກກ້າວດຸ່ງໄປ ແດ່ທ້ອນ.





# ດອກຈຳປາ

**ໂດຍ: ທະນົງສັກ ວົງສັກດາ**

ຈຳປາແກ້ວ ຊົມຊື່ນເຫຼືອຫຼາຍ
ງາມແສນງາມ ເບີກເບີຍບານແຍ້ມ
ຫອມຫວນເອົ້າ ດອມດັ່ງກຸ້ມກ່ອມ
ຫາຍາກເຊື້ອ ແນວນີ້ກິ່ນດີ

ລາວທຸກຊັ້ນ ທຸກເຜົ່າແພງແນວ
ຈິງໃຈຫຼີງ ລ່ຳແລດູຄ້ຳ
ລົງຫົດນ້ຳ ນຳຄອງປອງກິ່ນ
ຮັກ ແລະຫອມຕົ້ນເຈົ້າ ຄືເຄົ້າໜໍ່ຄີງ

ປຸນປຸງບເຈົ້າ ດູດດັ່ງໃຈຄືນ
ຊົນຊາວລາວ ຮັກແພງນາມເຈົ້າ
ຄືໃຈແທ້ ຈິດວິນຍານຮັກຊາດ
ຍາດພີ່ນ້ອງ ລາວຂ້ອຍຮັກຫຼາຍ

ຮັກຮູບເຈົ້າ ຈິດຈໍ່ສວຍສົດ
ນຳລາສີ ກິ່ນຫອມຂອງເຈົ້າ
ຂົນຂວາຍເຊື້ອ ເຄືອຄຳຄະນາຍາດ
ຮັກກິ່ນເຈົ້າ ຄືຄຳເວົ້າພັກສອນ

ຂໍແຕ່ເຈົ້າ ຊົມຊື່ນບານເທີງ
ຊູເກສອນ ຄູ່ດີນແດນດ້າວ
ໃຜເຫັນເຈົ້າ ເຊີຍຊົມຮັກທໍ່
ໜີຈາກເຈົ້າ ຄະນິງຄ້ອຍຫຼັ່ງນ້ຳຕາ ແທ້ນາ



# ດອກຂະຍອມເດືອນສາມ

**ໂດຍ: ສາຍັນ ດົງແດງ**

..................................................

ເຈົ້າຜູ້ສົມສະເຫຼົາສ້ຽວ ສ້ຽວສະອາດແນວນາງ
ຄືຄູ່ຈັນວັນເພັງ ກິ່ງຂະຍອມຍາມແລ້ງ
ຫາກແມ່ນມາລາເຊື້ອ ແດນລາວບາດກ້າວໃໝ່
ເຈົ້າຫາກໃສສິ່ງເຫຼື້ອມ ບໍ່ຄືດ້າມດັ່ງຫຼັງ ແທ້ແລ້ວ

ອັນວ່າຄັ້ງກ່ອນກີ້ ຂະຍອມຮ່ວງຮົມເທີຍ
ໄດ້ແຕ່ເບີຍລົມລວງ ຫຼົ່ນເສຍສີເສົ້າ
ເພາະວ່າຄວັນຄາວເອົ້າ ເອົານວນນຳມອດ
ສັງຄົມປະປ່ອຍນ້ອງ ຫາກເນົ່າແລ້ງຫຼົ່ນດາຍ ນັ້ນແລ້ວ

ບັດນີ້ທັນຫຼຽມໄດ້ ໂດຍເພິ່ງແພງຄະນິງ ແລ້ວເດ
ບຸນຄຸນພັກປະຊາຊົນລາວ ເຫຼື່ອມງຳນຳອູ້ມ
ສິດເສລີເສີມເຂົ້າ ຂະຍອມຫອມຫວນກິ່ນ
ໄວ້ແກ່ກອງກ່ອງເອ້ ງາມລະຫ້ອຍອຸ່ນນະຄອນ ນີ້ແລ້ວ

ປຽບດັ່ງນ້ອຍນາດເນື້ອ ສົມຊື່ຊວນສະຫງ່ຽມ
ຍິງສາວລາວມາລາ ແຫ່ງພັກນຳພາຊີ້
ສີບຸນຊູນວນນ້ອງ ກອງແພງຍຸກໃໝ່
ສິດທິຫຽມຫຽບອ້າຍ ຊາຍກ້າເກົ່ງກັນ ນ້ອງເອີຍ

# ເພື່ອນ້ອງ

**ໂດຍ: ສາຍັນ ດົງແດງ**

...........................................................

ບຸນຕາມາພົບພໍ້ ປະດັບນິ່ງຮຽງຂວັນ
ບຸບຜາເຄີຍຄອຍຄຽງ ມຸ່ງໝາຍປະສານສູ້
ນິ່ງຂວັນໃຜກັນແທ້ ບາລະມີ ຄາດຸຊີຮ່ວມ ໃຜນໍ?
ຄວາມຫວັງຮຽມມາຂໍແນມແນບໃກ້ ພະໄມຂ້າງກໍຍິ່ງໄຄ

ຄືຄູ່ດວງດອກກ້ານ ຄັນທະຊາດຫອມໄກ
ເໝືອນດັ່ງກິ່ງຄະຍອມເດືອນສາມ ແບ່ງບາງບົງບ້າງ
ຄັນເມື່ອສຸລະພາພົ້ນ ເມສາເສີມກິ່ງ ວັນນັ້ນ
ໂສມງາມເງົາແຍກແຍ້ມ ຍາມຍິ້ມຜ່ອງຕະການ

ຂໍຄູ່ຂັ້ນຄ່ອງກ້ຽວ ຄອງຄາດຄູນປະດັບ
ເຊີດສົ່ງປົງເປັນມິດ ມາດມານອນກ້ຽວ
ເຈົ້າຜູ້ບຸດສະບາຍ້ອຍ ຢາກຄອຍຕາມຂໍຮ່ວມ ທາງເດ
ສະຖາພອນ ພັນຝາກໝັ້ນ ບໍໄລຮ້າງຫ່າງສະໝອນ

ເມສາເປັນເຂດຂັ້ນ ສົມພານຄູ່ຄຽງນາງ
ທີແປດ/ສາມສາກົນໝາຍ ມ່າຍຄອງຜົນງານນ້ອງ
ຂໍໃຫ້ສົມປອງປັ້ນ ປັນພຽງສະເໝີພາກ
ມີສິດເສີມສົ່ງເຂົ້າ ສະເໝີດ້ານດັ່ງຊາຍ ຊອບແລ້ວ

ຮຽມຂໍຍໍຍົກນ້ອງ ນາງໜໍ່ໃນມະໂນ
ໂສພາເພັງພຽງຈັນ ພຸ່ງປະກາຍສະກາວແຈ້ງ
ຕາພິແຍງຍັງເຈົ້າ ໃນພະໄທ ພັດຄິດຮໍ່າ
ອ້າຍຢາກຄຽງຄູ່ນ້ອງ ອ້າຍຢາກຮຽງຮ່ວມນ້ອງ
ສົມສ້າງຊາດລາວ ນັ້ນນາ

ເຊີນເນີ ເຊີນນາດນ້ອງ ພຽນຕື່ມການຮຽນ
ເພີ່ມທະວີການສຶກສາ ຄ່ອຍທອມຖະໜອມສ້າງ
ຕັ້ງຕໍ່ການຮຽນຮູ້ ເອົາວິຊາເຊີ່ງຊອບ
ບາດນັ້ນນ້ອງແລະອ້າຍ ອ້າຍແລະນ້ອງ
ປະຄອງເຂົ້າຮ່ວມກັນ ນ້ອງເອີຍ



# ແມ່

## ໂດຍ: ກ. ແກ້ວບຸນມາ

..............................................

ແມ່...ປະໂຫຍກສັ້ນໆ ສຳຄັນຍິ່ງເຫຼືອຫຼາຍ
ຄວາມໝາຍເກີນຄະນານັບ ໝື່ນອະສົງໄຂຂໍ້
ສູງກວ່າເຂົາຂວາງກັ້ນ ຜາຫີນຮ້ອຍໂຍດ
ໜັກກວ່າຫີນແຜ່ນລ້ານ ທະເລກວ້າງບໍ່ທຽບທັນ ໃຈແມ່ແລ້ວ

ເວົ້າບ່ອນເຫັນແຈ່ມແຈ້ງ ຖະແຫຼງກ່າວຄວາມຈິງ
ຫຼິງທີ່ເຮົາດຽງສາ ອ່ອນເຍົາບໍ່ທັນຮູ້
ມີແມ່ຊູໂຊມລ້ຽງ ຖະໜອມແພງຕຸ້ມຕ່ອມ
ແມ່ອົດອອຍແອບເວົ້າ ບໍ່ເຄີຍຕ້ອງຕ່ອຍຕີ ແທ້ແລ້ວ

ບາງເທື່ອລູກແອ່ວໄຫ້ ໄຂ້ບົ່ມໃນຊວງ
ແມ່ແຮ່ງຫວງເຮຮີນ ຊອກຢາຢຳແກ້
ເຫັນລູກອໍແອຍິ້ມ ພິມແພງຊ້ອຍຊື່ນ
ແມ່ຍິ່ງຫອມຮັດແໜ້ນ ແພງນ້ອຍແນບຊວງ ແທ້ນາ

ແມ່ຍັງຊູຊ່ວຍຊວ້ານ ເສີມສົ່ງການຮຽນ
ມີວິຊາເຊັ່ງສູງ ອາຊີບຄອງຄົງໝັ້ນ
ນັ້ນແຫຼະຄຸນໂນລົ້ນ ບິດາມາດາຜູ້ເສີມສົ່ງ
ຄຸນນີ້ຈຳຈື່ໄວ້ ຜອງເທົ່າຊົ່ວຊີວັງ ພຸ້ນແລ້ວ

ວັນແມ່ໄດ້ຕ່າວໂຄ້ງ ເຕືອນບອກຫົວໃຈ
ລູກຂໍສົ່ງພອນໄຊ ເຖິງແມ່ມາດາເຄົ້າ
ຂໍໃຫ້ສຸກສະຖຽນໝັ້ນ ນິລັນດອນດອມຊາດ
ປະກອບງານທຸກດ້ານ ທະວີກ້າວວັດທະນາ ນັ້ນທ້ອນ.



# ຍິງລາວສາວສືບ

ໂດຍ: ບຸນມາກ ສີທອງດຳ

........................

ແມ່ຍິງລາວເດັ່ນກ້າວ ເລື່ອງການຖອດທໍໄໝ
ໃຜກໍຖືສຳຄັນ ປູກມອນທອມມ້ອນ
ແສນສະອອນລຳແຂນເປື້ອງ ສາວໄໝນອຍນ່າວ
ດັ່ງປີກທົ່ງຫນ່ວງນ້າວບິນຜ້າຍຜ່ານບິນ

ງາມຍິງມັດໝີ່ຍ້ອມ ຫຼາຍຮູບລົງສີ
ຕາມຈິດໃຈປະສົງ ຕຳລາຍລົງເອ້
ດອກສະເລເຕເປັນພົ້ວ ບົວທອງບານກາບ
ກຸຫຼາບໄຂກີບອ້າ ທະຫວາດວງດອກຊ້ອນ
ແສນຊັ້ນສອດກັນ

ລາຍໝູ່ດອກຄັດເຄົ້າ ດອກຈັບສອດສັບສີ
ທັງຈຳປີຈຳປາ ໝູ່ກາລະທຶງນ້ອຍ
ສ້ອຍສັງວານວຽນເອ້ ສະເໜຈັບພົ້ວໃຫຍ່
ງາມດັ່ງພວງມາໄລຂອງກາດຳຮວດຮ້ອຍ ເມືອຕ້ອນໝ່ອມລຸນ
ງາມເມື່ອເປັນເຄື່ອງເອ້ ຂອງໝູ່ມວນຍິງ
ເຄືອບເຄື່ອງບົ່ງສວມໂສມ ບ່ຽງສະໄບໄໝລ້ອນ
ນວນລະໄມໄໝເຫຼື້ອມ ຍາມຍິງຍົວລະຍາດ
ໄໝສາດສີສ່ອງຕ້ອງ ຮອງເຫຼື້ອມດັ່ງມະນີ ງາມເດ
ງາມເມື່ອລົງຂ່ວງບ້ານ ອື້ວປັ່ນທໍເຂັນ
ເຫັນໜຸ່ມສາວບ່າວແຊວ ນັ່ງງັນຈາຕ້ານ
ເຕັມແຕ່ຄວາມຫວານຊຶ້ງ ຄະນຶງໃຈຢາກຢູ່ຮ່ວມ
ບາງຄູ່ສອນສອດໝັ້ນ ລໍໄວ້ແຕ່ງງານ
ຂໍໃຫ້ຄວາມຮຸ່ງເຫຼື້ອມ ດູໝັ່ນຂະຫຍັນພຽນ
ຫັດຖະກຳຍິງລາວ ສົ່ງເສີມຮັກສາໄວ້
ເພາະວ່າເປັນມູນເຊື້ອ ສີມືທີ່ຍອດຍິ່ງ
ເພື່ອໃຫ້ຄົນໜຸ່ມນ້ອຍ ຮັກສາຮອຍແມ່ໄວ້
ແທນເຊື້ອສືບແນວ ໄວ້ເນີ.

# ພອນຈາກສະຕີລາວ

ໂດຍ: ບຸນມາກ ສີທອງດຳ

..................................

ພັກຜູ້ສ້າງ ຫຼອມຫຼໍ່ຊາວລາວ
ຄຸນເພິ່ນສູງ ກວ່າສວາງແສນຊັ້ນ
ນຳຊາວເຊື້ອ ລາວເດີນກ້າວຜ່ານ
ພົ້ນເຖື່ອນຂັ້ນ ມານຮ້າຍກີດກັນ
ນັບບໍ່ຖ້ວນ ມວນໝູ່ໄພລີ
ອັກຄີໄພ ໝູ່ອາໂຍຍູ້
ນະທີຂັ້ນ ໄຂຂັນຟອງຟາດ
ພັກອອກໜ້າ ພາຕ້ານຕ່ອຍຕີ
ພັກພາສູ້ ຍາດແຍ່ງຊີງໄຊ
ປັດເມໂຄ ໝອກມົວມາຍຮ້າງ

ດິນລາວແຈ້ງ ແສງໃສງາມຜ່ອງ
ຝູງພີ່ນ້ອງ ສຸກລ້າງຊື່ນໃຈ
ຄຸນພັກນີ້ ຍັງບໍ່ລືມຫຼີງ
ພັກດຶງເອົາ ຈາກຄວາມໝອງກຸ້ມ
ມາຫຼອມລ້ຽງ ຂັດສີສອນສັ່ງ
ຍິງໃໝ່ຂ້ອຍ ງາມລ້ອນຊູ່ແນວ
ວັນພັກນີ້ ຍິງອວຍພອນໄຊ
ມາໄລທອມ ຈາກໃຈນາງຕ້ອນ
ສຸກເສີມສ້າງ ພາລາວກ້າວເດັ່ນ
ຍືນຍິ່ງໝັ້ນ ທຽມເທົ້າຄູ່ພະຈັນ
ນັ້ນທ້ອນ



# ສຽງເອີ້ນຈາກແມ່

## ໂດຍ: ບຸດຕີ ສີວົງສາ

.............................................

ສຽງນີ້ ຮ້ອງຮຽກເອີ້ນ ຈາກແມ່ມານດາ
ແຕ້ມແຕ່ງເປັນກະວີຊຽນ ຂີດລົງເປັນເນື້ອ
ສົ່ງຂ່າວຄາວມາໃຫ້ ບຸດຕີທີ່ໄກຫ່າງ
ກາຍເປັນລູກກຳພ້າ ໜີບ້ານແມ່ຄືງ ນີ້ແລ້ວ

ຄິດຄືນ ຄາວເມື່ອຄັ້ງ ດອມຮ່ວມສາຍໃຈ ແມ່ນີ້
ທຸກຍາກທົນທານອົດ ແນມພຽນຖະໜອມລ້ຽງ
ຢ້ານລູກເຂີນຂັດຂ້ອງ ແລງງາຍເຊົ້າຄ່ຳ
ຢາກໄດ້ຫຍັງ ແມ່ຄົ້ນຄວ້າຊອກໄດ້ ສົມແມ້ງມ່ວນໃຈ ແລ້ວເດ

ແມ່ຢາກກ່າວເຖິງບ່ອນບັ້ນ ສັງຄົມຢູ່ເປັນສຸກ
ບໍ່ແມ່ນອິນພົມເຮັດ ແຕ່ງມາໃຫ້ເຮົາພ້ອມ
ຕັ້ງແມ່ນແຮງງານລ້ວນ ຂອງເຮົາປະກອບສ່ວນ
ຮ່ວມແຮງກັນຊ່ວຍສ້າງ ເມືອງບ້ານຈຶ່ງຈະເລີນ ນີ້ແລ້ວ

ລູກພັດກັບຕ່າວປີ້ນ ຜັນປ່ຽນເປັນໄປ
ຊ່າງວ່າໄລລືມປະ ແມ່ ເຄີຍຖະໜອມລ້ຽງ
ແມ່ນີ້ໂສກາເສົ້າ ເຫງົາໃຈຮັກຫ່ວງ ລູກເດ
ລູກສັງມາເປັນປ່ວງບ້າ ບໍ່ຫຼຽວໜ້າແມ່ຄືງ ນີ້ນໍ?

ແມ່ນີ້ໄດ້ຊອກຄວ້າ ຕິດຕາມສືບຫາວຫາ
ນຳຍາດຕິກາພົງພັນ ທົ່ວດິນແດນກວ້າງ
ບໍ່ມີຫຍັງມາໃຫ້ ຈິດໃຈແມ່ອົບອຸ່ນ ໄດ້ແລ້ວ
ຂ່າວຄາວມິດຊ້ອຍມ້ອຍ ບໍ່ເຫັນຈ້ອຍຫ່ຽງຈິງ

ຫຼາຍໆວັນໄດ້ຜ່ານພົ້ນ ແມ່ຮູ້ຂ່າວທາງໄກ
ວ່າພວກໂຕນໜີໄປ ໄດ້ຕ່າວຄືນມາບ້ານ
ຍ້ອນຄວາມທາລຸນຮ້າຍ ຈຶ່ງໜີຕາຍມາບ້ານເກົ່າ
ພາກັນກັບສູ່ຫ້ອງ ເມືອງບ້ານແຫ່ງເຮົາ ພີ້ແລ້ວ





ຕັດສິນໃຈຖືກຕ້ອງ  ແມ່ຈຶ່ງໄຕ່ຕາມໄປ
ຖາມເຖິງຄວາມທຸກສຸກ  ພີ່ນ້ອງລາວທີ່ຄືນບ້ານ
ທັງຂ່າວຄາວເຖິງເຈົ້າ  ບຸດຕາທີ່ແມ່ຫ່ວງ
ເຂົາບອກວ່າ ລູກນັ້ນຍັງຢູ່ຄ້າງ  ກົງເອົ້າຢູ່ສູນ  ນັ້ນແລ້ວ

ເມື່ອຮູ້ຂ່າວແຈ່ມແຈ້ງ  ແມ່ຍິ່ງເພີ່ມຄວາມຄິດ
ໂສກກະສັນແສນທຸກ  ຮໍາຄະນຶງເຖິງເຈົ້າ
ເປັນຫຍັງລູກບໍ່ໂງຄືນບ້ານ  ເມືອງເຮົາພ້ອມພໍາພວກມານັ້ນ
ລູກຄືງຖືກບີບບີ້  ທັງຕີຂ້າດັ່ງວ່າມາ  ນັ້ນບໍ່?

ແມ່ລ້ຽງລູກແຕ່ອ່ອນນ້ອຍ  ຈົນລູກໃຫຍ່ຮູ້ດຽງສາ
ບໍ່ໄດ້ເອົາຝາມືຕົບ  ຕ່ອຍຕີພໍນ້ອຍ
ອັນໃດຜິດ ກໍ່ຈົ່ງໃຈຕ້ານ  ວາຈາສອນສັ່ງ
ຫວັງໃຫ້ລູກເປັນຜູ້ຮູ້  ແລະເຫັນແຈ້ງບ່ອນເດີນ  ນັ້ນນາ

ຍ້ອນວ່າ ຕົກຖືກບ້ວງ  ສົງຄາມຫຼອກລວງຕົວ (ຈິດຕະສາດ)
ລູກຈຶ່ງງົມງວາຍຫຼົງ  ບໍ່ຮໍາເພິງຄວນຄົ້ນ
ຈຶ່ງຫອບຕົນໄປພຸ້ນ  ແດນໄກພາກຖິ່ນ
ຖືກເບື່ອເມົາຢ່າງປິ່ນປີ້  ຈຶ່ງລືມໜ້າແມ່ຕົນ ແທ້ແລ້ວ

ຖ້າວ່າ ລູກໄດ້ຍິນແມ່ເອີ້ນ  ໃຫ້ລູກຕ່າວຄືນກັບ
ຄືນມາດິນແດນລາວ  ທີ່ແມ່ຄອງຄອຍເຈົ້າ
ພັກ-ລັດ ຄອຍອະໄພໃຫ້  ຜູ້ໜີໄປຍ້ອນຫຼົງເຊື່ອ
ຮັບປະກັນຮອບດ້ານ  ພາຍຫຼັງເຈົ້າຕ່າວມາ  ລູກເອີຍ



# ແຂ່ງຂັນສ້າງຜົນງານ

**ໂດຍ: ດອກສະເລເຕ ແດນໜາວ**

................................................

ສົມດັ່ງເຂົາຊ່າຍ້ອງ ວ່ານ້ອງນາດງາມສວຍ
ງາມທັງຈິດໃຈນາງ ທຸກອັນຂະຫຍັນພ້ອມ
ອອກແຮງງານຫັນຫ້າວ ຊຽນບົດປະພັນກໍດີເດັ່ນ
ຊຽນບົດກະວີກໍ່ໄດ້ ຈິດໃຈນັ້ນກໍຜ່ອງຂາວ ແທ້ແລ້ວ

ໃຈອ້າຍຄິດຄ່ຳຄ້ອຍ ຮັກຫ່ວງຄະນຶງຫາ
ຄິດເຫັນຍາມພຽນຂະຫຍັນ ຍອດຍິງນວນນ້ອງ
ຄິດເຫັນນາງຫົວແຍ້ມ ສອງພວງແກ້ມບານເບັ່ງ
ຍາມເມື່ອໄຂກ່າວຕ້ານ ຫົວຍິ້ມອີ່ມກະໃຈ ອ້າຍເດ

ເຮົາພົບກັນວັນນັ້ນ ກໍໝາຍຂອດສັນຍາຮັກ
ນ້ອງໄດ້ຈາຈົດໝາຍ ເມື່ອສອງປະສົງຕ້ານ
ນ້ອງກ່າວວາຈາເວົ້າ ພະໄມຕີຈະຂັນແຂ່ງ
ພ້ອມພ່ຳຄຳຂອດໝັ້ນ ສອງມືປັ້ນສັ່ນກັນ ນັ້ນນາ

ບັດນີ້ອ້າຍໄດ້ເຫີນຫ່າງນ້ອງ ໄປຢູ່ຖິ່ນຊາຍແດນ
ອ້າຍໄດ້ໄປກຳປືນ ຢູ່ຍາມຮັກສາແຄວ້ນ
ເພື່ອຮັກສາເອົາໄວ້ ປິຕຸພູມບ້ານແມ່ ເຮົານີ້
ເພື່ອໃຫ້ພົງເຜົ່າເຊື້ອ ລາວນີ້ຢູ່ກະເສີມ ນ້ອງເອີຍ

ເມື່ອໃດອ້າຍຈົບສິ້ນແລ້ວ ຮັກສາດ່ານແດນດິນ
ອ້າຍຈະຄືນມາຫາ ຮ່ວມງານນຳນ້ອງ
ມາຮ່ວມຮຽງປະສານສູ້ ນຳນາງເພື່ອສ້າງກໍ່
ຜົນງານພໍພ່ຳພ້ອມ ຈຶ່ງໝາຍໝັ້ນສູ່ວິວາ ນ້ອງເອີຍ



# ນັກຮົບເພດຍິງ

ໂດຍ: ສ. ບຸນລ້ຳ

ສະຕີລາວເກັ່ງກ້າ ສົມໜຸ່ມນາມທະຫານ
ກອງກຳລັງໄຟແຂງ ແກ່ນແຮງແດງເຂັ້ມ
ຢືນເດັ່ນຮຽງຄຽງຂ້າງ ຊາຍຊາຕີ ທີ່ອົງອາດ
ຮ່ວມໃຈຟັນຜ່າມ້າງ ສັດຕູສິ້ນຊີບສະຫຼາຍ ນັ້ນແລ້ວ

ວິລະກຳບົ່ງບອກໄວ້ ເດັ່ນຊັດປະຫວັດການ
ອາຫານຊີງຊານໄຊ ໜຶ່ງໃນມູນເຊື້ອ
ກິ້ງເກືອກເຖືອໄຖສູ້ ຫີນທານເດັດດ່ຽວ
ຮ່ວມໃຈຮຽງຮັດແໜ້ນ ແພງເຊື້ອຊາດລາວ ນີ້ນາ

ຄາວກ່ອນ ຕອນຕໍ່ຕ້ານ ຕີເຜດຈັກກະພັດ
ສົງຄາມລາມລວມລຸກ ເລືອດໂຮຍຮຳພື້ນ
ຍິງລາວກຳປືນສູ້ ຕີສັດຕູບໍ່ໄຫວຫວັ່ນ
ເອົາຊີວັນເລືອດເນື້ອ ບູຊາພື້ນແຜ່ນພູມ ນີ້ແລ້ວ

ດຽວນີ້ຍິງ ຍິ່ງກ່າວ ເຕີບໃຫຍ່ຂະຫຍາຍຕົວ
ຫຼາຍສິບປີມີຜົນງານ ເດັ່ນດີຫຼາຍດ້ານ
ເລືອດສີແດງມູນເຊື້ອ ບໍ່ເຈືອຈາງຈາງຈືດ
ແດງເປັ່ງບານເບັ່ງເອ້ ແຂງເຂັ້ມຄູ່ໃຈ ນີ້ແລ້ວ

ປຸນປຽບດວງດອກໄມ້ ຈຳປາກີບຫອມຫວນ
ປະດັບເຍືອງເງົາງາມ ສາດແສງສີແຈ້ງ
ເປັນແວ່ນແຍງຊຸມນ້ອຍ ສະຕີລາວຮຸ່ນໜຸ່ມໆ
ຈົດຈຳຄຸນຄ່າເຈົ້າ ບໍ່ມີເສົ້າໝົ່ນໝອງ ດອກນາ.



# ພອນຈາກແມ່

ໂດຍ: ດຣ. ເກດສະໄໝ

..................................

ຍາມເມື່ອຟ້າຄ່ຳຄ້ອຍ ຕາເວັນລັບດົງໝາ
ແນມເບິ່ງຊາວນາເຮົາ ຕ່າວຄືນເມືອງບ້ານ
ມວນໝູ່ສັກກຸນານ້ອຍ ຄືນຮັງບ່ອນຕັ້ງຖິ່ນ
ຟັງຍິນສຽງກູ່ຮ້ອງ ຄືນຫ້ອງຢູ່ເຢັນ ເຈົ້າເອີຍ

ແຕ່ວ່າເຈົ້າ ຜູ້ເນົາຢູ່ພີ້ ເຂດຖິ່ນດິນດົງ
ກາງເວັນ ຫຼື ຄ່ຳລົງ ກໍຄົງຮັກສາບ້ານ
ຢືນຍາມຕຽມຕີສູ້ ສັດຕູມານຜູ້ໝາຍລ່ວງ
ລູກທະຫານ ຊຸມໝູ່ເຈົ້າ ບໍ່ມີລ້າລ່າຖອຍ ແທ້ເນີ

ແມ່ນີ້ຄິດຮອດເຈົ້າ ລູກແມ່ແພງຂວັນ
ຈາກແມ່ມາດົນນານ ຢູ່ແດນດົງກວ້າງ
ເພື່ອທຳການຕີຕ້ານ ປົກປັກແຜ່ນດິນແມ່
ຮັກລູກຮັກບໍ່ແພ້ ແມ່ບໍ່ຍອມກອດລູກໄວ້
ເມື່ອມານຮ້າຍລ່ວງເກີນ

ອັນໜຶ່ງຮັບຊາດໃຊ້ ເລືອດຫຼັ່ງທາດິນ
ຮັກສາເຂດທານິນ ແຜ່ນດິນແດນດ້າວ
ແມ່ນທົດແທນຄຸນແກ້ວ ນ້ຳນົມຫວານຂອງແມ່
ຈຶ່ງແມ່ນລູກຮັກແມ່ແທ້ ແລລ້ຽງລ່ຳຄອຍ



24 / VII

ແມ່ນີ້ຮັກລູກແທ້   ບໍ່ມີສິ່ງໃດປຸນ
ຝາກສານມາຫາລູກຊາຍ   ຜູ້ຢູ່ຊາຍແດນພື້
ມາຕິຄຳກ້ອນກ້ອມ   ອວຍພອນແລະຖາມຂ່າວ
ເຖິງລູກຫຼານທົ່ວໜ້າ   ທ້າງແກ້ວລູກແພງ   ແມ່ນາ

ໃຫ້ຊຸມເຈົ້າແຂງແຮງໝັ້ນ   ພະລັງແກ່ນຂັນແຂງ
ສາມັກຄີຮັກແພງ   ຢູ່ດອມດຽວແທ້
ຕີໝູ່ໄພມານຮ້າຍ   ໃຫ້ສູນໜີແຕກພ່າຍ
ຢ່າໄດ້ມີເຫດຮ້າຍ   ມາເຂົ້າບຽດບຽນ   ລູກເນີ

ລູກຢ່າເປັນຫ່ວງບ້ານ   ເຂດຖິ່ນດິນຫຼັງ
ເອື້ອຍນ້ອງທຸກຄົນຍັງ   ຢູ່ສະບາຍດີດ້ວຍ
ເຂົາກໍ່ຍັງທັນຫ້າວ   ບຸກບືນຢູ່ຄືເກົ່າ
ສ້າງຜົນງານແຂ່ງເຈົ້າ   ທະຫານພີ້ທຸກຄົນ

ຍາມເມື່ອເດີກດື່ນແລ້ວ   ເດືອນຮຸ່ງເຮືອງແສງ
ແມ່ຕ້ອງລາຄຳແພງ   ໃຫ້ຢູ່ດີເດີເຈົ້າ
ໃຫ້ລູກແອວອາວກ້າ   ຕາມທາງພັກຊີ້ຊສ່ອງ
ແມ່ຈະໄດ້ລາລູກເຕົ້າ   ທະຫານກ້າລູກແພງ   ກ່ອນເນີ.





# ອາຍອຸ່ນ

**ໂດຍ: ລາຕີ**

ອາຍອຸ່ນຈາກຊວງອົກແມ່ນີ້ ຫາໃສປຽບປານເໝືອນໄດ້ບໍ່?
ຊີວິດຊຸມຊາວເດັກ ພໍ່ແມ່ບົວລະບັດຕົນ
ແມ່ບໍ່ເຄີຍທຳຮ້າຍ ໄລລາແລ້ວປະປ່ອຍ
ແມ່ໄດ້ລ້ຽງອ່ອນນ້ອຍ ແສນເຍື້ອນຍາກແຄນ ແທ້ແລ້ວ

ຍາມລູກຫິວຫອດໄຫ້ ແມ່ກໍ່ລູບປະໂລມຮັກ
ຈັກວ່າປາງສົງຄາມ ຂົ້ນຂືວຂົມແຄ້ນ
ແສນວ່າໂບມບອມຖົ້ມ ເປັນແປວໄຟລະເບີດ
ແມ່ໄດ້ໂຊມໂອບອູ້ມ ພາລີ້ຊ່ອນບັງ ແມ່ເອີຍ

ຄັ້ງນັ້ນທຸກຍາກລ້ຳ ລຸຍເລືອດລອຍນ້ຳຕາ
ພູຜາແສນສູງຊັນ ຜ່ານຜະຈົນໄພກວ້າງ
ສົງຄາມບໍ່ເຄີຍສົງສານໜ້າ ຕາດຳໆຜູ້ນ້ອຍອ່ອນ
ມານບໍ່ດັບມອດມ້ວຍ ຊິເຢັນໄດ້ຢູ່ຈັ່ງໃດ ແມ່ເອີຍ

ເຖິງຈະທຸກຍາກຫຍຸ້ງ ສັບພະສິ່ງສັນໃດ ກໍ່ຕາມທ້ອນ
ທຸກເພື່ອຊຸມຊາວເດັກ ຢູ່ກະເສີມສະໜຸກແມ້ງ
ທຸກເພື່ອໂຮມແຮງສູ້ ສັນລະເສີນສັນຕິພາບ
ທຸກເພື່ອພາຍພາກໜ້າ ໂລກາສິ້ນກິ່ນກະສູນ ລູກເອີຍ



ແມ່ໄດ້ຢືນເອກອ້າງ ບໍ່ຫວາດຫວັ່ນກົວເກງ
ບໍ່ໃຫ້ມານມາກົດ ຂົ່ມຄືນລາວໄດ້
ຈະປົກປັກຮັກສາໄວ້ ບັນດາລູກອີແມ່
ຫວັງເພື່ອແອອ່ອນນ້ອຍ ຈະເລີນກ້າວຕໍ່ໄປ ພຸ້ນນາ

ເວົ້າເຖິງອົກແມ່ຕຸ້ມ ບໍ່ເຄີຍເຫືອດເຫີຍຮັກ
ແມ່ນຈັກເນົາແດນໃດ ຈະຢູ່ໄກຫຼືໃກ້
ເຖິງຈະໄປຄືນກ້ຳ ຫົວໃຈນຳຄະນຶງຮອດ
ປາດຖະໜາຂອດຫມັ້ນ ຝັນພໍ້ຢູ່ຊູ່ມຍາມ ລູກເອີຍ

ລູກຂໍຮຽງຮ່ວມຕ້ານ ຝູງໝູ່ຈັກກະພັດ
ຈະສະໝັກໂຮມແຮງ ແບ່ງຂັນກັນສ້າງ
ເຮັດໃຫ້ວັນຂອງນ້ອຍ ເຍົາໄວໄດ້ເຮືອງຮຸ່ງ
1 ມິຖຸນາ ເບີຍເບີກແຍ້ມ ສົດຊ້ອຍຊື່ນບານ ແທ້ແລ້ວ

ກາລະນານຍືນໝັ້ນ ສະຖິດຢູ່ໂລກາ
ຂໍໃຫ້ມາດາສຸກ ຊື່ນໃຈແລະກາຍພ້ອມ
ເປັນຮົ່ມເຢັນເໝືອນຕົ້ນ ໂພສີສົດຊື່ນ
ເປັນບ່ອນນອນແນບເນື້ງ ສະບາຍເນື້ອອຸ່ນຄືງ ລູກທ້ອນ

# ແມ່

**ໂດຍ: ແສງສະຫວ່າງ**

..................................................................

ແມ່ນີ້ເປັນຄຳເວົ້າ      ພະຍາງໜຶ່ງຄຳດຽວ
ແຕ່ວ່າມີຄວາມໝາຍ      ມະຫາສານແສນກວ້າງ
ບຸນຄຸນປຸນປອງລ້ຳ      ສາຍຄົງຄາບໍ່ປຸນປຽບ
ມະຫາສະໝຸດສຸດເລິກກວ້າງ      ບໍ່ປານເຈົ້າແມ່ຄິງ      ໄດ້ແລ້ວ
ໂອນໍ ແມ່ຜູ້ບັງເກີດເກົ້າ      ປະສູດອ່ອນບຸດຕາ
ຖະໜອມພຽນແພງຮັກ      ດັ່ງໜ່ວຍຕາສອງກ້ຳ
ແມ່ຜູ້ຫາມາປ້ອນ      ບິຫິວປາປ້ອນຂາໄກ່
ລ້ຽງລູກມາຕັ້ງແຕ່ນ້ອຍ      ຈົນໄດ້ໃຫຍ່ສູງ
ຍາມນອນແມ່ຕ່ອມຕູ້ມ      ຫຸ້ມຫໍ່ຖະໜອມຮັກ
ມົດ ໝັດບໍ່ໃຫ້ມາວົນວຽນ      ລ່ຳແລແນມສິ້ງ
ຫຼິງເຫັນຍູງມາດັ້ນ      ແມ່ເຈັບໃຈປານຟ້າຜ່າ
ນອນບໍ່ຫຼັບຂັບບໍ່ໄດ້      ຄອຍເຝົ້າລູກຕົນ      ຢູ່ແລ້ວ
ເຫັນລູກຫິວ ແມ່ຟັ່ງຟ້າວ      ຈູບຂະໝ່ອມດອມຂວັນ
ໂອນເອນຍາມຫຼັບນອນ      ອູ່ໄກວດຶງນ້າວ
ຟາວໆສຽງຈາເວົ້າ      ມາດາເຮົາຈາກ່ອມ
ນອນສາເຢີແກ່ນທ້າວ      ນອນແລ້ວແມ່ຊິໄກວ
ຍາມລູກເຈັບແມ່ພັດເຮຮອນໄຫ້      ໝົດເທົ່າໃດບໍ່ໄດ້ວ່າ
ຢາຢູ່ໃສແມ່ກໍ່ຄົ້ນ      ປະສົງໃຫ້ລູກຫາຍ
ຄຸນແມ່ຕົບຜ້າຂີ້      ຄຸນແມ່ຍີຜ້າຍ່ຽວ
ຄຸນແມ່ຫຍ້ຳເຂົ້າໜົກ      ຄຸນແມ່ຈົກເຂົ້າປ້ອນ
ຄຳກ້ອນກໍ່ບໍ່ປານ ແມ່ເອີຍ

ຍາມຍາກແມ່ອອກໜ້າ      ຕະລຸຍໂລກປາບອະທຳ
ພວກໃຈດຳອຳມະຫິດ      ກໍ່ກວນເມືອງບ້ານ
ອູ້ມລູກລຸຍຄວັນໝື້      ຖືປືນຟ້າວຫອບແລ່ນ
ເລືອດຫຼັ່ງໄຫຼໂອບອູ້ມ      ຖະໜອມຕູ້ມລູກຕົນ      ແທ້ແລ້ວ
ແສນທຸກແສນຍາກແມ່ກໍ່ກົ້ງ      ຜ່ານຜ່າອຸປະສັກ
ປາບພວກຝູງມານຍັກ      ຍາດໄຊເຊັ່ງກ້າ
ສຽງແມ່ໄກກວມຟ້າ      ສັດຕູມາບໍ່ຢ້ານຢ່ອນ
ກ່າວປະນາມພວກບ້າ      ຜີເຊື້ອຊາດທະມິນ      ນັ້ນແລ້ວ

# ດວງໃຈນີ້

**ໂດຍ: ບຸດຕີ ສີວົງສາ**

........................................................

ອັນວ່າໃນໂລກກວ້າງ ຫຼາຍຊາດປະກົດເຫັນ
ແຕ່ຊາດດຽວຄືລາວ ຮັກແພງຕົນເຈົ້າ
ຖືເປັນມາລາເຊື້ອ ປະດັບສີຂອງຊາດ
ຂໍແຕ່ດວງດອກເຈົ້າ ຈົ່ງບານແຍ້ມຊື່ນຊົມ ແທ້ນາ

ດວງໃຈຮຽມໜ່ອຍນີ້ ມີຄ່າຂອງແພງ ແທ້ໃດ
ຊີວິດຍືນຍົງຍາວ ກໍເພາະດວງແດງຊ້ອນ
ສົດຊື່ນເບີຍບານແຍ້ມ ດວງແດງເລືອດຜ່ານ
ສີຫ້ອງດວງຈອດຄ້ຳ ສີເຂັ້ມເຄືອນຕີງ

ດວງຮັກຫວງຫ່ວງແຫ້ ພົມຜ່ານແດນດິນ ຕອນນີ້
ຮັກບໍ່ເຫີຍຫາຍຈາງ ແຜ່ວເບົາບາງສິ້ນ
ຮັກເມື່ອມອງເຫັນແກ້ວ ສຸມແຮງໂຮມຮ່ວມ
ດວງຮັກກວມກອດກ້ຽວ ແພງເຊື້ອຊາດປະຊາ ແທ້ໃດ

ຫມັ້ນຍືນຍາວຍິ່ງລ້ຳ ເລີດຄ່າຄຸນສູງ ມານີ້
ດວງຍິ່ງມີຄວາມຄິດ ໄຄ່ຄອງຄວາມເວົ້າ
ມີທັງສີໃຈແຈ້ງ ຈິງໃຈປະກອບສ່ວນ
ພຽງພ່ຳພ້ອມ ຄືດ້າມດັ່ງປະສົງ

ດວງໃຈຍໍຍືນໃຫ້ ດອມຄູ່ຄຽງສອງ
ແນບແອບແຝງເຝືອຮັກ ຮ່ວມພັນພາຍພີ້
ພັນທະນັງນ້ອມ ເຈືອຈານຄະນາຍາດ
ປະດັບຊາດອາບເອ້ ສາທານ້ອຍໜຸ່ມລາວ ນີ້ແລ້ວ

ອຸປະສັກກີດຂັ້ນ ກວມຍ່ານຍາວໄກ ກໍ່ຕາມ
ດວງໃຈສ້າງຜົນງານ ເພື່ອຄືນພາຍຊ້ອຍ
ຂໍພຽງກາຍານີ້ ແຂງແຮງແລະກ້າແກ່ນ
ຈະຫວງແຫນ ແລະສືບສ້າງ ແດນນີ້ອີແມ່ເຮົາໃຫ້ຮຸ່ງເຮືອງ ແທ້ແລ້ວ



# ງານຄືນ ງານຜົນງານ

ໂດຍ: ສຸວັນນະລາດ ໄຊຍະວົງ

ວັນນັ້ນ ມີໜຶ່ງກ້ານ    ການຂ່າວພິທີການ    ເຊີນມາ
ສະຫຼຸບ ຜົນງານຍິງ    ສິ່ງດີສະຕີສ້າງ
ຂອງທາງການຈັດຕັ້ງ    ແມ່ຍິງລາວເພິ່ນແຈ້ງຂ່າວ
ໃຫ້ບ່າວຊາຍພີ່ອ້າຍ    ໄປພ້ອມພ່ຳສະຫຼອງ    ວ່າຊັ້ນ

ພໍເມື່ອເຂົ້າສູ່ຫ້ອງ    ໃນບ່ອນ ພິທີການ
ຫວ່ານສາຍຕາຕຳເຫັນ    ໝູ່ຄຳຂວັນນ້ອຍ
ແຖບທີ່ເທິງຝາຫ້ອງ    ມອງດູເຕັ້ນຕື່ນ
ລະດົມໃຈຟົດຟື້ນ    ໃຈຂຶ້ນຢາກຮ່ວມງານ    ແຫ້ນມາ

ສຽງຫົວນົວເນືອງຕ້ານ    ຍາມຈະອ່ານຜົນງານ
ຕາຫວານໆໃສໆ ຄົມໆ    ໂດດລະດົມໃຈອ້າຍ
ໃຫ້ຫາຍໃຈຕຳເຂົ້າ    ໃຈເຮົາ ຟ້າວຢາກຟັງເພິ່ນ
ວ່າຊິເກີນກວ່າອ້າຍ    ການສ້າງພຶດຕິກຳ    ແດ່ບໍ່?

ປະໂທ ! ບາດວ່າເພິ່ນໄລ່ໄຈ້    ຜົນງານໃຫຍ່ຂອງຍິງ
ມັນໂລດສິງຫົວໃຈ    ໃຫ້ພີ່ຊາຍຕະລຶງໂອ້
ໂທ້ ! ເຈົ້າຊ່າງດີກະດັດເດ້    ມີສະເໜແນວໃໝ່ໃສ່    ອ້າຍບໍ?
ສະເໜຍິງໃສ່ດ້ວຍຄວາມຮອບຮູ້    ທັງການສູ້ ແລະວຽກງານ

ຄຶດເມື່ອນ້ອງນັ່ງໄຫ້    ສະໄໝກ່ອນກາຍມາ    ຫຼ້າເອີຍ
ຊາຍໃຈຜີ ມີແຕ່ຄອຍທຳລາຍ    ໜ່າຍນາງແລ້ວວາງຖິ້ມ
ຍິງລາວຊີມຄວາມຮ້າຍ    ໃນສະໄໝເປັນຂ້ອຍໝູ່
ໃຜແດ່ຄຶດກອບກູ້    ເອົານ້ອງຈາກແອກຄອງ    ນ້ອງເອີຍ



ຄຶດ ! ອ້າຍກໍ່ຄຶດບໍ່ແລ້ວ ຈໍາສົມທຽບສອງສະໄໝ
ເພາະມັນເກີນໄກກັນ ກວ່າພີ່ຊາຍ ຊິໝົດໄຈ້
ສະໄໝເກົ່າເຈົ້າໂລດກືນຄວາມເວົ້າ ກາຍຫົວໃຈໃບ້ບອດ
ຊອກຫາທາງຊີມົ້ມ ນາຮົກຮ້າຍກໍ່ຫ່າງໄປ ແມ່ນບໍ່?

ບາດວ່າ ພັກເພິ່ນປົ້ນ ດິນລາວປ່ຽນການປົກຄອງ
ນ້ອງໂລດໃສຮອງໆ ໝົ່ນໝອງກໍ່ຫາຍກັ່ງງ
ສໍານຽງນວນນາງຕ້ານ ຜົນງານອ້າງອອກເລົ່າ
ປານເອົາເພັດເມັດລ້ານ ຕະການເອ້ໂອບກາຍ ນ້ອງແລ້ວ

ຟັງແມ ! ນ້ອງໜຶ່ງຕ້ານ ຕີ່ພວກຈັກກະພັດ
ນັດ "ການົງ" ສົ່ງສຽງດັງ ສັ່ງມັນໃຫ້ຍອມຜ້າຍ
ນ້ອງໜຶ່ງ ປາຍປືນຊີ້ ບັກ T+F...ທັງອາຍພິ່ນ
ຍິນບັກກາ ລາຂອບຟ້າ ມາເຝົ້າຢູ່ແຜ່ນດິນ ຕົກຕາຍລະບໍ?

ນ້ອງໜຶ່ງເລົ່າເລື່ອງຕ້ານ ທີ່ພວກຫຸ່ນສະໝຸນໄທ
ກະຕຸດໃຫຍ່ຮາວຫົວໝາ ກໍ່ບໍ່ຄາຍິງມັ່ງນ
ລຽນແຖບຍອມນາງນ້ອງ ມອງນາງ ມັນອາຍໃຫຍ່
ຊາຍຊາດໃດລໍານ້ອງ ບໍ່ຍອມຍ້ອງຊິບໍ່ມີ ແທ້ແລ້ວ

ນ້ອງອື່ນ ຊໍ້າຟົດຟື້ນ ຊົມຊື່ນຜົນງານລວມ
ຮ່ວມຂະບວນນາແຊງສະຫະກອນ ແບບອອນຊອນສະຫຼອງສ້າງ
ມີທັງການຈັດຕັ້ງ ມີທັງຍິງນ້ອງເດັ່ນໆ
ເປັນແບບຢ່າງອອກໜ້າ ພາຊາຍສ້າງແຕ່ງແປງ ນ້ອງເອີຍ



ອ້າຍນີ້ ບໍ່ໄດ້ອຸປະໂຫຼກແກ້ງ ແປງຕື່ມໃຫ້ນາງງາມ ດອກເນີ
ບໍ່ແມ່ນລະເມີແສງຕາຫວານ ຈຶ່ງຫວ່ານກອນວອນນ້ອງ
ຍ້ອນວ່າ ການປົກຄອງລາວສ້າງ ແປງນາງດ້ວຍແນວໃໝ່
ນາງ ຈຶ່ງໃສເດັ່ນດ້ວຍ ຄວາມສວຍສະຫຼ້າງ ຕ່າງແຕ່ຫຼັງ
ນ້ອງເອີຍ

ອ້າຍນີ້ ບໍ່ຢາກຍ້ອງ ກໍຈຳຮັບຄວາມຈິງ ອີ່ຫຼີໃດ
ຍິງລາວ ສາວສາທາລະນະລັດ ຈັດວ່າມີແນວກ້າວ
ສາວງາມໆ ມີຜົນງານເອ້ ສະເໜໃດຈະມາທໍ່
ແນວນີ້ລະນວນໜໍ່ນ້ອງ ຈຶ່ງຕອງຕັ້ງຕື່ມຫອນ ແດ່ເນີ

ປີນີ້ ຮອບຮ່ວມໄດ້ 70 ຂວບ ພໍດີ (8/3)
ຮອບປີສາກົນຍິງ ຍິງຈວບຄວາມໝາຍນີ້
ອ້າຍອົດໃຈບໍ່ມີໄດ້ ເລີຍໃສໄຍນ້ອງນ້ອຍໜຶ່ງ
ຫວັງວ່າ ຄົງຊາບຊຶ້ງ ຕຶງໃຈໄດ້ດັ່ງໝາຍ ນ້ອງເອີຍ

ຄວາມອ້າຍຊ້ຳສັ່ງທ້າຍ ຖວາຍມອບນຳກອນ
ກໍມີແຕ່ພອນເຖິງນາງ ຈົ່ງສ້າງຜົນງານໄດ້
ໃຫ້ເປັນແນວນາມເຊື້ອ ມະນີໂຊ ສີເດັ່ນໆ...
ຊາຍໃດເຫັນແລ້ວລຳເຊື້ ຊົມນ້ອງໜ່ວງສະເໜ ນັ້ນແລ້ວ.



# ຄິດເຖິງຄູ່ຮັກ

**ໂດຍ: ສັກປະເສີດ**

ຄິດເຖິງຄາວກ່ອນກີ້ ຍາມນັ່ງຮຽງກັນ ນັ້ນນາ
ວາຈາຫວານເສາະໃສ ສະເໜ່ຄວາມຄຳຕ້ານ
ສອງເຮົາສາບານພ້ອມ ນິຣັນດອນຮັກຮ່ວມ
ອ້າຍກໍ່ວ່າຮັກນ້ອງ ນ້ອງກໍ່ວ່າຮັກອ້າຍ
ໝາຍໝັ້ນຕໍ່ກັນ ນັ້ນນາ

ວັນນີ້ນ້ອງຈາກອ້າຍ ລົງສູ່ຊົນນະບົດ
ລົງສູ່ດິນແດນໄກ ດ່ານດົງດອຍດ້າວ
ໄກຕາໄກຄວາມເວົ້າ ສຽງຫົວຮອຍຍິ້ມຜ່ານ
ຫຼືວ່າໃຈນາດນ້ອງ ກໍໄກພ້ອມພໍ່າກາຍ ນັ້ນລື?

ຮູ້ບໍ່ຮູ້ວ່າອ້າຍ ຄືນຄ່ຳນອນຄິດ
ເປົ່າປ່ຽວຫງອຍເຫງົານຶກ ຫ່ວງນຳນວນນ້ອງ
ປານນີ້ບັງອອນຂ້ອຍ ຄົງນອນຫຼັບຝັນມ່ວນ ແລ້ວນໍ?
ຫຼືວ່ານ້ອງນັ່ງເຫົ້ງ ຄິດເຖິງອ້າຍດັ່ງດຽວ ຢູ່ລື?

ຄິດວ່ານ້ອງຈາກອ້າຍ ກໍໜ້າທີ່ການງານ
ເພາະເພື່ອຄວາມພູນສຸກ ຊາດປະຊາຊົນເຊື້ອ
ອ້າຍຍິນດີທີ່ມີນ້ອງ ໃນດວງໃຈຮັກຮ່ວມ
ນ້ອງຮັກຊາດພຽງໃດ ອ້າຍຮັກນ້ອງສຳນັ້ນ
ຈຳໝັ້ນຢ່າໄລ ນ້ອງເຮີຍ

ຊົ່ວຊີບຊີວິດນີ້ ບໍ່ໝາຍຮ່ວມຮຽງໃຜ ອື່ນແລ້ວ
ຂໍມອບກາຍໃຈດອມ ຄູ່ຄຽງຄອງນ້ອງ
ຍິນບໍ່ເດສຽງອ້າຍ ຄວນຄາງຄ້ອຍຄ່ຳ
ຂໍລົມໂຊຍສົ່ງຍູ້ ສຽງອ້າຍໃຫ້ຮອດນາງ ແດ່ທ້ອນ

# ແດ່ ແມ່ຍິງລາວ

**ໂດຍ: ທ. ອິນທະຈັກ**



..................................................

ຮຽມນີ້ ເກີດຈາກທ້ອງ ຂອງແມ່ມາດາ
ຖືກຖະໜອມ ທອມຮັກ ຟັກຟູມພຽນລ້ຽງ
ມີເອື້ອຍຕິດຕາມສົ້ນ ດູແລບໍ່ເຫີນຫ່າງ
ຄຸນເພິ່ນຄາມຄ່າລົ້ນ ອວນຂ້ອຍບໍ່ຊ່າງຈາ ໄດ້ແລ້ວ

ອັນວ່າໃນໂລກລ້ອນ ສະເໜີດັ່ງສັນດຽວ
ມີແມ່ແນວນາມຍິງ ພ່ຳພຽນຖະໜອມລ້ຽງ
ລູກໄດ້ມີຊີວາພົ້ນ ອັນຕະລາຍ ກໍ່ເພາະເພິ່ນ
ພໍພ້ອມພຽງຄູ່ສ້າງ ສອງກ້ຳ ເກິ່ງກັນ ນັ້ນແລ້ວ

ແຕ່ວ່າ ໃນໂລກນີ້ ເທົ່າທີ່ຮຽມເຫັນ
ທັງທີ່ເຮົາພານພົບ ອ່ານຕຳລາຄົ້ນ
ຄົນຊາຍໃນສະໄໝກີ້ ຖືຍິງແບບຕ້ອຍຕ່ຳ
ຢຽບຢ່ຳຫຍັນດ່າປ້ອຍ ເປັນສິນຄ້າເຄື່ອງລະບາຍ

ສຳລັບໃນແຜ່ນພື້ນ ແດນປະເທດ ນະຄອນລາວ ເຮົານີ້
ແຕ່ບູຮານການຫຼັງ ເພິ່ນແຕ່ງຄອງຄາໄວ້
"ເພດອ່ອນແອ ສະໝອງປູ້" ຫາກເປັນເມຍເພິ່ນກໍ່ວ່າ
"ຊ້າງເທົ້າຫຼັງ" ເພິ່ນວ່າໄວ້ ໃຫ້ຕາມກົ້ນເຜົ່າຜົວ ວ່າຊັ້ນເນ

ຍິງໃດຂືນລ່ວງຂໍ້ ກ້າວກ່າຍຂັດຄອງ
ຢາກທໍ່ທຽມກັບຜົວ ກ່າວແຂງຂືນຮ້າຍ
ກໍຖືກຕິລາຄາໃຫ້ ເປັນກາລີຍິງຊົ່ວ
ຍິງຈຶ່ງຕົກຕ່ຳແຕ້ມ ບໍ່ທຽມເທົ້າທໍ່ຜູ້ຊາຍ ແທ້ແລ້ວ



ດ້ານໜຶ່ງຮີດຂີດແຕ້ມ    ປຸນປຽບປານກົດໝາຍ
ຖືວ່າເປັນມົງຄຸນ    ຫາກເຊື່ອຟັງກະທຳໄດ້
ຈະຢູ່ດີກະເສີມສ້າງ    ມູນມັງ ມີມັ່ງ
ກ່ອນນອນ ເມຍຕ້ອງກົ້ມຂາບໄຫວ້    ຕີນເຈົ້າເຜົ່າຜົວ

ນອນລຸນ ຍາມຕື່ນຕ້ອງ    ລຸກກ່ອນສາມີ
ຜົວ ກິນກ່ອນສາມຄຳ    ກ່ອນເມຍ ຈຶ່ງກິນໄດ້
ໃຫ້ຢຳເກງຜົວແກ້ວ    ປານອົງເທວະລາດ
ເວົ້າຈາສຽງ ອິ່ນອ້ອຍ    ຈູມເຈົ້າຢູ່ຊູ່ຍາມ    ແທ້ແລ້ວ

ຜູ້ຊາຍ ຊ້ຳພັດໄປທ່ຽວຫຼິ້ນ    ແຊວມ່ວນເຮຮາ
ໄປນອນວັນຊັນຂາ    ເຄິ່ງເດືອນ ກໍຍັງໄດ້
ບໍ່ມີໃຜຕິໄດ້    ວ່າໂລເລ ຫຼືວ່າຊົ່ວ
ແມ່ຍິງໄປແຕ່ພຽງເຄິ່ງມື້    ກໍໝາຍໜ້າວ່າຊົ່ວຊາມ    ແລ້ວເດ

ເຮົາວ່າກົດລະບຽບນີ້    ເອົາປຽບແມ່ຍິງຫຼາຍ
ບໍ່ແມ່ນກົດເກນວັດ    ຂີດຄອງມາພ້ອມ
ແມ່ນຜູ້ຊາຍເປັນຄົນຕັ້ງ    ສັກດີນາໄດ້ຈັດແຈ່ງ
ທັງນາຍທຶນພໍ່າພ້ອມ    ວາງໄວ້ຂົ່ມແມ່ຍິງ    ແທ້ນາ

24 / VII
ຫ້າມຈຳໜ່າຍ

ມາຮອດຊູ່ມື້ນີ້ ຊາດປົດປ່ອຍມີສັນຕິ
ພັກຊີ້ນຳພາເດີນ ສູ່ສັງຄົມຈະເລີນແລ້ວ
ບົດບາດຍິງດີຂຶ້ນ ບໍ່ຄືຫຼັງຄັ້ງເກົ່າ
ຍິງແລະຊາຍ ທຽບເທົ້າ ສະເໝີດ້ານດັ່ງກັນ ແທ້ນາ

ຖ້າຜູ້ຊາຍເຮັດໄດ້ ສັບພະສິ່ງສັນໃດ
ຍິງເຮັດດີສະເໝີເໝືອນ ບໍ່ຕ່າງກັນໂຕນແຕ້ນ
ມີຫຍັງຊາຍເກີນເຈົ້າ ແມ່ຍິງລາວລອງວ່າ ມາດູ
ຮຽນເປັນຊາຍ ຍອມຍົກນີ້ວ ຊູໂປ້ ກ່າວຊົມ ແລ້ວໄດ

ບົດບາດຍິງ-ຊາຍນັ້ນ ແນວທາງກຳນົດອອກ
ພຶດຕິກຳກໍ່ຫາກຍັງລອດຄ້າງ ຕິດທ້ອຍຢູ່ຝ່າຍຊາຍ
ຫຼາຍຄົນຍັງນຳໃຊ້ ແນວຄິດເກົ່າເປັນຄົນລວງ
ປວງ ຜູ້ຊາຍໆ ເຮົາ ຮີບປ່ຽນແປງຢ່າແກ່ຍາວໄກກວ້າງ

ວາງສາ ວາງສິດໃຫ້ ຍິງ-ຊາຍ ສະເໝີພາບ
ສອງເພດ ເຮົາຮ່ວມສ້າງ ເຮືອນຢ້າວໃຫ້ຮັ່ງມີ
ຄອບຄົວອຸດົມແລ້ວ ສັງຄົມລາວຈະເລີນຮຸ່ງ
ຝູງສັດຕູໂງ່ຈ້າ ຈະໜີໜ້າຈາກລາວ ແທ້ແລ້ວ

ໃນວາລະໂອກາດນີ້ ຮຽນຂໍກ່າວອວຍພອນ
ໜັງສືພິມແມ່ຍິງລາວ ອອກສູ່ເວທີກວ້າງ
ຂໍໃຫ້ຄົງສະຖຽນໝັ້ນ ອັນດັບດີໄປຕະຫຼອດ
ມີຜູ້ຊື້ອ່ານເພີ້ມ ເຕີມກວ້າງອອກໄປ ນັ້ນທ້ອນ

ອັນໜຶ່ງນັ້ນ ວັນຄົບຮອບ ເຈັດສິບຂວບພໍດີ (8/3) ປີນີ້
ເປັນກຽດລືຊາຍິງ ທີ່ພາກພຽນຮຽນສູ້
ທວງເອົາສິດ ສະຫງວນໄວ້ ຊູໂຕໃຫ້ສູງຄ່າ
ຂໍບູຊານອບນ້ອມ ດ້ວຍຄວາມຊຶ້ງຊື່ນໃຈ ນີ້ແລ້ວ.



# ກຳລັງໄຟ ເພດຍິງ

**ໂດຍ: ສ. ວົງສັກດາ**

..................................................

ໃຜໆ ກໍກ່າວເວົ້າ ວ່າເຈົ້າເດັ່ນກາຍມາ
ປວງປະຊາຊົນລາວ ຮັກແພງຖະໜອມເຈົ້າ
ຄືດັ່ງບຸດຕີແກ້ວ ໃນທາງອົບອຸ່ນ
ສົມຊື່ແລ້ວ ລູກສາວຫຼ້າພັກປະຊາ ນີ້ນາ

ວິລະກຳເກັ່ງກ້າ ເຈົ້າສ້າງກໍ່ແປງມາ
ສະໄໝຕໍ່ອາເມລິກາ ເດັ່ນດັ່ງໄກ່ກ້ອງ
ໃຜຜູ້ໄດ້ຍິນແລ້ວ ດີໃຈຊົມຊື່ນ
ຝາກຄວາມ ຫວັງເຊື່ອໝັ້ນ ນຳເຈົ້າຊູ່ຄົນ ແທ້ແລ້ວ

ນັບແຕ່ນີ້ສ້າງຕັ້ງ ຄັ້ງໃໝ່ກໍ່ຕີເສິກ
ເຮັດໃຫ້ຝູງສັດຕູ ແຕກຂະບວນໂຕນເຕັ້ນ
ເປັນຕົວການຕີຕ້ານ ທະຫານໄທ ແລະພວກຫຸ່ນ
ຢູ່ເມືອງສູຍ ແລະພູດອກໄມ້ ສັດຕູໄດ້ແຕກທະລາຍ ແທ້ແລ້ວ

ຄຽງຄູ່ການຕໍ່ສູ້ ກູ້ກຽດຢູ່ຊຽງຂວາງ
ເຈົ້າຍັງປຸກລະດົມ ຊ່ວຍປະຊາແປງສ້າງ
ນັບທັງການຈັດຕັ້ງ ກໍ່ປັບປຸງແລະເຜີຍແຜ່
ໃຫ້ປະຊາພີ່ນ້ອງ ມີຫຼັກໝັ້ນແກ່ນແຂງ ແທ້ນາ

ເພື່ອຄ່ຳນັບຮັບຕ້ອນ ວັນໃຫຍ່ມະຫາໄຊ
ວັນທີ 20 ມັງກອນ ສ້າງທັບລາວໝາຍໝັ້ນ
ຂໍໃຫ້ກົມກອງເຈົ້າ ກຳລັງໄຟກ້າແກ່ນ
ແຂ່ງຂັນກັບມຸ່ງໜ້າ ຮັກສາໄວ້ຊື່ສຽງ (769) ນັ້ນທ້ອນ

ສົມຊື່ເຈົ້າມີຊື່ຕັ້ງ ນາມຍົດສົດໃສ
ວິລະຊົນລືນາມ ສ້າງຊາດລາວມາແລ້ວ
ຈົ່ງຍາດເອົາຫຼຽນໄດ້ ໄຊງາມສືບຕໍ່
ບໍລິສຸດສືບສ້າງ ຮັກສາບ້ານດ່ານລາວ ນີ້ທ້ອນ.



# ແດ່ສາວທະຫານ

**ໂດຍ: ສ.ສຽງໃໝ່**

..............................................

ນ້ອງຜູ້ອົງອາດກ້າ ສົມຊື່ສະຕີລາວ ເຮົານີ້
ຊື່ວ່າສາວຄົນຫານ ຊາດງາມນາມກ້າ
ເຂັ້ມແຂງດັ່ງນວນນາງນ້ອງ ສາວທະຫານຜູ້ກ້າເກັ່ງ
ຮັບປະກັນຮົບສູ້ ຮັກສາບ້ານດ່ານລາວ ເຮົານີ້

ເມື່ອກ່ອນກໍເກັ່ງກ້າ ອົງອາດທະນົງໃຈ
ຄວາມອາດຫານຊານໄຊ ກໍດັ່ງດຽວສະເໝີອ້າຍ
ບໍ່ໃຫ້ຊາຍເກີນແຕ້ມ ບຸກບືນສຸດຂະໜາດ
ຟາດສັດຕູມຸ່ນໄໝ້ ບໍ່ມີໃຫ້ເສດເຫຼືອ ຄັກເດ

ບ່ອນໃດໂຈນເຂົ້າບ້ານ ທຸວັງຊູດຣິດປະຊາຊົນ
ບ່ອນນັ້ນນາງບຸກຕີ ບໍ່ຕ່າງຫຍັງກັບອ້າຍ
ສັດຕູມາເປັນຮ້ອຍ ຫົວໃຈນາງບໍ່ໄຫວຫວັ່ນ
ນາງໄດ້ຟັນຟາດມ້າງ ໃຫ້ຕາຍກ້ຽງມຸ່ນກະຈອນ ແທ້ແລ້ວ

ຫຼາຍນ້ອງນາງແມ່ນໄດ້ ເປັນນັກຮົບວິລະສະຕີ
ຜົນງານດີມີພະຄຸນ ເທີດທູນມູນເຊື້ອ
ເລືອດເນື້ອໄຫຼທາພື້ນ ປິຕິພູມເພື່ອເອກະລາດ
ຂໍທຸງຊາດໄດ້ຍົກຂຶ້ນ ບິນຟ້າສະຫງ່າງາມ ແທ້ແລ້ວ



ຂໍທຸງຊາດໄດ້ຊັກຂຶ້ນ ບິນຍອດເສົາສູງ
ເປັນທຸງແສນເຄົາລົບ ຮັກສະເໝີເໝືອນໜ້າ
ທຸງຊາດລາວສູງພຽງຟ້າ ຈິດໃຈນາງກໍສູງສົ່ງ ພຽງນັ້ນ
ຮັກສາຊາດທ່ຽງໝັ້ນ ໃຫ້ສົມຊັ້ນຊ່າລື ນ້ອງເອີຍ

ສ່ວນວ່າອວນອຸ່ນອ້າຍ ພ້ອມພໍ່າປະຊາຊົນ
ຂໍຈົດຈຳຜົນງານນາງ ນາດທະແພງບໍ່ລືມໄດ້
ຂໍໃຫ້ຈິດໃຈນ້ອງ ເປັນເຫຼັກແຂງຢ່າໄດ້ເກື່ອນ
ຖ້າເດືອນປີເຄື່ອນຍ້າຍ ຜົນງານນ້ອງຍິ່ງຊ່າລື ນ້ອງເອີຍ

ກອນນີ້ແຖມສົ່ງທ້າຍ ອ້າຍລາກ່ອນດວງສະໝອນ
ຂໍສົ່ງພອນບັນດານ ນາດທະແພງຈົ່ງຫາຍຮ້ອນ
ພອນແດ່ນົງນາດຫຼ້າ ສາວທະຫານຈົ່ງເດັດດ່ຽວ
ມີຮັກດຽວຜູກໝັ້ນ ມີໄຊແລ້ວຈຶ່ງແຕ່ງງານ ນ້ອງເອີຍ



# ຍິງສາວລາວໃໝ່

**ໂດຍ: ສ.ສວນມອນ**

| | | |
|---|---|---|
| ຍິງລາວມີກຽດກ້ອງ | ເທົ່າທົ່ວໂລກາ | |
| ຍິງລາວມີນາມສຽງ | ຊື່ດັງໄກກວ້າງ | |
| ບໍ່ວ່າທາງໄກໃກ້ | ແດນໃດກໍ່ຫາກຊ່ຳ | |
| ວ່າຍິງລາວເກັ່ງກ້າ | ສະເໝີດ້ານດັ່ງຊາຍ | ແທ້ແລ້ວ |
| | | |
| ຄາວເມື່ອພວກໂຫດຮ້າຍ | ຄອງຄອບກຸມກັດ | |
| ຍິງລາວເກືອບຈະສິ້ນຊີວັງດັບ | ຂາດສະເດັນສູນເຊື້ອ | |
| ມັນເບື່ອຍິງໃຫ້ຫຼົງລົ້ມ | ຕົກຕົມສະໝົມເນົ່າ | |
| ລະບອບເກົ່າໂຫດຮ້າຍ | ທຳໃຫ້ໝົ່ນໝອງ | ແທ້ນາ |
| | | |
| ຕົກເຂົ້າມາແຫ່ງຫ້ອງ | ລະບອບໃໝ່ສົດໃສ | |
| ພາຍໃຕ້ການນຳພາ | ສະຫຼາດສີໃສແຈ້ງ | |
| ພາຍໃຕ້ແສງຈັນເຫຼື້ອມ | ເຍືອງທາງໃຫ້ໃສສ່ອງ | |
| ຍິງລາວຜອງທົ່ວດ້າວ | ຈຶ່ງຟູພົ້ນຝັ່ງເຫວ | ແທ້ນາ |
| | | |
| ຄາວນີ້ຍິງໄດ້ຕົກແຕ່ງເອ້ | ຕາມແບບປະເພນີ | |
| ມີຊີງຜົມງາມເງົາ | ປິ່ນເປຍເປັນເກົ້າ | |
| ທັງເລົ່າແພຜືນຜ້າ | ສະໃບຄຳບົ້ງບ່ຽງ | |
| ແຫວນມະນີໃສ່ກ້ອຍ | ງາມລະຫ້ອຍດັ່ງຊຽນ | ງາມແທ້ |



ຫຼຽວເບິ່ງຮູບຮ່າງກົ້ຽງ    ສຽງເວົ້າມ່ວນນວນຫູ
ເໝາະແກ່ໃຈມວນຊື່ນ    ຄູ່ຊູ່ຄືນທັງຄ້າຍ
ຍາມເມື່ອຍໍຂາຜ້າຍ    ໄປ-ມາ ເກີນວ່າຄ່ອງ
ເໝືອນອິນປອງແຕ່ງປັ້ນ    ເທວາໄດ້ສົ່ງມາ    ພຸ້ນແລ້ວ

ນອກນັ້ນ ແມ່ຍິງໄດ້ຕັ້ງໜ້າ    ສ້າງກໍ່ປົວແປງ
ໃຫ້ມີຜົນງານຫຼາຍ    ດັ່ງຊາຍທຽມເທົ້າ
ໜັກຫຼືເບົາກໍ່ທົນສູ້    ດຸດັນຜ່ານຜ່າ
ຍິງບໍ່ເຄີຍນ້ອຍໜ້າ    ເສຍແຕ້ມຕໍ່ຜູ້ໃດ    ແທ້ນາ

ວັນຊາດມາຮອດແລ້ວ    ວຽນຮອບບັນຈົບ
ຄົບຮອບວຽນມາເຖິງ    ສະໜັ່ນເມືອງໄກກວ້າງ
ວັນນີ້ຮຽມບໍ່ມີຫຍັງຕ້ອນ    ແນວໃດມາຝາກສົ່ງ
ມີແຕ່ພອນລາບລົ້ນ    ຊິຍໍມ້ອນສົ່ງແຖມ    ແທ້ແລ້ວ

ຍິງລາວເອີຍ ຂໍໃຫ້ສຸຂະພາບເຈົ້າ    ກ້າແກ່ນເໝືອນສີລາ
ຊຸມໝູ່ໂລຄາໄພ    ໃຫ້ຫ່າງເຫີນໄກເວັ້ນ
ເຂັນໃດຢ່າໄດ້ມາຕໍາຕ້ອງ    ຂອງຈັງໄຮ ໃຫ້ໄກຫ່າງ
ເຈົ້າຈົ່ງສຸກຢູ່ສ້າງ    ເມືອງບ້ານຕະຫຼອດໄປ    ພຸ້ນທ້ອນ

# ແຜ່ນດິນແມ່

## ໂດຍ: ນັກຮຽນວິທະຍາໄລແພດສາດ ປີ 1980

.................................................

ຄັ້ງກ່ອນ ດິນແມ່ຮ້ອນ ປຸ່ນປຽບແປວໄຟ
ນ້ຳຕາມາດາໄຫຼ ຮ່ຳຮວາຍສອງແກ້ມ
ຍ້ອນວ່າຝູງມານບ້ານ ຮາວີກົດຂີ່
ດຶງຖ່ວງເອົາແມ່ໄວ້ ເຂັນຂ້າຍ່ຳຍີ ພຸ້ນນາ

ອີກໜຶ່ງຊຸມນາດນ້ອງ ແນວໜໍ່ນາມຍິງ
ຖືກເບື່ອເມົາເສເພ ລະເລີຍລືມເຄົ້າ
ເລີຍເລົ່າໄລລາສິ້ນ ສະໄບແພຕູ້ມຸ່ງບ່ຽງ
ໄປສວມສຸບໂສ້ງກົ້ນ ກະໂປງເປົ້າບໍ່ແມ່ນຄອງ ພຸ້ນນາ

ດິນປານໃດບໍ່ຫ່ອນຮູ້ ເມກມືດໄດ້ປົກຄຸມ ແມ່ເອີຍ
ອາທິດທັງລົມແດງ ສ່ອງບໍ່ຖອງເຖິງພື້ນ
ຍ້ອນພວກຝຶ່ນເມືອງບ້ານ ນາຍທຶນຜູ້ຂາຍຊາດ
ເຂົາປິດບັງບໍ່ໃຫ້ຮູ້ ການບ້ານບໍ່ໃຫ້ຮຽນ ແທ້ນາ

ຈົນຮອດປີ 1975 ຄວາມມືດຈຶ່ງຫາຍໜີ
ຟ້າປ່ຽນເປັນສີທອງ ສ່ອງລົງຍັງພື້ນ
ອາທິດສີແດງເຂັ້ມ ເຕັມດວງແຈ້ງຮຸ່ງ
ພຸ່ງແສງແຍງແດນແມ່ອີກຄັ້ງ ມາດາຂ້ອຍ ຈຶ່ງຊື່ນບານ ໄດ້ແລ້ວ

ຄາວເມື່ອລູກໄດ້ຫ່າງແກ້ວ ດິນແມ່ຮຽມຮັກ ໄກເດ
ໄປອາໄສດິນແດນ ເພື່ອຮ່ຳຮຽນຄວາມຮູ້
ແນມໄປໃສເຫັນແຕ່ໜ້າ ຄົນໄກບໍ່ເໝືອນແມ່
ອູລາອຸກອັ່ງແທ້ ພາສາເວົ້າບໍ່ຄ່ອງກັນ ແມ່ເອີຍ

ຍາມກິນຄິດຮອດບ້ານ ອາຫານແມ່ເຄີຍຄົວ ແຊບເດ
ເຂົ້າໜຽວຮຽມເຄີຍກັດ ປ່ຽນເປັນປັງແປ້ງ (ເຂົ້າຈີ່)
ປາແດກນົວໆ ຂ້ອຍ ປານໃດຊິໄດ້ຈວບ
ເອົາໂຟມາ ແລະປາເຕພຸ້ນ ມາແທນໃຫ້ບໍ່ຫ່ອນຄື

ບັດນີ້ ລູກໄດ້ກັບຕ່າວບ້ານ    ແມ່ອູ້ມກອດເອົາຂວັນ    ແດ່ເນີ
ອ້ອມອົກຂອງມາດາ    ອຸ່ນສະບາຍຫາຍຮ້ອນ
ປຸນດັ່ງນົມສອງເຕົ້າ    ມາດາ ລູກເຄີຍດື່ມ    ຄາວນັ້ນ
ຍັງວ່າຫວານແຊບຊ້ອຍ    ບໍ່ມີມື້ຊິຈືດຈາງ    ແມ່ເອີຍ

ດິນແມ່ເຂົ້າມາກລົ້ນ    ຜົນພືດທັນຍາຫານ
ໃນນ້ຳມີປູປາ    ລ່ອງລອຍຫຼາຍແທ້
ໃນນາກໍ່ມີເຂົ້າ    ຂຽວຂະຈີຮວງກ່ອງ
ມີໜອງບຶງຮ່ອງຫ້ວຍ    ພູຊັ້ນໜ່ວຍສູງ

ອີກທັງ ຈຳປາບານເບັ່ງແຍ້ມ    ແດນແມ່ ປະດັບເມືອງ
ມາລາໃດງາມຫອມ    ໄປ່ປານສະເໝີໄດ້
ກິ່ນຈຳປາຫອມກຸ້ມ    ສີສັນຂາວສະອາດ
ຄືກັບບຸດນາດນ້ອງ    ສະກຸນ ເຊື້ອໜໍ່ຍິງນີ້ແລ້ວ

ຍາມເມື່ອນ້ອງບ່ຽງບ້າຍ    ສະໄບອາດແພຜືນ    ງາມເດ
ເກສານວນມວຍຜົມ    ທັດມາລາຊ້ອນ
ຍາມນ້ອງທົ່ງຜືນສິ້ນ    ໄໝຄຳເກີນວ່າຄ່ອງ
ງາມແທ້ເດນາດນ້ອງ    ໃຜຈ້ອງກໍ່ວ່າລາວ    ແທ້ນາ

ແດນແມ່ ສຸກຍິ່ງລ້ຳ    ສະເໝືອນດັ່ງວິມານພົມ    ພຸ້ນແລ້ວ
ບໍ່ມີມານມາເຕັງ    ຂົມເຫັງລາວໄດ້
ປະຊາເຮົາເດີນໜ້າ    ໄປຕາມທາງພັກຊີ້ສ່ອງ
ມວນໝູ່ລາວພີ່ນ້ອງ    ປະຊາເຊື້ອໄດ້ຢູ່ເຢັນ    ແທ້ນາ

ຮຽມນີ້ ຂໍຮຽກເອີ້ນ    ໃຫ້ລາວຢູ່ລວມກັນ
ດິນລາວມີຜືນດຽວ    ຈົ່ງຊ່ວຍກັນຮັກສາສ້າງ
ປຽບດັ່ງມາດາແກ້ວ    ຄົນດຽວບໍ່ເປັນອື່ນ
ຄວາມອົບອຸ່ນຢູ່ຜືນແຜ່ນດິນລ້ານຊ້າງ ເໝືອນດັ່ງເຮົາໄດ້ໂອບອູ້ມ
    ມາດາຕູ້ມຕ່ອມຊົມ    ນີ້ແລ້ວ



# ເມຍຂວັນຂອງອ້າຍ

**ໂດຍ: ພົມມາ ບຸດນາວົງ**

.....................................................

ຍາມເມື່ອອ້າຍຫ່າງນ້ອງ ເມືອຝ່າຍແດນໄກ
ໄປຕາມສຽງຂອງພັກ ເພື່ອປະຊາຊາວເຊື້ອ
ດົນຈຶ່ງໄດ້ເມືອຢາມຢ້ຽມ ເມຍແພງ ແລະລູກອ່ອນ
ກາຍ ແລະໃຈຍັງຫ່ວງນ້ອງ ຫາຍໃຈຕ້ອງທຸກຍາມ ນ້ອງເອີຍ

ສາຍໃຈເນົາຢູ່ບ້ານ ນຳເຜົ່າພົງພັນ
ການເພີ່ມພູນຫຼາຍອັນ ໄຮ່ນາສວນຮົ້ວ
ທັງສວນຄົວສວນກ້ວຍ ສາລີມັນອ້ອຍຖົ່ວ
ລ້ຽງງົວຄວາຍຢູ່ຖ້າ ເວລາອ້າຍຕ່າວເມືອ ນັ້ນເນີ

ໃຈນ້ອງຍັງທ່ຽງໝັ້ນ ສັດຊື່ສິນທຳ
ຕໍ່ຜົວແພງຂອງຕົນ ທີ່ຫ່າງໄກໄລຂ້າງ
ບໍ່ໄດ້ຝັນເພມ້າງ ສັນຍາກັນແຕ່ຄາວກ່ອນ
ເໝືອນນ້ອງນອນຢູ່ຂ້າງ ຝັນກ້ຽວກ່ຽວຄີງ ຢູ່ນາ

ນ້ອງໄດ້ຫຼີງລ່ຳຢ້ຽມ ຮັກດັ່ງດວງຕາ
ບຸດຕາທັງບຸດຕີ ເກີ່ງກັນດຽວດ້າມ
ນ້ອງໄດ້ວາຈາຕ້ານ ຂານຄຳອ້ອຍອີ່ນ
ກີນນຸ່ງນອນບໍ່ເປື້ອນ ເຕືອນເຂົ້າຮ່ຳຮຽນ ນັ້ນແລ້ວ

ນ້ອງໄດ້ພຽນຕ່ອມຕູ້ມ ຍາດເຜົ່າພົງສາ
ບິດາທັງມານດາ ທີ່ເນົາເຮືອນຢ້າວ
ອາວອາທັງລຸງປ້າ ພາກັນຮັກຮ່ວມ
ຊ່ວຍຊູທັງກໍ່ສ້າງ ບໍ່ວາງເວັ້ນວຽກໃດ ແທ້ແລ້ວ



ສະຫະກອນນ້ອງກໍ່ໄດ້ ເຂົ້າຮ່ວມນຳຖັນແຖວ
ສະມາຄົມແມ່ຍິງ ທີ່ເນົາໃນບ້ານ
ປະສານງານພຽງພ້ອມ ບໍ່ຍອມຕົວຖອຍຫ່າງ
ສ້າງຕົນເອງຢູ່ເລື້ອຍ ທຽມອ້າຍຜູ້ຫ່າງໄກ ນັ້ນເນີ

ຈິດໃຈນ້ອງເກັ່ງກ້ຳ ດູດດັ່ງທີມມະໄລ
ເໝືອນມະຫາສະໝຸດ ໃຫຍ່ເວີນວັງກວ້າງ
ບໍ່ມີຫຍັງຂວາງຂັ້ນ ກຳລັງໃຈອັນສູງສົ່ງ
ຈຸດປະສົງເພື່ອອ້າຍ ພາຍໜ້າຢູ່ເຢັນ ນ້ອງເອີຍ

ສົມແລ້ວເປັນແກ່ນເຫຼົ້າ ຈອມມິ່ງເມຍຂວັນ
ສົມເປັນຍິງທີ່ຊາຍຮັກ ເພື່ອອຸດົມພາຍໜ້າ
ອ້າຍຂໍອາສາສ້າງ ຜົນງານອັນຍິ່ງໃຫຍ່
ເມື່ອໃດອ້າຍຕ່າວໂຄ້ງ ຈະເອົາຜົນງານຕ້ອນມອບເມຍ
ອ້າຍແລ້ວ



# ສານຈາກເມຍ

**ໂດຍ: ຄຳເສັງ**

........................................

ສານນີ້ຂຽນຈາກນ້ອງ ເມຍອຸ່ນແພງຂວັນ ອ້າຍແລ້ວ
ເຖິງຜົວແພງຜູ້ແສນຮັກ ທີ່ຫ່າງໄກເມືອງບ້ານ
ອ້າຍຍັງສຸຂີໝັ້ນ ເໝືອນຈັນຜູ້ໃສສ່ອງ ບໍ່ນໍ?
ສ່ວນວ່າ ນ້ອງແລະລູກຢູ່ບ້ານ ເນົາຢັ້ງຢູ່ສະບາຍ ດອກນາ

ມີແຕ່ເປັນຫ່ວງອ້າຍ ຢ້ານຊາຍຢູ່ບໍ່ສະບາຍ
ເດິກດື່ນຄົງຢືນຍາມ ເພື່ອຮັກສາເມືອງບ້ານ
ປົກປັກຊາຍແດນໃຫ້ ປອດໄພດີຢູ່ທຸກເມື່ອ
ເພື່ອໃຫ້ພົງພີ່ນ້ອງ ລາວໄດ້ຢູ່ເຢັນ

ນ້ອງໄດ້ຍິນຂ່າວອ້າຍ ສູ້ຮົບເກັ່ງເຫຼືອຫຼາຍ
ດັບສູນສັດຕູຕາຍ ພ່າຍໜີກໍ່ປານນັ້ນ
ວັນຄືນກຳປືນສູ້ ຕີສັດຕູບໍ່ຢ້ານຢ່ອນ
ເຖິງວ່າແຮງອ່ອນລ້າ ແຕ່ໃຈກ້າແກ່ນແຂງ ວ່າໃດ

ຍິນຂ່າວອ້າຍເກັ່ງກ້າ ນ້ອງສຸດພາກພູມໃຈ
ທີ່ມີສາຍໃຈຮຽມ ຮ່ວມປ້ອງກັນເມືອງບ້ານ
ສົມຊື່ຊາຍທະຫານກ້າ ປະຊາລາວຮັກແພງຍິ່ງ
ໃຜກໍ່ຫຼິງລຳຍ້ອງ ນ້ອງກໍ່ແຮ່ງຮັກອ້າຍ
ຫຼາຍຂຶ້ນກວ່າຫຼັງ ອ້າຍເອີຍ



ແຄ້ນຂອງນ້ອງແລະອ້າຍ ຮ້ອນເຮົ່ງສະເໝີກັນ
ສັດຕູບໍ່ໄລລະ ເລ່ກິນເພມ້າງ
ທຸກທາງມັນຈະຫວັງກວນບ້ານ ກືນກິນປະເທດຊາດ
ເອກະລາດລາວທໍ່ກ້ອຍ ມັນມ້າງທັບເທ ອ້າຍເອີຍ

ດັ່ງນັ້ນ ແສນຈະສຸດຍາກຫຍຸ້ງ ໃຫ້ອ້າຍຄ່ອຍພຽນອົດ ເອົາເນີ
ທໍລະຫົດທົນທານ ດັ່ງວິລະຊົນກ້າ
ຊາດຕ້ອງການອ້າຍມີໜ້າ ສັດຕູມາ ອ້າຍຕີຕ່ອຍ
ໃຫ້ມັນມຸດມອດມ້ຽນ ເສຍແລ້ວ ຈຶ່ງຕ່າວມາ

ສ່ວນວ່າ ນ້ອງແລະລູກຢູ່ບ້ານ ບໍ່ໃຫ້ຫ່ວງນໍາຫຍັງ
ນ້ອງຜູ້ເນົາແນວຫຼັງ ຈະລໍາແຍງແພງຕູ້ມ
ລູກຂອງເຮົາໃຫ້ຮຽນໄດ້ ທັງຮຽນດີ ແລະຮຽນເກັ່ງ
ເສັ້ງຄັ້ງໃດກໍ່ໃຫ້ໄດ້ ນໍາໜ້າຄູ່ຊູ່ຄົນ ອ້າຍເອີຍ

ສ່ວນວ່າຄວາມຮັກນ້ອງ ທີ່ມີຕໍ່ອົງອວນ
ບໍ່ໃຫ້ແປປວນຫຼົງ ທ່ຽງຕົງຄົງໝັ້ນ
ສັນຍາເຮົາມີໄວ້ ດົນປານໃດຍິ່ງຮັກເພີ່ມ
ເສີມຄວາມຮັກຢູ່ເລື້ອຍ ຫຼັກໝັ້ນ ບໍ່ສັ່ນຄອນ ອ້າຍເອີຍ



# ຮູບລວງຕາ ປັນຍາຄວນຄິດ

**ໂດຍ:ສີສະອາດ ດວງພະຈັນ**

.............................................................

ດວງເດືອນສູງເດັ່ນຟ້າ    ໄກທ່າງໂລກາ    ຫຼາຍແລ້ວ
ແຕ່ວ່າປັນຍາຄົນ    ກໍຄິດຄຳນວນໄດ້
ບາດວ່າດວງໃຈອ້າຍ    ທີ່ຄຽງຄອງນ້ອງຢູ່
ຮູ້ບໍ່ ? ຮູ້ວ່າໃຈໜ່ວຍນີ້    ມີຫຍັງຊ້ອນຊ່ອນໃນ    ນ້ອງເອີຍ

ນ້ອງເອີຍ ! ຖ້າວ່ານ້ອງຢາກຮູ້    ມີຫຍັງຢູ່ໃນກະໃຈຮຽມນີ້
ອັນທີ່ມອງແລຫຼຽວ    ເບິ່ງການໄກ-ໃກ້
ອັນໃດເປັນຂອງແທ້ + ຂອງປອມ    ໃຫ້ນ້ອງອ່ານເອົາເນີ
ບໍ່ແມ່ນພານພົບໜ້າ    ງາມແລ້ວ ພັດວ່າດີ    ບໍ່ເປັນບໍ?

ຢູ່ໃນໂລກລຸ່ມນີ້    ມີຫຼາຍສິ່ງທີ່ສັບສົນ    ແທ້ໄດ
ປົນເປກັນຫຼາຍສີ    ຊົ່ວດີກໍ່ມີພ້ອມ
ບາງເທື່ອສີສັນໜ້າ    ກາດຳປາກບໍ່ມ່ວນ    ນັ້ນນາ
ສ່ວນຈິດໃຈພັດຊື່ຕັ້ງ    ຈິງຈັງແທ້ຕໍ່ນາງ    ນ້ອງເອີຍ




ບາງຄືນຮູບຮ່າງໂກ້　　ໂອ້ອວດໂສພາ
ຕະຫຼອດທັງວາຈາ　　ທ່າທາງສະຫງ່ຽມພ້ອມ
ບາດວ່າໃຈຈິງນັ້ນ　　ກັບລວງຫວັງລໍ້ຫຼອກ
ຂໍບອກນາງນາດນ້ອງ　　ຈຳໄວ້ເພື່ອເບິ່ງຄືນ　　ນ້ອງເອີຍ

ດ້ວຍຄວາມຮັກ ແລະຫ່ວງນ້ອງ　　ພີ່ຈິ່ງຝາກຄວາມຄິດ
ມິດຄືຄືນຫວັງດີ　　ຮ່ວມທາງກໍສຸດເສັ້ນ
ແມ່ນວ່າເປັນຫຼືຕາຍນັ້ນ　　ບໍ່ທັນເຫຼົບຫຼີກ
ສຸກ - ທຸກກໍຈະພີປີກຕູ້ມ　　ໃຫ້ນວນນ້ອງອຸ່ນໃຈ　　ນ້ອງເອີຍ

ອັນວ່າໃນໂລກນີ້　　ມີພັນລ້ຽມແສນກົນ　　ນ້ອງເອີຍ
ຄັນຫຼົງເຊື່ອຄາລົມຄົນ　　ຊິບາດຄຳຄາງແປ້ວ
ຄວນອາໄສຕາແກ້ວ　　ອິນຊີຍານແຍກອອກ
ປັນຍາຄວນຄິດຖ້ວນ　　ສະຕິຕັ້ງຕື່ນລະວັງ　　ຊອບແລ້ວ

ຖ້ານ້ອງຫາກຄິດຄົ້ນ　　ຖ້ວນຖີ່ພິຈາລະນາ
ຄວາມຜາສຸກໃນການງານ　　ແລະຄອບຄົວຈະຄົງໝັ້ນ
ຄວາມສຸກສັນຈະມີຂື້ນ　　ບໍ່ຄອນແຄນ ແລະ ໄຫວຫວັ່ນ
ທຸກສິ່ງຈະໄປເຖິງບ່ອນນັ້ນ　　ທີ່ໝາຍມຸ້ງປາຖະໜາ　　ນັ້ນແລ້ວ





# ງາມແທ້ສາວລາວ

**ໂດຍ: ຊ. ວົງພູທອນ**

ງາມຍິ່ງ ມາລະຍາດນ້ອງ　　ຍາມຍ່າງໄປມາ
ວາດຄຸ່ມຄົມຄືຫົງ　　ເຜັ່ນຜະໂຍມບິນຜ້າຍ
ຍາມນ້ອງວາຈາຕ້ານ　　ເຜີຍຮອຍຍິ້ມອອກ
ໃນຕາຫວານຢາດເຍີ້ມ　　ແຍງແລ້ວເປີດບໍ່ເປັນ

ຊົງຜົມນາງຈິ່ງເກົ້າ　　ປັກປິ່ນແຊມປະດັບ
ທັງອາພອນແພໄໝ　　ບ່ຽງສະໄບບົງຕຸ້ມ
ນຸ່ງສິ້ນລາວງາມຢ້ອງ　　ໃຜເຫັນກໍວ່າຄ່ອງ
ຄຳປາກຫວານກວ່າອ້ອຍ　　ຍິນຂ້ອນຂອດສະເໜ　　ນັ້ນແລ້ວ

ອັນທີ່ພິເສດແທ້　　ຈາຮີດສາວລາວ　　ຮຽມນັ້ນ
ເຮືອນສາມນ້ຳສີ່ບູຮານສອນ　　ສືບມານານລ້ຳ
ນັ້ນແມ່ນເຮືອນຄົວພ້ອມ　　ເຮືອນນອນດູສະອາດ
ທັງເຮືອນຜົມເກດເກົ້າ　　ງາມລ້ຳເທບທິດາ

ຄັນຫາກມີພີ່ນ້ອງ　　ຊຸມແຂກຢາມເຮືອນ　　ເມື່ອໃດ
ນາງຫາກຂົນຂວາຍຫາ　　ສູ່ອັນມວນພ້ອມ
ນ້ຳດື່ມຄັນໂທເຕົ້າ　　ວາລີສົ່ງສ່ວຍ
ຂັນໝາກ-ຢາຍົກຕັ້ງ　　ນ້ຳໃຈເອື້ອເຟື້ອຜາຍ

ຕັ້ງຫາກງາມຍິ່ງລ້ຳ　　ຫາໃສປຽບສາວລາວ　　ຮຽມນີ້
ຂໍເຈົ້າແພງພຽນຖະໜອມ　　ຮີດຄອງເຮົາໄວ້
ຢ່າໄດ້ໄປສະແຫວງເຊື້ອ　　ປະເພນີບ້ານເພິ່ນບໍ່ດີເນີ
ມັນຊິໝອງໝົ່ນເສົ້າ　　ເສຍຊັ້ນຊື່ລາວ　　ເຮົາໃດ.





# ກະຕັນຍູ ລ້ອມເພັດ

**ໂດຍ: ແສງຜາເມືອງ**

..................................................

ເພັດນ້ຳໜຶ່ງ ວ່ານັ້ນ ແມ່ນແມ່ໃນດວງໃຈ
ຈະຫາໃສ ແຫ່ງໃດ ແມ່ນບໍ່ມີມາທຽບ
ແມ່ນັ້ນປຽບ ສະເໝືອນ ແກ້ວມະນີໃສສາຍສ່ອງ
ຖ້າຈະມອງ ຮອບດ້ານ ຜົນງານແມ່ນັ້ນໃຫຍ່ຫຼວງ
ປຽບດັ່ງເພັດ ນ້ຳຄ້າງ ແມ່ບໍ່ມີວັນຕົກ
ເປັນມໍລະດົກ ຫົວໃຈ ລູກທຸກຄົນໃນໂລກ
ລູກມີໂຊກ ມື້ນີ້ ແມ່ນແມ່ໃຫ້ກຳເນີດມາ
ລູກປາຖະໜາ ສິ່ງໃດ ແມ່ນແມ່ຫາມາໃຫ້
ລູກຈຶ່ງໄດ້ ເຕີບໃຫຍ່ ມາເປັນຄົນແມ່ເອີຍ
ລູກຂໍເອີຍ ຄຳຊົມ ວ່າແມ່ຕົນເປັນເພັດ
ລູກຈະເຮັດ ວົງແຫວນ ດ້ວຍຄຸນກະຕັນຍູ
ຕິດແມ່ຢູ່ ສົມສຸກ ບໍ່ໃຫ້ທຸກວຽນມາໃກ້ ແມ່ເຮີຍ !
ບົວລະບັດຂັດສີໃຫ້ແວວວາວເຫຼື້ອມຕະຫຼອດການ)





# ແມ່ຄືຜູ້ໃຫ້

**ໂດຍ: ດອກຈານ**

.......................................................

ຄຳວ່າ "ແມ່" ແມ່ນີ້ ຍິ່ງໃຫຍ່ມະຫາສານ
ຫາຄຳໃດມາປານ ບໍ່ທ່ອນທຽມແທນໄດ້
ໃຈແມ່ດີເໝືອນພະເຈົ້າ ຄອຍພ່ຳພຽນສອນ
ໃຫ້ລູກວອນແວນດີ ທົ່ວທຸກຄົນພຽງພ້ອມ

ຍາມເມື່ອລູກປ່ວຍໄຂ້ ເອົາໃຈໃສ່ພະຍາບານ
ທຸກເຊົ້າສວາຍບ່າຍແລງ ແມ່ໝັ່ນປຸງຢາປ້ອນ
ທັງເລົ່າວອນວານໄຫວ້ ພາວະນາໃຫ້ລູກສວ່າງ
ຍູງກໍບໍ່ໃຫ້ໄຕ່ໄຮກໍບໍ່ໃຫ້ຕ້ອງ ຖະໜອມຕຸ້ມຕ່ອມແພງ

ແມ່ນັ້ນມີແຕ່ໃຫ້ ເໝືອນດັ່ງທະນາຄານ
ທຶນສິ່ງເສີມທຳກິນ ແມ່ແບ່ງປຸນປັນລ້ຽງ
ທັງນຳພາປະຢັດໃຊ້ ອົດອອມຢອມຈ່າຍ
ຫວັງຊ່ວຍຊູສິ່ງສ້າງ ຈະເລີນກ້າວຮຸ່ງເຮືອງ



ແມ່ປຽບເໝືອນແຜ່ນຟ້າ     ພະສຸທາທີ່ອາໄສ   ເຮົານີ້
ທີ່ເພິ່ງພາທາງໃຈ     ເຂື່ອນແຂງຄົງໝັ້ນ
ຄັນລູກມີບັນຫາຫຍຸ້ງ     ມຸງມາກໍຊີ້ຊ່ອງ
ທັງລະດົມໃຫ້ຖືກຄອງຄ່ອງແຄ້ວ     ທຳນຽມບ້ານຊອບທຳ

ແມ່ປຽບດັ່ງຕົ້ນໄມ້     ໂພໃຫຍ່ໃບໜາ
ແຕກກິ່ງກໍ່ສາຂາ     ໃຫ້ຮົ່ມເງົາເຊົາຊຸ້ນ
ລົມ ຫຼື ຝົນພານຕ້ອງ     ບໍ່ໝອງໃຈທຸກເຊົ້າຄ່ຳ
ປັດເປົ່າຄວາມໂສກເສົ້າ     ສະບາຍບ້າງແມ່ແພງ   ແທ້ນາ

ແມ່ປຽບດັ່ງເພັດແກ້ວ     ແວວວາດ ສົດໃສ
ນ້ຳໜຶ່ງຄຸນຄວາມດີ     ບໍ່ຫຼ່າສີສູນເສົ້າ
ເຮືອງເຮື່ອງາມເງົາແຈ້ງ     ພະຈັນເພັງໃສສ່ອງ
ສາຍຕາແມ່ລ່ຳຈ້ອງ     ທຸກວັນຄືນບ່າຍເຊົ້າ
ນຳເຈົ້າກໍດັ່ງດຽວ ນັ້ນແລ້ວ

# ແມ່ເອີຍ...,
# ເປັນຫຍັງຈຶ່ງຮັກລູກແທ້ ?

**ໂດຍ: ສາຍດາຣາ**



...................................................................

"ແມ່" ! ຜູ້ຍິງຄົນໜຶ່ງທີ່ຫ່ວງຫາອາທອນ...
ຄິດຮອດຄິດເຖິງລູກ....ໃນທຸກໆລົມຫາຍໃຈ.
ລູກຢູ່ໃນທ້ອງ ...ແມ່ລໍຄອຍຮ້ອນໃຈ
ກັງວົນຫຼາຍໆຢ່າງ..ແມ່ນັ່ງນັບວັນເວລາ
ເວລາເກີດ... ແມ່ເຈັບປວດທົນທຸກທໍລະມານ ...
ແມ່ບາງຄົນກໍຈາກໄປຕອນທີ່ລູກເກີດມາ
ເມື່ອຍິນສຽງໄຫ້...ໄດ້ເຫັນໜ້ານາທີທຳອິດ...ຄວາມຮູ້ສຶກເຈັບປວດ
ກໍທຸເລົາເບົາບາງລົງ...
ແມ່ລູບແກ້ມ, ດົມຂະໝ່ອມ... ແມ່ຍິ້ມຫົວພາກພູມໃຈ...
ແມ່ຕື້ນຕັນໃຈທີ່ໄດ້ເປັນແມ່ຂອງລູກ
ຫຼາຍມື້ຜ່ານໄປ ຄຳທຳອິດທີ່ລູກເອີ້ນກໍຄືແມ່,
ຈົນຮອດມື້ນີ້ ລູກກໍຍັງເອີ້ນແມ່ບໍ່ເຄີຍປ່ຽນແປງ
ຕັກຂອງແມ່ນຸ້ມນວນ ອ້ອມກອດກໍແສນອົບອຸ່ນ
ສຽງເວົ້າຂອງແມ່ອ່ອນຫວານ...ນິ້ມນວນ
ບ່າໄຫລ່ຂອງແມ່ແຮ່ງເຢັນສະບາຍ  ເວລານອນ
ລູກບໍ່ເຄີຍສົງໄສ ກັງວົນໃຈໃດໆ...
ນອນ... ສາຫລ້າ... ຫຼັບຕາແມ່ຊິກ່ອມ....
ຫອມ...ຂະໝ່ອມນ້ອຍ... ຫຼັບແລ້ວແມ່ຊິໄກວ
ແມ່...ໄປໄຮ່...ໄດ້ໄກ່ຄືນມາ ....ພໍ່...ໄປນາ...ໄດ້ປາກັບເຂົ້າ
ຕື່ນມື້ເຊົ້າ....ມາກິນເຂົ້ານຳປາ    ອື່ ! ຮື !ອື່...ຮື ! ອື່ !ຮື ! ອື່ !....
ນອນ ! ...ນອນເດີຫຼ້າ.....ຕື່ນຂຶ້ນມາ...ໃຫ້ເຈົ້າສູງໃຫຍ່
ເຂົ້າ...ກັບໄກ່.....ແມ່ກໍຊອກມາປະ...ເຂົ້າກັບປາ...ພໍ່ກໍຊອກມາຕ້ອນ
ຫຼັບສາທ້ອນ....ແພງຫຼ້າ....ອີແມ່ໄກວ...ອື່ ! ຮື !ອື່...ຮື ! ອື່ !ຮື ! ອື່ !....
ສຽງກ່ອມຂອງແມ່ ...  ເຮັດໃຫ້ລູກນ້ອຍຫຼັບຊື່ນຊ້ອຍ... ຢ່າງມີຄວາມສຸກ
ມີທີ່ອົບອຸ່ນ... ຄອຍຊຸກອູ່ແພອີໂປ້ ທີ່ຜູກກັບຕົ້ນໄມ້ ໄກວໂອນເອ່ນ ໄປໆມາໆ

ເດີກໆອາກາດເຢັນເຂົ້າຮອດກະດູກ
ແມ່ລຸກໄຕ້ທຽນໄຂໄລ່ຍຸງທີ່ບິນຕອມລູກດ້ວຍນໍ້າຕາ
ຂາຂອງລູກມີຕຸ່ມນ້ອຍແດງໆ... ເປັນຫຍັງ ຈຶ່ງມາກັດລູກຂ້ອຍນໍ ?
ແມ່ລັກຮ້ອງໄຫ້ຢູ່ຜູ້ດຽວ...
ນໍ້າຕາທີ່ຍ້ອຍລົງມາຖືກຂາ ເຮັດໃຫ້ລູກນ້ອຍຕື່ນ
ແລ້ວພິກຄີງຄ່ອຍໆໄປມາ ທຳທ່າຈະຮ້ອງໄຫ້.
ແມ່ຟ້າວເດ່ມືໄປຕົບກົ້ນຄ່ອຍໆ ...ຫົ່ມຜ້າ ແປງທ່ານອນໃຫ້ລູກໃໝ່
ລູກຈຶ່ງຫຼັບໄດ້ຢ່າງສະບາຍ

ອື່! ອື້! ອື່..ນອນສາລູກຫຼ້າ ບໍ່ມີຫຍັງດອກ...ແມ່ຢູ່ໃກ້ໆລູກນີ້ລະ.
ແມ່ຮູ້...ວ່າລູກຢາກຮ້າຍ

ເວລາລູກໄອ ແມ່ນອນໄຫ້ ດ້ວຍຄວາມເຈັບປວດ..
ເອົາພະຍາດມາໂຮມໄວ້ນຳແມ່ພື້ສາລູກ.

ເຖິງຈະມີມຸ້ງກາງ... ແຕ່ແມ່ກໍບໍ່ເຄີຍໄວ້ວາງໃຈ...
ຢູ່ກັບແມ່ລູກບໍ່ຢ້ານ ບໍ່ລະແວງເລືອງມົດມາໄຕ່ໄຮມາຕອມ
ແມ່ຖະໜອມຄືດັ່ງດວງໃຈ

ມືຮຽວນ້ອຍໃສບອບບາງຂອງແມ່
ເວລາລູບແກ້ມ ລູກຮູ້ສຶກອົບອຸ່ນ ແລະຫຼັບສະບາຍ.
ມີໃຜນໍ ! ຈະຮູ້ວ່າແມ່ກຳລັງທຸກໃຈ... ລູກຢາກໃຫ້ແມ່ອູ້ມ...ແມ່ກອດ...
ຢາກຍິນສຽງແມ່
ແມ່ເອີຍ ! ລູກຄິດຮອດແມ່ ! ເປັນຫຍັງແມ່ຄືຮັກລູກແທ້ນໍ້ ?.

"ແມ່" ຍິງຄົນດຽວທີ່ອຸ້ມທ້ອງ ອອງເຈ່ຍລູກບໍ່ເຄີຍປະ
"ແມ່" ກິນອາຫານຄາວຫວານ ຫ່ວງຄະນຶງນຳຂ້ອຍ
"ແມ່" ຄອຍດູແລຢືນຄຽງຂ້າງ ປູທົນທາງໃຫ້ຫຽວໄຕ່
"ແມ່" ຮັກລູກຫຼາຍຕາຍເພື່ອລູກກໍໄດ້ ໃນໂລກນີ້ຮັກແມ່ຫຼາຍ ແມ່ເອີຍ !

24/VII ບ້ານລາວເຮົາ

# ປາຢ້າງຄວນຢູ່ທົ້ງ

**ໂດຍ: ສ. ສີ ມຸກສະຫວັນ**

..........................................................

ຟັງເຢີ ບັງອອນເອ້    ນາມໜໍ່ສະຕີຍິງ    ຮຽມເອີຍ
ຟັງອວນເຜີຍຄຳຄົມ    ກາບກອນຖະແຫຼງເວົ້າ
ບໍ່ແມ່ນເອົາຄວາມສົ້ມ    ເຜັດ ເຄັມ ມາແທງເອືອບ    ດອກເນີ
ຫາກແມ່ນຄຸນຄ່າເຄົ້າ    ບູຮານພຸ້ນສັ່ງສອນ    ມາເນີ

ເພິ່ນວ່າແມວລັກກິນປາຢ້າງ    ທີ່ຍອງຢູ່ເຕົາໄຟ
ແຕະທົ້ງແຂວນໃນຄົວ    ບໍ່ມັກເຫຼືອຄົງຄ້າງ
ບູຮານເອົາຄຳນີ້    ມາປຸນປອງປານປຽບ
ເປັນດັ່ງຊາຍຊອກຊູ້    ເຊີຍຫຼິ້ນຊົ່ວຄາວ    ນັ້ນແລ້ວ

ຈິ່ງວ່າ ປາຢູ່ທົ້ງ    ຢ່າເຈີດເວີ່ນຫາແມວ
ເປັນສະຕີນາມສູງ    ຢ່າເກືອກຕົມເໜັນກຸ້ມ
ຊຸມສະຕີນາງນ້ອງ    ໃຫ້ຕຶກຕອງດູອ່ານ    ເອົາເນີ
ຄວາມສຳລານຊົ່ວຄັ້ງ    ຢ່າຫວັງພໍ້ພົບຫາ    ນ້ອງເອີຍ

ເປັນຍິງປຽບດັ່ງໄດ້    ປາໃຫຍ່ເທິງໄຟ    ນັ້ນແລ້ວ
ແມວຂະໂມຍຫວັງຂົບ    ໂມ່ມກືນລົງທ້ອງ
ພຽງພົບຕາມືຄວ້າ    ຄຳດຽວກືນລ່ອງ
ຄວາມໝັ້ນໝອງບາດທ້າຍ    ຊິຂາຍໜ້າໂຄດວົງ    ເຮົາແລ້ວ

ຊາຍມັກເວົ້າແມງເມົ່າບິນຢູ່ຟ້າ    ພີປີກສູງສັກ
ບັກອຶ່ງຢາງຄານນຳດິນ    ຢາກຈະກິນແມງໄມ້
ປຽບປະໄມເໝືອນນ້ອງ    ຄົນດີງາມເພັດນ້ຳໜຶ່ງ
ຊຶ່ງເໝືອນແມງເມົ່າຟ້າ    ຫາທາງພົ້ນປາກອຶ່ງຢາງ    ຊິໄດ້ບໍ?

ອັນວ່າ ປຽບດັ່ງເປັນປາຢ້າງ    ຢ່າຄາງຮອດຫາແມວ    ຊິໄດ້ບໍ?
ອັນວ່າແນວນາມຍິງ    ຍິ່ງຮັກສາສັກສີໄວ້
ປາຢ້າງເນົາໃນທົ້ງ    ຢ່າຕິງຄິງໃຫ້ແມວໂຫ່
ແມວຈະໂສກໍບໍ່ເຕື້ອງ    ຕິງເນື້ອເພື່ອຜູ້ຊາຍ    ນ້ອງເອີຍ

ເຫັນບໍ່ຍິງໃນຍຸກກ່ອນກີ້    ມີບົດບາດເໜືອບັນຍາຍ    ນ້ອງເອີຍ
ຮູ້ຖ່ອມກາຍຖະໜອມຄີງ    ຈຶ່ງແມ່ນຍິງງາມລົ້ນ
ແຕ່ບາງຄົນຍັງມົ້ວ    ມົວສຸມໃຫ້ສັກຕຳ່
ຄຳ່ບໍ່ນອນ ເວັນບໍ່ຈັ້ງ    ຫວັງພານພໍ້ພົບແຕ່ຊາຍ    ບໍ່ເປັນບໍ?

ຮູ້ບໍ່ ? ວັນທີ 20/7 ບອກໄວ້    ວັນໄຊແຫ່ງສະຕີລາວ
ແມ່ຍິງແມ່ນແນວນາມງາມ    ຈົ່ງຍົກສູງສະຕິຕັ້ງ
ຢ່າຫວັງເນົາມົວຫຼິ້ນ    ເຫຼືອຄະນາແນວບໍ່ແມ່ນ
ບູຮານສອນສັ່ງໄວ້    ໃຫ້ພຽນສ້າງແຕ່ສິ່ງດີ    ນ້ອງເອີຍ

ວັນທີ 20/7+8/3 ນີ້    ໃຫ້ເປັນທີ່ສຳລານຈິດ
ຮຳ່ຮຽນເອົາແນວຄິດ    ສິ່ງທີ່ດີປະເດີມໄວ້
ຢ່າໄດ້ເປັນປາຢ້າງ    ຄາງຫາແມວແນວບໍ່ຄ່ອງ
ທັດສະນະຄຸນສົມບັດໃຫ້ຖືກຕ້ອງ    ສັງຄົມຍ້ອງຍົກສູງ    ແທ້ແລ້ວ

ຮຽກຮ້ອງນວນນາດນ້ອງ    ຟັງຜູ້ໃຫຍ່ຕັກເຕືອນ    ແດ່ເດີ
ພໍ່ແມ່ສອນຄວາມດີ    ຈົ່ງຮັບຟັງຢ່າຖຽງຖ້ອຍ
ຈົ່ງຄ່ອຍທັນເປັນເຈົ້າ    ຄືງເຮົາໃສສະອາດ
ບາດເທື່ອພານພົບພໍ້    ຈະຍໍຍູ້ກຽດທະນົງ    ນ້ອງເອີຍ

ຂໍອະໄພໂທດທ້ອນ    ພະຄຸນແມ່ຜູ້ສອນຫຼານ
ກໍ່ເຫັນໃຈເຕັມທີ    ຈຶ່ງແຕ່ງກອນວອນເວົ້າ
ເພື່ອປະສານງານເຂົ້າ    ຄຳສອນຂອງພໍ່ແມ່
ເພື່ອຈະເຜີຍແຜ່ກວ້າງ    ເມືອໜ້າຊ່ວຍກັນ ພໍ່ແມ່ເອີຍ!



# ມອບແດ່ແມ່

## ໂດຍ: ສຸພາບ ມາລາສະຫວັນ

.............................................................

ຮຽນນີ້ ຂໍມອບນ້ອມ    ຄຸນແມ່ເໜືອຫົວ
ມີພະຄຸນເຫຼືອຫຼາຍ    ຕໍ່ຮຽມບຸດຕານ້ອຍ
ບໍ່ມີຫຍັງຈະມາເທົ້າ    ປຸນປານພະຄຸນແມ່
ຄຸນແມ່ມີເທົ່າຟ້າ    ຂໍຍໍໄວ້ທີ່ສູງ ແມ່ເອີຍ
ມະນຸດເຮົາ ໂລກນີ້ ລ້ວນແຕ່ເກີດຈາກມານດາ
ກ່ອນຈະເປັນຄົນມາ    ດັ່ງເຮົາດຽວນີ້
ໃຜກໍເອົາຕົນຕັ້ງ    ໃນຄັນທ້ອງແມ່

ເຖິງແກ່ເດືອນຂວບຂັ້ນ    ເປັນຄົນໄດ້ເກີດມາ
ບໍ່ແມ່ນຫາເລື່ອງເວົ້າ    ປັ້ນແຕ່ງໃຫ້ເປັນກອນ
ມະນຸດ ເຮົາທັງໝົດ    ຄົງຮູ້ກັນມາແລ້ວ
ເພິ່ນວ່າ... ເກີດມາເປັນຍິງນີ້    ແສນເຕັມທີ່ຍາມລ້ຽງລູກ
ເຖິງມີພໍ່ ຄອຍຊູກຍູ້    ບໍ່ພຽງໄດ້ດັ່ງແມ່ເຮົາ    ແທ້ດາຍ
ເມື່ອອາຍຸເຂົ້າຂັ້ນ    ບຸດອ່ອນເຈັດປີ
ແມ່ຊອກທາງທີ່ດີ    ເພື່ອສັ່ງສອນນາງທ້າວ
ນຳສິ່ງທາງແລງເຊົ້າ    ໄປຮຽນຂຽນອ່ານ
ໃຫ້ລູກມອງເບິ່ງເທົ້າ    ໂລກາກວ້າງທົ່ວເຖິງ
ຄັນຊິນັບໃຫ້ຖ້ວນ    ພະຄຸນຍິ່ງ ມານດາ
ບໍ່ອາດພັນລະນາໝົດ    ໃຫ້ໝູ່ເຮົາຟັງໄດ້
ຄຳບູຮານຕັ້ງແຕ່ກີ້    ເຄີຍບອກເລົ່າເປັນຄຳກອນ
ເປັນຄະຕິເຕືອນໃຈ    ໝູ່ເຮົາໃນຄາວນັ້ນ
ອັນວ່າ ກຳພ້າພໍ່ນັ້ນ    ຈົນເທົ່າໃດຍັງພໍຢູ່
ຄັນວ່າ ກຳພ້າແມ່ແລ້ວ    ແພຊິຕູ້ມກໍບໍ່ມີ    ແທ້ດາຍ
ຕົກມາໃນຍຸກນີ້    ກໍເໝືອນດັ່ງດຽວກັນ
ສິ່ງສຳຄັນແມ່ຍິງລາວ    ປຽບດັ່ງດາວນະພາກວ້າງ
ຍິງປະກອບສ່ວນສ້າງ    ຄຽງຊາຍບໍ່ຕົກຕ່ຳ
ພ້ອມພ່ຳພຽນແລລ້ຽງ    ບຸດຕາໃຫ້ລູກຄົງ
ຍາມເມື່ອ ເຂົາໃຫຍ່ຖ້ວນ    ປະກອບສ່ວນເພື່ອສັງຄົມ
ປະຕິບັດຕົນເຮັດພັນທະ    ຕໍ່ຊາດປະຊາໃຫ້ຮຸ່ງເຮືອງ
ຈະເລີນກ້າວ.




# ສາວລາວແທ້

## ຄຳອອນ ເພັດດາວເຮືອງ

........................................................

ຕີນ ແມ່ນພາຫະນະໃຕ້ ສຳຄັນຍິ່ງພາເດີນ
ຜົມ ສະຖິດເທິງສູງສຸດ ຊ່ວຍຊີງໃຫ້ງາມແຍ້ມ
ກໍ ຫາກສຳຄັນແທ້ ອັນໃດກໍກ້ຳເກິ່ງ
ລຳ ແຍງແລ້ວລັກຍິ້ມ ພິມພຳຍ້ອງຢູ່ໃຈ ນີ້ແລ້ວ

ກັ່ງງ ຂຳງາມລ້ອຍຊ້ອຍ ທາງພາຍນອກ ແລະ ພາຍໃນ
ຕີນ ມືກົມສະອາດຕາ ບໍ່ແຕ່ງສີເສີມແຕ້ມ
ສິ້ນ ຕໍ່ຕີນແອວທ້ອນ ບໍ່ແປນສາຍບືໃຫ້ຄົນເບິ່ງ
ກໍ ຫາກຍິນຊອບດ້ວຍ ຮັກສາໄດ້ຮີດຄອງ ນີ້ແລ້ວ

ລຳ ແລຫຼຽວເຫຼືອຕ້ອງ ນ້ອງນາດສາວລາວ ເຮົາເອີຍ
ພຽງ ເທົ່ານີ້ກໍຫາກມີສະເໜ ຫວ່ານຜູ້ຊົມທີ່ມາພໍ້
ງາມ ທັງກາຍາພ້ອມ ວາຈາກໍເວົ້າມ່ວນ
ນາ ນາຊາດເຫັນ ແລະ ຮູ້ ສາວລາວແລ້ວ
ຊີຍໍຍ້ອງຢ່າງເປີດໃຈ ແທ້ນໍ



# ລືມແລ້ວຫຼືຍັງ

**ໂດຍ: ສາຍໃຈ ລູກແມ່**

ກ່ອນຈະຂຽນຂີດແຕ້ມ ວາດແຕ່ງເປັນບົດກອນ
ເປັນອັກສອນເຊີງກະວີ ກ່າວໄຂຂານເວົ້າ
ອະໂຫສິນຳເຈົ້າ ສະຕີລາວນ້ອຍໃຫຍ່
ບ່ອນໃດຜິດພາດພັ້ງ ນາງນ້ອງໂປດອະໄພ ແມ່ເດີ

ບໍ່ແມ່ນຊາຍເຫັນໄດ້ ໃນແງ່ທາງຜິດ ດອກເດີ
ພາກສ່ວນດີກໍ່ມີຫຼາຍ ທີ່ຍິງກະທຳໄດ້
ຂໍຂອບໃຈນຳນ້ອງ ຊົມເຊີຍນາງຜູ້ວາດຄ່ອງ
ຮູ້ຮັກຮີດຮັກຄອງ ປະເພນີອັນຖືກຕ້ອງນາງນ້ອງຈື່ຈຳ

ແຕ່ຢາກຂໍກ່າວເວົ້າ ຍິງກຸ່ມໜຶ່ງທີ່ຊາຍເຫັນ
ເປັນການຂືນຂັດຕາ ຜ່ານມາຫຼາຍຄັ້ງ
ຫວັງວ່ານົງຄານຫຼ້າ ຍິງລາວຄືນໃໝ່
ຈະບໍ່ເສຍໃຈຫາກວ່າເປັນດັ່ງເວົ້າ ໃຫ້ນາງຟ້າວປ່ຽນແປງ ໃໝ່ເດີ

ເຊົ້າແລງ ເດີນເຜັ້ນຜ້າຍ ໝ່າຍອ້າຍບ່າວເຮັດຕາຫວານ
ການງານໄລລາປະ ບໍ່ຫ່ວງຫາທຳສ້າງ
ຍ່າງກາງເຮືອນພໍປານເຕັ້ນ ຫັດກາຍຢູ່ກາງເດີນ
ຟັງສຽງຂານກູກເອີ້ນ ປານເສືອຮ້ອງຂູ່ຄືນ

ຟັງສຽງຫົວເພິ່ນພົ້ນ ສາມສີ່ຫຼັງຄາເຮືອນ
ລືມແລ້ວບໍ! ຄຳຄົນເຖົ້າ ບູຮານເຮົາເພິ່ນເຄີຍກ່າວ
"ເປັນຍິງປາກໂຜ່ລົ້ນ ຄົນເຂົາເຍີ້ຍອະເຫີຍຫົວ"



ແຕ່ງຕົວບໍ່ຖືກຕ້ອງ　　ເອ້ຍ່ອງບໍ່ເໝາະສົມ
ແບບສັງຄົມຕາເວັນຕົກ　　ລືມປະເພນີເຄົ້າ
ໃຫ້ນ້ອງເຊົາສາທ້ອນ　　ແນວບໍ່ດີໃຫ້ຮີບປ່ຽນ
ຄົນທັງຫຼາຍເຂົາຊິຫົວເຍາະເຍີ້ຍ　　ນິນທາເວົ້າກ່າວຂວັນ　　ເຈົ້ານາ

ລືມແລ້ວບໍນ້ອງນາດຫຼ້າ　　ສິ້ນໝີ່ແພໄໝ
ສັງຊິໄລລືມຫຼົງ　　ເພດຊົງລາວນີ້
ລືມລື? ອາພອນຜ້າ　　ແພສະໄບບ່ຽງບ່າ
ລືມຮອດຫຼາປັ່ນຝ້າຍ　　ລືມໝົດສ້ຽງຄູ່ສູ່ອັນ　　ຊັ້ນບໍ?

ໂອນໍ ເຈົ້າຜູ້ພົ້ວດອກຊ້ອນ　　ກິ່ນອ່ອນໂຮຍຫອມ　　ຮຽມເອີຍ
ມີພົ້ວຊອນດົກໜາ　　ງ່າເງີຍ ງອຍຕົ້ນ
ຊິເອົາຕົນໄປທ້ອຍ　　ແຊມເທິງຕົ້ນສະມັ່ງ　　ເປັນລື?
ຊາດຊີ້ແນວດອກຊ້ອນ　　ຊິເສຍຍ້ອນສະມັ່ງລວງ　　ແລ້ວນໍ!

ຂໍແດ່ນົງນາດນ້ອງ　　ຜູ້ນາມຄ່ອງຍິງລາວ　　ໃໝ່ນີ້
ປະເພນີອັນດີງາມ　　ຈົ່ງຮັກແພງພຽງໄວ້
ສົມພັກເຮົາ ເພິ່ນຂະໜານນາມໃຫ້ ເປັນຂວັນໃຈຂອງຊາດ　　ແດ່ເນີ!
ເປັນພົນລະເມືອງດີເລີດລ້ຳ　　ເປັນເມຍຄຳແມ່ຄູນ　　ນັ້ນເນີ!

# ຄວາມງາມຕາມດ້ວຍຄວາມດີ

**ຄຳອອນ ເພັດດາວເຮືອງ**

.......................................................

ອາພອນລາວໄດ້ຈັດຕັ້ງ ປະກວດເຄື່ອງຄຽງໂສມ
ນາງສາວລາວເປັນບັນທັດ ເຄື່ອງງາມເມື່ອຍາມເອ້
ຄືບໍ່ເຫັນສາວແສ້ ຫຼາຍແຂວງມາປະກວດ ແດ່ບໍ່?
ຫຼືວ່າຍັງບໍ່ພ້ອມ ພາຍໜ້າຈຶ່ງຈະມາ ຊັ້ນບໍ?

ຂໍຮ່ວມຊົມເຊີຍຍ້ອງ ສາວລາວຜູ້ສະຫງ່າ
ມີລາສີໂນ້ມນ້າວ ເອົາສະພາຍເອ້ບ່ຽງບົງ
ມີຜູ້ຊີງເອົາໄດ້ ມົງກຸດໝາຍວ່າເປັນເອກ
ໜຶ່ງໃນຫ້າທີ່ເລືອກໄດ້ ຄວາມຮູ້ກໍ່ຄູ່ຄຽງ ແທ້ນໍ!

ປະເທດຊາດໄດ້ເປີດກວ້າງ ໄປສູ່ສາກົນ
ຜົນຂອງການເສັງນາງງາມ ແມ່ນຄູ່ຄຽງຫຼາຍດ້ານ
ໄດ້ປະສານໄປພ້ອມ ການນຸ່ງຖືລາວບໍ່ແຕ້ມຕ່ຳ
ວັດທະນະທຳຍອດຢ້ຽມ ໃຜເຫັນແລ້ວກໍ່ຊື່ນຊົມ ແທ້ນາ

ການປະກວດແຕ່ລະຄັ້ງ ກຳມະການນັ່ງອົນລະຫົນ
ສົນພະໄທໃນຄວາມງາມ ແຕ່ລະຄົນເມື່ອເດີນຍ້າຍ
ເວລາຫົວເຫັນແຂ້ວ ຂາວງາມແກ້ມບ່ອງ
ສ່ອງສາຍຕາເຫຼືອດຍິ້ມ ກຳມະການຄ້ອຍຕື່ນຕາ ແທ້ແລ້ວ

ເອກະລັກສາວແຕ່ລະແຄວ້ນ ແດນແຫ່ງຈຳປາ ລາວນີ້
ສັງວ່າມີສະເໜຫາ ທົ່ວທາງເໜືອໃຕ້
ສາວທາງເໜືອຮັກສາໄວ້ ອໍລະຊອນຟ້ອນໃຫ້ເບິ່ງ
ອັນວ່າສາວແດນກາງ ແລະ ໃຕ້ ສັບພະລຳ ສັບພະເຕີ້ຍ
ແດນນີ້ເໝາະອີຫຼີ ແທ້ໄດ



ອັນວ່າສາວຊຽງຂວາງນັ້ນ ຍັງກຽມຢູ່ໃນໃຈ ແມ່ນບໍ່?
ຍັງຈະຫັດທ່າທາງ ຍ່າງເດີນເພີນຍ້າຍ
ມີຄວາມໝາຍວາງໄວ້ ທີ່ຫຼັງຈະມາແຂ່ງ
ເລື່ອງຈະໄດ້ ຫຼື ບໍ່ໄດ້ ຫຼາຍຄັ້ງຈັ່ງວ່າກັນ ກຳມະການເອີຍ!

ສິ່ງທີ່ເໝາະສົມແທ້ໆ ກັບສາວຊ່າເມືອງຊຽງ
ເພິ່ນມັກລອຍລົມລົງ ຈາກເວຫາຟ້າ
ເພາະວ່າເວທີກວ້າງ ກວາງໄກຍູທ່າງແອ່ນ
ພ້ອມທັງພີປີກອ້າ ຜະຫວາຈ້ອງຈ່ອງຄີງ ເກັ່ງເດ!

ດ້ານໜຶ່ງເພິ່ນສະໝັກເປ້ເຂົ້າ ແລະຂົນສົ່ງສະບຽງອາຫານ
ຍາມເມື່ອມີໄພພານ ກໍ່ອອກເປັນທະຫານກ້າ
ຕົວຢ່າງກອງເຈັດຫົກເກົ້າ ແລະ ກອງສາມຫົກແປດ (C769+C368)
ມີຜົນງານເອກອ້າງ ໃນປື້ມກະດາດຄຳ ໄວ້ແລ້ວ

ຂໍໃຫ້ຄົນຮຸ່ນນ້ອຍ ພວມຂຶ້ນໃໝ່ຊອນສາວ
ຈົ່ງພາກັນກະກຽມ ຮັກສາກາຍຍາເນື້ອ
ພ້ອມທັງກຽມຄວາມຮູ້ ຄວາມດີ ແລະ ຄວາມເກັ່ງ
ບາດສອບເສັງ (ປະກວດ) ໃຫ້ມັນໄດ້ຮອບດ້ານ
ຈຶ່ງສົມແທ້ວ່າງາມ ນັ້ນເນີ!!

# ແດ່ແມ່

## ໂດຍ: ສົມພົງ ສັກດີ

..................................................

ແມ່! ຄຳໃດສັ່ນສະທ້ານ ຫຼຽມເທົ່າສຳນວນຫອມ ນີ້ນໍ!
ຫອມເກີ່ງສວນມາລາ ກິ່ນກະຈາຍປະສານເຊື້ອ
ແດ່ແມ່ ມວນມີໃຫ້ ກາຍໃຈຮຽມມອບ
ແດ່ແມ່ ພອນສິ່ງແກ້ວ ສະຖຽນໝັ້ນເຈົ້າຢູ່ເຢັນ ແທ້ເນີ!

ແມ່ເອີຍ! ລູກນີ້ຈາລຶກໝັ້ນ ຄຸນແມ່ມະຫາສານ
ຄິດແຕ່ຄວາມຍັງເຍົາ ແມ່ພຽນແພງຕູ້ມ
ມີແມ່ ໄຊຊູຊວ້ານ ຈູງແຂນພາຍຍ່າງ
ມີແມ່ ສອນປາກເວົ້າ ຟັງຮູ້ຄູ່ຄວາມ ຄືນແລ!

ຍາມຄ່ຳຄືນລູກໄຫ້ ມານດາທຸກທົນນຳ
ບໍ່ວ່າດີຫຼືເຈັບ ປວດປາງຮົນຮ້ອນ
ຄືນລູກຫິວຊົມຊ້ອຍ ມານດາສົດຊື່ນ
ທຸກທົ່ວ ທັງໂລກກວ້າງ ແພງນ້ອຍລື່ນໃຜ ແທ້ແລ້ວ!

ແມ່ຍັງ ຝັງໃສ່ເນື້ອ ສຳນວນຮັກຄຳຫວານ
ຝັງທັງປັດຊະຍາ ຮັກປະຊາຊາວເຊື້ອ
ຮັກກຳມະກອນຊັ້ນ ຖະໜອມຄຸນຊີວິດໃໝ່
ຮັກແຮງງານເກົ່າຫ້າວ ຮຽນຮູ້ຄ່າດິນ ແທ້ແລ້ວ!

ຈຳແມ່ນໝັ້ນ ອາຍອຸ່ນໃນຊວງ ແມ່ນັ້ນ
ຍາມແມ່ອອຍເອົາຮຽມ ໂອບຄີງຈົນສະອື້ນ
ຈຳໄດ້ເພງຫວານອ້ອນ ຍາມນອນແມ່ກ່ອມ
ຈຳສຽງຊົມອິ່ນອ້ອຍ ອາຫານປ້ອນແຊບນົວ ແມ່ເອີຍ

ຮັກແມ່ ຕາມທິດຊີ້ ຕັ້ງໃຈແອບຝຶກຝົນ
ສ້າງຕົນເປັນຄົນດີ ດັ່ງແມ່ມີໝາຍປັ້ນ
ເຝິກຈົນເປັນດວງແກ້ວ ດວງຕາຂອງແມ່
8 ມີນາວັນແມ່ນີ້ ອວຍພອນເຈົ້າແກ່ນແຂງ ຄູ່ຮຽມເນີ!



# ໄມ້ໃກ້ຝັ່ງ

**ໂດຍ: ສາຍຄຳ ພົມມະຈັນ**

........................................

ພໍ່ແມ່ເຖົ້າແກ່ແລ້ວ    ຈະຍັ້ງຢູ່ບໍ່ດົນນານ    ດອກເດີ
ມີແຕ່ພົມພຳໃຈ    ທຸກຍາມບໍ່ວາງເວັ້ນ
ຄວາມຈິງບໍ່ຢາກໄລໄກຂ້າງ    ເຫຼັນຫຼານແລະລູກໆ
ແຕ່ກົດເກນບົ່ງຊີ້    ກໍຈຳຕ້ອງເຄື່ອນໝູນ    ລູກເອີຍ
ຖ້າວ່າພວກລູກເຕົ້າ    ເຄົາລົບຄ່າຄຸນໂນ
ຂໍໃຫ້ເອົາຄວາມດີ    ອິ່ນອອຍບາງຄັ້ງ
ຖ້າຫາກທຳດີໄດ້    ກະທຳໄປໂດຍຕະຫຼອດ
ຄວາມສຸກສັນຈະເກີດຂຶ້ນ    ກຳລັງໃຈນັ້ນຍິ່ງຜູກພັນ    ລູກເອີຍ
ຍາມເມື່ອເຖົ້າແກ່ແລ້ວ    ພັດກັບກ່າຍກາຍເປັນເດັກ
ລູກຫຼານພານໃຈຈືດ    ກໍຄຽດດຳໃຈນ້ອຍ
ຄວາມທົນທານຄາວຫຼັງນັ້ນ    ຫາຍໄປໃສບໍ່ຮູ້ເມື່ອ
ຄວາມຫຼົງລືມເກີດຂຶ້ນ    ກິນແລ້ວກໍເລົ່າລືມ
ຂໍວອນພວກລູກເຕົ້າ    ຢ່າກະແທກຄວາມແຮງ    ໃສ່ເນີ
ຂໍໃຫ້ອົດໃຈນຳ    ອີກບໍ່ດົນຈະລາແລ້ວ
ຂໍແຕ່ຄວາມຫວານຍິ້ມ    ການກິນບໍ່ຕ້ອງເລັ່ງ
ຂໍກິນພຽງເລັກນ້ອຍ    ຈິງໃຈພ້ອມກໍອີ່ມໃຈ    ລູກເອີຍ
ແຕ່ລະຄົນກໍຈະເຖົ້າ    ເດີນໄຕ່ຕາມກົດເກນ
ຈຸດປະສົງຄືກັນ    ດັ່ງພໍ່ແມ່ວອນຄຽວນີ້
ວັດທະນະທຳລາວນີ້    ແສນດີແລະຍອດຍິ່ງ
ຈົ່ງເຜີຍແຜ່ແລະເອກອ້າງ    ສະແດງພ້ອມພຶດຕິກຳ
ຮາກບໍ່ຢັ່ງເລິກໄດ້    ໃບກໍລົ່ນລາສີ
ມີແຕ່ກຳແກນກົກ    ງ່າຕາຍສະຫຼາຍເລື້ອຍ
ເມື່ອຝົນເທທານຊົ້ງ    ໂງງງົງໂຕ້ນຳທັ່ງ
ທົນບໍ່ໄຫວກໍຫາກໂຫງ້ຍ    ໄຫຼລົງໃຕ້ຕ່ຳໆໄປ
ລາ ໆ ໆ...ພວກລູກກ່ອນ

ຫ້າມຈຳໜ່າຍ

# 20/07 ຢືນຍົງໃນດວງໃຈຂອງພວກເຮົາ

## ໂດຍ:ຄຳອອນ ເພັດດາວເຮືອງ

..............................................

ວັນທີ 20 ກໍລະກົດ ເປັນມື້ສ້າງຕັ້ງສັງກາດແຫ່ງສະຕີ
ແມ່ຍິງລາວຂອງເຮົາ ໄດ້ຮ່ວມໃຈໂຮມເຕົ້າ
ພັນເກົ້າຮ້ອຍຫ້າສິບຫ້າ ໝູນວຽນມາອີກຄັ້ງໃໝ່ 20/07/1955
ທຸກໆປີກໍໄດ້ ສະຫຼອງເຕົ້າຄົບຮັບ ແທ້ແລ້ວ

ຖ້າຈະທວນແຕ່ຄັ້ງ ປະຫວັດເລົ່າມີມາ
ມີບັນດາປ້າອາວຸໂສ ໄດ້ເບີກທາງໃຫ້ເຮົາກ້າວ
ຄາວນັ້ນແສນລະກຳເຫຼືອລົ້ນ ອັນຕະລາຍເອົາຊີວິດສ່ຽງ
ລ້ຽງກຳລັງຕໍ່ຕ້ານ ຢູ່ໄພກວ້າງຍ່ານຍາວ ນັ້ນນາ

ຫຼາຍປ້າໄດ້ສະຫຼະເລືອດເນື້ອ ເອົາຊີວິດລົງແລກ
ໃຊ້ສະຕິປັນຍາ ແລະເຫື່ອແຮງໂຮມສູ້
ພວກສັດຕູໄດ້ຕີຂ້າ ສະກັດທາງທັງຂົ່ມຂູ່
ຫຼາຍປ້າອົດລະທັດເຊື່ອງໄວ້ ບໍ່ໄຂຂໍ້ຕໍ່ມານ ແທ້ແລ້ວ

ຄວາມທຸກຂອງລູກເມຍຢູ່ບ້ານ ກໍ່ເໝືອນດ່ານແນວຮົບ
ຍາກສໍ່າໃດກໍພາກັນອົດ ອອກແຮງກະທຳສ້າງ
ບີແບ່ງອາຫານພ້ອມ ໂພຊະນັງທັງສືບຂ່າວ
ລິດລອດໄປສົ່ງໃຫ້ ຜູ້ເນົາລີ້ຢູ່ປ່າດົງ ພຸ້ນແລ້ວ

ແຕ່ລະມື້ຄິດຄ້ອຍໆ ຄອຍຊອກທາງເດີນ
ຫາວິທີພົວພັນ ສົ່ງຢາປາເຂົ້າ
ຄວາມທຸກທົນໝອງເສົ້າ ມະໂນໃນເອົ້າອັ້ງ
ນ້ຳຕາພັ່ງອາບແກ້ມ ໃຜບໍ່ຮູ້ຮ່ອມນຳ ແທ້ແລ້ວ

ຫຼາຍສິບປີຜ່ານພົ້ນ ທົນທຸກແຕ່ມີຫວັງ
ເມກມ່ານມາປົກບັງ ທົ່ວລາວຄາວນັ້ນ
ມັນໄດ້ກາຍເກີນແລ້ວ ມໍລະສຸມໄດ້ພັດຜ່ານ
ມານບຽດບຽນຊາດນັ້ນ ຍອມແລ້ວອອກໄປ ແລ້ວເດ

# ກອງປະຊຸມປະຈຳປີ 1977 ຂອງຄະນະຂົນຂວາຍສ້າງຕັ້ງ ສະມາຄົມແມ່ຍິງລາວຮັກຊາດແຂວງແລະກຳແພງນະຄອນວຽງຈັນ



| | | |
|---|---|---|
| ແສງຕາເວັນໄດ້ພຸ່ງພົ້ນ | ສາດສ່ອງໃສງາມ | |
| ຊື່ສຽງຂອງສາທາລາວ | ຊ່າໄກກວມກວ້າງ | |
| ພັກນຳພາລາວສ້າງ | ມີວິໄສທັດທ່ຽງ | |
| ຂໍພຽງຮັກທໍ່ຫຸ້ມ | ໝູນໃຊ້ພັດທະນາ | ນັ້ນທ້ອນ |
| | | |
| ສັບພະສິ່ງພ້ອມ | ການປະພຶດແລະປະຕິບັດ | |
| ຂໍໃຫ້ທວນເຫັນຮອຍ | ຄ່າຄຸນມູນເຊື້ອ | |
| ຢ່າໄດ້ເຫຼືອກະດັດໂອ້ | ລືມໂຕເຮັດບໍ່ທ່ຽງ | |
| ອຸດົມການຄາດໄວ້ | ຢ່າເວົ້າງໆຫ່າງໆທາງ | ພັກເນີ |
| | | |
| ໄຊຊະນະທີ່ຍາດໄດ້ | ພົ້ນຜ່ານກາຍມາ | |
| ແລກດ້ວຍສະຕິປັນຍາ | ເຫື່ອແຮງຊີວັງພ້ອມ | |
| ເລືອດຂອງລາວເທຍ້ອມ | ດິນລາວຈຶ່ງສູງຄ່າ | |
| ຄວນຮັກສາສືບສ້າງ | ມູນເຊື້ອທີ່ຜ່ານມາ | ນັ້ນທອນ |



# ນົມແມ່

**ໂດຍ: ນິວັດ ວົງສິນ**

ນົມແມ່ເຕົ່າຕຶ່ງຕັ້ງ    ເຕັ່ມອວບຕູມງາມ    ແທ້ນໍ
ນົມແມ່ຫອມຫວນຫວານ    ຫຼັ່ງລິນໂລມລ້ຽງ
ນົມແມ່ນວນນຽນນຸ້ມ    ເສາະໃສຜຸດຜ່ອງ
ອົກແມ່ອົບອຸ່ນອ້ອມ    ອວນນ້ອຍໜໍ່ສະກຸນ

ແມ່ຮັກອູ້ມອອດອ້ອນ    ສະໜິດແນບໃນອົກ    ລູກນາ
ຫອມແມ່ແພງເພິ່ງຈິດ    ກ່ອມພະໄນມິມົ້ວ
ວ່ອນວ່ອນ..ໄຫຍຫິວໄຫ້    ສະດຸດແດດິ້ນດັ່ນ
ມາດແມ່ນເຂີນຂາດຂ້ອນ    ນ້ຳນົມນັ້ນແມ່ນຕາຍ    ແທ້ນາ

ໄດ້ດູດດົມແນບເນື້ອ    ນົມແມ່ນອນຫຼັບ
ໄດ້ຄູ່ຄຽງວັນຄືນ    ຊື່ນຊົມ ສົມຊ້ອນ
ໄດ້ແມ່ແພງພຽນລ້ຽງ    ອົງອວນອ້ວນໃຫຍ່
ໄດ້ລາບຍົດ ໄດ້ຄູ່ຄອງຕ່ອນຕີ້    ເຈົ້າຫ່າງໄກໄປທຸກມື້
    ບໍ່ໂງໂຄ້ງຕ່າວຄືນ

ນົມແມ່ຫົດຫ່ຽວແຫ້ງ    ຍານໂຍບເສຍໂສມ
ອົກແມ່ຫງອຍເຫງົາໜາວ    ສັ່ນເຊັ່ນເຢັນຢ້າງ
ນ້ຳນົມແມ່ລິນໝົດແລ້ວ    ສູນສັນສີກິ່ນ
ຫົວອົກແມ່..ບໍ່ເບົາບາງເຫືອດແຫ້ງ    ຮັກຫອມແພງແຈ່ມເຈົ້າ
    ຖະຫວິນຫ້ອຍຫ່ວງຫາ...



# ເຂົ້າໂຮຍເກືອ

### ໂດຍ: ນິວັດ ວົງສິນ



ແມ່ສວ່າຍເຂົ້າ ຫອມຮຸ່ຍຮົມດັງ
ຂ້ອຍກຳລັງ ຫິວເຂົ້າຈ້ອຍໆ
ທັງນ້ອງນ້ອຍ ໃຫ້ແອ່ວຂໍກິນ
ແມ່ໄດ້ຍິນ ອີ່ນອອຍຍົວະເຍົ້າ
ຍິ່ນປັ້ນເຂົ້າ ອຸ່ນໆໂຮຍເກືອ
ໃຫ້ສອງເຂືອ ປັ້ນຫຸ່ນອຸ່ນທ້ອງ
ໃຫ້ພານ້ອງ ໄປຫຼິ້ນອາຮາມ
ຊາມພໍ່ມາ ຫາປາໄດ້ຊິ້ນ
ຈຶ່ງກິນໃໝ່ ໃຫ້ອີ່ມມີແຮງ

# ແມ່ຂອງລູກ

**ໂດຍ: ຄຳອອນ ເພັດດາວເຮືອງ**



.........................................................

ແມ່ ເປັນຜູ້ໃຫ້ຊີວິດ ແລະ ກາຍຍາ
ແມ່ ເປັນຜູ້ສຶກສາອົບຮົມໃຫ້ທຸກຄວາມຮູ້
ແມ່ ເປັນຜູ້ ທຸກລະດົມສະສົມເພື່ອລູກ
ແມ່ ເປັນຜູ້ ຜູກສາຍສຳພັນ + ສັງສັນອົບອຸ່ນ
ແມ່ ເປັນຜູ້ ທຸ່ມທ່ຽງ ອົດທົນ ແລະ ຂະຫຍັນພຽນ
ແມ່ ເປັນຜູ້ ອິ່ນອ້ອຍ ຄອຍປະຄອງ ແລະ ປົກປ້ອງ
ແມ່ ເປັນຜູ້ ສະໜອງທຸກສິ່ງທຸກຢ່າງເທົ່າທີ່ມີ
ຂໍແມ່ ຈົ່ງສຸຂີທີ່ມີແຕ່ຮັກ ມີແຕ່ຫວງ ມີແຕ່ຫ່ວງ
ແລະມີແຕ່ໃຫ້... ຕະຫຼອດມາ ແລະ ຕະຫຼອດໄປ.

# ລູກຂອງແມ່

**ດາລາ ກັນລະຍາ**

.........................................................



ລູກ ຂໍຟັງຄຳສັ່ງສອນທີ່ແມ່ເຕືອນ
ລູກ ຂໍເດີນຕາມຮອຍຂອງແມ່
ລູກ ຂໍຮຽນເອົາແບບແຜນ
ລູກ ຂໍຮັກສາມູນເຊື້ອ
ລູກ ຂໍປົກປ້ອງຊາດຕະກູນ
ລູກ ຂໍແທນຄຸນບິດາມານດາ
ລູກ ຂໍເທີດທູນບູຊາ
ລູກ ຂໍຍົກສູງຄຸນຄ່າ
ລູກ ຂໍປາຖະໜາໃຫ້ທຸກຄົນຮູ້ພະຄຸນຂອງແມ່

(ທັງສອງບົດຂຽນເມື່ອເວລາພົບກັນທີ່ກອງປະຊຸມໃຫຍ່ຄັ້ງທີ IV ຂອງສະມາຄົມນັກປະພັນລາວ ວັນທີ 24/12/2009)



# ເພື່ອຄວາມສາມັກຄີ

**ຄຳອອນ ເພັດດາວເຮືອງ: ຮິບໂຮມ**

ຊາດທີ່ເປັນຄົນນີ້ ຢ່າເອົາປຽບກັນຫຼາຍ
ບາດຄວາມຕາຍມາເຖິງ ໄປບ່ອນດຽວສຸດທ້າຍ
ເງິນຄຳມີຫຼາຍລົ້ນ ຫຼາຍເສນາຍູທ່າງສັ່ງ
ມັດຈຸລາດມາຮອດແລ້ວ ເງິນຄຳຫຸ້ມກໍ່ບໍ່ຍັງ ດອກນາ

ຢ່າໄດ້ໂອ້ອວດອ້າງ ວາງທ່າວ່າດີໝົດ
ປາກົດການຕົວຈິງ ມະຫາຊົນຜູ້ເຫັນແຈ້ງ

ຢ່າໄດ້ຕິຖະແຫຼງເວົ້າ ເອົາສິງາມມາແຕ້ມປາກ ຕົນເນີ
ຢ່າໄດ້ເອົາຂີ້ໝົນໝໍ້ ໄປຕ້ອຍໃສ່ຜູ້ດີ ນັ້ນເນີ

ຢ່າໄດ້ເອົາຕົນເຂົ້າ ໃນກະທຳແລ້ວຍໍຍິ່ນ
ໃຫ້ຜູ້ອື່ນຍໍຍົກໃຫ້ ກະທຳນັ້ນຈຶ່ງຈະສູງ ໄດເນີ

ໃຈບໍ່ໂສດາດ້ວຍ ເວົ້າມ່ອນກໍ່ເປັນຜິດ
ໃຈບໍ່ໂສດາດອມ ປາກດີກໍ່ເປັນຮ້າຍ

ອັນວ່າເປັນຄົນນີ້ ຢ່າອວດເກັ່ງເກີນກະດັດ
ບາດເທື່ອມີຄົນຫຼຸມ ຫຽບປຸນປານໄດ້
ເຮົາຊິມອຍເມືອໜ້າ ລະອາຍເຂົາບໍ່ຮູ້ເມື່ອ
ເຮົາກໍ່ວ່າເຮົາກະດັດ ເຂົາພັດແຮ່ງກະດໍ້
ຊິເອົາໜ້າເພີ້ເວີ້ (ພໍ້ ວໍ້) ໄປຊ້ອນເຊື່ອງບ່ອນໃດ ເດນໍ?

ຖ້າວ່າຢາກປີນປ້າຍ ຂຶ້ນຍອດໂພໄຊ
ໃຫ້ຮີບຫາຂັ້ນໄດ ກ່າຍເກີນເດີນຂຶ້ນ
ຢ່າໄດ້ຢືນແຢ່ງແຢ້ ປີນຄໍຂອງຜູ້ອື່ນ
ບາດມັນມື່ນພະລາດລົ້ມ ຫົວຊິຫຸ້ມທົ່ງດິນ ໃດເນີ.



# ເພື່ອກັນລືມ

## ຄຳອອນ ເພັດດາວເຮືອງ: ຮິບໂຮມ

ເຫັນວ່າເຂົ້າອັ່ງເລົ້າ | ຢ່າໄດ້ອວດໂອຫານ | ຫຼາຍເນີ
ບາດວ່າໂຈນມາຫຼ່ອຍ | ຊິນັ່ງແຍງຊາງເລົ້າ | ໄດເນີ
ນາທາມນ້ຳອັ່ງທົ້ງ | ຢ່າຟ້າວໜ່າຍສາຍຝົນ
ບາດນາໂພນດິນຜົງ | ຈະນັ່ງຄອຍສາຍນ້ຳ

ຖ້າໄດ້ກິນລາບກ້ອຍ | ຢ່າລືມແຈ່ວປາເຄັມ
ຍາມໄດ້ກິນໃສ່ພາເງິນພາຄຳ | ຢ່າໄດ້ລືມກະບຽນຮ້າງ
ຢ່າໄດ້ໄລລາຖິ້ມ | ຜັກກະເດົາຕົ້ນເກົ່າ
ບາດໄດ້ກິນລາບກ້ອຍ | ຍັງຊິໂອ້ອ່າວຫາ

ເຫັນວ່າຜັກຫອມຫ້ຽນ | ແຄມສວນຢ່າຟ້າວຢ່ຳ
ບາດວ່າພໍຝຸ່ນນ້ຳ | ຍັງຊິປົ້ນປົ່ງໃບ | ດອກນາ
ເຈົ້າຜູ້ມີເຮືອແລ້ວ | ຢ່າລືມແພໄມ້ໄຜ່
ບາດວ່າເຮືອຄ້າງໄຄ້ | ຍັງຊິໄຫ້ໃສ່ແພ | ໄດເນີ

ຢ່າໄດ້ເກັບດອກຫວ້ານ | ບ້ານເພິ່ນມາຊົມ
ໃຫ້ຄ່ອຍງອຍຊານເກັບ | ດອກກະຈຽວແຄມຮົ້ວ
ແກ້ວບໍ່ຜັດ | ສາມປີເປັນແຮ່
ພີ່ນ້ອງບໍ່ແວ່ | ສາມປີເປັນອື່ນ

ເຂົ້າໜຽວກັບເຂົ້າຈ້າວ | ປົນກັນມັນບໍ່ເບື່ອ
ອັນວ່າເຊື້ອພີ່ນ້ອງ | ຢ່າຄຸຍໄມ້ລຶບຄຸນ | ນັ້ນເນີ

ຖ້າວ່າໄດ້ຂີ່ຊ້າງ | ກັ້ງຮົ່ມເປັນພະຍາ
ຢ່າໄດ້ລືມຊາວນາ | ຜູ້ຂີ່ຄວາຍຄອນກ້າ

ຢູ່ຜູ້ດຽວລະວັງແນວຄິດ | ຢູ່ຮ່ວມມິດລະວັງວາຈາ
ຈັບປາກກາລະວັງລາຍເຊັນ | ມັນຈະເປັນອັນຕະລາຍ | ຫຼືບໍ່?



# ຄະຕິເຕືອນໃຈ

**ຄຳອອນ ເພັດດາວເຮືອງ: ຮຽບໂຮມ**

.....................................................

ຍາມເມື່ອຍັງໜຸ່ມນ້ອຍ ທຸກແດ່ກໍ່ອົດທົນ ເອົາເນີ
ໃຫ້ດີ້ນຮົນຝຶກຝົນ ຊອກວິຊາຄວາມຮູ້
ເອົາໄວ້ປູເປັນພື້ນ ແປງທາງສ້າງກໍ່
ອະນາຄົດຈຶ່ງຈະໄດ້ ສະບາຍບ້າງບາດຊະລາ ພຸ້ນເນີ

ຢ່າໄດ້ເອົາຕົນເຂົ້າ ໃນກະທຳແລ້ວຍໍຍິ້ນ
ຜູ້ອື່ນຍໍຍົກໃຫ້ ກະທຳນັ້ນຈຶ່ງຈະສູງ ໄດເນີ!

ເມື່ອມີສຸກ ຢ່າລືມຍາມທຸກ
ເມື່ອພົບທຸກ ຢ່າຟ້າວໝົດຫວັງ
ໃຫ້ຈິງຈັງ ຕັ້ງຫຼັກຄັ້ງໃໝ່
ເອົາໃຈໃສ່ ຕັ້ງໂຕໃຫ້ທັນ
ຮັບປະກັນ ຄວາມສຸກພາຍໜ້າ ພຸ້ນແລ້ວ

ພົບຄົນດີ ມີສີແກ່ຕົວ
ພົບຄົນຊົ່ວ ກໍ່ຊ່ວຍເຫຼືອຕັກເຕືອນ
ຖ້າເຂົາບິດເຂົາເບືອນ ກໍ່ບໍ່ຄວນພົບເຂົາອີກ
ເທົ່າທີ່ຫຼີກ ຫຼີກໄກໄດ້ຍິ່ງດີ ແທ້ແລ້ວ



ຂ້າພະເຈົ້າ **ຄຳອອນ ເພັດດາວເຮືອງ** ກຳເນີດຈາກຄອບຄົວຊາວນາ ທີ່ບ້ານນາໄຊ, ຕາແສງຊຽງ ເມືອງຄູນ ແຂວງຊຽງຂວາງວິລະຊົນ ເປັນລູກ ຂອງ ທ່ານ ຊຽງດວງຕາ ແລະນາງພຸດທາ ມີອ້າຍເອື້ອຍ ນ້ອງຄີງຮ່ວມ ກັນທັງໝົດ 6 ຄົນຄື: ນາງຄຳເນີງ, ທ້າວບົວແດງ, ນາງຄຳຈັນ, ນາງຄຳອອນ, ທ້າວດອກແກ້ວ ແລະ ນາງຄຳຟອງ ເພັດລຸນນະວົງ.

ສ້າງຄອບຄົວໃນປີ 1963 ກັບທ່ານພັນຕີ ຄຳສິງ ເພັດດາວເຮືອງ ອະດີດຫົວໜ້າການເມືອງກອງພັນປ້ອງກັນອາກາດ 603 ປຕອ. ກອງທັບປະຊາຊົນ ລາວ, ມີ ລູກຮ່ວມກັນ 4 ຄົນຄື : ນາງສຸກຖາວອນ,ທ້າວ ສອນທະວີ, ທ້າວ ສີສົມພອນ ແລະນາງ ກິ່ງສະດອນ ເພັດດາວເຮືອງ.

ພາຍຫຼັງແຂວງຊຽງຂວາງໄດ້ຮັບການປົດປ່ອຍໃນປີ 1961ດ້ວຍການໂຄສະນາຂົນຂວາຍຂອງພະນັກງານແນວລາວຮັກຊາດຂ້າພະເຈົ້າໄດ້ສະໝັກໃຈເຂົ້າເປັນສະມາຊິກຂອງສະມາຄົມແມ່ຍິງລາວຮັກຊາດ ແລະ ເຮັດວຽກເປັນຄູສອນປະຊາສຶກສາ ແລະວຽກງານໃນສະມາຄົມແມ່ຍິງ ຢູ່ຂັ້ນບ້ານ ຂັ້ນຕາແສງ ຈົນເຖິງປີ 1966 ຈຶ່ງ ໄດ້ຮັບໜ້າທີ່ເປັນຄະນະສະມາຄົມແມ່ຍິງເມືອງຄູນ ແຂວງຊຽງຂວາງຈາກນັ້ນໄດ້ຖືກສົ່ງໄປຮຽນທິດສະດີນຳພາຂະບວນການສະມາຄົມແມ່ຍິງລາວຮັກຊາດ ຢູ່ສູນກາງຊຳເໜືອ ແຂວງຫົວພັນ ວິລະຊົນ.

ກາງປີ 1974 ໄດ້ຮັບການແຕ່ງຕັ້ງຈາກສູນກາງໃຫ້ເຮັດວຽກໂຄສະນາຂົນຂວາຍສ້າງຕັ້ງສະມາຄົມແມ່ຍິງລາວຮັກຊາດຢູ່ເມືອງວັງວຽງແລະເມື່ອສ້າງຕັ້ງແລ້ວກໍໄດ້ເປັນປະທານສະມາຄົມແມ່ຍິງລາວຮັກຊາດ ເມືອງວັງວຽງກາງ ປີ1979 ໄດ້ຍ້າຍ ມາເປັນພະນັກງານຢູ່ຫ້ອງ ການສະມາຄົມແມ່ຍິງແຂວງ ແລະກຳແພງນະ ຄອນວຽງຈັນ

1980 -1995 ຖືກຍົກຍ້າຍໄປປະຈຳຢູ່ສູນກາງ ສະຫະພັນແມ່ຍິງລາວ

ໂດຍໄດ້ ຮັບໜ້າທີ່ໃນແຕ່ລະໄລຍະຕາມລຳດັບ ຄື:

ເປັນຮອງຫົວໜ້າ ຫ້ອງການສູນກາງສະຫະພັນແມ່ຍິງລາວ

ເປັນຮອງຫົວໜ້າກົມໂຄສະນາວັດທະນະທຳ ແລະໜັງສືພິມແມ່ຍິງລາວ

ເປັນຮອງຫົວໜ້າກົມສິດຜົນປະໂຫຍດ ພັດທະນາແລະພົວພັນຕ່າງປະເທດ, ທັງເປັນຫົວໜ້າສູນພັດທະນາແມ່ຍິງລາວ ແລະຫົວໜ້າໂຄງການຕ່າງໆ ເຊັ່ນ: ໂຄງການກໍ່ສ້າງນັກພັດທະນາໂຄງການອາຫານ ແລະໂພຊະນາການ, ໂຄງການພັດທະນາເພື່ອການເກີດລູກຫ່າງລາວ /93/P02 ແລະໂຄງການນ້ອຍອື່ນໆອີກຈຳນວນໜຶ່ງ



ເວລາເຮັດວຽກຢູ່ສູນກາງສະຫະພັນແມ່ຍິງລາວກວ່າ 15 ປີ ນອກຈາກວຽກງານວິຊາສະເພາະແລ້ວ ຂ້າພະເຈົ້າຍັງຮັບຜິດຊອບວຽກງານ ໃນອົງການຈັດຕັ້ງມະຫາຊົນ, ເປັນຕົ້ນແມ່ນເປັນເລຂາກຳມະບານຮາກຖານສູນກາງສະຫະພັນແມ່ຍິງລາວ ຫຼາຍສະໄໝ ແລະໄດ້ຮັບທຶນຈາກສູນກາງກຳມະບານ ໃຫ້ໄປຮຽນທິດສະດີ ກຳມະບານຢູ່ ສສ. ຫວຽດນາມໃນປີ 1980 ແລະໄດ້ຮຽນທິດສະດີກຳມະບານ ຢູ່ສະຫະພາບໂຊວຽດ ໃນປີ 1990 ແລະໄດ້ຮຽນທິດສະດີຊັ້ນສູງ ການເມືອງ ການປົກຄອງລະບົບບຳລຸງຈົບໃນປີ 1984 ແລະກໍໄດ້ມີໂອກາດໄດ້ໄປທັດສະນະສຶກສາ ປະຊຸມສຳມະນາ ແລະເປັນຜູ້ແທນໄປຢ້ຽມຢາມຕ່າງ ປະເທດຈຳນວນໜຶ່ງ.

ພາຍຫຼັງທີ່ເຂດພິເສດໄຊສົມບູນ ໄດ້ຮັບການສ້າງຕັ້ງຂຶ້ນ, ໃນທ້າຍປີ 1995 ຂ້າພະເຈົ້າ ຖືກແຕ່ງຕັ້ງເປັນປະທານສະຫະພັນແມ່ຍິງເຂດພິເສດໄຊສົມບູນ 7 ປີ, ຈາກນັ້ນຖືກຍົກຍ້າຍໄປເປັນຫົວໜ້າຫ້ອງການທ່ອງທ່ຽວ 5 ປີ, ເຖິງວັນທີ 06/02/2006 ເຂດດັ່ງກ່າວຖືກຍຸບຈຶ່ງຖືກຍົກຍ້າຍໄປສັງກັດສຳນັກງານນາຍົກລັດຖະມົນຕີ ແລະກະສຽນອາຍຸລັດຖະການ ເປັນພະນັກງານບຳນານ ສັງກັດກົມຄຸ້ມຄອງພະນັກງານ ສຳນັກງານນາຍົກລັດຖະມົນຕີ.

ຂ້າພະເຈົ້າ ມີຄວາມມັກຮັກໃນດ້ານສື່ສານມວນຊົນ ແລະວັນນະຄະດີ ເປັນພິເສດ ແລະກໍມີຄວາມສາມາດໃນການຂີດຂຽນ ດັ່ງນັ້ນຈຶ່ງເອົາໃຈໃສ່ປະດິດແຕ່ງກາບກອນ ພ້ອມທັງທ້ອນໂຮມເອົາກາບກອນຂອງ ບັນດານັກກະວີຜູ້ອື່ນໄວ້ໂດຍມຸ່ງຫວັງຕັ້ງໃຈທີ່ຈະນຳມັນມາພິມເປັນປຶ້ມໂຮມເຫຼັ້ມເພື່ອໃຫ້ບົດກະວີເຫຼົ່ານັ້ນຈະຍືນຍົງຄົງຢູ່ຄູ່ກັບຜູ້ອ່ານຕະຫຼອດໄປ.


ແມ່
ແມ່ນເພັດແທ້ໃນດວງໃຈຂອງລູກທຸກໆຄົນ
ຮ່ວມສະຫລອງວັນສ້າງຕັ້ງ ສະຫະພັນ ແມ່ຍິງລາວ ຄົບຮອບ 55 ປີ
20. 07. 1955 - 20. 07. 2010